ການປະເມີນບົດບາດຍິງຊາຍ

ສະໜັບສະໜູນ ບົດສະເໜີຂໍການສະໜອງເງິນ ຫາ ກອງທຶນດິນຟ້າ ອາກາດສີຂຽວ

ຊື່ແຜນງານ:

ການຂະຫຍາຍການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍ ເຮືອນແກ້ວ ຂອງ ສ.ປ.ປ.ລາວ ໂດຍ ການປັບປຸງ ການບໍລິຫານ ແລະ ຄຸ້ມຄອງພູມີທັດປ່າໄມ້ ແບບຍືນນານ (ໂຄງການ 2)

Commissioned by Deutsche Gesellschaft für Internationale Zusammenarbeit (GIZ) GmbH

ສາລະບານ

1. ພາກສະເໜີ 5

1.1. ບົດແນະນຳ GCF ແລະ GIZ ສຳລັບ ການສົ່ງເສີມ ຄວາມເທົ່າທຽມຂອງເພດຍິງຊາຍ 9

1.2. ວິທີການ 10

2.1. ລະດັບການເປີດເຜີຍ: ທຳນິບທຳນຽມ ແລະ ບົດບາດທາງປະເພນີ ຂອງ ແມ່ຍິງ ແລະ ຜູ້ຊາຍ ຢູ່ລາວ 11

ຄວາມໝາຍ ສຳລັບ ໂຄງການຂອງ ກອງທຶນດິນຟ້າອາກາດສີຂຽວ GCF ທີ່ໄດ້ວາງແຜນໄວ້ 13

2.2. ລະດັບມະຫາພາກ: ການປະກອບສ່ວນລົງມືປະຕິບັດ ໃນລະດັບສາກົນ ແລະ ພາກພື້ນ ແລະ ນິຕິກຳ ແລະ ນະ�โยบายแห่งชาติ 14

ຄວາມໝາຍ ສຳລັບ ແຜນງານ GCF ທີ່ໄດ້ວາງແຜນໄວ້ 17

2.3. ລະດັບກາງ: ສະຖາບັນການຈັດຕັ້ງ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ 17

ຄວາມໝາຍ ສຳລັບ ໂຄງການ GCF ທີ່ໄດ້ວາງແຜນໄວ້ 20

2.4. ລະດັບຈຸລະພາກ: ຄວາມເທົ່າທຽມກັນທາງເພດ ຢູ່ໃນກຸ່ມເປົ້າໝາຍ 21

ການມີສ່ວນຮ່ວມໃນດ້ານການເມືອງ: ການຕັດສິນໃຈ ແລະ ຄວາມເປັນຜູ້ນຳ 22

ການສຶກສາ 23

ການເຂົ້າຮ່ວມທາງດ້ານເສດຖະກິດ 23

ຄວາມໝາຍ ສຳລັບໂຄງການ GCF ທີ່ໄດ້ວາງແຜນໄວ້ 25

3.1. ລະດັບສາກົນ: ຂໍ້ຄົງຄ້າງທາງດ້ານບົດບາດຍິງ-ຊາຍໃນຂະແໜງການຕ່າງໆ 28

6. ຊ່ອງว่างทางเพด ທີ່ໂດດເດັ່ນ ແລະ ຄຳແນະນຳ ໃຫ້ເຊື່ອມໂຍງເຂົ້າໃນແຜນງານ GCF 2

ບັນດາລາຍຊື່ເອກະສານອ້າງອີງ 0

ເອກະສານຊ້ອນທ້າຍ 1: ລາຍຊື່ ຜູ້ມີສ່ວນກ່ຽວຂ້ອງທີ່ໄດ້ປຶກສາ 5

ເອກະສານຊ້ອນທ້າຍ 2: ສຳເນົາບົດສຳພາດຜູ້ມີສ່ວນກ່ຽວຂ້ອງ 6

ອັກສອນຫຍໍ້

ADB	Asian Development Bank ທະນາຄານພັດທະນາອາຊີ
ADWLE	Association for Development of Women and Legal Education ສະມາຄົມ ພັດທະນາແມ່ຍິງ ແລະ ການສຶກສາດ້ານນິຕິກຳ
ASEAN	Association of Southeast Asian Nations ສະມາຄົມປະຊາຊາດ ແຫ່ງອາຊີຕາເວັນອອກສ່ຽງໃຕ້
CBD	Convention on Biological Diversity ສົນທິສັນຍາ ວ່າດ້ວຍຄວາມຫຼາກຫຼາຍ ທາງຊີວະນາໆພັນ
CEDAW	Convention on the Elimination of All Forms of Discrimination Against Women ສົນທິສັນຍາ ວ່າດ້ວຍ ການກຳຈັດທຸກຮູບແບບ ຂອງການຈຳແນກ ຕໍ່ ແມ່ຍິງ
CSO	Civil Society Organization ອົງການຈັດຕັ້ງສັງຄົມ
DAFO	District Agriculture and Forestry Office ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
DLWU	District Lao Women´s Union ສະຫະພັນແມ່ຍິງລາວ ຂັ້ນເມືອງ
DoF	Department of Forestry ກົມປ່າໄມ້
ER Program	Emission Reduction Program ແຜນງານຫຼຸດຜ່ອນອາຍເຮືອນແກ້ວ
FAO	Food and Agriculture Organization of the United Nations ອົງການອາຫານ ແລະ ກະສິກຳ ຂອງສະຫະປະຊາຊາດ
FLEG(T)	Forest Law Enforcement and Governance (and Trade) ການບັງຄັບໃຊ້ກົດໝາຍປ່າໄມ້ ແລະ ການຄຸ້ມຄອງ (ແລະ ການຄ້າ)
FLR	Forest and Landscape Restoration ການຟື້ນຟູປ່າໄມ້ ແລະ ພູມສັນຖານ
GAP	Gender Action Plan ແຜນປະຕິບັດງານ ວ່າດ້ວຍບົດບາດຍິງຊາຍ
GCF	Green Climate Fund ກອງທຶນດິນຟ້າອາກາດສີຂຽວ

GFP	Gender Focal Point ຈຸດປະສານງານບົດບາດຍິງຊາຍ
GIZ	German Development Cooperation (Deutsche Gesellschaft für Internationale Zusammenarbeit (GIZ) GmbH ອົງການຮ່ວມມືດ້ານການພັດທະນາ ແຫ່ງປະເທດເຢຍລະມັນ (ຈີໄອແຊັດ)
Lao PDR	Lao People´s Democratic Republic ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LDC	Least Developed Country ປະເທດດ້ອຍພັດທະນາ
LWU	Lao Women´s Union ສະຫະພັນແມ່ຍິງລາວ
MAF	Ministry of Agriculture and Forestry ກະຊວງກະສິກຳ ແລະ ປ່າໄມ້
MoU	Memorandum of Understanding ບົດບັນທຶກຄວາມເຂົ້າໃຈ
MRV	Measurement, Reporting, and Verification ການວັດແທກ, ການລາຍງານ ແລະ ການພິສູດຢັ້ງຢືນ
NCAWMC	National Commission for the Advancement of Women, Mothers and Children ຄະນະກຳມະການແຫ່ງຊາດ ສຳລັບຄວາມກ້າວໜ້າ ຂອງແມ່ຍິງ, ແມ່ ແລະ ເດັກນ້ອຍ
NPA	Non-Profit Organization ອົງການຈັດຕັ້ງ ທີ່ບໍ່ຫວັງຜົນກຳໄລ
NSAW	National Strategy for the Advancement of Women ຍຸດທະສາດແຫ່ງຊາດ ສຳລັບຄວາມກ້າວໜ້າ ຂອງແມ່ຍິງ
NSEDP	National Socio-Economic Development Plan ແຜນພັດທະນາເສດຖະກິດ - ສັງຄົມ
NTFPs	Non-Timber Forest Products ເຄື່ອງປ່າຂອງດົງ
PAFO	Provincial Agriculture and Forestry Office ພະແນກກະສິກຳ ແລະ ປ່າໄມ້ແຂວງ
PLWU	Provincial Lao Women`s Union ສະຫະພັນແມ່ຍິງລາວຂັ້ນແຂວງ

PRAP	Provincial REDD+ Action Plans ແຜນປະຕິບັດງານ ເຣດ+ ຂັ້ນແຂວງ
REDD+	**R**educing **E**missions from **D**eforestation and Forest **D**egradation and the role of conservation, sustainable management of forests and enhancement of forest carbon stocks in developing countries ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ບົດບາດ ຂອງການອະນຸລັກ, ການຄຸ້ມຄອງຈັດສັນປ່າໄມ້ແບບຍືນນານ ແລະ ການເພີ່ມມວນທາດກາກບອນປ່າໄມ້ ໃນບັນດາປະເທດທີ່ກຳລັງພັດທະນາ
RECOFTC	The Center for People and Forests ສູນ ສຳລັບປະຊາຊົນ ແລະ ປ່າໄມ້
SDGs	Sustainable Development Goals ເປົ້າໝາຍແຫ່ງການພັດທະນາ ແບບຍືນນານ
SFM	Sustainable Forest Management ການຄຸ້ມຄອງພູມສັນຖານປ່າໄມ້
Sub-CAW	Ministry-based (sub-)Committee for the Advancement of Women ຄະນະກຳມະການ (ຍ່ອຍ) ສຳລັບຄວາມກ້າວໜ້າຂອງແມ່ຍິງ ທີ່ຂຶ້ນກັບກະຊວງ
VPA	Voluntary Partnership Agreement ສັນຍາການເປັນຄູ່ຮ່ວມແບບສະໝັກໃຈ

1. ພາກສະເໜີ

ສ.ປ.ປ.ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ, ເປັນປະເທດດ້ອຍພັດທະນາ (LLDC) ໂດຍມີຄວາມປົກຫຸ້ມຂອງ ປ່າໄມ້ ຫຼຸດໜ້ອຍຖອຍລົງ ຈາກ 70% ໃນຊຸມປີ 1960 ເຫຼືອ 58% ໃນປີ 2015. ປ່າໄມ້ ບໍ່ພຽງແຕ່ ເປັນຂະແໜງການທີ່ສຳຄັນ ສຳລັບ ເສດຖະກິດແຫ່ງລາວ ແຕ່ກໍຍັງເປັນໃຈກາງ ໃນການສ້າງລາຍຮັບ, ສະໜອງອາຫານການກິນ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ. ໂດຍສະເພາະ ປະຊາຊົນຜູ້ທີ່ທຸກຍາກທີ່ອາໃສ່ຢູ່ເຂດຊົນນະບົດ ແມ່ນອາໃສ ຊັບພະຍາກອນປ່າໄມ້ເປັນຫຼັກ ທີ່ມາຈາກທີ່ດິນ ແລະ ປ່າໄມ້. ດັ່ງນັ້ນ, ການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ການທຳລາຍປ່າໄມ້ ພາໃຫ້ເກີດຄວາມສ່ຽງ ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນລາວ ສ່ວນໃຫຍ່. ແມ່ຍິງ, ຄົນທຸກຍາກ ແລະ ບັນດາຊຸມຊົນທີ່ຢູ່ໃນພູມສັນຖານຫ່າງໄກສອກຫຼີກ ແມ່ນເປັນກຸ່ມຄົນທີ່ໄດ້ຮັບຜົນກະທົບ ຫຼາຍທີ່ສຸດ ຕໍ່ການປ່ຽນແປງເຫຼົ່ານີ້ ເນື່ອງຈາກວ່າເຂົາເຈົ້າມີຄວາມສາມາດໃນການປັບໂຕ ແບບຈຳກັດ ແລະ ມີຂໍ້ຈຳກັດ ໃນການເຂົ້າເຖິງ ທາງເລືອກ ໃນການຄ້ຳປະກັນ ຊີວິດການເປັນຢູ່ ຂອງເຂົາເຈົ້າ.

ยุดทะสาด ແຫ່ງຊາດຕົ້ນຕໍ (ແຜນພັດທະນາເສດຖະກິດສົງຄົມ ຄັ້ງທີ 9, ມະຕິສູນກາງພັກ ກ່ຽວກັບທີ່ດິນ, ยุดทะสาดป่าไม้ 2035, ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແຫ່ງ ສປປລາວ ພາຍໃຕ້ກອບສົນທິສັນຍາວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແຫ່ງສະຫະປະຊາຊາດ 2021 ຮັບຮູ້ເຖິງ ຄວາມສຳຄັນ ຂອງຊັບພະຍາກອນປ່າໄມ້ ຢູ່ໃນລາວ ແລະ ການຄຸ້ມຄອງພວກມັນແບບຍືນນານ ໃນນາມເປັນອົງ ປະກອບໃຈກາງ ຂອງການສະໜັບ ແລະ ປັບປຸງ ຊີວິດການເປັນຢູ່ໃນເຂດຊົນນະບົດ. ແຜນງານແຫ່ງຊາດວ່າດ້ວຍ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດຄັ້ງຫຼ້າສຸດ ແລະ ยุดทะสาดว่าด้วยดินฟ้าอากาด ສະບັບຮ່າງ 2021 ໄດ້ມີຈຸດປະສົງເພື່ອເສີມຂະຫຍາຍການເຊື່ອມໂຍງກັນລະຫວ່າງການຫຼຸດຜ່ອນການປ່ຽນແປງດິນ ຟ້າອາກາດ ແລະ ບັນດາກິດຈະກຳໃນຂົງເຂດກະສິກຳ ແລະ ປ່າໄມ້. ยุดทะสาดเธด+ ແຫ່ງຊາດ ແລະ ວິໃສທັດເธด ແຫ່ງຊາດ ธอดปี 2030 ສ້າງຂຶ້ນບົນພື້ນຖານ ນະໂຍບາຍແຫ່ງຊາດເຫຼົ່ານີ້ ແລະ ເນັ້ນໃສ່ ຄວາມສຳຄັນ ຂອງຜູ້ມີ ສ່ວນກ່ຽວຂ້ອງທັງໝົດ, ລວມມີ ບັນດາຄົວເຮືອນ, ຊຸມຊົນ, ລັດຖະບານ ແລະ ພາກເອກະຊົນ ຊຶ່ງຈະເປັນຜູ້ ປະກອບສ່ວນຢ່າງຕັ້ງໜ້າ ໃນການຫຼຸດຜ່ອນ ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ພ້ອມກັນນັ້ນ ກໍສົ່ງເສີມການຟື້ນຟູ ແລະ ການປູກປ່າໄມ້.

ພາບລວມຂອງແຜນງານລວມ

ໂຄງການນີ້ ແມ່ນເປັນສ່ວນໜຶ່ງຂອງແຜນງານລວມ ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນ ແກ້ວ ຂອງ ສ.ປ.ປ.ລາວ ໂດຍ ການປັບປຸງ ການຄຸ້ມຄອງ ແລະ ການຈັດສັນພູມີທັດປ່າໄມ້ ແບບຍືນນານ (ບົດສະ ເໜີຂໍການສະໜອງທຶນ (FP) 117) ຊຶ່ງໄດ້ຖືກອະນຸມັດໂດຍ ສະພາບໍລິຫານກອງທຶນດິນຟ້າອາກາດສີຂຽວ ໃນ ລະຫວ່າງກອງປະຊຸມສະພາບໍລິຫານຄັ້ງທີ 24 (B.24) ໃນປີ 2019.[1] ຈຸດປະສົງຂອງແຜນງານລວມນີ້ແມ່ນເພື່ອສະ

[1] "*The programme consists of 3 projects: Project 1 (mid-2020 to mid-2024) addresses the three provinces of Houaphan, Sayabouri and Luang Prabang, which contain the highest rates of deforestation and forest degradation within the programme area; Project 2 (mid-2024 to end-2029) scales-up the number of participating communities in the same geographical area; and*

ໜັບສະໜູນລັດຖະບານແຫ່ງ ສປປ ລາວ ໃນການຂ້າມຜ່ານໄປສູ່ ການທົນທານກັບສະພາບດິນຟ້າອາກາດ ແລະ ການຄຸ້ມຄອງປ່າໄມ້ແບບຍືນນານ ໃນລະດັບພູມີທັດ. ໂຄງການດັ່ງກ່າວນີ້ ຄາດວ່າຈະຫຼຸດຜ່ອນການປ່ອຍເຮືອນແກ້ວ ປະມານ 11.7 ລ້ານ tCO_2eq ແລະ ເພີ່ມຄວາມສາມາດໃນການຟື້ນຕົວ ຈາກສະການປ່ຽນແປງສະພາບອາກາດ ຂອງ ປະຊາຊົນ ຫຼາຍກວ່າ 273,700 ຄົນ ພາຍໃນ ໄລຍະການຈັດຕັ້ງປະຕິບັດ ໂຄງການ 1 ແລະ 2 ລວມທັງໝົດ 7 ປີ. ແຜນງານປະກອບສ່ວນເຂົ້າໃນ ການຈັດຕັ້ງປະຕິບັດ ແຜນງານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຂອງ ສປປ ລາວ ໃຫ້ສຳເລັດ ພາຍໃຕ້ ແຫຼ່ງທຶນຄູ່ຮ່ວມການກອນປ່າໄມ້ FCPF ຢູ່ໃນ 6 ແຂວງທີ່ໄດ້ກຳນົດໄວ້ໃນ ເອກະສານແຜນງານ ER-PD.

ໃນເບື້ອງຕົ້ນ, FP117 ແມ່ນໄດ້ຂຽນຂຶ້ນເພື່ອ ເປັນໜຶ່ງໂຄງການຫຼຸດຜ່ອນທາດອາຍເຮືອນແກ້ວໂດຍສະເພາະ ແລະ ຫຼັງຈາກນັ້ນ, ໄດ້ຖືກປ່ຽນມາເປັນແຜນງານ ທີ່ປະກອບດ້ວຍ 3 ໂຄງການຍ່ອຍ ເນື່ອງຈາກງົບປະມານຂອງກອງທຶນ ດິນຟ້າອາກາດສີຂຽວມີຈຳກັດ ໃນຂະນະການອະນຸດມັດຂອງສະພາບໍລິຫານໃນຂະນະນັ້ນ. FP117[2] ໄດ້ກຳນົດກອບ ຂອງແຜນງານທີ ທີ່ປະກອບດ້ວຍ ໂຄງການ 1[3] ຊຶ່ງກວມເອົາ 3 ແຂວງຈາກທັງໝົດ 6 ແຂວງເປົ້າໝາຍຂອງແຜນ ງານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ (ແຂວງຫົວພັນ, ຫຼວງພະບາງ ແລະ ໄຊຍະບູລີ) ແລະ ໂຄງການ ຍ່ອຍ 2 ແລະ 3 (ຫຼື ຫຼັງຈາກນີ້ ເອີ້ນວ່າ ໂຄງການ 2) ຊຶ່ງຂະຫຍາຍການຈັດຕັ້ງປະຕິບັດແຜນງານ ກວມເອົາທັງໝົດ 6 ແຂວງເປົ້າໝາຍຂອງແຜນງານການປ່ອຍທາດອາຍເຮືອນແກ້ວ ແລະ ເພື່ອບັນລຸເປົ້າໝາຍການຫັນປຸງການຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ຢູ່ເຂດເນີນສູງຂອງ ສປປ ລາວ.[4]

ໂຄງການ 1 (FP117) ໄດ້ວາງພື້ນຖານໃຫ້ແກ່ການຫັນປ່ຽນໃນພື້ນທີ່ໂຄງການ, ຊຶ່ງລວມທັງການສະໜັບສະໜູນ ການເຊື່ອມໂຍງດ້ານນະໂຍບາຍ, ການປັບປຸງກອບນິຕິກຳ, ການຈັດຕັ້ງປະຕິບັດ ແລະ ປັບປຸງລະບົບການຕິດຕາມ ລາຍງານ ແລະ ກວດສອບ (MRV) ແລະ ອື່ນໆ. ພ້ອມດຽວກັນນັ້ນ ໂຄງການດັ່ງກ່າວຍັງ ສະໜັບສະໜູນການຈັດ ຕັ້ງປະຕິບັດກິດຈະກຳຕ່າງໆ ຢູ່ 3 ແຂວງຄື: ຫົວພັນ, ໄຊຍະບູລີ ແລະ ຫຼວງພະບາງ. ແນວໃດກໍ່ຕາມ, ມັນຈຳເປັນຕ້ອງ ມີການສະໜັບສະໜູນເພີ່ມຕື່ມ ເພື່ອຈະບັນລຸການຫັນປ່ຽນທີ່ສຳຄັນ ທີ່ກ້າວໄປສູ່ ການຫຼຸດຜ່ອນການປ່ອຍທາດອາຍ ເຮືອນແກ້ວ ແລະ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ທີ່ໄດ້ລະບຸໄວ້ໃນ FP 117. ເພື່ອບັນລຸການຫັນປ່ຽນ ສູ່ການຄຸ້ມຄອງປ່າໄມ້ຢ່າງຍືນຍົງ ທີ່ທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ຢູ່ໃນລະດັບພູມີທັດ ຢູ່ໃນ ສປປ ລາວ. ໂຄງການ 2 ແມ່ນປະກອບດ້ວຍສາມຜົນໄດ້ຮັບ (ເບິ່ງຮູບ 1 ຂ້າງລຸ່ມນີ້):

ໝາກຜົນທີ 1 ແກ້ໄຂ ບັນດາອຸປະສັກຕ່າງໆ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ປະກອບດ້ວຍ ບັນດາມາດຕາ ການ ເພື່ອແນໃສ່ ສືບຕໍ່ຂະຫຍາຍການຈັດຕັ້ງປະຕິບັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມທີ່ແທດເໝາະກັບ ການປ່ຽນແປງດິນຟ້າອາກາດ, ສ້າງຄວາມເຂັ້ມແຂງການຄ້ຳປະກັນສິດຄອບຄອງທີ່ດິນ, ການປັບປຸງການບັງຄັບໃຊ້

Project 3 (2022 to end-2029) extends the geographical reach of the programme to the 3 additional provinces of Luang Namtha, Bokeo and Oudomxay." (GCF FP 117, page 3).

[2] The full proposal is available on the GCF website: https://www.greenclimate.fund/project/fp117.

[3] Project 1 which was approved under FP 117 reached effectiveness on 19th May 2020. Since then, the Project has made significant progress. More details on the specific progress can be found under the Annual Performance Report (APR) in FP Annex 18.

4 The following excerpt is from FP 117's Programme-level Executive Summary: *"This Funding Proposal presents a stand-alone GCF project (Project 1) for Board approval. Two subsequent stand-alone projects, embedded in the same programmatic context and theory of change as this project, will be submitted at a future date for Board approval. Board approval for the project presented in this Funding Proposal is wholly separate from, and does not pre-judge, Board approval for future related projects."*

ກົດໝາຍ ແລະ ການຕິດຕາມກວດກາ ແລະ ສືບຕໍ່ຂະຫຍາຍ ແລະ ຮັບປະກັນການເຂົ້າເຖິງການສະໜອງທາງດ້ານການເງິນຢ່າງຍືນຍົງສຳລັບຂົງເຂດ AFOLU.

ໝາກຜົນທີ 2 ອີງໃສ່ພື້ນຖານການສ້າງເງື່ອນໄຂສະພາບແວດລ້ອມທີ່ເອື້ອຍອຳນວຍ (ໝາກຜົນທີ 1), ແລະ ສາເຫດຕົ້ນຕໍ ຂອງການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ໃນຂົງເຂດກະສິກຳ. ມັນຈະນຳສົ່ງ ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຜ່ານທາງ ການຫຼຸດຜ່ອນ ການຂະຫຍາຍການຜະລິດກະສິກຳ ໄປໃນ ເຂດພູມິທັດປ່າໄມ້ ແລະ ສົ່ງເສີມ ການຜະລິດກະສິກຳທີ່ທົນທານກັບສະພາບດິນຟ້າອາກາດ ທີ່ທັງຊ່ວຍເພີ່ມຄວາມທົນທານຕໍ່ກັບສະພາບດິນຟ້າອາກາດຂອງຊາວກະສິກອນທ້ອງຖິ່ນ ແລະ ລະບົບນິເວດກະສິກຳ.

ໝາກຜົນທີ 3 ອີງໃສ່ພື້ນຖານການສ້າງເງື່ອນໄຂສະພາບແວດລ້ອມທີ່ເອື້ອຍອຳນວຍ (ໝາກຜົນທີ 1), [5] ແລະ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ເພີ່ມທະວີຄວາມທົນທານຕໍ່ສະພາບອາກາດຂອງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ແລະ ລະບົບນິເວດປ່າໄມ້ ໂດຍການຄຸ້ມຄອງພູມິທັດປ່າໄມ້ແບບຍືນຍົງ ແລະ ການສົ່ງເສີມການຟື້ນຟູພູມິທັດປ່າໄມ້ (FLR), ໂດຍສຸມໃສ່ສະເພາະ ຂົ້ນບ້ານ ແລະ ການອະນຸລັກປ່າໄມ້. [6]



ຮູບສະແດງ 1: ພາບລວມຂອງບັນດາໝາກຜົນ ແລະ ກິດຈະກຳຂອງ ໂຄງການ 2

[5] Specifically, Activities under Output 3 that are subject to Output 1 deliverables are:

For Activity 3.1: Village Forest and Agriculture Grants (VFAG) must be in place after Village Forest Management (VFM) planning is concluded, to provide funds for the implementation of annual plans; Land use planning and improved tenure security – Land Use Plans have to be in place as a precondition for VFM, ensuring full compliance with the project's Environmental and Social Management Plan (ESMP, in FP Annex 6b), Ethnic Group Development Plan (FP Annex 6d) and Gender Action Plan (FP Annex 8b). Free, prior and informed consent (FPIC) is required, where the procedures are outlined in detail within Chapter B.3 of the Funding Proposal, and within the ESMP located in FP Annex 6b.

For Activity 3.2: Identification of existing and/or establishment of new VFAGs to channel climate finance to target villages – VFAGs must be in place after National Protected Area (NPA) management planning is concluded, to provide funds for the implementation of annual plans. Again full compliance with the ESMP and FPIC procedures are required.

[6] Conservation forests will focus on 5 national protected areas (NPAs) and 1 national park within the project area.

ໂຄງການ 2 ຈະເພີ່ມຕື່ມ ແລະ ຂະຫຍາຍ ການຈັດຕັ້ງປະຕິບັດຂອງໂຄງການ 1. ທັງສອງໂຄງການດັ່ງກ່າວນີ້ ຈະສະໜັບສະໜູນ ການຫັນປ່ຽນທີ່ສຳຄັນ ໃນຂະແໜງການປ່າໄມ້ ແລະ ການນຳໃຊ້ທີ່ດິນ ຢູ່ ສປປ ລາວ ທີ່ມີຄວາມຍືນຍົງ ໂດຍການ ປົດລັອກແຫຼ່ງທຶນເພີ່ມຕື່ມ ຈາກການຈ່າຍເງິນຕາມຜົນງານ, ລວມທັງ ການຄຸ້ມຄອງການເງິນຂອງລັດ ແລະ ເອກະຊົນໂດຍຜ່ານກອງທຶນແຫ່ງຊາດ ແລະ ບັນດາສະຖາບັນທີ່ມີຄວາມເຂັ້ມແຂງ ໃນການດຶງດູດທຶນຮອນ ກ່ຽວກັບການປ່ຽນແປງດິນຟ້າອາກາດ. ໂຄງການທີ 2 ໄດ້ຖືກປັບປຸງ ແລະ ອອກແບບຄືນໃໝ່ ເປັນການເຊື່ອມຈອດກັນ, ຮັດແໜ້ນການເຊື່ອມຈອດລະຫວ່າງ ເຣດ+ ແລະ ກິດຈະກຳທີ່ສ້າງຄວາມທົນທານຂອງລະບົບນິເວດ ແລະ ຊີວິດການເປັນຢູ່ຂອງທ້ອງຖິ່ນໃນຊົນນະບົດ, ສອດຄ່ອງກັບແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ຫຼ້າສຸດຂອງ ສປປ ລາວ ຕໍ່ກັບ ສົນທິສັນຍາຂອບຂອງສະຫະປະຊາຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ (2021) ແລະຮ່າງຍຸດທະສາດການປ່ຽນແປງດິນຟ້າອາກາດ (2021). ຈະເພີ່ມທະວີການລົງທຶນເຂົ້າໃນການປະຕິບັດກະສິກຳ ແລະ ປ່າໄມ້ທີ່ທົນທານຕໍ່ສະພາບດິນຟ້າອາກາດ ແລະ ທີ່ບໍ່ທຳລາຍປ່າໄມ້ ແລະ ການຄຸ້ມຄອງປ່າໄມ້ໃນທົ່ວ 6 ແຂວງ, ສ້າງເງື່ອນໄຂສ້າງຄວາມເຂັ້ມແຂງດ້ານກອບນິຕິກຳ ແລະ ນຳໃຊ້ເຄື່ອງມື ແລະ ບັນດາບົດແນະນຳທີ່ໄດ້ສ້າງຂຶ້ນ ຈາກໂຄງການ 1.

ໂດຍມີຜູ້ໄດ້ຮັບຜົນປະ�โຫຍດໂດຍກົງ ປະມານ 273,700 ຄົນ (ຍິງ 136,850 ຄົນ ແລະ ຜູ້ຊາຍ 136,850 ຄົນ) ຈາກຢ່າງໜ້ອຍ 23 ຊົນເຜົ່າ, ແລະ ຜູ້ໄດ້ຮັບຜົນປະໂຫຍດທາງອ້ອມຕື່ມອີກ 723,372 ຄົນ (ຍິງ 361,691 ຄົນ ແລະ ຜູ້ຊາຍ 361,691 ຄົນ), ແຜນງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ER ຈະແນໃສ່ ເສີມຂະຫຍາຍ ແລະ ລວມເອົາການສົ່ງເສີມບົດບາດຍິງຊາຍ ແລະ ຊົນເຜົ່າ ເຂົ້າຢູ່ໃນທຸກໆມາດຕາການທີ່ໄດ້ວາງແຜນໄວ້ (ກິດຈະກຳຂອງໂຄງການ).
ໂຄງການທີ 2 ຈະຖືກຄຸ້ມຄອງໂດຍລວມໂດຍ ສຳນັກງານໃຫຍ່ຂອງ GIZ ໃນຖານະບົດບາດ ເປັນອົງການທີ່ໄດ້ຖືກຮັບຮອງໂດຍ GCF, ແລະ ຈະໄດ້ຈັດຕັ້ງປະຕິບັດໂດຍ GIZ ປະຈຳ ສປປ ລາວ ແລະ ກອງທຶນປົກປັກຮັກສາສິ່ງແວດລ້ອມ ສປປ ລາວ (EPF). ໂຄງການດັ່ງກ່າວ ແມ່ນການຮ່ວມທຶນຈາກລັດຖະບານ ສປປ ລາວ, BMZ, ADB, IFAD, ທະນາຄານໂລກ ແລະ KfW.

ພາບລວມຂອງການປະເມີນກ່ຽວກັບ ບົດບາດຍິງຊາຍ

ເອກະສານນີ້ ປະກອບດ້ວຍການປະເມີນກ່ຽວກັບບົດບາດຍິງຊາຍ ສຳລັບໂຄງການ 2. ເພື່ອຮັບປະກັນ ແນວທາງປະຕິບັດ ທີ່ຄຳນຶງເຖິງບົດບາດຍິງຊາຍ ແລະ ການຈັດຕັ້ງປະຕິບັດ ໂຄງການ 2 ແລະ ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງມາດຖານ ຂອງ GCF ແລະ GIZ, ບົດວິເຄາະບົດບາດຍິງຊາຍ ສະບັບນີ້ ໃຫ້ຄຳແນະນຳ ແກ່ ບົດສະເໜີຂໍສະໜອງທຶນ ສຳລັບ ແຜນງານ ການຂະຫຍາຍການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ໂດຍ ການປັບປຸງ ການຄຸ້ມຄອງ ແລະ ການຈັດສັນພູມີທັດປ່າໄມ້ ແບບຍືນນານ (ໂຄງການ 2), ຊຶ່ງໄດ້ຮັບທຶນຈາກ ກອງທຶນດິນຟ້າອາກາດສີຂຽວ.
ເຖິງແມ່ນວ່າ ຈະບໍ່ຄົບຖ້ວນສົມບູນກໍຕາມ, ບົດວິເຄາະບົດບາດຍິງຊາຍ ສະບັບນີ້ ພະຍາຍາມ ສະໜອງ ທັງພາບລວມທົ່ວໄປ ແລະ ພາບລວມຂອງຂະແໜງ ກ່ຽວກັບ ສະຖານະຖາບ ຂອງຄວາມເທົ່າທຽມກັນຂອງຍິງຊາຍ ຢູ່ລາວ, ຊຶ່ງກວມເອົາປັດໃຈທາງກົງ ແລະ ທາງອ້ອມ ທີ່ສາມາດ ສົ່ງຜົນກະທົບ ຕໍ່ ການຈັດຕັ້ງປະຕິບັດແຜນງານ.

1.1. ບົດແນະນຳ GCF ແລະ GIZ ສຳລັບ ການສົ່ງເສີມ ຄວາມເທົ່າທຽມຂອງເພດ ຍິງຊາຍ

ອີງຕາມ ນະ�โยบายบົດບາດຍິງຊາຍ ຂອງ GCF, "ໂຄງການ ຫຼື ແຜນງານ ທີ່ໄດ້ສະເໜີ ທີ່ໄດ້ຍື່ນຫາ ກອງທຶນ ຕ້ອງການ ໃຫ້ໄປຕາມລວງດຽວກັບ ນະ�โยบาย ແລະ ບູລິມະສິດ ຂອງຊາດ ວ່າດ້ວຍ ບົດບາດຍິງຊາຍ ກັບ ນະ�โยบายบົດບາດຍິງຊາຍ ຂອງກອງທຶນ[7]". ສິ່ງດັ່ງກ່າວນີ້ ລວມມີ ການປະເມີນເສດຖະກິດສັງຄົມ ແລະ ບົດບາດຍິງຊາຍ ທີ່ເປັນຂໍ້ບັງຄັບ, ຊຶ່ງໄປເພີ່ມໃສ່ກັບ ຂະບວນການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS).

ດັ່ງນັ້ນ, ເປົ້າໝາຍຕົ້ນຕໍ ຂອງການປະເມີນນີ້ ແມ່ນເພື່ອກຳນົດວ່າ ໂຄງການ ສາມາດ ຕອບສະໜອງ ຕໍ່ຄວາມ ຕ້ອງການ ຂອງ ແມ່ຍິງ ແລະ ຜູ້ຊາຍ ໃນມຸມມອງ ຂອງ ການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ທີ່ຖືກ ແກ້ໄຂ ແລະ ມາດຕະການ ທີ່ໄດ້ສະເໜີ.
ການປ່ຽນແປງທາງດ້ານບົດບາດຍິງຊາຍ ແລະ ສາເຫດ ແຫ່ງການປ່ຽນແປງທີ່ກ່ຽວຂ້ອງ ຈະຖືກກຳນົດ ເພື່ອບັນລຸ ເປົ້າ ໝາຍ ຂອງໂຄງການ ໃນລັກສະນະທີ່ຍືນນານ ແລະ ຈະຖືກສ່ອງແສງ ຢູ່ໃນ ກິດຈະກຳທີ່ຖືກສະເໜີ. ການປະເມີນ ເປັນສິ່ງທີ່ຕ້ອງການໃຫ້ລວມຢູ່ໃນ ການປຶກສາຫາລືກັບຜູ້ມີສ່ວນກ່ຽວຂ້ອງ. ນອກຈາກນັ້ນ, ງົບປະມານການຈັດຕັ້ງ ປະຕິບັດ ຈະຖືກສະໜອງ ໂດຍມີຕົວຊີ້ວັດ ຕາມຄວາມເປັນຈິງ ທີ່ຊີ້ບອກໃຫ້ເຫັນເຖິງ ລະດັບໝາກຜົນ, ຜົນໄດ້ຮັບ ແລະ ຜົນກະທົບ.

ຄຽງຄູ່ກັບ ນະ�โยบายบົດບາດຍິງຊາຍ ຂອງ GCF ທີ່ໄດ້ກ່າວມາຂ້າງເທິງນັ້ນ, ລະບົບຄຸ້ມຄອງວຽກງານການປົກ ປ້ອງ ແລະ ບົດບາດຍິງຊາຍ ຂອງ GIZ ແລະ ຍຸດທະສາດບົດບາດຍິງຊາຍ[8] ຕ້ອງການ ຄື ມີການດຳເນີນການວິເຄາະ ບົດບາດຍິງຊາດ ໃນຕ້ອນຕົ້ນ ຂອງໄລຍະການກະກຽມ ໂຄງການ ເພື່ອທີ່ຈະກຳນົດ ທ່າແຮງ ສຳລັບ ສົ່ງເສີມ ຄວາມ ເທົ່າທຽມກັນທາງເພດ ແລະ ຄວາມສ່ຽງທີ່ຈະຕ້ອງ ຫຼີກລ້ຽງ ຫຼື ຢ່າງໜ້ອຍ ຖືກຫຼຸດຜ່ອນ ຜ່ານທາງມາດຕະການອັນ ສະເພາະ.
ຜົນໄດ້ຮັບ ແລະ ຄຳແນະນຳ ກ່ຽວກັບ ການວິເຄາະນີ້ ແມ່ນຈະຖືກນຳໄປພິຈາລະນາ ສຳລັບ ຈຸດປະສົງ, ຕົວຊີ້ບອກ, ແນວທາງປະຕິບັດທີ່ເປັນວິທີການ ແລະ ລະບົບຕິດຕາມຜົນໄດ້ຮັບ ຂອງໂຄງການ.

ບົດປະເມີນ ຈະສັງລວມ ດ້ວຍບັນດາຍຸດທະສາດ ແລະ ມາດຕາການ ທີ່ຕອບສະໜອງບັນຫາບົດບາດຍິງຊາຍ ລວມ ທັງໝົດປະໂຫຍດທີ່ເປັນຮູບປະທຳ ແກ່ ແມ່ຍິງ ແລະ ແຜນປະຕິບັດງານບົດບາດຍິງຊາຍ ທີ່ເປັນຮູບປະທຳ (GAP) ສຳລັບແກ້ໄຂ ຊ່ອງว่างທາງເພດ ແລະ ເສີມຂະຫຍາຍ ຜົນປະ�โยชน์ ແລະ ການສ້າງຄວາມເຂັ້ມແຂງ ຂອງແມ່ຍິງ ຢູ່ ໃນ ຂະແໜງປ່າໄມ້ ແລະ ພູມສັນຖານ ໃນພື້ນທີ່ ທີ່ມີການຄົດໄລ່.

[7] ກອງທຶນດິນຟ້າອາກາດສີຂຽວ ປີ 2019

[8] GIZ ປີ 2012.

1.2. ວິທີການ

ການວິເຄາະບົດບາດຍິງຊາຍນີ້ ແມ່ນການປັບປຸງເພີ່ມຕື່ມ ການວິເຄາະບົດບາດຍິງ-ຊາຍ ທີ່ໄດ້ດຳເນີນສຶກສາ ສຳລັບແຜນງານຂອງ ກອງທຶນດິນຟ້າອາກາດສີຂຽວ GCF ທີ່ມີຊື່ວ່າ "ການຈັດຕັ້ງປະຕິບັດໂຄງການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສປປ ລາວ ຜ່ານການປັບປຸງການຄຸ້ມຄອງພູມີທັດປ່າໄມ້ແບບຍືນຍົງ" (FP117), ທີ່ໄດ້ຮັບການອະນຸມັດຈາກຄະນະກຳມະການ ກອງທຶນດິນຟ້າອາກາດສີຂຽວ GCF ໃນປີ 2019. ການປະເມີນນີ້ ແມ່ນການປະເມີນທີ່ເໝາະສົມກັບທຸກໆຈຸດປະສົງ, ເຊິ່ງໄດ້ຖືກທົບທວນຄືນ ເພື່ອເນັ້ນໜັກໃສ່ໂຄງການ 2. ມັນຮັບປະກັນການປະເມີນ ທີ່ສະທ້ອນໃຫ້ເຫັນເຖິງບັນດາໝາກຜົນຂອງ ແລະ ກິດຈະກຳຂອງໂຄງການທີ່ໄດ້ຖືກປັບປຸງເພີ່ມຕື່ມ, ແລະ ພື້ນທີ່ໂຄງການທີ່ຂະຫຍາຍພາຍໃນໂຄງການ 2. ການປະເມີນບົດບາດຍິງຊາຍນີ້ ໄດ້ຖືກດຳເນີນການ ຕາມການຊີ້ນຳຂອງກອງທຶນດິນຟ້າອາກາດສີຂຽວ GCF (ລວມເຖິງ ຮ່າງ-ແບບການວິເຄາະບົດບາດຍິງ-ຊາຍ/ແຜນປະຕິບັດງານ ແລະ ຄຳຖາມຕ່າງໆ ຕາມບົດແນະນຳ) ເຊັ່ນດຽວກັນກັບນະໂຍບາຍກ່ຽວກັບບົດບາດຍິງ-ຊາຍຂອງ ກອງທຶນດິນຟ້າອາກາດສີຂຽວ ແລະ ບົດແນະນຳຂອງ GIZ ກ່ຽວກັບການວິເຄາະບົດບາດຍິງ-ຊາຍ.

ການປັບປຸງ ບົດວິເຄາະບົດບາດຍິງຊາຍສະບັບນີ້ ໄດ້ຖືກດຳເນີນໄປໃນ ສາມໄລຍະ:

1. ການທົບທວນ ການວິເຄາະກ່ຽວກັບບົດບາດຍິງ-ຊາຍຕົ້ນສະບັບ ແລະ ການປັບປຸງໄປຕາມການປ່ຽນແປງ ຂອງ ບັນດານະໂຍບາຍ, ກອບນິຕິກຳ ແລະ ລະບຽບການ ທີ່ກ່ຽວຂ້ອງ, ແລະ ການປະເມີນກ່ອນເກີດຂຶ້ນ ຢູ່ໃນຂະແໜງການ.
2. ການປຶກສາຫາລື ກັບ ບັນດາ ອຳນາດການປົກຄອງທ້ອງຖິ່ນ ຂອງລັດ ທີ່ກ່ຽວຂ້ອງ ແລະ ຊາວບ້ານ ຢູ່ໃນ ສາມບ້ານ ໃນ ສາມ ແຂວງເປົ້າໝາຍ (ໄຊຍະບູລີ, ຫຼວງພະບາງ ແລະ ອຸດົມໄຊ) ແລະ ການປຶກສາຫາລື ຮ່ວມ ກັບ ພາກປະຊາສັງຄົມ (CSOs) ຊຶ່ງລວມທັງອົງການ ສະຫະພັນແມ່ຍິງຕ່າງໆ (ເບິ່ງລາຍລະອຽດເພີ່ມຕື່ມ ໃນພາກທີ 8).
3. ສືບຕໍ່ການຄົ້ນຄວ້າ ແລະ ສຳເລັດ ບົດວິເຄາະບົດບາດຍິງຊາຍສະບັບປັບປຸງ ແລະ GAP.

ໂດຍລວມ, ຂໍ້ມູນຕົວເລກທີ່ມີລ້າສຸດ ກ່ຽວກັບບົດບາດຍິງຊາຍ ຢູ່ໃນຂະແໜງປ່າໄມ້ ຂອງ ສ.ປ.ປ.ລາວ ແມ່ນມີຈຳນວນຈຳກັດ, ແລະ ໂດຍປົກກະຕິແລ້ວ ການເກັບກຳ ແລະ ການວິເຄາະຂໍ້ມູນໂຕເລກ ແມ່ນປະຕິບັດ ໃນກອບການປະເມີນປະເທດ ຂອງ ຜູ້ໃຫ້ທຶນ ແລະ ການເກັບກຳຂໍ້ມູນໂຕເລກສຳມະໂນປະຊາກອນ ທີ່ມີລັກສະນະກວ້າງຂວາງ ແລະ ແບບລວມໆຫຼາຍກວ່າ.

ຄຳຄິດເຫັນ ຈາກການປຶກສາຫາລື ທີ່ລວມມີ ຄຳຄິດເຫັນ ແລະ ຄຳແນະນຳ ຈາກການປຶກສາຫາລືທັງສອງຮອບ (ໂຄງການ 1 ແລະ 2) ໄດ້ຖືກເຊື່ອມໂຍງເຂົ້າທົ່ວເອກະສານ. ຜົນການສຶກສາ ແລະ ການສັງເກດ ເປັນສິ່ງສຳຄັນຈຳເປັນ ຕໍ່ ການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ໂຄງການທີ່ໄດ້ວາງແຜນໄວ້. ຢູ່ໃນມາດຕະການທີ່ເຊື່ອມໂຍງກັນຢ່າງຕັ້ງໜ້າລະຫວ່າງ ການຄຳນຶງເຖິງບົດບາດຍິງຊາຍ ແລະ ການຕອບສະໜອງທາງດ້ານບົດບາດຍິງຊາຍ ຜ່ານທາງກິດຈະກຳຕ່າງໆ ຂອງໂຄງການ, ໂຄງການ ບໍ່ພຽງແຕ່ສາມາດປົກປ້ອງ ການສືບຕໍ່ແບບແຜນຕາມ

ປະເພນີ ຂອງຍິງຊາຍ ແຕ່ກໍຍັງປະກອບສ່ວນ ຢ່າງສຳຄັນ ຕໍ່ການປັບປຸງ ຄວາມສະເໝີພາບ ແລະ ຄວາມເທົ່າທຽມກັນ ຂອງຍິງຊາຍ ຢູ່ໃນພື້ນທີ່ເປົ້າໝາຍ. ສິ່ງດັ່ງກ່າວນີ້ ຈະເພີ່ມເຂົ້າຢ່າງຫຼວງຫຼາຍ ໃນຜົນກະທົບທາງບວກ ທີ່ໂຄງການ ສາມາດມີໄດ້.

2. ຂໍ້ມູນທາງດ້ານເພດຢູ່ ສປປ ລາວ

ປັດຈຸບັນ ລາວຢູ່ອັນດັບທີ 113 ໃນດັດສະນີ ຄວາມບໍ່ເທົ່າທຽມກັນ ທາງເພດ (ຢູ່ອັນດັບທີ 137 ໃນດັດສະນີ ການພັດທະນາທົ່ວໄປຂອງມະນຸດ; ປີ 2019). ໂຕທີ່ປະກອບສ່ວນທາງລົບຕົ້ນຕໍ່ ການຈັດອັນດັບດັ່ງກ່າວ ແມ່ນ ອັດຕາສ່ວນການຕາຍ ຂອງແມ່, ອັດຕາການເກີດ ຂອງໄວໜຸ່ມ ແລະ ອັດຕາສ່ວນ ຂອງປະຊາກອນທີ່ເປັນແມ່ຍິງ ມີຕ່ຳ ໂດຍທີ່ ຢ່າງໜ້ອຍໄດ້ຮັບການສຶກສາຂັ້ນມັດທະຍົມຈຳນວນໜຶ່ງ. ໂຕທີ່ປະກອບສ່ວນສົ່ງຜົນທາງບວກ ແມ່ນ ອັດຕາສ່ວນສະມາຊິກສະພາ ທີ່ເປັນແມ່ຍິງມີສູງ ແລະ ມີອັດຕາສ່ວນ ການເຂົ້າຮ່ວມແຮງງານຍິງ ທີ່ສູງ[9].

2.1. ລະດັບການເປີດເຜີຍ: ທຳນິບທຳນຽມ ແລະ ບົດບາດທາງປະເພນີ ຂອງ ແມ່ຍິງ ແລະ ຜູ້ຊາຍ ຢູ່ ລາວ

ເຖິງແມ່ນວ່າ ຈະມີການເລີ່ມຕົ້ນກອບນິຕິກຳທີ່ເຂັ້ມແຂງ ແລະ ມີການສົ່ງເສີມ ຄວາມເທົ່າທຽມກັນ ຂອງແມ່ຍິງ ແລະ ຜູ້ຊາຍກໍຕາມ, ອິດທິພົນ ຂອງທຳນິບທຳນຽມ ແລະ ບົດບາດທາງປະເພນີ ທາງເພດ ຍັງເຫັນວ່າ ເປັນໜຶ່ງ ໃນຈຳນວນ ອຸປະສັກໃຫຍ່ໆ ໃນການບັນລຸ ຄວາມເທົ່າທຽມກັນທາງເພດ ຕາມຕົວຈິງ ຢູ່ລາວ. ສິ່ງດັ່ງກ່າວນີ້ ກາຍເປັນ ສິ່ງທີ່ໂດດເດັນທີ່ສຸດ ໃນຕຳແໜງການຕັດສິນໃຈ ໃນໝົດທົ່ວທຸກຂະແໜງ ລວມທັງລະດັບຊຸມຊົນ ທີ່ແມ່ຍິງ ສືບຕໍ່ ຕໍ່ສູ້ ເພື່ອເຂົ້າຮ່ວມ ໃນຂໍ້ກຳນົດ ແລະ ຈຳນວນທີ່ເທົ່າກັນ.

ຄວາມເທົ່າທຽມກັນ ທາງເພດ ແມ່ນເປັນສິ່ງທີ່ໄດ້ຮັບຜົນເພີ່ມຕື່ມ ໂດຍ ຄວາມເປັນມາ ຂອງຊົນເຜົ່າ ຢູ່ລາວ. ກຸ່ມ ລາວ-ໄຕ ກວມ 67% ຂອງ ພົນລະເມືອງຂອງ ສ.ປ.ປ.ລາວ ທີ່ມີສາມກຸ່ມ ພາສາໃຫຍ່ ທີ່ບໍ່ໃຊ້ພາສາລາວ-ໄຕ ຄື ກຸ່ມ ມອນຄະແມ (21%), ກຸ່ມມົ້ງ-ລຶ ມຽນ (8%) ແລະ ກຸ່ມພາສາຈີນ-ຕິເບດ (3%). ກຸ່ມເຫຼົ່ານີ້ ຖືກແຍກອອກໄປອີກ ເປັນ 49 ເຜົ່າ ແລະ ມີ 200 ກຸ່ມເຜົ່າຍ່ອຍ.
ທຳນິບທຳນຽມທາງປະເພນີ ຫຼາຍຢ່າງ ຢູ່ພາຍໃນ ວັດທະນາທຳ ລາວ - ໄຕ ແມ່ນຊຸກຍູ້ ຄວາມເທົ່າທຽມກັນທາງເພດ: ມັກຈະເຫັນແມ່ຍິງສ່ວນໃຫຍ່ ເປັນຜູ້ຕັດສິນໃຈ ດ້ານການເງິນ, ສືບທອດທີ່ດິນ ແລະ ຊັບສິນ, ແລະ ມີການເຂົ້າເຖິງ ການສຶກສາ ທີ່ເທົ່າທຽມກັນ. ອີກສາມກຸ່ມພາສາຊົນເຜົ່າ ສ່ວນໃຫຍ່ ມີປະເພນີ ແລະ ທຳນິບທຳນຽມແບບບູຮ້ານ ທີ່ເຂັ້ມງວດກວ່າ ຊຶ່ງຈຳກັດ ແມ່ຍິງ ໃນການເຂົ້າເຖິງການຕັດສິນໃຈ, ຊັບສິນ ແລະ ການສຶກສາ[10].

---

[9] ລັດສະນີ ຄວາມບໍ່ເທົ່າທຽມກັນທາງເພດ

[10] ທ່ານ ຄິງ ແລະ ແວນ ເດີ ວອນ, ປີ 2007

ແຕ່ເຖິງຢ່າງໃດກໍຕາມ, ຄວາມຮຸນແຮງ ກັບແມ່ຍິງ ແມ່ນຄວາມຈິງ ສຳລັບ ແມ່ຍິງ ທີ່ມາຈາກພື້ນຖານໝົດທຸກເຜົ່າ ໃນລາວ. ການຄົ້ນຄົ້ວ ຊີ້ໃຫ້ເຫັນວ່າ ປະມານ 20% ແມ່ຍິງລາວ ຖືກທາລຸນ ທາງຮ່າງກາຍ ແລະ/ຫຼື ທາງເພດ ຈາກ ຄູ່ຄອງ ຫຼື ຜູ້ທີ່ບໍ່ແມ່ນຄູ່ຄອງ ແລະ ຢ່າງໜ້ອຍ 35% ຂອງແມ່ຍິງ ດຳລົງຊີວິດ ໃນສະພາບທີ່ຖືກທາລຸນທາງຈິດໃຈ ຊຶ່ງວ່າ ທັງສອງໂຕເລກ ຖືກຄາດການວ່າ ສູງຫຼາຍ ເນື່ອງຈາກວ່າ ກໍລະນີສ່ວນໃຫຍ່ ບໍ່ໄດ້ຖືກລາຍງານ. ບາງທີ ຍິ່ງໄປ ກວ່ານັ້ນ, ແມ່ຍິງສ່ວນໃຫຍ່ ແລະ ເກືອບເຄິ່ງໜຶ່ງຂອງຜູ້ຊາຍທັງໝົດ ຢູ່ລາວ ເຊື່ອວ່າ ຄວາມຮຸນແຮງ ເປັນສິ່ງທີ່ ຍອມຮັບໄດ້ ຖ້າຫາກແມ່ຍິງ ບໍ່ປະຕິບັດຕາມ ທຳນິບທຳນຽມ ແລະ ບົດບາດຕາມຮີດຄອງປະເພນີ ກ່ຽວກັບເພດ ເຊັ່ນ ວ່າ ການອອກເຮືອນໂດຍບໍ່ໄດ້ຮັບອະນຸຍາດ ຫຼື ການບໍ່ແຕ່ງຢູ່ຄົວກິນ[11]. ສິ່ງດັ່ງກ່າວນີ້ ຊີ້ໃຫ້ເຫັນວ່າ ບັນຫາ ແມ່ນ ເປັນທັງສິ່ງທີ່ປະຕິບັດຢູ່ ແລະ ທັງເປັນບັນຫາໃຫຍ່ ທີ່ກ່ຽວຂ້ອງກັບ ປະເພນີ ແລະ ວັດທະນາທຳ ທີ່ບໍ່ສາມາດ ແກ້ໄຂ ໄດ້ ໃນໄລຍະສັ້ນໆ[12]. ໜ່ວຍໄກເກ່ຍຂັ້ນບ້ານ ແມ່ນເປັນການຈັດຕັ້ງລະດັບຈຸລະພາກ ທຳອິດ ທີ່ແກ້ໄຂ ຄະດີຕ່າງໆ ກ່ຽວກັບ ການໃຊ້ຄວາມຮຸນແຮງພາຍໃນ ແລະ ສ່ວນຫຼານ ຈະນຳໃຊ້ວິທີການແບບປະນີປະນອມ ຕໍ່ຄະດີຕ່າງໆ ເພື່ອ ໃຫ້ໄດ້ຕາມສິ່ງຕ້ອງການ ໃນການສ້າງຄວາມສາມັກຄີ ພາຍໃນບ້ານ ແລະ ເພື່ອໃຫ້ໄດ້ຮັບການປະກາດໃຫ້ເປັນ “ບ້ານ ປອດຄະດີ” (ບໍ່ມີການອາໃສສານເມືອງ). ບົດບາດທາງປະເພນີ ຂອງເພດຍິງຊາຍ ມີຜົນກະທົບໂດຍກົງ ຕໍ່ລະບົບ ຍຸຕິທຳ ທີ່ອີງໃສບ້ານ. ນອກຈາກນັ້ນ, ແມ່ຍິງມີຄວາມອ່ອນແອ ທີ່ຈະສາມາດເຂົ້າເຖິງ ລະບົບຍຸຕິທຳ ທີ່ຢູ່ນອກໂຄງ ສ້າງການຈັດຕັ້ງຂອງບ້ານ ຍ້ອນຄວາມບໍ່ຮູ້ໜັງສື, ຂາດຄວາມຮູ້ດ້ານພາສາລາວ ແລະ ຄວາມຮູ້ກ່ຽວກັບກົດໝາຍ ແລະ ຂາດວິທີທາງ ແລະ ການອະນຸຍາດ ໃຫ້ເດີນທາງ.

ສ.ປ.ປ.ລາວ ເປັນໜຶ່ງໃນບັນດາປະເທດທີ່ມີອັດຕາການແຕ່ງງານ ແຕ່ຍັງນ້ອຍສູງ ຢູ່ໃນພາກພື້ນ ເນື່ອງຈາກວ່າເປັນ ສ່ວນໜຶ່ງ ຂອງ ການປະຕິບັດຕາມຮີດຄອງປະເພນີ ຊຶ່ງລວມມີ “ການກຸມເອົາເມຍ” ແລະ ການແຕ່ງງານຂອງ ເດັກນ້ອຍ. ໜຶ່ງສ່ວນສາມ ຂອງແມ່ຍິງ ແຕ່ງງານກ່ອນອາຍຸ 18 ໃນຄະນະທີ່ ໜຶ່ງສ່ວນສິບ ແຕ່ງງານ ກ່ອນອາຍຸ 15 ປີ. ການແຕ່ງງານແຕ່ອາຍຸຍັງນ້ອຍ ສ່ວນໃຫຍ່ ແມ່ນກ່ຽວຂ້ອງກັບ ການຖືພາແຕ່ອາຍຸຍັງນ້ອຍ. ໃນປີ 2012, ມີ 19.4 ເປີເຊັນ ຂອງ ແມ່ຍິງອາຍຸໄວຈະເລີນພັນ ເກີດລູກ ກ່ອນອາຍຸ 18 ໃນຄະນະທີ່ 3.6 ເປີເຊັນ ໄດ້ເປັນແບບນັ້ນ ກ່ອນອາຍຸ 15. ທັງ ການແຕ່ງງານໄວ ແລະ ການເກີດຂອງໄວໜຸ່ມ ມີຜົນກະທົບທາງລົບ ຕໍ່ ໂອກາດທາງການສຶກສາ ແລະ ການດຳລົງຊີວິດ ຂອງແມ່ຍິງ[13].

ຜົນກະທົບ ຂອງປັດໃຈເຫຼົ່ານີ້ ຕໍ່ແຜນງານ ບໍ່ສາມາດເປັນທີ່ເຂົ້າໃຈໄດ້. ມັນກະທົບ ຕໍ່ການມີສ່ວນຮ່ວມ ຂອງ ແມ່ຍິງ , ຄວາມເຊື່ອໝັ້ນຂອງເຂົາເຈົ້າ ທີ່ຈະກ້າເວົ້າ ແລະ ເປັ່ງສຽງອອກມາຕ້ານ ແນວຄວາມຄິດຕ່າງໆ ລວມທັງ ຄວາມພໍໃຈ ແລະ ຄວາມອາດສາມາດ ຂອງເຂົາເຈົ້າ ໃນການເຂົ້າຮ່ວມ ວຽກງານການຄຸ້ມຄອງບ້ານ. ແມ່ຍິງໃນເຂດຊົນນະບົດ ຫຼາຍຄົນ ຍັງຄິດເອງວ່າ ໂດຍທົ່ວໄປ ແມ່ຍິງ ບໍ່ມີຄວາມສາມາດ ໃນການຕັດສິນໃຈ ເນື່ອງຈາກ ລະດັບການສຶກສາ ແລະ ເຫັນວ່າ ຍັງຂາດຄຸນນະວຸດທິ ໃນການສືບທອດການເປັນຜູ້ນຳ, ຊຶ່ງວ່າ ນີ້ແມ່ນມຸມມອງ ທີ່ສະແດງອອກມາ ຢູ່ ໃນການສຳພາດ ສອງ ໃນສາມບ້ານ ໃນຊ້ວງ ການລົງເຮັດການປະເມີນ. ບ້ານທີສາມ ມີອັດຕາລາຍຮັບ ສຳລັບ ແມ່ຍິງ ສູງກວ່າ ແລະ ມີວັດທະນາທຳ ທີ່ແມ່ຍິງເຂົ້າຮ່ວມ ໃນການທຳການຕັດສິນໃຈ. ອັນສຸດທ້າຍ ແມ່ນເປັນປັດໃຈກ່ຽວ

[11] ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ, ປີ 2012

[12] ການເປີດກວ້າງການພັດທະນາຢູ່ລາວ, ປີ 2018: ເປົ້າໝາຍ SDG 5 ຄວາມເທົ່າທຽມກັນທາງເພດ

[13] ສົມທຽບ ສະຫະປະຊາຊາດ ຢູ່ ສ.ປ.ປ.ລາວ, ປີ 2018

ກັບການຕັດສິນໃຈຫຼາຍກ່ວາ, ເນື່ອງຈາກວ່າ ບ້ານອື່ນ ກໍຍັງອ້າງວ່າ ແມ່ຍິງຫາເງິນໄດ້ຫຼາຍກວ່າຜູ້ຊາຍ ແຕ່ວ່າ ມັນບໍ່ໄດ້ນຳໄປສູ່ ອັດຕາການມີສ່ວນຮ່ວມ ຂອງແມ່ຍິງ ທີ່ສູງຂຶ້ນ.

ຄວາມໝາຍ ສຳລັບ ໂຄງການຂອງ ກອງທຶນດິນຟ້າອາກາດສີຂຽວ GCF ທີ່ໄດ້ວາງແຜນໄວ້

ນອກຈາກຫຼີກລ້ຽງ ການສືບຕໍ່ແບບແຜນ ແລະ ທຳນິບທຳນຽມທາງເພດ ທີ່ເຄີຍປະຕິບັດມາ ຊຶ່ງເປັນຈຸດເສຍປຽບ ຂອງແມ່ຍິງລາວ, ໂຄງການ GCF ທີ່ໄດ້ວາງແຜນໄວ້ ມີທ່າແຮງທີ່ສຳຄັນ ໃນການປະກອບສ່ວນ ທາງບວກ ຕໍ່ຄວາມ ເທົ່າທຽມກັນທາງເພດ. ມາດຕະການທີ່ລວມເອົາການປູກຈິດສຳນຶກ ທີ່ເລັງເປົ້າໝາຍໃສ່ ແມ່ຍິງ ທີ່ເປັນສະເໝືອນຜູ້ ມີຄວາມຮູ້ ກ່ຽວກັບຮີດຄອງປະເພນີ ແລະ ເປັນຕົວແທນແຫ່ງການປ່ຽນແປງ ພາຍໃນຄອບຄົວຂອງເຂົາເຈົ້າ ແມ່ນມີ ຄວາມສາມາດທີ່ຈະເຂົ້າເຖິງ ກຸ່ມເປົ້າໝາຍ ຢ່າງຫຼວງຫຼາຍ ໂດຍສະເພາະໃນເວລານຳສະເໜີ ເປັນພາສາຊົນເຜົ່າທີ່ແຕກ ຕ່າງກັນ ແລະ ໄດ້ຖືກອອກແບບມາໃຫ້ເໝາະສົມກັບ ລະດັບການສຶກສາຂັ້ນຕ່ຳ.

ເນື່ອງຈາກວ່າ ໜຶ່ງໃນຈຳນວນແນວທາງປະຕິບັດ ທີ່ເປັນໃຈກາງ ຂອງໂຄງການ GCF ຈະສະໜັບສະໜູນວິທີການ ເສະລິດກະສິກຳທີ່ມີລັກສະນະຍືນຍົງຂຶ້ນຕື່ມ ແລະ ຕ່ອງໂສ້ຄຸນຄ່າ ແລະ ສະນັ້ນ ຈຶ່ງສ້າງເງື່ອນໄຂໂຄງສ້າງລາຍຮັບໃໝ່ /ທາງເລືອກ ແລະ ທີ່ຫຼາກຫຼາຍຍິ່ງຂຶ້ນ ໃຫ້ແກ່ຊຸມຊົນ, ມັນມີຄວາມສຳຄັນ ທີ່ຈະຕ້ອງຫຼຸດຜ່ອນຄວາມສ່ຽງດ້ານການ ເງິນ ແກ່ ບັນດາຄອບຄົວທີ່ເຂົ້າຮ່ວມ. ຜົນການສຶກສາຄົ້ນຄົ້ວ ຊີ້ໃຫ້ເຫັນວ່າ ບັນຫາທາງການເງິນ ແລະ ບັນຫາທີ່ ກ່ຽວຂ້ອງກັບວຽກງານ ເປັນເພີ່ມໂອກາດທີ່ຈະເກີດມີຄວາມຮຸນແຮງພາຍໃນ ໂດຍສະເພາະ ໃນຄອບຄົວທີ່ ແມ່ຍິງມີ ລະດັບການສຶກສາ ແລະ ລາຍຮັບ ຕ່ຳກວ່າຜົວຂອງເຂົາເຈົ້າ[14]. ເມື່ອ ລະບຽບການປ່າໄມ້ ສົ່ງຜົນກະທົບ ຕໍ່ ທຸລະກິດ ຂອງຄອບຄົວ ຫຼື ເມື່ອຊຸມຊົນ ໄດ້ຮັບການສະໜັບສະໜູນ ໃຫ້ປ່ຽນຮູບແບບປະເພນີ ໃນການດຳລົງຊີວິດ ແລະ ສ້າງ ລາຍຮັບ, ສາມາດສັນນິຖານໄດ້ວ່າ ແມ່ຍິງມີຄວາມສຽງຫຼາຍຂຶ້ນ ຕໍ່ຄວາມຮຸນແຮງພາຍໃນຄອບຄົວ. ການສ້າງຄວາມ ເຂັ້ມແຂງທາງດ້ານເສດຖະກິດຂອງແມ່ຍິງ ໃນລະດັບທ້ອງຖິ່ນສາມາດນຳໄປສູ່ການປັບປຸງສະຖານະການຂອງເຂົາເຈົ້າ ແຕ່ທັງນີ້ທັງນັ້ນ, ມັນກໍຍັງມີຄວາມສ່ຽງບາງຢ່າງ ທີ່ຕ້ອງໄດ້ພິຈາລະນາ. ຕົວຢ່າງ, ການສົ່ງເສີມແມ່ຍິງໄປເຮັດວຽກ ນອກເຮືອນສາມາດຫຼຸດຜ່ອນ ການຖືກຂົ່ມເຫັງພາຍໃນຄອບຄົວ, ແຕ່ໃນທາງກັບກັນ, ມັນອາດຈະເພີ່ມຄວາມສ່ຽງຕໍ່ ການຂົ່ມເຫັງຫຼືການໂຈມຕີນອກເຮືອນ. ອີກຕົວຢ່າງໜຶ່ງ, ຈາກການສຶກສາອັນໜຶ່ງ ກ່ຽວກັບ ໂຄງການສະທາລະນະ ປະໂຫຍດ ໃນ ສປປ ລາວ ພົບວ່າ “ໂຄງການດັ່ງກ່າວປະສົບຜົນສຳເລັດ ໃນການເພີ່ມລາຍຮັບຂອງແມ່ຍິງ, ແຕ່ສິ່ງ ເຫຼົ່ານັ້ນ ບໍ່ໄດ້ປັບປຸງປະສົບການຂອງແມ່ຍິງ ຕໍ່ກັບຄວາມຮຸນແຮງທາງເພດ”.
ດັ່ງນັ້ນ, ແຜນງານ GCF ອາດຈະສາມາດ ປະກອບສ່ວນ ປ້ອງກັນຄວາມຮຸນແຮງ ຕໍ່ແມ່ຍິງ ຜ່ານທາງ ການສ້າງຍຸດ ທະສາດ ທີ່ຄຳນຶງ ແລະ ຕອບສະໜອງຄວາມຕ້ອງການ ທາງດ້ານບົດບາດຍິງຊາຍ, ໂດຍເລັງໃສ່ ການພັດທະນາທັກ ສະ ແລະ ການສ້າງຄວາມເຂັ້ມແຂງແກ່ແມ່ຍິງ ພ້ອມທັງ ການປ່ຽນ ອະຄະຕິ ຂອງຜູ້ຊາຍ ຕໍ່ກັບຄວາມເທົ່າທຽມກັນ ທາງເພດ.

[14] NCAW, ປີ 2015

ໂຄງການດັ່ງກ່າວຕ້ອງພິຈາລະນາຢ່າງລະອຽດກ່ຽວກັບສະພາບການທ້ອງຖິ່ນ, ປະເພນີ ແລະບົດບາດຍິງ-ຊາຍ ໃນເວລາ ອອກແບບໂຄງການ. ຕາມເງື່ອນໄຂ ໃນການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ໂຄງການ 2, ຍຸດທະສາດເພື່ອຮັບມື ແລະ ແກ້ໄຂຄວາມສ່ຽງ ຂອງການໃຊ້ຄວາມຮຸນແຮງທາງເພດ ປະກອບມີ: [15]

- ການເຊື່ອມໂຍງການເຜີຍແຜ່ບົດບາດຍິງຊາຍ ເຂົ້າໃສ່ໃນທຸກໆກິດຈະກຳຂອງໂຄງການ
- ສ້າງເງື່ອນໄຂ ໃຫ້ແມ່ຍິງເຂົ້າເຖິງຂໍ້ມູນຂ່າວສານ ເພື່ອຮັບຮູ້ສິດ ທາງດ້ານກົດໝາຍຂອງເຂົາເຈົ້າ ພາຍໃຕ້ກົດໝາຍພາຍໃນ ແລະ ລະຫວ່າງປະເທດ ຜ່ານກິດຈະກຳການສ້າງຄວາມອາດສາມາດຕ່າງໆຂອງໂຄງການ.
- ພະຍາຍາມໃຫ້ຜູ້ຊາຍ ແລະ ເດັກນ້ອຍເພດຊາຍເຂົ້າຮ່ວມ ການສົ່ງເສີມການບໍ່ໃຊ້ຄວາມຮຸນແຮງ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ. ນີ້ອາດຈະປະກອບມີການຝຶກອົບຮົມໃນຂັ້ນຊຸມຊົນ ກ່ຽວກັບຄວາມສະເໝີພາບລະຫວ່າງຍິງຊາຍ ແລະ ວິທີການຕອບ�โต້ກ່ຽວກັບ GBV, ໂດຍສະເພາະສຳລັບຜູ້ນຳທ້ອງຖິ່ນ, ຜູ້ຊາຍທຸກໄວ, ລວມທັງ ຜູ້ຮັກສາຄວາມປອດໄພ.
- ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຕັ້ງຄຳຖາມຄວາມບໍ່ສອດຄ່ອງ ຕໍ່ກັບບັນດາ ຮີດຄອງປະເພນີ ຫຼື ຄ່ານິຍົມທາງສັງຄົມຕ່າງໆ ທີ່ກ່ຽວຂ້ອງກັບ ການເຂົ້າຮ່ວມກິດຈະກຳຕ່າງໆ ທີ່ໂຄງການສະໜັບສະໜູນ.
- ພັດທະນາ ແລະ ສະໜອງການຝຶກອົບຮົມກ່ຽວກັບບົດບາດຍິງ-ຊາຍ ແລະ ຕ້ານຄວາມຮຸນແຮງທີ່ກ່ຽວຂ້ອງກັບ ບົດບາດຍິງຊາຍ (GBV)
- ອະທິບາຍລາຍລະອຽດ ຂອງຫຼັກຈັນຍາບັນ ໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆຂອງໂຄງການ
- ເຊື່ອມສານຕົວຊີ້ວັດ GBV ເຂົ້າກັບການຕິດຕາມໂຄງການ ແລະກົນໄກການຮ້ອງທຸກ

ຄວນມີການສົ່ງເສີມຢ່າງ ຕັ້ງໜ້າກ່ຽວກັບບົດບາດເພດຍິງ-ຊາຍຢູ່ຂັ້ນບ້ານ ໂດຍຜ່ານ ການຈັດກິດຈະກຳຕ່າງໆ ທີ່ເຫັນວ່າສອດຄ່ອງ ໂດຍສະເພາະການປູກຈິດສຳນຶກ, ການປຶກສາຫາລືຂັ້ນບ້ານ, ການຝຶກອົບຮົມ ຫຼື ກອງປະຊຸມເຜີຍແຜ່. ໃນນັ້ນ, ລວມມີ ອາດໝາຍເຖິງ ການແບ່ງກຸ່ມສົນທະນາ ຫຼື ປະຊຸມແຍກກັນ ລະຫວ່າງເພດຊາຍ, ຍິງ ແລະ ອຳນາດການປົກຄອງຂອງບ້ານ ເພື່ອເຮັດໃຫ້ເຂົາເຈົ້າຮູ້ມີຄວາມໝັ້ນໃຈໃນການ ແລກປ່ຽນທັດສະນະ, ຝຶກອົບຮົມ ໃຫ້ພະນັກງານທີ່ກ່ຽວຂ້ອງກ່ຽວກັບ ເຕັກນິກໃນການເປັນຜູ້ອຳນວຍຄວາມສະດວກທີ່ດີ, ການສົ່ງພະນັກງານທີ່ເວົ້າພາສາຊົນເຜົ່າ ຫຼື ສະໜອງງົບປະມານເພື່ອຈ້າງນັກແປ, ແລະ ການອອກແບບກິດຈະກຳຕ່າງໆທີ່ແທດເໝາະ ກັບສະພາບພາຍໃນບ້ານ.

2.2. ລະດັບມະຫາພາກ: ການປະກອບສ່ວນລົງມືປະຕິບັດ ໃນລະດັບສາກົນ ແລະ ພາກພື້ນ ແລະ ນິຕິກຳ ແລະ ນະ�โยบายแห่งชาติ

ໃນລະດັບສາກົນ, ລາວເປັນປະເທດພາຄີ ໃນສົນທິສັນຍາ ວ່າດ້ວຍການລົບລ້າງ ທຸກຮູບແບບຂອງການຈຳແນກເພດຍິງ (CEDAW). ການປະເມີນຄວາມອາດສາມາດ ກ່ຽວກັບ ການຈັດຕັ້ງປະຕິບັດ ສົນທິສັນຍາ CEDAW ຢູ່ລາວ

[15] Adapted from National Commission for the Advancement of Women, Lao PDR (2015): Summary report. A study on violence against women in Lao PDR. Lao National survey on Women's health and life experiences 2014. Available online: https://data.opendevelopmentmekong.net/dataset/9572bc34-8279-4070-b532-a529c6a3fe22/resource/1dceb372-4607-4b33-be81-764b0742e1d9/download/a-study-on-violence-against-women-in-lao-pdr.pdf

ທີ່ດຳເນີນໂດຍ ສະມາຄົມພັດທະນາແມ່ຍິງ ແລະ ການສຶກສາດ້ານນິຕິກຳ (ADWLE) ໄດ້ສະຫຼຸບວ່າ ເຖິງແມ່ນວ່າຈະ ມີ ກອບນິຕິກຳ ທີ່ຄົບຖ້ວນຫຼາຍປານໃດ ກໍຕາມ ສຳລັບ ບັນຫາຄວາມເທົ່າທຽມກັນທາງດ້ານເພດ, ແຕ່ມີພຽງແຕ່ ການຈັດຕັ້ງປະຕິບັດ ທີ່ມີຂໍ້ຈຳກັດຫຼາຍເທົ່ານັ້ນ ເນື່ອງຈາກຂາດຄວາມອາດສາມາດ, ຄວາມຮູ້ ແລະ ງົບປະມານ[16] - ຊຶ່ງວ່າ ໂດຍພື້ນຖານແລ້ວ ແມ່ນເປັນສະພາບແບບດຽວກັນ ກັບຢູ່ໃນຂະແໜງປ່າໄມ້ ທີ່ມີກອບຍຸດທະສາດແລ້ວ ແຕ່ ຂາດຄວາມອາດສາມາດ ໃນການຈັດຕັ້ງປະຕິບັດ ທີ່ຖືກຕ້ອງ.

ນອກຈາກນັ້ນ, ເປົ້າໝາຍແຫ່ງການພັດທະນາແບບຍືນນານ (SDGs) ມີຜົນກະທົບຢ່າງຫຼວງຫຼາຍ ຕໍ່ ບັນດາຍຸດທະ ສາດ ແລະ ນະໂຍບາຍຂອງລາວ ຊຶ່ງລວມມີ ເປົ້າໝາຍ SDG 5 ທີ່ເລັງໃສ່ ເພື່ອບັນລຸ ຄວາມເທົ່າທຽມກັນທາງເພດ ແລະ ເພື່ອສ້າງຄວາມເຂັ້ມແຂງ ແກ່ ແມ່ຍິງ ແລະ ເດັກຍິງ. ຄວາມກ່ຽວຂ້ອງ ຂອງເປົ້າໝາຍ SDG ສຳລັບ ສ.ປ.ປ. ລາວ ແມ່ນເຊື່ອມໂຍງກັບ ຄວາມພະຍາຍາມ ຂອງປະເທດ ໃນການຫຼຸດພົ້ນອອກຈາກ ສະຖານະພາບການເປັນປະເທດ ດ້ອຍພັດທະນາ. ເຖິງແມ່ນວ່າ ເປົ້າໝາຍເບື້ອງຕົ້ນ ໃນການຫຼຸດພົ້ນ ໃນປີ 2020 ບໍ່ສາມາດບັນລຸໄດ້ອີກແລ້ວ ກໍຕາມ , ແຕ່ລັດຖະບານ ກຳນົດ ໃຫ້ສືບຕໍ່ຜັກດັນ ເພື່ອໃຫກ້າວໄປຫາຈຸດນັ້ນ. ຄວາມພະຍາຍາມໃນການສົ່ງເສີມ ການເຊື່ອມ ໂຍງ ແລະ ໂອກາດທາງເສດຖະກິດ ຂອງແມ່ຍິງ ຈະປະກອບສ່ວນໂດຍກົງ ຕໍ່ການຫຼຸດພົ້ນ ອອກຈາກ ສະຖານະພາບ ຂອງການເປັນປະເທດດ້ອຍພັດທະນາ[17].

ໃນລະດັບພາກພື້ນ, ມີຫຼາຍຖະແຫຼງການ ASEAN ທີ່ວາງພື້ນຖານ ສຳລັບ ການລວມເອົາບົດບາດຍິງຊາຍ ເຂົ້າໃນ ພາກພື້ນ. ຖະແຫຼງການ ວ່າດ້ວຍຄວາມກ້າວໜ້າ ຂອງແມ່ຍິງ ຢູ່ໃນ ຂົງເຂດ ASEAN[18] ໄດ້ຖືກເຊັນ ໃນປີ 1988 ແລະ ຕົ້ນຕໍ ແມ່ນເນັ້ນໃສ່ ການສົ່ງເສີມ ແລະ ຈັດຕັ້ງປະຕິບັດ ການມີສ່ວນຮ່ວມແບບເທົ່າທຽມກັນ ແລະ ມີ ປະສິດທິພາບ ຢູ່ໃນທຸກຂົງເຂດ ແລະ ທຸກລະດັບ. ເຖິງແມ່ນວ່າ ຖະແຫຼງການ ກ່າວເຖິງ ດ້ານການເມືອງ, ສັງຄົມ ແລະ ວັດທະນາທຳກໍຕາມ, ແຕ່ຈຸດເນັ້ນໜັກ ແມ່ນການມີສ່ວນຮ່ວມໃນດ້ານເສດຖະກິດ ຂອງແມ່ຍິງ.

ອົງປະກອບທາງດ້ານສັງຄົມ ໄດ້ຖືກເພີ່ມເຂົ້າ ຢ່າງຕໍ່ເນື່ອງ ໃສ່ໃນ ຖະແຫຼງການຕ່າງໄປ, ເຊັ່ນ ຖະແຫຼງການ ASEAN ຕ້ານການຄ້າມະນຸດ ໂດຍສະເພາະ ແມ່ນແມ່ຍິງ ແລະ ເດັກນ້ອຍ (ປີ 2004); ຖະແຫຼງການຮາໂນຍ ວ່າດ້ວຍ ການ ເພີ່ມສະຫວັດດີການ ແລະ ການພັດທະນາ ແມ່ຍິງ ແລະ ເດັກນ້ອຍ ASEAN (ປີ 2010); ຖະແຫຼງການ ວ່າດ້ວຍ ສິດທິມະນຸດ ຂອງ ASEAN; ຖະແຫຼງການ ວ່າດ້ວຍການລົບລ້າງ ການໃຊ້ຄວາມຮຸນແຮງ ກັບແມ່ຍິງ ແລະ ການ ລົບລ້າງ ຄວາມຮຸນແຮງ ໃສ່ເດັກນ້ອຍ ໃນ ASEAN (2013); ແລະ ຖະແຫຼງການອື່ນໆ ທີ່ກ່ຽວຂ້ອງ, ໂດຍສະເພາະ ກ່ຽວກັບ ການປົກປ້ອງສັງຄົມ.

ບາດກ້າວຕໍ່ໄປ ທີ່ສຳຄັນ ທີ່ຈະກ້າວໄປສູ່ ການເຊື່ອມໂຍງເອົາ ບັນຫາບົດບາດຍິງຊາຍ ແມ່ນ ຖະແຫຼງການ ASEAN ວ່າດ້ວຍ ການຈັດຕັ້ງປະຕິບັດ ທີ່ຕອບສະໜອງຕາມຄວາມຕ້ອງການທາງດ້ານບົດບາດຍິງຊາຍ ຂອງວິໄສທັດ ປີ 2025 ຂອງວົງຄະລະຍາດ ASEAN ແລະ ເປົ້າໝາຍແຫ່ງການພັດທະນາແບບຍືນນານ ໃນປີ 2017. ຖະແຫຼງການ ກຳນົດທິດທາງລາຍລະອຽດ ທີ່ບໍ່ປົກກະຕິ ກ່ຽວກັບ ການປັບປຸງ ການເກັບກຳ ແລະ ວິເຄາະຂໍ້ມູນໂຕເລກທີ່ຕອບສະ

[16] ສົມທຽບສິນທິສັນຍາ ADWLE, ປີ 2016

[17] UNDP, ປີ 2017

[18] ASEAN, ປີ 1988

ໜອງທາງດ້ານບົດບາດຍິງຊາຍ ແລະ ການທົບທວນນະໂຍບາຍ, ຊຶ່ງເນັ້ນໜັກໃສ່ ຄວາມຈຳເປັນທີ່ຈະຍຸດຕິການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ (ຊຶ່ງລວມມີ ການດຶງເອົາຜູ້ຊາຍ ແລະ ເດັກຊາຍ ເຂົ້າມາຮ່ວມ ເປັນຕົວແທນ ແຫ່ງຄວາມພະຍາຍາມ ໃນການສ້າງການປ່ຽນແປງ), ພ້ອມທັງ ຊຸກຍູ້ການຮ່ວມມື ກັບບັນດາກຸ່ມ ແລະ ອົງການຈັດຕັ້ງ ຂອງແມ່ຍິງ ເພື່ອ ປັບປຸງການຈັດຕັ້ງປະຕິບັດ ທີ່ຕອບສະໜອງທາງດ້ານບົດບາດຍິງຊາຍ[19].

ສ.ປ.ປ.ລາວ ມີກອບນິຕິກຳ ທີ່ເຂັ້ມແຂງ ສຳລັບ ສົ່ງເສີມຄວາມເທົ່າທຽມກັນທາງເພດ. ລັດຖະທຳມະນູນສະບັບປັບປຸງປີ 2003 ແລະ ກົດໝາຍອື່ນໆ ລະບຸຢ່າງຈະແຈ້ງວ່າ ແມ່ຍິງ ແລະ ຜູ້ຊາຍ ມີສິດເທົ່າທຽມກັນ ໃນທຸກດ້ານ ຄື - ດ້ານການເມືອງ, ສັງຄົມ, ວັດທະນາທຳ ແລະ ຢູ່ໃນຄອບຄົວ.
ນອກຈາກນັ້ນ, ສິດເທົ່າທຽມກັນຂອງແມ່ຍິງ ຍັງຖືກກຳນົດໄວ້ ຢູ່ໃນກົດໝາຍຄອບຄົວ, ກົດໝາຍທີ່ດິນ ແລະ ກົດໝາຍຊັບສິນ; ກົດໝາຍແຮງງານ; ກົດໝາຍໄຟຟ້າ; ແລະ ກົດໝາຍອາຍາ.
ກົດໝາຍ ວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ຍິງ (2004) ແມ່ນນິຕິກຳ ທີ່ເຈາະຈົງກັບປະເທດລາວ ຫຼາຍທີ່ສຸດ ຊຶ່ງກ່ຽວຂ້ອງກັບ ສິດເທົ່າທຽມກັນ ແລະ ການເຂົ້າເຖິງສຳລັບແມ່ຍິງ ແລະ ໄດ້ກຳນົດກອບ ສຳລັບ ກົດໝາຍຫຼາຍຢ່າງ ໃນໄລຍະຕໍ່ໄປ ທີ່ກຳນົດ ສິດຂອງແມ່ຍິງ ແລະ ນອກຈາກນັ້ນ ຍັງທຳໜ້າທີ່ເປັນພື້ນຖານ ເພື່ອສ້າງຕັ້ງຄະນະກຳມະການແຫ່ງຊາດ ສຳລັບ ຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ - ເດັກນ້ອຍ.

ບາງແຫຼ່ງຂໍ້ມູນໄດ້ໃຫ້ຮູ້ວ່າ ສິດຄອບຄອງທີ່ດິນຂອງແມ່ຍິງ ໃນກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງ (2019) ໄດ້ຖືກຈຳກັດລົງ ເນື່ອງຈາກວ່າ ວັກທີ່ລະບຸຂໍ້ມູນ (ເມຍ ແລະ ສາມີ) ໃນໃບຕາດິນໄດ້ຖືກເອົາອອກ[20]. ເຖິງຢ່າງໃດກໍ່ຕາມ, ຕາມກົດໝາຍແລ້ວ ແມ່ຍິງ ແລະ ຜູ້ຊາຍມີການເຂົ້າເຖິງທີ່ດິນກະສິກຳ ແລະ ປ່າໄມ້ຢ່າງສະເໝີພາບ, ແຕ່ການປະຕິບັດຕາມຮີດຄອງປະເພນີ ອາດບໍ່ເປັນໄປຕາມນັ້ນ. ກຳມະສິດທີ່ດິນລວມໝູ່ ຫຼື ບ້ານແມ່ນໄດ້ ຖືກລະບຸໄວ້ ໃນກົດໝາຍວ່າດ້ວຍທີ່ດິນ (2019) ແລະ ເປັນຮູບແບບການຖືຄອງທີ່ດິນສ່ວນຫຼາຍໃນ ສປປ ລາວ. ວິທີການ ຄຸ້ມຄອງກຳມະສິດທີ່ດິນລວມໝູ່ ຕົ້ນຕໍແລ້ວ ແມ່ນຂຶ້ນກັບຮີດຄອງປະເພນີຂອງຊົນເຜົ່ານັ້ນໆ. ໃນບັນດາບ້ານທີ່ຢູ່ໃນຕະກູນພາສາລາວ-ໄຕ (ກຸ່ມພາສາໄທ-ກະໄດ), ແມ່ນມີການສືບທອດຕາມສາຍຍາດທີ່ເປັນເພດຍິງ. ລູກສາວ ແລະ ລູກຊາຍ ສາມາດສືບທອດທີ່ດິນກະສິກຳຂອງເຂົາເຈົ້າໄດ້, ໂດຍອີງໃສ່ ການຕັດສິນຂອງພໍ່ແມ່. ໃນບັນດາຊົນເຜົ່າ ເຊັ່ນ: ມົ້ງ-ອິວມຽນ ແລະ ຂະໝຸ (ມອນ-ຂະແມ), ຮູບແບບການຖືຄອງທີ່ດິນກະສິກຳແມ່ນຂຶ້ນກັບເພດຊາຍ. ນາມສະກຸນ ແລະ ຊັບສິນ ແມ່ນຖືກຖ່າຍທອດຈາກພໍ່ ໄປຫາລູກຊາຍ[21]. ເຖິງຢ່າງໃດກໍ່ຕາມ, ຖ້າບໍ່ພິຈາລະນາຈາກລະບົບການສືບທອດມໍລະດົກທັງຝ່າຍຍິງ ແລະ ຝ່າຍຊາຍ, ແມ່ຍິງໂດຍທົ່ວໄປໄດ້ ປະເຊີນໜ້າກັບການສູນເສຍການເຂົ້າເຖິງທີ່ດິນຍ້ອນການພັດທະນາເສດຖະກິດພາຍໃນປະເທດ. ໃນນັ້ນ, ລວມມີບັນດານະ�โยบายຊຸກຍູ້ການປູກຝັງກະສິກຳແບບດ່ຽວ

[19] ຖະແຫຼງການ ASEAN ວ່າດ້ວຍ ການຈັດຕັ້ງປະຕິບັດ ທີ່ຕອບສະໜອງທາງດ້ານບົດບາດຍິງຊາຍ ຕາມວິໄສທັດ ປີ 2025 ຂອງ ວົງຄະລະຍາດ ASEAN ແລະ ເປົ້າໝາຍແຫ່ງການພັດທະນາແບບຍືນນານ ໃນປີ 2017

[20] LIWG 2020, Women and Land Rights in Lao PDR: Rural Transformation and a dream of secure tenure. Available online: https://data.opendevelopmentmekong.net/en/dataset/550ba9aa-79aa-4f80-ba41-8af35d322e6f/resource/22030fa3-66b7-4e9b-8f4e-fd44dd16aca4/download/women-and-land-right_29jan_eng.pdf

[21] Lao Women's Union, 2018. Gender Profile, Lao PDR

ແລະ ການໂອນທີ່ດິນກຳມະສິດທີ່ດິນໃຫ້ນັກລົງທຶນ, ຫຼຸດຜ່ອນການກະສິກຳແບບດັ້ງເດີມ ແລະ ເຮັດໃຫ້ເກີດມີຄວາມ ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ ແລະ ການເຮັດກະສິກຳທີ່ຫັນໄປຂຶ້ນກັບເຜດຊາຍເປັນຕົ້ນຕໍ. [22]

ຄວາມໝາຍ ສຳລັບ ແຜນງານ GCF ທີ່ໄດ້ວາງແຜນໄວ້

ພື້ນຖານດ້ານນິຕິກຳ ສຳລັບ ການສົ່ງເສີມ ການລວມເອົາບັນຫາບົດບາດຍິງຊາຍ ເຂົ້າໃນ ບັນດານະໂຍບາຍ ແລະ ລະບຽບການ ແມ່ນມີຄວາມເຂັ້ມແຂງ ແລະ ໄດ້ຖືກອຳນວຍຄວາມສະດວກຜ່ານກົດຈະກຳເປົ້າໝາຍຂອງ ໂຄງການ 1. ລາວໄດ້ຍົກລະດັບ ຜົນປະໂຫຍດ ໃນການປະຕິບັດ ຕາມສັນຍາສາກົນ ທີ່ກ່ຽວຂ້ອງກັບ ການລວມເອົາບົດບາດຍິງ ຊາຍ. ຖະແຫຼງການ ASEAN ທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ກຳນົດ ຈຸດເຂົ້າຫາພາກພື້ນ ສ່ວນ ກອບແຫ່ງຊາດ ເພື່ອ ເຊື່ອມໂຍງ ບົດບາດຍິງຊາຍ ເຂົ້າໃສ່ນະໂຍບາຍ ແລະ ຍຸດທະສາດຕ່າງໆ ໃນທຸກລະດັບ ແມ່ນເປັນສິ່ງທີ່ ກວ້າງຂວາງ ແລະ ເຂັ້ມແຂງ. ແຕ່ໜ້າເສຍດາຍ, ໃນເວລາດຽວກັນ ຄວາມເຂັ້ມແຂງອັນນີ້ ອາດຈະກຳໃຫ້ເກີດ ອຸປະສັກ ແກ່ການເຊື່ອມໂຍງເອົາ ບົດບາດຍິງຊາຍ ຢ່າງມີປະສິດທິພາບ ເຂົ້າໃນນິຕິກຳສະເພາະຂະແໜງການ ຊຶ່ງລວມມີ ຂະແ ໜງປ່າໄມ້: ຕາມທີ່ໄດ້ກ່າວໄວ້ ໂດຍພະນັງງານລັດຜູ້ໜຶ່ງ, ການເຊື່ອມໂຍງບໍ່ເຫັນວ່າຈະກ່ຽວຂ້ອງ ເພາະວ່າເຫັນວ່າ ນິຕິ ກຳລວມແມ່ນພຽງພໍແລ້ວ ທີ່ຈະລາຍງານ ການຕີຄວາມໝາຍ ກົດໝາຍທີ່ສະເພາະເຈາະຈົງກັບຂະແໜງປ່າໄມ້ ເຊັ່ນ ກົດໝາຍປ່າໄມ້.

ໂຄງການ 2 ຈະສົ່ງເສີມຄວາມເທົ່າທຽມທາງເພດ ໂດຍສະເພາະໃນບັນດາກົດຈະກຳບັງຄັບໃຊ້ກົດໝາຍ ແລະ ສ້າງ ຄວາມອາດສາມາດ. ບົດແນະນຳທີ່ໄດ້ຖືກຮຽບຮຽງຂຶ້ນໂດຍໂຄງການ ເພື່ອເຊື່ອມໂຍງການປັບຕົວ, ວາງແຜນນຳໃຊ້ ທີ່ດິນ, ວາງແຜນການລົງທຶນໃນດ້ານກະສິກຳ ແລະ ວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ຈະຕ້ອງຮຽບຮຽງຂຶ້ນ ໂດຍ ຄຳນຶງເຖິງ ບົດບາດຍິງ-ຊາຍ ແລະ ນອກຈາກນີ້, ຕ້ອງກຳນົດບັນດາມາດຕາການໃນການສົ່ງເສີມບົດບາດຂອງເຜດຍິງ ອີກດ້ວຍ. ໂດຍສອດຄ່ອງກັບ ຖະແຫຼງການ ASEAN ໃນການຊຸກຍູ້ການເຂົ້າຮ່ວມ ຂອງອົງການຈັດຕັ້ງແມ່ຍິງ ເຂົ້າ ໃນການປັບປຸງ ການວິເຄາະນະ�โยบาย[23], ອົງການຈັດຕັ້ງສັງຄົມ ທີ່ຕັ້ງຢູ່ລາວ ເຊັ່ນ ADWLE ສາມາດ ຊ່ວຍພິສູດ ເລື້ອງບົດບາດຍິງຊາຍ ຕໍ່ກັບທຸກການເຂົ້າມາກ່ຽວຂ້ອງ ໃນພື້ນທີ່ນີ້ ດັ່ງທີ່ໄດ້ວາງແຜນໄວ້. ເພື່ອພັດທະນາ ຄວາມອາດ ສາມາດ ຂອງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ, ຈຸດປະສານງານບົດບາດຍິງຊາຍ /Sub-CAW ທີ່ຢູ່ພາຍໃນ ກະຊວງ ກະສິກຳ ແລະ ປ່າໄມ້ (ລະດັບຊາດ ແລະ ລະດັບແຂວງ) ຄວນຈະເຂົ້າຮ່ວມ ຢູ່ໃນຂະບວນການເຫຼົ່ານີ້ ເທົ່າທີ່ຈະເປັນ ໄປໄດ້ (ເບິ່ງຕື່ມໄດ້ ໃນຂໍ້ 5.3).

2.3. ລະດັບກາງ: ສະຖາບັນການຈັດຕັ້ງ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ

ຄະນະກຳມະການແຫ່ງຊາດ ສຳລັບ ຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ - ເດັກນ້ອຍ (NCAWMC) ເປັນຜູ້ ຮັບຜິດຊອບ ຕໍ່ ການສ້າງ ແລະ ຈັດຕັ້ງປະຕິບັດ ນະ�โยบายแห่งชาติ ສຳລັບ ຄວາມກ້າວໜ້າຂອງແມ່ຍິງ ແລະ ສຳ

[22] LIWG 2020, Women and Land Rights in Lao PDR: Rural Transformation and a dream of secure tenure. Available online: https://data.opendevelopmentmekong.net/en/dataset/550ba9aa-79aa-4f80-ba41-8af35d322e6f/resource/22030fa3-66b7-4e9b-8f4e-fd44dd16aca4/download/women-and-land-right_29jan_eng.pdf

[23] Ibid, ໜ້າ 3 ຂອງຖະແຫຼງການ

ລັບ ລວມເອົາ ບົດບາດຍິງຊາຍ ເຂົ້າໃນໝົດທຸກຂະແໜງ. ຄວາມອາດສາມາດ ແລະ ການສະໜັບສະໜູນ ການຈັດຕັ້ງ ຂອງ ຄະນະກຳມະການ NCAWMC ຍັງມີຂໍ້ຈຳກັດ ເຖິງວ່າຈະມີການສະໜັບສະໜູນ ຈາກຜູ້ໃຫ້ທຶນ ສຳລັບ ການ ພັດທະນາຄວາມອາດສາມາດ ກຳຕາມ. NCAWMC ຍັງເປັນຜູ້ຮັບຜິດຊອບ ຕໍ່ ການສ້າງຍຸດທະສາດແຫ່ງຊາດ ສຳ ລັບ ຄວາມກ້າວໜ້າ ຂອງແມ່ຍິງ (NSAW) ທີ່ຕໍ່ອາຍຸ ທຸກໆຫ້າປີ ແລະ ພະຍາຍາມ ສົ່ງເສີມ ແລະ ເພີ່ມ ຄວາມເທົ່າ ທຽມກັນ ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ຢູ່ລາວ ໃນທຸກຂົງເຂດ. ການລວມເອົາເປົ້າໝາຍ ຂອງຍຸດທະສາດ ທີ່ຢູ່ໃນ ຍຸດທະສາດ ແລະ ແຜນການອື່ນໆ ທີ່ລວມມີ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) ແມ່ນມີ ຄວາມຄືບໜ້າດີ ແຕ່ ມັກຈະຂາດສິດອຳນາດ ໃນການຈັດຕັ້ງປະຕິບັດ ແລະ ສິດອຳນາດ ກ່ຽວກັບການສະໜອງ ເງິນ[24].

ອົງການຈັດຕັ້ງລັດທີ່ນຳພາ ຢູ່ໃນຂະແໜງປ່າໄມ້ ຄື ກະຊວງກະສິກຳ ແລະ ປ່າໄມ້ (MAF) ໄດ້ກາຍເປັນກະຊວງທຳ ອິດ ທີ່ສ້າງຕັ້ງ ພະແນກ ຄວາມກ້າວໜ້າຂອງແມ່ຍິງ (“Sub-CAW”) ແລະ ເຄື່ອຂາຍບົດບາດຍິງຊາຍ ຢູ່ພາຍໃນ ກະຊວງ ໂດຍມີຈຸດປະສານງານ ໃນແຕ່ລະກົມ.

ທະນາຄານພັດທະນາອາຊີ (ADB) ໄດ້ສະໜັບສະໜູນ ການພັດທະນາດັ່ງກ່າວ ລະຫວ່າງ ປີ 2006-2008. ບົດລາຍ ງານ ສະບັບສຸດທ້າຍ ຂອງແຜນງານນີ້ (“ການສ້າງຄວາມອາດສາມາດ ສຳລັບ ການລວມເອົາເພດ ເຂົ້າໃນຂະແໜງກະ ສິກຳ ແລະ ປ່າໄມ້ ຢູ່ ສ.ປ.ປ.ລາວ”) ສັງລວມວ່າ ໃນຄະນະທີ່ ການປະກອບສ່ວນລົງມືປະຕິບັດ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ຕໍ່ການລວມເອົາເພດ ແລະ ຕໍ່ໂຄງສ້າງທີ່ໄດ້ສ້າງຂຶ້ນ ແມ່ນສູງຫຼາຍ, ພະແນກບົດບາດຍິງຊາຍ ຍັງມີ ພະນັກງານບໍ່ພຽງພໍ ແລະ ດັ່ງນັ້ນ ຈຶ່ງມີຄວາມອາດສາມາດ ໃນການຊຸບຊັບ ທີ່ຕ່ຳ[25]. ການສຳພາດ ພະແນກກະສິກຳ ແລະ ປ່າໄມ້ ສອງແຫ່ງ ໄດ້ເຍືອງໃຫ້ເຫັນ ຊ່ອງว่างຄວາມອາດສາມາດ ເຫຼົ່ານີ້. ຖ້າວ່າ ມີຈຸດປະສານງານບົດບາດຍິງ ຊາຍ (GFP) ຖືກແຕ່ງຕັ້ງ ໃນຫ້ອງການ, ສະມາຊິກ ພະນັກງານທີ່ກ່ຽວຂ້ອງ ບໍ່ໄດ້ຖືກຮັບເຊີນ ເຂົ້າສຳພາດ ເພາະວ່າ ພະນັກງານອາວຸโส ບໍ່ໄດ້ພິຈາລະນາ ຄວາມຮູ້ ຂອງຕົນເທົ່າທີ່ຄວນ ທີ່ຈະມີຄ່າ ຕໍ່ກອງປະຊຸມ ຊຶ່ງເຂົາເຈົ້າພິຈາລະນາ ວ່າ ຂ້ອນຂ້າງເປັນທຳມະຊາດ ທາງດ້ານເຕັກນິກ.

ໃນແງ່ຍຸດທະສາດ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ພັດທະນາຍຸດທະສາດ ຄວາມເທົ່າທຽມກັນທາງເພດ ຢູ່ໃນຂະແ ໜງກະສິກຳ ແລະ ປ່າໄມ້ (ສະບັບປີ 2016–2025) ແລະ ສະບັບປີ 2030[26] ທີ່ເລັງໃສ່ ຜູ້ຊາຍ ແລະ ແມ່ຍິງ ຈາກ ໝົດທຸກກຸ່ມຊົນເຜົ່າ ເພື່ອໃຫ້ມີການເຂົ້າເຖິງ ທີ່ເທົ່າທຽມກັນ ຕໍ່ຊັບພະຍາກອນທຳມະຊາດ, ທີ່ດິນກະສິກຳ, ທີ່ຜັກອາ ໃສ, ກອງທຶນພັດທະນາ, ແລະ ການສະໜັບສະໜູນດ້ານວິຊາການ. ນອກຈາກນັ້ນ, ວິໄສທັດ ປີ 2030 ຍັງກ່າວອີກ ວ່າ ແມ່ຍິງ ຄວນຈະກວມ ຢ່າງໜ້ອຍ 30% ໃນຕຳແໜ່ງການນຳ.

ສິດອຳນາດ ໃນການປົກປ້ອງສິດ ແລະ ຜົນປະ�โยດ ຂອງແມ່ຍິງ ແມ່ນເປັນຂອງ ສະຫະພັນແມ່ຍິງລາວ (LWU; ມາດຕາ 7 ຂອງ ລັດຖະທຳມະນູນ). ສະຫະພັນແມ່ຍິງລາວ ມີຕົວແທນ ຢູ່ໃນທຸກໆບ້ານ ໂດຍມີສະມາຊິກໜຶ່ງຄົນ ຂອງ ສະຫະພັນແມ່ຍິງລາວ ທີ່ເປັນຕົວແທນແມ່ຍິງ ໃນແຕ່ລະສະພາບ້ານ. ຜ່ານທາງເຄືອຂາຍ ທີ່ກ້ວາງຂວາງ ຂອງ ສະຫະພັນແມ່ຍິງ, ສະຫະພັນແມ່ຍິງ ສາມາດ ນຳເອົາສຽງຂອງແມ່ຍິງ ເຂົ້າໄປໃນ ການບໍລິຫານຂອງລັດ ໃນໝົດທຸກ

[24] ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ, ປີ 2012

[25] ທະນາຄານພັດທະນາອາຊີ, ປີ 2008

[26] ກະຊວງກະສິກຳ ແລະ ປ່າໄມ້, ປີ 2015

ລະດັບ — ຊຶ່ງມັກຈະສະໜອງສະເພາະສຽງຂອງແມ່ຍິງເທົ່ານັ້ນ ເຂົ້າໄປເປັນປະເດັນ[27]. ສະຫະພັນແມ່ຍິງລາວ ຍັງມີ ສູນຄົ້ນຄວ້ານະ�โยบาย ເປັນຂອງຕົນເອງ (ສູນຂໍ້ມູນ ແລະ ພັດທະນາ ຊັບພະຍາກອນເພດຍິງຊາຍ, ນະຄອນຫຼວງວຽງ ຈັນ), ທີ່ໄດ້ດຳເນີນວຽກຄົ້ນຄ້ວ ກ່ຽວກັບ ບັນຫາຕ່າງໆ ເຊັ່ນ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ການສະໜອງງົບປະມານ ແກ່ເພດຍິງຊາຍ ໃນນາມຕ່າງໜ້າ ຜູ້ໃຫ້ທຶນ[28].

ຄູ່ຮ່ວມພັດທະນາ ຈະ ເຮັດວຽກ ສ່ວນໃຫຍ່ ກັບ ສະມາຊິກ ຂອງສະຫະພັນແມ່ຍິງລາວ ແລະ ຈະສວຍໃຊ້ໂອກາດ ໃນ ການເຂົ້າເຖິງໂດຍໄວ ແລະ ທຳຄວາມເຂົ້າໃຈກ່ຽວກັບ ແມ່ຍິງລາວ ໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້.

ແນວລາວສ້າງຊາດ ຊີ້ນຳ ແລະ ປະສານງານ ກັບ ທຸກອົງການຈັດຕັ້ງມະຫາຊົນ ໃນລາວ ແລະ ຮັບຜິດຊອບ ຕໍ່ ການ ປຸກລະດົມສັງຄົມທັງໝົດ ແລະ ຕໍ່ການລວມເອົາ ກຸ່ມຊົນເຜົ່າຕ່າງໆ ເຂົ້າໃນການພັດທະນາແຫ່ງຊາດ. ໃນລະດັບ ທ້ອງຖິ່ນ, ບ້ານທີ່ຖືກສຳພາດ ໄດ້ແລກປ່ຽນມຸມມອງ ວ່າ ແນວລາວ ແມ່ນເປັນຜູ້ມີບົດບາດຕົ້ນຕໍ ໃນການຈັດກິດຈະ ກຳ ທີ່ກ່ຽວຂ້ອງກັບ ການປົກປັກຮັກສາປ່າໄມ້ ແລະ ການຄຸ້ມຄອງຊັບພະຍາກອນ.

ມີອົງການຈັດຕັ້ງສັງຄົມ (CSOs) ຫຼາຍປະເພດ ຢູ່ລາວ ທີ່ເຄື່ອນໄຫວ ໃນຂົງເຂດ ໂດຍສະເພາະ ທີ່ກ່ຽວຂ້ອງກັບ ຄວາມເທົ່າທຽມກັນທາງເພດ ທີ່ລວມມີ ສິດ ແລະ ການພັດທະນາຂອງແມ່ຍິງ, ການປົກປ້ອງເດັກ, ການສະໜັບສະ ໜູນ ຄົນເສຍອົງຄະ, ສິ່ງແວດລ້ອມ, ການສຶກສາ ແລະ ສຸຂະພາບ. ເຖິງຢ່າງໃດກໍຕາມ, ໂດຍປົກກະຕິແລ້ວ, ບັນດາ ອົງການຈັດຕັ້ງສັງຄົມຢູ່ລາວ ແມ່ນຈະບໍ່ໄດ້ຮັບເຊີນ ຈາກ ລັດຖະບານລາວ ໃຫ້ເຂົ້າຮ່ວມ ຢູ່ໃນການສົນທະນາດ້ານ ນະ�โยบาย ໃນທຸກລະດັບ. ດັ່ງນັ້ນ, ອົງການຈັດຕັ້ງສັງຄົມ ສ່ວນໃຫຍ່ ແມ່ນເປັນຜູ້ຈັດຕັ້ງປະຕິບັດ ໃນລະດັບທ້ອງຖິ່ນ ແຕ່ ມີໂອກາດຈຳກັດ ທີ່ຈະນຳເອົາ ປະສົບການ ຈາກການຈັດຕັ້ງປະຕິບັດ ຂອງເຂົາເຈົ້າ ເຂົ້າໃສ່ໃນ ຂະບວນການທາງ ດ້ານນະ�โยบาย[29].

ບັນດາອົງການຈັດຕັ້ງ, ສະມາຄົມທີ່ບໍ່ຫວັງຜົນກຳໄລ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດ ທີ່ເຄື່ອນໄຫວ ກ່ຽວຂ້ອງ ກັບປ່າໄມ້ ແລະ ບົດບາດຍິງຊາຍ ຢູ່ລາວ ປະກອບມີ[30]:

- RECOFTC - ສູນ ສຳລັບປະຊາຊົນ ແລະ ປ່າໄມ້
- ພັນທະມິດ ຊຸມຊົນສີຂຽວ (GCA)
- ສະມາຄົມພັດທະນາຊຸມຊົນ ສີຂຽວ (GCDA)
- ສະມາຄົມ ຮັກຊັບພະຍາກອນທຳມະຊາດ (LNRA)
- ແມ່ຍິງຫົວໃຈພັດທະນາ (MHP)

ບັນດາອົງການຈັດຕັ້ງ ທີ່ບໍ່ເຄື່ອນໄຫວໂດຍກົງ ຢູ່ໃນຂະແໜງປ່າໄມ້ ແຕ່ເປັນຄູ່ຮ່ວມງານ ທີ່ມີຄຸນຄ່າ ທີ່ມີຄວາມຊ່ຽວ ຊ້ານ ໃນດ້ານບົດບາດຍິງຊາຍ ປະກອບມີ:

- ສະມາຄົມພັດທະນາບົດບາດຍິງຊາຍ (GDA; ເພດ, ກົດໝາຍ, ການພັດທະນາຊຸມຊົນ, ການສຶກສາ)

---

[27] ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ, ປີ 2012

[28] ທະນາຄານພັດທະນາອາຊີ, ປີ 2011

[29] ທະນາຄານພັດທະນາອາຊີ, ປີ 2011

[30] ສົມທຽບທິດທາງ ຂອງອົງການຈັດຕັ້ງສັງຄົມລາວ, ປີ 2017

- ສູນຝຶກອົບຮົມ ການພັດທະນາ ແບບມີສ່ວນຮ່ວມ (PADETC; ການພັດທະນາຊຸມຊົນ ແບບມີສ່ວນຮ່ວມ)
- ສະມາຄົມ ພັດທະນາແມ່ຍິງ ແລະ ການສຶກສາດ້ານນິຕິກຳ (ADWLE; ກົດໝາຍ, ເພດ)

RECOFTC ມີສາຍພົວພັນ ທີ່ແໜ້ນແฟ້ນທີ່ສຸດ ກັບກົມປ່າໄມ້ (ກົມປ່າໄມ້/ກະຊວງກະສິກຳ ແລະ ປ່າໄມ້). ກອງປະຊຸມຮ່ວມປຶກສາຫາລື ລະດັບຊາດ ໃນເດືອນຕຸລາ 2018 ກັບ ບັນດາຕົວແທນ ຂອງກົມປ່າໄມ້, ຄູ່ຮ່ວມງານ ລັດອື່ນໆ, ອົງການຈັດຕັ້ງສັງຄົມ ແລະ ພາກເອກະຊົນ ໄດ້ລົງເລິກສະເພາະ ເລື່ອງການກຳນົດການປະກອບສ່ວນທີ່ເປັນ ໄປໄດ້ ເພື່ອສົ່ງເສີມ ຄວາມເທົ່າທຽມກັນທາງເພດ ຢູ່ໃນຂະແໜງປ່າໄມ້ ຂອງລາວ[31]. ກອງປະຊຸມປຶກສາຫາລື ໄດ້ຖືກ ຈັດຂຶ້ນອີກຄັ້ງໃນປີ 2021 ເພື່ອສົ່ງເສີມການມີສ່ວນຮ່ວມຂອງເພດຍິງ ໃນຂະແໜງການປ່າໄມ້ ໂດຍຮ່ວມກັບກົມ ປ່າໄມ້, ເຊິ່ງກອງປະຊຸມຄັ້ງນັ້ນເປັນ ສ່ວນໜຶ່ງຂອງຫຼາຍກອງປະຊຸມ ທີ່ RECOFTC ໄດ້ຈັດຂຶ້ນຜ່ານໂຄງການ WAVES [32]. ແຜນຍຸດທະສາດ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ໃນການຟື້ນຟູປ່າໄມ້ ໃຫ້ໄດ້ 70% ຂອງພູມ ສັນຖານທົ່ວປະເທດ ຮອດປີ 2020 ລວມມີ ເປົ້າໝາຍທີ່ຈະເຮັດໃຫ້ຜູ້ທີ່ເຮັດວຽກອະນຸລັກທີ່ເປັນເພດຍິງ ກວມ 30% ຂອງຕຳແໜງພະນັກງານລັດທັງໝົດ[33] - ເປົ້າໝາຍ ໄດ້ຮັບການສະໜັບສະໜູນ ຢ່າງສຸດຂີດ ໂດຍ RECOFTC. ການປະສານສົມທົບກັນ ຢ່າງໃກ້ຊິດ ແມ່ນຈະນຳໄປສູ່ ການສັນນິຖານວ່າ RECOFTC ມີປະສົບ ການໃນການຮ່ວມມືທີ່ມີຄຸນຄ່າ ກັບ ກົມປ່າໄມ້ ຊຶ່ງສາມາດຖືກນຳໄປໃຊ້ ໂດຍແຜນງານອື່ນໆ.

ຄວາມໝາຍ ສຳລັບ ໂຄງການ GCF ທີ່ໄດ້ວາງແຜນໄວ້

ອີງຕາມ ໂຄງສ້າງການຈັດຕັ້ງ ແລະ ບັນດາຍຸດທະສາດ ທີ່ມີຢູ່ໃນປັດຈຸບັນ, ໂຄງການ GCF ທີ່ໄດ້ວາງແຜນໄວ້ ມີ ຄວາມອາດສາມາດ ທີ່ເຂັ້ມແຂງ ໃນການເຊື່ອມໂຍງກັບ ກັບ ກະຊວງກະສິກຳ ແລະ ປ່າໄມ້ – ໂດຍສະເພາະແມ່ນກົມ ປ່າໄມ້ – ສຳລັບ ການສະໜັບສະໜູນ ດ້ານການຈັດຕັ້ງ ເພື່ອສົ່ງເສີມ ຄວາມເປັນເຈົ້າການ ແລະ ການມີສ່ວນຮ່ວມ ຂອງແມ່ຍິງ ຢູ່ໃນຂະບວນການປຶກສາຫາລື ນັບຕັ້ງແຕ່ ລະດັບສູນກາງລົງຮອດທ້ອງຖິ່ນ. ປັດຈຸບັນນີ້ ການ ປະກອບສ່ວນລົງມືປະຕິບັດ ທາງການເມືອງ ເບິ່ງເໝືອນກັບວ່າຈະສູງ ເປັນພິເສດ ແລະ ຄວນຈະມີການນຳໃຊ້ໂອກາດ ໃຫ້ຫຼາຍທີ່ສຸດ. ແນວທາງປະຕິບັດ ຄວນຈະຖືກນຳໃຊ້ ສອງທິບ ຄື: ນຳໃຊ້ ໂຄງສ້າງບົດບາດຍິງຊາຍ ທີ່ມີຢູ່ (GFPs, MAF´s Sub-CAW, ສະຫະພັນແມ່ຍິງລາວ ໃນທຸກລະດັບ) ໃນຄະນະດຽວກັນ ກໍລວມເອົາການມີສ່ວນຮ່ວມຢ່າງ ຕັ້ງໜ້າ ຂອງພະນັກງານອາວຸโສ ແລະ ພະນັກງານວິຊາການ ເພື່ອສົ່ງເສີມ ວັດທະນາທຳຂອງລັດ ທີ່ລວມເອົາບົດບາດ ຍິງຊາຍ ຫຼາຍຂຶ້ນເລື້ອຍໆ. ການພັດທະນາຄວາມອາດສາມາດ ແມ່ນເປັນສິ່ງທີ່ຈຳເປັນ ສຳລັບຜູ້ມີສ່ວນກ່ຽວຂ້ອງ ທັງ ໝົດ ເນື່ອງຈາກວ່າ ໃນເວລາດຽວກັນ ກໍມີພຽງພະນັກງານລັດ ຈຳນວນເລັກນ້ອຍເທົ່ານັ້ນ ທີ່ມີຄວາມຮູ້ຢ່າງເລິກເຊິ່ງ ກ່ຽວກັບ ບົດບາດຍິງຊາຍ ແລະ REDD+. ຄວາມພະຍາຍາມ ທີ່ໄດ້ໃຊ້ໄປແລ້ວ ໃນການລວມເອົາ ບົດບາດຍິງຊາຍ ເຂົ້າໃສ່ໃນບັນດາກິດຈະກຳປ່າໄມ້ ກໍຍັງຈຳເປັນຈະຕ້ອງໄດ້ມີຄວາມໂດດເດັນຂຶ້ນຕື່ມ ແລະ ແລກປ່ຽນກັນ ໃຫ້ເປັນ

[31] RECOFTC, ພະຈິກ, ປີ 2018

[32] RECOFT October 2021

[33] RECOFTC, ຕຸລາ, ປີ 2018

ຫຼັກການປະຕິບັດ ທີ່ດີທີ່ສຸດ[34]. ໂຄງການ GCF ທີ່ໄດ້ວາງແຜນໄວ້ ສາມາດ ສະໜັບສະໜູນ ວຽກງານ REDD ໃນ ຫ້ອງການ ເພື່ອລວບລວມ ຫຼັກການປະຕິບັດເຫຼົ່ານີ້ ແລະ ເຜີຍແຜ່ວຽກງານດັ່ງກ່າວ ແກ່ ບັນດາອົງການຈັດຕັ້ງອື່ນໆ ພາຍໃນຂະແໜງ, ບັນດາກົມ, ບັນດາອົງການຕົວແທນຂັ້ນແຂວງ ແລະ ເມືອງ ແລະ ສະຫະພັນແມ່ຍິງລາວ.

ຫ້ອງການສະຫະພັນແມ່ຍິງ ຂັ້ນແຂວງ ແລະ ຂັ້ນເມືອງທີ່ຖືກສຳພາດ ໄດ້ສະແດງໃຫ້ເຫັນການປະກອບສ່ວນລົງມື ປະຕິບັດທີ່ມີສູງ ຊຶ່ງນຳໄປສູ່ ການສະໜັບສະໜູນ ໂຄງການ GCF ທີ່ໄດ້ວາງແຜນໄວ້ ແຕ່ຍອມຮັບວ່າ ເຂົາເຈົ້າມີ ຄວາມຈຳເປັນຈະຕ້ອງມີຄວາມຊ່ຽວຊານທາງດ້ານວິຊາການຫຼາຍຂຶ້ນ ເພື່ອໃຫ້ການຊ່ວຍເຫຼືອ ຢ່າງມີຄວາມໝາຍ ແລະ ຕ້ອງການງົບປະມານ ເພື່ອປະກອບສ່ວນ ຢ່າງມີຄວາມຮັບຜິດຊອບ ແລະ ດ້ວຍວິທີທາງຂອງເຂົາເຈົ້າເອງ. ການ ຝຶກອົບຮົມດ້ານວິຊາການ ແກ່ ສະຫະພັນແມ່ຍິງຂັ້ນແຂວງ ແລະ ຂັ້ນເມືອງໝົດທຸກຄົນ, ພະແນກ/ຫ້ອງການ ກະສິກຳ ແລະ ປ່າໄມ້, ກອງກວດກາປ່າໄມ້ແຂວງ/ກົມກວດກາປ່າໄມ້ (ກວດກາປ່າໄມ້) ກ່ຽວກັບ ບົດບາດຍິງຊາຍ ແລະ ການ ມີສ່ວນຮ່ວມທາງສັງຄົມ ໃນການຄຸ້ມຄອງປ່າໄມ້ ແລະ ການຜະລິດກະສິກຳທີ່ບໍ່ທຳລາຍປ່າໄມ້ ທີ່ທົນທານຕໍ່ສະພາບ ການປ່ຽນແປງດິນຟ້າອາກາດ ຖືກແນະນຳ ໃຫ້ລວມເອົາຄວາມພະຍາຍາມ ແລະ ໃຫ້ໄປຕາມລວງດຽວກັບຜູ້ຈັດຕັ້ງ ປະຕິບັດ ແລະ ຜູ້ຕັດສິນໃຈໃນທ້ອງຖິ່ນ.

ສະຫະພັນແມ່ຍິງລາວ ແມ່ນໄດ້ປະກອບສ່ວນສຳຄັນ ໃນການຈັດຕັ້ງປະຕິບັດ ຂະບວນການ FPIC ແລະ ກິດຈະກຳ ການມີສ່ວນຮ່ວມຕ່າງໆຂັ້ນບ້ານ ຂອງ ໂຄງການ 1. ການຮ່ວມມືກັບສະຫະພັນແມ່ຍິງລາວ ຈະໄດ້ສືບຕໍ່ພາຍໃຕ້ ໂຄງການ 2. ນອກຈາກນີ້, ໄດ້ມີການຝຶກອົບຮົມ ຕ່າງໆໃຫ້ ພະນັກງານຂອງ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກ່ຽວກັບວິທີການມີສ່ວນຮ່ວມຕ່າງໆ ເຊັ່ນ: ການສ້າງຕັ້ງຄະນະກຳມະການ VFAG ແລະ ການຄຸ້ມຄອງປ່າໄມ້ຂັ້ນ ບ້ານ.

ໂຄງການ 2 ຈຳເປັນຈະຕ້ອງຮັບປະກັນ ວ່າ ຄວາມຮູ້ທີ່ໄດ້ມາ ຖືກນຳໃຊ້ ຈາກໂຄງການ 1 ແລະ ໂຄງການອື່ນໆ. ພາຍ ໃຕ້ການຈັດຕັ້ງປະຕິບັດໂຄງການ 1, ບັນຫາບົດບາດຍິງຊາຍ ສາມາດຖືກເຊື່ອມໂຍງ ເຂົ້າໃສ່ໃນ ຂັ້ນຕອນການດຳ ເນີນງານທີ່ໄດ້ມາດຖານ, ບົດແນະນຳ, ຄູ່ມື ແລະ ແຜນປະຕິບັດງານ ແລະ ໄດ້ຕິດຕາມສະຖານະໃນການຈັດຕັ້ງ ປະຕິບັດ. ກິດຈະກຳຕ່າງໆເຫຼົ່ານັ້ນຈະໄດ້ຖືກສືບຕໍ່ພາຍໃຕ້ ໂຄງການ 2. ການຝຶກອົບຮົມ ແລະ ບົດແນະນຳທີ່ຕອບສະ ໜອງທາງດ້ານບົດບາດຍິງຊາຍຢ່າງດຽວ ເບິ່ງເໝືອນກັບວ່າຈະບໍ່ພຽງພໍ ໃນການຮັບປະກັນການຈັດຕັ້ງປະຕິບັດ ໃຫ້ມີ ປະສິດທິພາບ.

ກອງປະຊຸມລະດັບສູງ ທີ່ຈັດຂຶ້ນເປັນປົກກະຕິ ເຊັ່ນ ກອງປະຊຸມຄະນະຊີ້ນຳແຜນງານ, ຄວນຈະໃຫ້ເປັນສິ່ງຕ້ອງໄດ້ ເຮັດ ເພື່ອລາຍງານ ກ່ຽວກັບບົດບາດຍິງຊາຍ ແລະ ຄວາມພະຍາຍາມ ໃນການຈັດຕັ້ງປະຕິບັດ ທີ່ກ່ຽວຂ້ອງ.

2.4. ລະດັບຈຸລະພາກ: ຄວາມເທົ່າທຽມກັນທາງເພດ ຢູ່ໃນກຸ່ມເປົ້າໝາຍ

ຢູ່ໃນພາກສ່ວນນີ້ ແມ່ນສຶກສາແບບຄ້າວໆ ກ່ຽວກັບ ສະຖານະການເລື້ອງຄວາມເທົ່າທຽມກັນທາງເພດ ຢູ່ໃນຂົງເຂດ ການມີສ່ວນຮ່ວມໃນດ້ານການເມືອງ, ດ້ານການຕັດສິນໃຈ ແລະ ຄວາມເປັນເຈົ້າການ, ດ້ານການສຶກສາ ແລະ ດ້ານ ເສດຖະກິດ.

[34] RECOFTC ພະຈິກ, ປີ 2018

ການມີສ່ວນຮ່ວມໃນດ້ານການເມືອງ: ການຕັດສິນໃຈ ແລະ ຄວາມເປັນຜູ້ນຳ

ດ້ວຍສະມາຊິກສະພາ ທີ່ເປັນເພດຍິງ ກວມ 27.5%, ຖືວ່າ ລາວເປັນປະເທດຢູ່ສູງກວ່າລະດັບສະເລ່ຍ (22.5%). ແຕ່ເຖິງຢ່າງໃດກໍຕາມ, ແມ່ຍິງ ທີ່ຢູ່ໃນຕຳແໜງການນຳ ຂອງອົງການຈັດຕັ້ງລັດ ໃນຂັ້ນເມືອງ, ແຂວງ ແລະ ສູນກາງ ກວມພຽງແຕ່ 5% ເທົ່ານັ້ນ (ອີງຕາມປີ 2012). ອັດຕາສ່ວນສູງທີ່ສຸດ ຂອງແມ່ຍິງ ຢູ່ໃນລັດ ສາມາດພົບເຫັນໄດ້ ໃນຂົງເຂດນິຕິກຳ ຂັ້ນສູນກາງ (ກວມຫຼາຍກວ່າໜຶ່ງສ່ວນສີ່)[35]; ອັດຕາສ່ວນຕ່ຳທີ່ສຸດ ຂອງແມ່ຍິງ ທີ່ຢູ່ນອກເໜືອ ຈາກບົດບາດໃນການຊ່ວຍວຽກບໍລິຫານ ແມ່ນສາມາດພົບເຫັນໄດ້ ຢູ່ໃນລະດັບຂັ້ນແຂວງ ແລະ ເມືອງ. ສິ່ງດັ່ງກ່າວ ນີ້ ເບິ່ງເໝືອນກັບວ່າ ກ່ຽວຂ້ອງກັບ ບັນດາປັດໃຈຕ່າງໆ ທີ່ໄດ້ອະທິບາຍ ຢູ່ໃນໝວດກ່ຽວກັບ ການສຶກສາ ແລະ ສຸດ ຂະພາບ.

ຢູ່ພາຍໃນຄູ່ຮ່ວມງານ ທີ່ມີທ່າແຮງ ຂອງໂຄງການ GCF ທີ່ໄດ້ວາງແຜນໄວ້, ການມີໜ້າ ເບິ່ງເໝືອນກັບວ່າ ມີຄວາມ ແຕກຕ່າງກັນໄປ ລະຫວ່າງ ບັນດາກະຊວງ ແລະ ກົມຕ່າງໆ ແຕ່ ໂດຍທົ່ວໄປແລ້ວ ໂຄງການຍັງປະເຊີນກັບ ການມີໜ້ າບໍ່ຫຼາຍ ຂອງການນຳທີ່ເປັນແມ່ຍິງ ຢູ່ໃນກິດຈະກຳຕ່າງໆ. ປ່າໄມ້ ໃນລະດັບຊຸມຊົນ ແມ່ນມີຈຳນວນ "ແມ່ຍິງ" ຫຼາຍ ໃນດ້ານຜູ້ຊົມໃຊ້ ໂດຍທີ່ແມ່ຍິງ ເປັນຜູ້ເກັບເຄື່ອງປ່າຂອງດົງ ແລະ ເປັນກຳລັງແຮງ ໃນທຸລະກິດຂະໜາດນ້ອຍຈຳ ນວນໜຶ່ງ ຢູ່ໃນຂະແໜງປ່າໄມ້ ແລະ ໄມ້.
ແມ່ຍິງ ແລະ ຜູ້ຊາຍພາຍໃນບ້ານທີ່ຖືກສຳພາດ ໄດ້ກ່າວວ່າ ໂດຍປົກກະຕິ ແມ່ຍິງ ໃຊ້ເວລາຫຼາຍກວ່າ ຢູ່ໃນປ່າໄມ້ ແລະ ມີຄວາມຮູ້ລະອຽດຫຼາຍກວ່າ ກ່ຽວກັບ ສະຖານະພາບ ຂອງຊັບພະຍາກອນປ່າໄມ້. ຄູ່ຮ່ວມງານລັດ ທີ່ຖືກສຳ ພາດ ໄດ້ເວົ້າເພີ່ມອີກວ່າ ແມ່ຍິງພາຍໃນບ້ານ ຍັງໄດ້ສະແດງໃຫ້ເຫັນເຖິງ ຄວາມສົນໃຈອັນແທ້ຈິງ ຫຼາຍກວ່າ ໃນການ ປົກປັກຮັກສາປ່າໄມ້ອ້ອມຂ້າງ. ໃນຄະນະດຽວກັນ, ບໍ່ມີບ້ານໃດເລີຍ ທີ່ຖືກສຳພາດ ໄດ້ລວມເອົາແມ່ຍິງ ເຂົ້າໃນ ຄະນະຄຸ້ມຄອງປ່າໄມ້ບ້ານ ຫຼື ທຸກຮູບແບບອື່ນໆ ຂອງການຕັດສິນໃຈ ທີ່ມີຢູ່ໃນປັດຈຸບັນ ກ່ຽວກັບຊັບພະຍາກອນ ປ່າໄມ້.
ຍ້ອນແນວນັ້ນ, ການຂາດການມີໜ້າ ຂອງແມ່ຍິງ ໃນທຸກລະດັບການຕັດສິນໃຈ ສ່ວນຫຼາຍ ມັກເກີດມີການຂາດ ການພິຈາລະນາ ຄວາມຕ້ອງການ ແລະ ທ່າແຮງ ຂອງແມ່ຍິງ ຢູ່ໃນຂະແໜງປ່າໄມ້.

ຂະແໜງທີ່ດິນ ສະແດງໃຫ້ເຫັນ ສະຖານະພາບ ທີ່ຄ້າຍໆກັນ: ທີ່ແມ່ຍິງ ແລະ ຜູ້ຊາຍ ມີສິດທາງກົດໝາຍຕໍ່ທີ່ດິນ ແບບດຽວກັນ, ແຕ່ການຄອບຄອງທີ່ດິນ ໃນຕົວຈິງ ຂອງແມ່ຍິງ ແມ່ນຍັງມີຄວາມໝັ້ນຄົງ ໜ້ອຍກວ່າຜູ້ຊາຍ. ໂດຍ ປົກກະຕິ ແມ່ຍິງ ຈະບໍ່ຖືກລວມເຂົ້າໃນບາດກ້າວການຕັດສິນໃຈ ກ່ຽວກັບ ການວາງແຜນນຳໃຊ້ທີ່ດິນ (LUP). ແຜນ ຄຸ້ມຄອງຈັດສັນປ່າໄມ້ຍ່ອຍ (ຖ້າຖືກສ້າງຂຶ້ນ) ຕໍ່ໄປ ຈະຖືກເບິ່ງເໝືອນກັບເປັນບາດກ້າວສະເພາະໃນຂັ້ນຕໍ່ໄປ ຊຶ່ງ ເຫັນວ່າ ແມ່ຍິງຈະມີການເຂົ້າເຖິງໜ້ອຍລົງ. ເຫດຜົນທີ່ໃຫ້ມາ ໃນຊ້ວງການສຳພາດຢູ່ບ້ານ ແມ່ນຍ້ອນຂາດການສຶກ ສາ, ຂາດຄວາມຮູ້ດ້ານວິຊາການ ແລະ ຂາດຄວາມເຊື່ອໝັ້ນ ໃນການເຂົ້າຮ່ວມ ການຕັດສິນໃຈ ກ່ຽວກັບການຄຸ້ມ ຄອງ. ທຳນິບທຳນຽມທາງຮີດຄອງປະເພນີ ກ່ຽວກັບບົດບາດຍິງຊາຍ ຂອງຫຼາຍກຸ່ມຊົນເຜົ່າ ສືບຕໍ່ປະກອບສ່ວນ ເຂົ້າ ໃສ່ໃນ ສະຖານະພາບນີ້.

[35] ອົງການສະຫະປະຊາຊາດ ປະຈຳ ສ.ປ.ປ.ລາວ, ປີ 2015

ການສຶກສາ

ຊ່ອງว่าง ຄວາມເທົ່າທຽມກັນທາງເພດ ໄດ້ຫຼຸດລົງ ໃນການລົງທະບຽນການສຶກສາ ທັງໝົດສາມຂັ້ນ ຢູ່ລາວ, ແຕ່ສິ່ງ ທ້າທາຍຕ່າງໆ ຍັງສືບຕໍ່ເກີດຂຶ້ນ ໃນການສຳເລັດການສຶກສາ.

ປັດໃຈຕົ້ນຕໍສອງຢ່າງ ທີ່ເຮັດໃຫ້ເກີດມີ ຄວາມບໍ່ເທົ່າທຽມກັນທາງເພດ ໃນຂົງເຂດການສຶກສາ ຄື: ທຳອິດແມ່ນເບິ່ງ ເໝືອນກັບວ່າ ເດັກຍິງຖືກເບິ່ງແຍງໃຫ້ຢູ່ກັບເຮືອນ ຍ້ອນຄວາມກັງວົນເລື່ອງຄວາມປອດໄຟ ແລະ ມີໜ້າທີ່ເຮັດວຽກ ເຮືອນ ໂດຍສະເພາະ ຖ້າວ່າ ໂຮງຮຽນມັດທະຍົມ ຫາກຢູ່ຫ່າງໃກຈາກເຮືອນ. ອັນທີສອງແມ່ນວ່າ ພໍ່ແມ່ ບໍ່ເຫັນຄຸນຄ່າ ຂອງ ການສຶກສາ ສຳລັບເດັກຍິງ ເທົ່າກັບ ການສຶກສາ ສຳລັບເດັກຊາຍ ໂດຍສະເພາະ ຖ້າວ່າ ມຸມມອງດັ່ງກ່າວນີ້ ຫາກ ເປັນສ່ວນໜຶ່ງ ຂອງປະເພນີວັດທະນາທຳ ຂອງເຂົາເຈົ້າ ຫຼື ຖ້າວ່າ ພໍ່ແມ່ ທຸກຍາກ ຫຼື ມີການສຶກສາໜ້ອຍ ຫຼື ບໍ່ມີເລີຍ ໂດຍສະເພາະ ແມ່ນຜູ້ເປັນແມ່[36].

ຊ່ອງว่าง ຂອງຄວາມເທົ່າທຽມກັນທາງເພດ ທີ່ໃຫຍ່ທີ່ສຸດ ແມ່ນເຫັນໄດ້ ໃນກຸ່ມເດັກນ້ອຍ ທີ່ມາຈາກ ເຂດ ຊົນນະບົດ ບ່ອນທີ່ບໍ່ມີທາງເຂົ້າ, ເດັກນ້ອຍ ທີ່ມາຈາກກຸ່ມຊົນເຜົ່າທີ່ບໍ່ແມ່ນລາວ-ໄຕ, ເດັກນ້ອຍທີ່ແມ່ຂາດການສຶກ ສາ ແລະ ເດັກນ້ອຍທີ່ຄອບຄົວ ຢູ່ໃນສະພາບທຸກຍາກທີ່ສຸດ. ຊ່ອງว่างດັ່ງກ່າວນີ້ ແມ່ນມີຫຼາຍກວ່ານີ້ອີກ ຢູ່ໃນການ ສຶກສາລະດັບມັດທະຍົມ: ຍົກຕົວຢ່າງ, ຢູ່ໃນກຸ່ມທີ່ມີອາຍຸເໝາະສົມເຂົ້າໂຮງຮຽນ ທີ່ມາຈາກຄົວເຮືອນທີ່ທຸກຍາກທີ່ ສຸດ, ເດັກຍິງຈຳນວນ 66 ຄົນ ຕໍ່ທຸກໆເດັກຊາຍຈຳນວນ 100 ຄົນ ເຂົ້າໂຮງຮຽນ.[37]

ແມ່ຍິງພາຍໃນບ້ານ ທີ່ຖືກສຳພາດ ສ່ວນໃຫຍ່ ບໍ່ມີ ຫຼື ມີການສຶກສາຕ່ຳ. ບັນຫາ ການຂາດການສຶກສາ ດັ່ງກ່າວນີ້ ແມ່ນເປັນຄ້າຍໆກັນ ສຳລັບ ຜູ້ຊາຍ ແລະ ແມ່ຍິງ - ຊຶ່ງເປັນເຫດຜົນຫຼັກ ທີ່ເຮັດໃຫ້ຂາດ ແມ່ຍິງ ໃນຄະນະຕັດສິນໃຈ ຂັ້ນບ້ານ ແລະ ໃນກຸ່ມທົ່ວໆໄປ ແລະ ໂດຍສະເພາະ ທີ່ກ່ຽວຂ້ອງກັບ ປ່າໄມ້ບ້ານ.

ການເຂົ້າຮ່ວມທາງດ້ານເສດຖະກິດ

ອັດຕາສ່ວນທີ່ເທົ່າກັນ ຂອງຜູ້ຊາຍ ແລະ ແມ່ຍິງ ເຮັດໃຫ້ເກີດມີປະຊາກອນທີ່ເຮັດວຽກໄດ້ (ແຕ່ລະເພດກວມ 77%, ອີງຕາມປີ 2015[38]), ແຕ່ວ່າ ໂດຍທົ່ວໄປ ແມ່ຍິງ ກວມອັດຕາຕ່ຳກວ່າ ໃນຕະຫຼາດແຮງງານ. ແມ່ຍິງ ຂ້ອນຂ້າງຖືກ ແຍກອອກຈາກ ຂະແໜງທີ່ເປັນທາງການ ຫຼາຍກວ່າຜູ້ຊາຍ ລວມທັງ ການປົກປ້ອງສັງຄົມ ທີ່ສິ່ງດັ່ງກ່າວນີ້ ກ່ຽວຂ້ອງ. ກຳມະກອນຈຳນວນ 64 ເປີເຊັນ ແມ່ນຢູ່ໃນອາຊີບພື້ນຖານ ແລະ ໃນນັ້ນ ຈຳນວນ 63 ເປີເຊັນ ທີ່ ເຮັດອາຊີບ ບໍລິການ, ເປີດຮ້ານ ແລະ ເປັນຄົນຂາຍເຄື່ອງໃນຕະຫຼາດ ແມ່ນເປັນເພດຍິງ. ໃນທາງກົງກັນຂ້າມ, ຜູ້ຊາຍກວມອັດຕາ ສ່ວນໃຫຍ່ ທີ່ເປັນລັດຖະກອນ, ຊ່ຽວຊານ, ວິຊາການ ແລະ ຢູ່ໃນຂະແໜງການອື່ນໆ.

---

[36] ສົມທຽບ ສະຫະປະຊາຊາດ ປະຈຳ ສ.ປ.ປ.ລາວ, ປີ 2018

[37] Ibid. 21 outputen and Microfinance 2018cessed 22.08.2018:018:018: (GIZ) GmbH

g IZ) GmbHARE or Oxfamed by every interviewed group, bi

[38] ດັດສະນີ ພັດທະນາມະນຸດ, ປີ 2018

ຄູ່ຮ່ວມງານ ຂອງໂຄງການ GCF ທີ່ໄດ້ວາງແຜນໄວ້ ສ່ອງແສງໃຫ້ເຫັນອັດຕາສ່ວນເຫຼົ່ານີ້. ດັ່ງທີ່ໄດ້ກ່າວມາຂ້າງເທິງ , ລັດຖະບານ ໄດ້ກຳນົດເປົ້າໝາຍ 30% ໃຫ້ແມ່ຍິງມີຕຳແໜງ ຢູ່ໃນຂະແໜງການອະນຸລັກ ແຕ່ໃນຕົວຈິງ ການ ປະຕິບັດຍັງເຮັດບໍ່ໄດ້ຫຼາຍ.

ເຖິງແມ່ນວ່າ ແມ່ຍິງ ມີບົດບາດທີ່ສຳຄັນ ໃນວຽກງານກະສິກຳ ແລະ ປ່າໄມ້, ເຂົາເຈົ້າ ມີການເຂົ້າເຖິງ ແລະ ຄວບຄຸມ ໜ້ອຍ ຕໍ່ ກັບການປະກອບສ່ວນ ແລະ ໝາກຜົນ ຈາກການເຮັດກະສິກຳ ແລະ ປ່າໄມ້.[39] ການສຳພາດບ້ານ ໄດ້ ສະແດງໃຫ້ເຫັນທ່າອຽງແບບດຽວກັນ: ແມ່ຍິງ ທັງໝົດພາຍໃນບ້ານ ໄດ້ກ່າວວ່າ ໂດຍປົກກະຕິແລ້ວ, ການຕັດສິນ ໃຈຕົ້ນຕໍ ກ່ຽວກັບ ທີ່ດິນ ແລະ ປ່າໄມ້ ແມ່ນຜົວຂອງເຂົາເຈົ້າ ແລະ ອຳນາດການປົກຄອງບ້ານ ເປັນຜູ້ເຮັດ.
ປະສົບການ ຈາກ ຂະແໜງການອື່ນໆ ເຊັ່ນ ການປະມົງ, ສະແດງໃຫ້ເຫັນວ່າ ບົດບາດ ທີ່ຫຼາກຫຼາຍ ຂອງແມ່ຍິງ ຢູ່ໃນ ຕ່ອງໂສ້ ຄຸນຄ່າ ທາງປະເພນີ, ທີ່ສະຫຼັບສັບຊ້ອນ ແລະ ຍາວນານ ມີທ່າອ່ຽງ ທີ່ຈະຫຼຸດລົງ ເມື່ອ ຕ້ອງໂສ້ຄຸນຄ່າ ຖືກ ສ້າງໃຫ້ທັນສະໄໝ. ສິ່ງດັ່ງກ່າວນີ້ ອາດຈະເປັນເລື່ອງຈິງ ສຳລັບ ຂະແໜງປ່າໄມ້ ແຕ່ວ່າ ການຂາດ ຂໍ້ມູນໂຕເລກ ບໍ່ ໄດ້ປ່ອຍໃຫ້ພວກເຮົາ ເຫັນຮູບພາບ ທີ່ຈະແຈ້ງຂຶ້ນ.
ສິດຂອງແມ່ຍິງ ຕໍ່ປ່າໄມ້ ແລະ ຜະລິດຕະຜົນຕົ້ນໄມ້ ມີທ່າອຽງ ທີ່ຈະຖືກຈຳກັດ ກັບຜະລິດຕະຜົນ ທີ່ບໍ່ມີກຳໄລ ຫຼື ມີ ຜົນປະໂຫຍດ ທາງການຄ້າໜ້ອຍ[40].

ບົດບາດຍິງ-ຊາຍ, ຄ່າແຮງງານ ແລະ ແຫຼ່ງທາງດ້ານການເງິນ

ອັດຕາສ່ວນຂອງແມ່ຍິງ ໃນການຖືກຈ້າງງານ ແມ່ນຕ່ຳໃນທຸກຂະແໜນງການ, ຢູ່ທີ່ 35 ສ່ວນຮ້ອຍ. ໃນທາງ ກົງກັນຂ້າມ, ໃນປີ 2015 ແມ່ຍິງກວມເອົາປະມານ 70% ໃນກຸ່ມຄົນ ທີ່ບໍ່ໄດ້ຮັບຄ່າຈ້າງ ສຳລັບຄອບຄົວ, ແຕ່ວ່າ ມີພຽງແຕ່ 32% ເທົ່ານັ້ນທີ່ຖືກລະບຸວ່າເປັນ "ພະນັກງານປະຈຳ" - ເຊິ່ງສິ່ງດັ່ງກ່າວນີ້, ຊີ້ໃຫ້ເຫັນວ່າ ແມ່ຍິງແມ່ນມີ ທ່າອ່ຽງ ບໍ່ໄດ້ເຮັດວຽກທີ່ມີປະສິດຕິພາບ ທີ່ຈະສາມາດກຸ້ມຕົນເອງໄດ້. ຄວາມເປັນຈິງນີ້ໄດ້ຖືກສະທ້ອນ ຈາກການສຳ ພາດຢູ່ຂັ້ນບ້ານ: ແມ່ຍິງ ແລະ ຜູ້ຊາຍໄດ້ ເຫັນກົງກັນວ່າ ແມ່ຍິງເຮັດວຽກຫຼາຍຊົ່ວໂມງຕໍ່ມື້ ໃນຂະນະທີ່ຜູ້ຊາຍເຮັດ ຫນ້ອຍກວ່າ ແລະ/ຫຼື ສຸມໃສ່ສະເພາະວຽກງານທີ່ໃຊ້ແຮງງານຫຼາຍກວ່າ. ນອກຈາກນັ້ນ, ຜູ້ຊາຍ ສ້າງຜົນໄດ້ຮັບທີ່ຊັດ ເຈນຈັບຕ້ອງໄດ້ ແລະ ມີເວລາເຫຼືອຫຼາຍກວ່າ ສຳລັບວຽກງານທີ່ກ່ຽວຂ້ອງກັບການຄຸ້ມຄອງ. ໃນການລົງຢ້ຽມຢາມ ບ້ານອາຄາ ແຂວງຫຼວງນ້ຳທາ, ອຳນາດການປົກຄອງບ້ານ ສັງເກດເຫັນວ່າ ແມ່ຍິງບ້ານມີລາຍຮັບຫຼາຍກວ່າຜູ້ຊາຍ ແຕ່ ບໍ່ມີບົດບາດໃນການຕັດສິນໃຈໃນຂັ້ນບ້ານ. ແມ່ຍິງຫຼາຍຄົນໄດ້ກ່າວວ່າ ພວກເຂົາເຈົ້າຢາກມີສ່ວນຮ່ວມໃນການຄຸ້ມ ຄອງຊັບພະຍາກອນປ່າໄມ້.
ຊ່ອງว่างຄ່າແຮງງານສຳລັບເພດທີ່ແຕກຕ່ າງກັນ ແມ່ນຍັງມີຢູ່ໃນປັດຈຸບັນ ແລະ ແມ່ຍິງເຮັດວຽກ ເປັນເວລາຫຼາຍ ຊົ່ວໂມງ ດົນກວ່າຜູ້ຊາຍ ເນື່ອງຈາກເຂົາເຈົ້າໃຊ້ເວລາ 7 ຊົ່ວໂມງ ຕໍ່ມື້ ໃນໜ້າວຽກການຜະລິດ ແລະ ການສືບພັນ (ຜູ້ ຊາຍເຮັດວຽກ: 5.7 ຊົ່ວໂມງ).[41] ເວລາ, ຄວາມທຸກຍາກ ແລະ ຄວາມກັງວົນດ້ານຄວາມປອດໄພ ຂອງແມ່ຍິງ ເປັນ ໂຕຈຳກັດ ການເຂົ້າເຖິງ ແລະ ການນຳໃຊ້ ຊັບພະຍາກອນປ່າໄມ້ ຂອງເຂົາເຈົ້າ. ໃນກໍລະນີ ຂອງບ້ານທີ່ຖືກສຳພາດ, ຫຼັກໆ ແມ່ນກີດກັ້ນແມ່ຍິງ ຈາກການເຂົ້າຮ່ວມ ວຽກງານຄຸ້ມຄອງຈັດສັນປ່າໄມ້ ທີ່ລວມມີ ການຕັດສິນໃຈ.

[39] ສົມທຽບ ສະຫະປະຊາຊາດ ປະຈຳ ສ.ປ.ປ.ລາວ, ປີ 2018

[40] ກອງທຶນລົງທຶນດ້ານດິນຟ້າອາກາດ, ປີ 2017

[41] ສົມທຽບ ສະຫະປະຊາຊາດ ປະຈຳ ສ.ປ.ປ.ລາວ, ປີ 2018

ແມ່ຍິງ ສາມາດປະເຊີນກັບ ບັນຫາການແບ່ງແຍກ ໃນຕະຫຼາດ ໃນເວລາໂຄສະນາຜະລິດຕະພັນຂອງຕົນໂດຍກົງ ແລະ ຍັງສາມາດຖືກກີດກັ້ນ ຍ້ອນຂາດຄວາມຮູ້ທາງດ້ານພາສາ, ການເຂົ້າເຖິງຂໍ້ມູນ ຫຼື ການຝຶກອົບຮົມ[42].

ໂດຍສະເພາະ ຢູ່ໃນເຂດຊົນນະບົດ, ແມ່ຍິງທີ່ມີລາຍຮັບຕ່ຳ ປົກກະຕິຈະມີອຳນາດໃນການຕັດສິນໃຈບັນຫາຄອບຄົວ ໜ້ອຍ: ຍິງລາຍຮັບຂອງເຂົາເຈົ້າຕ່ຳ, ຍິງເຮັດໃຫ້ພະລັງສຽງຂອງເຂົາເຈົ້າໜ້ອຍລົງ. ແມ່ຍິງ ທີ່ມີລາຍຮັບສູງກວ່າ ຈະ ມີອຳນາດໃນການຕັດສິນໃຈສູງຂຶ້ນ ແຕ່ ປົກກະຕິແລ້ວ ຄຳຕັດສິນສຸດທ້າຍ ແມ່ນຜູ້ຊາຍເປັນຜູ້ຕັດສິນໃຈ ໃນນາມ ເປັນຫົວໜ້າຄອບຄົວ. ດັ່ງນັ້ນ, ຄວາມເສຍປຽບ ທີ່ມາຈາກ ຄວາມບໍ່ເທົ່າທຽມກັນ ໃນດ້ານລາຍຮັບ ແມ່ນກ່ຽວຂ້ອງ ສະເພາະ ກັບທຳນິບທຳນຽມທາງເພດ ພາຍໃຕ້ວັດທະນາທຳໃດໜຶ່ງ.
ສິ່ງດັ່ງກ່າວນີ້ ຈຳເປັນຈະຕ້ອງຄຳນຶງເຖິງ ທຸກກິດຈະກຳ ຂອງໂຄງການ ທີ່ມີການສົ່ງເສີມການປ່ຽນແປງທາງພຶດຕິກຳ ແລະ ກິດຈະກຳສ້າງລາຍຮັບໃໝ່ໆ ຫຼື ມີລະບຽບການ ສົ່ງຜົນຕໍ່ ທຸລະກິດ ຂອງຄອບຄົວ ຫຼື ການເຂົ້າເຖິງ ຊັບພະຍາກອນປ່າໄມ້.

ການເຂົ້າເຖິງ ການເງິນຈຸລະພາກ ໄດ້ສະແດງໃຫ້ເຫັນເຖິງ ການສ້າງຄວາມເຂັ້ມແຂງ ແກ່ຊຸມຊົນ ຖ້າວ່າ ຊາວບ້ານ ບໍ່ ແມ່ນໜຶ່ງໃນຈຳນວນຜູ້ທີ່ທຸກຍາກທີ່ສຸດ. ໃນກໍລະນີດັ່ງກ່າວ, ປົກກະຕິແລ້ວ ເຫັນວ່າ ການເງິນຈຸລະພາກ ມີຄວາມ ສ່ຽງຫຼາຍໂພດ. ໂດຍປົກກະຕິ ແມ່ຍິງ ແມ່ນຈະມີຄວາມລັງເລໃຈ ຫຼາຍກວ່າ ໃນການໄປເອົາໜີ້ ເພື່ອມາຄ້ຳຊູຄອບຄົວ ຂອງຕົນ ແລະ ນຳໃຊ້ສິນເຊື່ອຈຸລະພາກ ຊຶ່ງສ່ວນໃຫຍ່ ສຳລັບ ຄວາມສຸກເສີນໃນການຮັກສາສຸຂະພາບ ແລະ ການສຶກ ສາຂອງເດັກນ້ອຍ.

ໂດຍປົກກະຕິແລ້ວ ກອງທຶນພັດທະນາບ້ານ ຖືກຄຸ້ມຄອງ ໂດຍແມ່ຍິງ ແລະ ແມ່ຍິງ ຂອງຫຼາຍຊົນເຜົ່າ ເປັນຜູ້ ຮັບຜິດຊອບ ຕໍ່ ການບໍລິຫານເງິນ ຂອງຄອບຄົວ. ຊາວບ້ານ ແລະ ອຳນາດການປົກຄອງທ້ອງຖິ່ນ ທີ່ຖືກສຳພາດ ໄດ້ ຕົກລົງວ່າ ການເຂົ້າເຖິງເງິນຊ່ວຍເຫຼືອຈຸລະພາກ ຕາມທີ່ໄດ້ວາງແຜນໄວ້ ໂດຍ ໂຄງການ GCF ອາດຈະສ້າງໂອກາດ ຫຼາຍຂຶ້ນ ແກ່ບັນດາຊຸມຊົນທ້ອງຖິ່ນ ເພື່ອປັບປຸງ ສະພາບລາຍຮັບ ຊຶ່ງລວມມີ ການລົງທຶນຈຸລະພາກ ເຂົ້າໃນການ ຜະລິດກະສິກຳ ທີ່ເປັນທາງເລືອກ ແລະ ປາສະຈາກການທຳລາຍປ່າໄມ້. ສະຖາບັນການເງິນຈຸລະພາກ ທັງແບບທາງ ການ ແລະ ບໍ່ເປັນທາງການ ເປັນຕົ້ນ ຈາກສະຫະພັນແມ່ຍິງ ແມ່ນແຫຼ່ງທາງດ້ານການເງິນ ສຳຄັນຂອງຜູ້ຍິງໃນເຂດ ຊົນນະບົດຂອງ ສປປ ລາວ.

ຄວາມໝາຍ ສຳລັບໂຄງການ GCF ທີ່ໄດ້ວາງແຜນໄວ້

ແຜນງານ GCF ທີ່ໄດ້ວາງແຜນໄວ້ ຈະມີຜົນ ຢ່າງຫຼວງຫຼາຍ ຕໍ່ຜູ້ໃຫ້ການສະໜັບສະໜູນ ສຳລັບ ປັບປຸງ ການເປັນ ຕົວແທນ ຂອງແມ່ຍິງ ໃນຕຳແໜ່ງຄຸ້ມຄອງຈັດສັນປ່າໄມ້ ຈາກລະດັບສູນກາງລົງຮອດທ້ອງຖິ່ນ:

- ໃນລະດັບສູນກາງ, ມີຄວາມຕ້ອງການ ທາງດ້ານການເມືອງ ທີ່ຈະເພີ່ມຈຳນວນ ພະນັກງານລັດທີ່ເປັນເພດ ຍິງ ຢູ່ໃນວຽກງານການອະນຸລັກ. ການປຶກສາຫາລື ກັບ ກົມປ່າໄມ້ ແລະ RECOFTC ອາດຈະສາມາດ ຊ່ວຍສ່ອງແສງໃຫ້ເຫັນເຫດຜົນ ທີ່ເປັນທີ່ຮັບຮູ້ ວ່າເປັນຫຍັງຈຶ່ງຂາດແມ່ຍິງ ຢູ່ໃນຂະແໜງນີ້. ການພິສູດ ທາງດ້ານບົດບາດຍິງຊາຍ ກ່ຽວກັບ ຂັ້ນຕອນທາງດ້ານຊັບພະຍາກອນມະນຸດ ແລະ ຂະບວນການສ້າງຄວາມ

[42] ສົມທຽບກອງທຶນລົງທຶນດ້ານສະພາບດິນຟ້າອາກາດ, ປີ 2017

ກ້າວໜ້າອາຊີບພາຍໃນ ອາດຈະສາມາດ ໄດ້ຮັບຄຳແນະນຳ. ແຜນງານ ອາດຈະສາມາດສືບຕໍ່ ເລີ້ມຈັດຕັ້ງ ລະບົບການໃຫ້ຄຳປຶກສາ ທີ່ອີງໃສ່ຂະແໜງ ເພື່ອກະຕຸ້ນໃຫ້ຂັ້ນນຳ ສີ່ງເສີມ ຄູ່ຮ່ວມງານທີ່ໜຸ່ມກວ່າ ແລະ ເພື່ອສ້າງຄວາມອາດສາມາດ ແກ່ພະນັກງານຮຸ້ນໜຸ່ມ ໂດຍນຳໃຊ້ ຊັບພະຍາກອນພາຍໃນ.

- ໃນລະດັບແຂວງ ແລະ ເມືອງ, ຫຼັກການອັນດຽວ ແມ່ນມີຜົນນຳໃຊ້ ແຕ່ມີອຸປະສັກເພີ່ມຕື່ມຢ່າງໜຶ່ງ ທີ່ກີດກັ້ນ ທິມງານພາກສະໜາມ ບໍ່ໃຫ້ມີຄວາມສົມດູນທາງເພດ ຫຼາຍຂຶ້ນ: ມັນມີຄວາມຫຍຸ້ງຍາກເພີ່ມຂຶ້ນ ທີ່ຈະຊອກຫາ ພະນັກງານເພດຍິງ ທີ່ມີຄວາມພໍໃຈເດີນທາງໄປບ້ານທີ່ຢູ່ຫ່າງໃກສອກຫຼີກ. ສິ່ງດັ່ງກ່າວນີ້ ຈະມີຄວາມກ່ຽວຂ້ອງຫຼາຍຂຶ້ນ ເມື່ອຮູ້ວ່າ ແມ່ຍິງ ທີ່ອາໃສຢູ່ໃນບ້ານຫ່າງໃກກວ່າ ມັກຈະເປັນຜູ້ທີ່ເສຍໂອກາດໄດ້ເປັນພະນັກງານຍິງ ຫຼາຍທີ່ສຸດ ຍ້ອນເຫດຜົນ ທາງດ້ານວັດທະນາທຳ ແລະ ຂາດຄວາມເຊື່ອໝັ້ນ. ໂດຍປົກກະຕິແລ້ວ, ອຸປະສັກຂອງພະນັກງານເພດຍິງ ໃນການເດີນທາງ ແມ່ນເປັນຍ້ອນຄວາມກັງວົນດ້ານຄວາມປອດໄພ ແລະ ການພິຈາລະນາ ຂອງຄອບຄົວ. ແຜນງານ GCF ອາດຈະສາມາດຄົ້ນຫາ ມາດຕະການສະໜັບສະໜູນ ທີ່ເປັນໄປໄດ້ ນອກຈາກສ້າງຄວາມເຊື່ອໝັ້ນ ແກ່ພະນັກງານເພດຍິງ ໃນຂົງເຂດວິຊາການ ຜ່ານທາງ ການຝຶກອົບຮົມ. ໃນຄະນະດຽວກັນ, ສະຫະພັນແມ່ຍິງລາວ ຄວນຈະໄດ້ຮັບການສະໜັບສະໜູນ ທັງການຝຶກອົບຮົມດ້ານວິຊາການ (REDD, ການຄຸ້ມຄອງຈັດສັນປ່າໄມ້, ການຜະລິດກະສິກຳທີ່ບໍ່ທຳລາຍປ່າໄມ້ ແລະ ທົນທານຕໍ່ກັບພາບດິນຟ້າອາກາດ ແລະ ການຕ້ອງໂສ້ມູນຄ່າກະສິກຳ) ແລະ ງົບປະມານ ສຳລັບເດີນທາງ ພ້ອມດ້ວຍ ມາດຕະການຊຸມຊົນທີ່ໄດ້ວາງແຜນໄວ້.

ຜົນກະທົບ ຈາກຊ່ອງວ່າງດ້ານການສຶກສາ ຂອງເພດທີ່ແຕກຕ່າງກັນ ຍັງມີສ່ວນຕິດພັນຫຼາຍຢ່າງ ກັບຂອບເຂດ ຂອງວຽກງານ ຂອງແຜນງານ GCF ທີ່ໄດ້ວາງແຜນໄວ້: ປະສົບການຈາກທົ່ວໂລກ ສະແດງໃຫ້ເຫັນວ່າ ການສຶກສາ ມີອຳນາດທີ່ສຳຄັນ ເພື່ອຊ່ວຍ ບຸກຄົນ ພິຈາລະນາ ຮູບແບບການດຳລົງຊີວິດ ແລະ ພຶດຕິກຳ ທີ່ເປັນອັນຕະລາຍ ຕໍ່ສິ່ງແວດລ້ອມ[43]. ດັ່ງນັ້ນ, ແມ່ຍິງທີ່ມີລະດັບການສຶກສາຕ່ຳກວ່າ ສາມາດສົ່ງຜົນ ຕໍ່ ຄວາມອາດສາມາດ ຂອງຊຸມຊົນເປົ້າໝາຍ ໃນການເຂົ້າໃຈ ແລະສະໜັບສະໜູນ ຢ່າງເຕັມທີ່ ຕໍ່ ມາດຕະການປົກປ້ອງສິ່ງແວດລ້ອມ ແລະ ການປ່ຽນແປງພຶດຕິກຳ. ເນື່ອງຈາກວ່າ ຜູ້ຊາຍ ແລະ ແມ່ຍິງ ທີ່ຖືກສຳພາດ ໄດ້ຕົກລົງເຫັນດີ ວ່າ ຕາມປະເພນີ ແມ່ຍິງເປັນມີຄວາມເຂົ້າໃຈຢ່າງເລິກເຊິ່ງຫຼາຍກວ່າ ກ່ຽວກັບ ຊັບພະຍາກອນປ່າໄມ້ ຊຶ່ງໃຊ້ເວລາຫຼາຍ ໃນນາມເປັນຜູ້ຊົມໃຊ້, ແລະ – ອີງຕາມ ພະນັກງານລັດ ທີ່ຖືກສຳພາດ – ເບິ່ງເໝືອນກັບວ່າຈະສະແດງຄວາມສົນໃຈຫຼາຍ ຕໍ່ ການປົກປັກຮັກສາປ່າໄມ້, ມາຕະການດ້ານການສຶກສາ ຄວນຈະເລັງເປົ້າໝາຍໃສ່ສະເພາະແມ່ຍິງ. ຜູ້ຊາຍ ແລະ ແມ່ຍິງ ທີ່ມີອາຍຸອ່ອນກວ່າ ຍັງສາມາດໃຊ້ບົດບາດອັນສຳຄັນ ຢູ່ໃນມາດຕະການ ການປົກປ້ອງ, ເນື່ອງຈາກວ່າ ບ້ານທີ່ຖືກສຳພາດ ໄດເປີດເຜີຍວ່າ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໃນລະດັບຊຸມຊົນ ໄດ້ຮັບມອບໝາຍວຽກປົກປັກຮັກສາປ່າໄມ້ເປັນທີ່ຮຽບຮ້ອຍແລ້ວ.

ສະພາບການສຶກສາທີ່ຕ່ຳ ຍັງຖືກກ່າວເຖິງເລື້ອຍໆ ວ່າເປັນເຫດຜົນຕົ້ນຕໍ ສຳລັບ ແມ່ຍິງລາວ ທີ່ມີລະດັບຄວາມເຊື່ອໝັ້ນຕ່ຳ ຊຶ່ງມີຜົນກະທົບ ຢ່າງຫຼວງຫຼາຍ ຕໍ່ ຄວາມພໍໃຈ ຂອງເຂົາເຈົ້າ ໃນການເລັງເປົ້າໃສ່ ຕຳແໜ່ງການນຳ ຢູ່ໃນຊຸມຊົນ ຂອງເຂົາເຈົ້າ ແລະ ເພື່ອກາຍເປັນຜູ້ສ້າງການປ່ຽນແປງ ທີ່ຫ້າວຫັນ ໃນຄອບຄົວ ແລະ ບ້ານ ຂອງເຂົາເຈົ້າ. ສິ່ງ

[43] ບຼອກຂອງທະນາຄານໂລກ, ປີ 2015

ດັ່ງກ່າວນີ້ ໄດ້ຖືກຊຸກຍູ້ ຢ່າງເຕັມທີ່ ໃນການສຳພາດບ້ານ: ກຸ່ມແມ່ຍິງໝົດທຸກກຸ່ມ ໄດ້ສະແດງຄວາມສົນໃຈ ແລະ ມີຄວາມພໍໃຈສູງ ທີ່ຈະເຂົ້າຮ່ວມ ໃນການຄຸ້ມຄອງຈັດສັນປ່າໄມ້ ແລະ ການຕັດສິນໃຈ ຫຼາຍກວ່າ ອັນທີ່ເຂົາເຈົ້າປະຕິບັດຢູ່ ໃນປັດຈຸບັນ ແຕ່ວ່າ ມີຄວາມຮູ້ສຶກບໍ່ໝັ້ນຄົງ ກ່ຽວກັບ ການຂາດການສຶກສາ ຂອງເຂົາເຈົ້າ. ດັ່ງນັ້ນ, ແຜນງານ GCF ທີ່ໄດ້ວາງແຜນໄວ້ ຈຳເປັນຈະຕ້ອງຕິດຕັ້ງກົນໄກ ທີ່ຈະໃຫ້ຜູ້ຊາຍ ແລະ ແມ່ຍິງ ທີ່ມີລະດັບການສຶກສາຕ່ຳ ເຂົ້າເຖິງ ຕຳແໜງການບໍລິຫານ. ສິ່ງດັ່ງກ່າວນີ້ ສາມາດບັນລຸໄດ້ ດ້ວຍການສ້າງ ແລະ ສົ່ງເສີມລາຍການຄວາມຕ້ອງການ ທີ່ເປັນທາງເລືອກ ເພື່ອໃຫ້ສາມາດມີຄຸນນະວຸດທິ ທີ່ເໝາະສົມ ກັບໜ້າວຽກ, ແລະ ກິດຈະກຳການພັດທະນາທັດສະ ທີ່ເປັນເປົ້າໝາຍ. ໃນກໍລະນີດັ່ງກ່າວນີ້ ຄວນສຸມໃສ່ສະເພາະ ຄົວເຮືອນທີ່ມີເພດຍິງເປັນຫົວໜ້າຄອບຄົວ ເນື່ອງຈາກວ່າ ເຂົາເຈົ້າມີທ່າອ່ຽງທີ່ຈະຖືກລະເລີຍ ຈາກຂະບວນການຕັດສິນໃຈຕ່າງໆ ແລະ ຈຳເປັນຕ້ອງໄດ້ສ້າງໂອກາດໃຫ້ເຂົາເຈົ້າ ເພື່ອເຂົ້າຮ່ວມ ແລະ ຮັບຜົນປະໂຫຍດຈາກກິດຈະກຳ ຕ່າງໆຂອງໂຄງການ.

ແຜນງານ GCF ທີ່ໄດ້ວາງແຜນໄວ້ ສາມາດພິຈາລະນາ ການເຂົ້າເຖິງຂໍ້ມູນ ກ່ຽວກັບ ຜົນຂອງລະບຽບການ ທີ່ມີຕໍ່ແມ່ຍິງ ໃນທຸລະກິດຄອບຄົວ ແລະ ມາດຕະການ ທີ່ອາດສາມາດ ຫຼຸດຜ່ອນຜົນກະທົບນີ້, ຫຼື ສ້າງຊ່ອງທາງ ສຳລັບໂອກາດໃນການສ້າງລາຍຮັບໃໝ່ໆ ທີ່ພິຈາລະນາ ຂໍ້ຈຳກັດທາງດ້ານວັດທະນາທຳ ແລະ ພຶດຕິກຳການປ່ຽນແປງໃນປັດຈຸບັນ. ແມ່ຍິງ ແລະ ຜູ້ຊາຍທີ່ຖືກສຳພາດ ມີຄວາມກະຕືລືລົ້ນ ທີ່ຈະຊອກຫາຊ່ອງທາງ ທີ່ເປັນທາງເລືອກໃນການສ້າງລາຍຮັບ, ແຕ່ນອກນັ້ນກໍຍັງ ໄດ້ສະແດງໃຫ້ເຫັນເຖິງ ອະຄະຕິໃນການຫຼີກລ້ຽງຄວາມສ່ຽງສູງ ໂດຍອີງໃສ່ ສະພາບເສດຖະກິດໃນປັດຈຸບັນ ທີ່ບໍ່ໝັ້ນຄົງ ຂອງເຂົາເຈົ້າ ແລະ ປະສົບການລົບໆ ທີ່ຜ່ານມາ ກ່ຽວກັບ ພຶດຊະນິດໃໝ່ ແລະ ນັກລົງທຶນ. ແມ່ຍິງຍັງສົນໃຈ ການເງິນຈຸລະພາກ, ແຕ່ ການສະໜັບສະໜູນທີ່ເປັນເປົ້າໝາຍ ແມ່ນເປັນສິ່ງຈຳເປັນ ທີ່ຈະເຮັດໃຫ້ເຂົາເຈົ້າ ມີຄວາມເຊື່ອໝັ້ນ ເພື່ອເຂົ້າໃນຕຳແໜ່ງບໍລິຫານ ໃຫ້ໂດດເດັ່ນຫຼາຍຂຶ້ນ ຢູ່ໃນຄະນະຄຸ້ມຄອງບ້ານ ແລະ ເພື່ອສ້າງຄວາມເຂັ້ມແຂງ ແກ່ ຄວາມອາດສາມາດ ຂອງເຂົາເຈົ້າ ກ່ຽວກັບ ຄວາມຮູ້ດ້ານການເງິນ ແລະ ດ້ານທຸລະກິດ. ຫຼັກສູດດັ່ງກ່າວ ອາດສາມາດ ສ້າງຈຸດເລີ່ມຕົ້ນ ທີ່ປະສົບຜົນສຳເລັດໄດ້ ເຊັ່ນວ່າ ຫຼັກສູດ ທີ່ຈັດຕັ້ງປະຕິບັດ ໂດຍ ILO ຮ່ວມກັບ ສະຫະພັນແມ່ຍິງລາວ ແລະ ບັນດາກົມອື່ນໆ ຂອງລັດ ເພື່ອສ້າງຄວາມເຂັ້ມແຂງ ແກ່ການເຂົ້າຮ່ວມ ຂອງແມ່ຍິງ ຢູ່ໃນການທະນາຄານບ້ານ ທີ່ຮຽກວ່າ "ການຊຸກຍູ້ສິ່ງເສີມແມ່ຍິງເຂົ້າໃນການເປັນຜູ້ປະກອບການ", ຫຼັກສູດ ຖືກອອກແບບມາ ສຳລັບ ແມ່ຍິງ ຜູ້ທຸກຍາກ ທີ່ຕ້ອງການເລີ່ມ ຫຼື ຂະຫຍາຍ ທຸລະກິດຈຸລະພາກ.[44]

ມີການແນະນຳຕື່ມອີກ ເພື່ອສະໜັບສະໜູນ ການຄຳນຶງເຖິງບັນຫາເພດ ສຳລັບຍິງແລະຊາຍ, ຊຶ່ງປະກອບມີການປູກຈິດສຳນຶກ ກ່ຽວກັບ ຄວາມເທົ່າທຽມກັນທາງເພດ ລວມທັງ ກອບນິຕິກຳ ແລະ ລະບຽບການ ແຫ່ງຊາດ. ນອກຈາກນັ້ນ, ສະຫະພັນແມ່ຍິງລາວ ຄວນຈະທຳໜ້າທີ່ ເປັນສະເໝີອນຊັບພະຍາກອນທີ່ສຳຄັນ ແກ່ ແມ່ຍິງໃນເຂດຊົນນະບົດ ດ້ວຍການສະໜອງຂໍ້ມູນ ກ່ຽວກັບ ການບໍລິການທີ່ສຳຄັນ.

3. ຂໍ້ມູນກ່ຽວບົດບາດຍິງ-ຊາຍໃນຂະແໜງການປ່າໄມ້

[44] ສຳລັບຂໍ້ມູນເພີ່ມຕື່ມ, ໃຫ້ເຂົ້າເບິ່ງ: https://www.ilo.org/wcmsp5/groups/public/---asia/---ro-bangkok/documents/publication/wcms_099876.pdf

ສຳລັບພາກນີ້ ຈະໄດ້ເວົ້າເຖິງ ສະພາບລວມຂອງແຜນຍຸດທະສາດຕ່າງໆ ກ່ຽວກັບບົດບາດຍິງ-ຊາຍໃນຂະແໜງການ ປ່າໄມ້ ໃນລະດັບສາກົນ, ພູມີພາກ ແລະ ລະດັບຊາດ.

3.1. ລະດັບສາກົນ: ຂໍ້ຄົງຄ້າງທາງດ້ານບົດບາດຍິງ-ຊາຍໃນຂະແໜງການຕ່າງໆ

ບົດບາດຍິງ-ຊາຍ ແລະ ການຜະລິດກະສິກຳ

ບົດບາດຍິງ-ຊາຍແບບດັ້ງເດີມ ແລະ ຄວາມຄາດຫວັງຂອງແມ່ຍິງ ແລະ ເດັກຍິງບັນດາເຜົ່າ ເຮັດໃຫ້ຊີວິດຂອງເຂົາເຈົ້າ ຫຍຸ້ງຍາກ ໂດຍສະເພາະ ຊົ່ວໂມງເຮັດວຽກທີ່ຍາວນານທັງໃນເຮືອນ ແລະ ນອກເຮືອນເພື່ອການຜະລິດກະສິກຳ. ແມ່ຍິງ ຮັບຜິດຊອບວຽກການ ຜະລິດກະສິກຳເປັນສ່ວນຫຼາຍ (ປູກ, ເສຍຫຍ້າ ແລະ ເກັບກ່ຽວພືດ), ລ້ຽງສັດນ້ອຍ ແລະ ເກັບເຄື່ອງປ່າຂອງດົງ (ບາງກໍລະນີ ຜູ້ຊາຍມີໜ້າທີ່ລ່າສັດປ່າ ຢູ່ບາງບ້ານ). ວຽກງານໜັກ ຕິດພັນກັບ ອຸປະນິໄສ ຂອງແມ່ຍິງ, ປະກອບກັບ ບັນດາບັນທັດຖານທາງສັງຄົມ ທີ່ວ່າແມ່ຍິງທີ່ດີ ຕ້ອງມີຄວາມເຂັ້ມແຂງ, ຮັບຜິດຊອບ ຂະຫຍັນໝັ່ນພຽນ ແລະ ຕ້ອງບໍ່ຕໍ່ວ່າກັບສິ່ງໃດໆ. ແມ່ຍິງໃຊ້ເວລາຫຼາຍກວ່າຜູ້ຊາຍປະມານ 4 ເທົ່າໃນການເຮັດວຽກ ໃນຄົວເຮືອນ ແລະ ການເບິ່ງແຍງວຽກເຮືອນໂດຍທົ່ວໄປ ນຳໄປສູ່ການຂາດໂອກາດດ້ານເວລາ ຂອງແມ່ຍິງສຳລັບກິດ ຈະກຳອື່ນໆເຊັ່ນ: ໂອກາດການຝຶກອົບຮົມ, ການມີສ່ວນຮ່ວມໃນກອງປະຊຸມຊຸມຊົນ ຫຼື ອົງການຈັດຕັ້ງອື່ນໆໃນ ທ້ອງຖິ່ນ ແລະ ການວາງແຜນເສດຖະກິດໄລຍະຍາວ [45]
. ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ທີ່ເປັນຫົວໜ້າຄອບຄົວ ໃນຂະແໜງກະສິກຳ ແມ່ນເຫັນໄດ້ຈາກເນື້ອທີ່ ກະສິກຳທີ່ເຂົາເຈົ້ານຳໃຊ້, ທັງຂະໜາດຂອງດິນຕອນ ແລະ ຈຳນວນຕອນດິນ[46]. ໃນຫຼາຍກໍລະນີ, ຄົວເຮືອນທີ່ມີເພດ ຍິງເປັນຫົວໜ້າຄອບຄົວ ມີແຮງງານ ແລະ ຊັບສິນການຜະລິດໜ້ອຍກວ່າ ສຳລັບເຂົາເຈົ້າ ໃນຂະນະທີ່ມີພື້ນຖານການ ປູກພືດທີ່ຫຼາກຫຼາຍໜ້ອຍກວ່າຜູ້ຊາຍ. [47]

ເນື່ອງຈາກຄວາມຄາດຫວັງແບບດັ້ງເດີມ, ແມ່ຍິງມັກຈະມີການເຄື່ອນຍ້າຍໜ້ອຍກວ່າຜູ້ຊາຍ. ຄວາມຄາດຫວັງຂອງ ສັງຄົມ ແມ່ນແມ່ຍິງຈະເຄື່ອນຍ້າຍ ສະເພາະພາຍໃນຂອບເຂດແດນຂອງບ້ານເທົ່ານັ້ນ, ໃນຂະນະທີ່ຜູ້ຊາຍ ຈະເດີນທາງ ໄກຫຼາຍກວ່າ ເພື່ອຊອກວຽກເຮັດງານທຳ ຫຼື ການຄ້າຂາຍ. ນອກຈາກນັ້ນ, ການເຄື່ອນຍ້າຍຂອງແມ່ຍິງ ໄດ້ຖືກຈຳ ກັດ ຍ້ອນຄວາມຮັບຜິດຊອບພາຍໃນຄົວເຮືອນ ແລະ ຄອບຄົວ ທີ່ບໍ່ເປີດໂອກາດໃຫ້ພວກເຂົາ ອອກຈາກເຮືອນເປັນ ເວລາດົນນານ. ເຖິງຢ່າງໃດກໍຕາມ, ສະພາບການດັ່ງກ່າວໄດ້ມີການປ່ຽນແປງໃນໄລຍະ 2 ທົດສະວັດຜ່ານມາ ຍ້ອນ ການພັດທະນາເສດຖະກິດ ແລະ ການຄ້າໃນພາກພື້ນ ໄດ້ເພີ່ມທະວີການຄ້າຂ້າມຊາຍແດນ ແລະ ການພັດທະນາ ອຸດສາຫະກຳຢູ່ບັນດາຕົວເມືອງ. ປັດໄຈເຫຼົ່ານີ້ ໄດ້ພາໃຫ້ມີການເພີ່ມຂຶ້ນຂອງການຄ້າຂ້າມຊາຍແດນ ແລະການຍ້າຍ ຖິ່ນຖານໄປຫາ ຕົວເມືອງຂະໜາດໃຫຍ່, ແຕ່ສ່ວນໃຫຍ່ ແມ່ນສຳລັບຜູ້ຊາຍ ແລະ ຈຳນວນໜຶ່ງເປັນແມ່ຍິງ. ເຖິງ ຢ່າງໃດກໍຕາມ, ໂດຍສະເພາະໃນເຂດຊົນນະບົດຫ່າງໄກສອກຫຼີກ, ບັນທັດຖານແບບດັ້ງເດີມກ່ຽວກັບບົດບາດຂອງ ແມ່ຍິງແມ່ນຍັງບໍ່ປ່ຽນແປງ ແລະ ຕ້ອງໄດ້ພິຈາລະນາໃນການຈັດຕັ້ງປະຕິບັດໂຄງການ. ຕົວຢ່າງ, ການເຄື່ອນທີ່ທີ່ ຈຳກັດຂອງແມ່ຍິງໄດ້ສົ່ງຜົນກະທົບຕໍ່ການມີສ່ວນຮ່ວມໃນການເຄື່ອນໄຫວທາງດ້ານເສດຖະກິດ ແລະ ກິດຈະກຳ ການຝຶກອົບຮົມ ເຊິ່ງຕ້ອງໄດ້ພິຈາລະນາໃນການພັດທະນາລະບົບຕ່ອງໂສ້ມູນຄ່າ.

---

[45] Climate-Friendly Agribusiness Value Chains Sector Project (2018): Project Administration Document.

[46] Care international and European Union, 2016. Gender Profile of Natural Resources Sector in Lao PDR

[47] FAO: Country Gender Assessment of Agriculture and the Rural Sector in Lao People's Democratic Republic, 2018. Available online: https://www.fao.org/3/ca0154en/CA0154EN.pdf

ທ່າອ່ຽງການໃນປະຈຸບັນ ໄດ້ເຫັນວ່າໄລຍະເວລາໝູນວຽນປ່າເຫຼົ່າສັ້ນລົງ, ໃນຂະນະທີ່ສົ່ງເສີມລະບົບການຜະລິດແບບເຂັ້ມ ຫຼື ການປູກພືດເສດຖະກິດ ເຮັດໃຫ້ການເຊື່ອມໂຊມຂອງດິນໄວຂຶ້ນ. ເມື່ອການເຮັດໄຮໝູນວຽນ ຫຼຸດລົງຫຼຸດຮອບວຽນລົງ ໄປເປັນ 3 ປີຮອບວຽນ, ວຽກຂອງແມ່ຍິງ ຈະເພີ່ມຂຶ້ນຢ່າງຫຼວງຫຼາຍ ຍ້ອນມີປະລິມານຂອງວຽກໃນການເສຍຫຍ້າແມ່ນເພີ່ມຂຶ້ນຫຼາຍເຊັ່ນດຽວກັນ (ໂດຍທົ່ວໄປແມ່ຍິງ ແລະ ເດັກຍິງແມ່ນເຮັດວຽກເສຍຫຍ້າ). ຖ້າແຮງງານເພດຍິງບໍ່ພຽງພໍກັບຄວາມກົດດັນຈາກວຽກການເສຍຫຍ້າ, ຂັ້ນຕອນຕໍ່ໄປ ກໍຄືກັນຫັນມາໃຊ້ຢາຂ້າຫຍ້າ. ການນຳໃຊ້ຢາປາບສັດຕູພືດ ແລະ ປຸ໋ຍໃນຊຸມຊົນຊົນນະບົດ ຂອງລາວນັບມື້ນັບເພີ່ມຂຶ້ນ. ການສຳຫຼວດສຳມະໂນກະສິກຳ 2011 ຊີ້ໃຫ້ເຫັນວ່າແມ່ຍິງມີ ການນຳໃຊ້ສານເຄມີສູງກວ່າຜູ້ຊາຍ. ເຫດຜົນອັນໜຶ່ງຂອງເລື່ອງນີ້ອາດແມ່ນຢາປາບສັດຕູພືດ ແລະ ປຸ໋ຍເຄມີ ຫຼຸດຜ່ອນເວລາເຮັດວຽກຂອງແມ່ຍິງໂດຍການຫຼຸດຜ່ອນເວລາທີ່ຕ້ອງການສຳລັບວຽກງານທີ່ແມ່ຍິງປະຕິບັດຕາມປະເພນີ, ເຊັ່ນ: ການປູກຫຍ້າ. FAO ສະຫຼຸບວ່າ "ແມ່ຍິງແລະເດັກນ້ອຍແມ່ນມີຄວາມສ່ຽງໂດຍສະເພາະຕໍ່ຜົນກະທົບດ້ານສຸຂະພາບຂອງຢາປາບສັດຕູພືດ ແລະ ສານເຄມີ, ຍ້ອນວ່າແມ່ຍິງມັກຈະແຜ່ລາມພວກເຂົາຢູ່ໃນທົ່ງນາ, ມັກຈະເອົາລູກຂອງພວກເຂົາຢູ່ເທິງຫລັງ." [48]

ໃນຂະນະທີ່ຫຼາຍໂຄງການ ແນໃສ່ ໃຫ້ການສະໜັບສະໜູນແກ່ ຊາວບ້ານໃນທ້ອງຖິ່ນ, ສ່ວນຫຼາຍ ວິທີການທີ່ນຳໃຊ້ແມ່ນ ບໍ່ໄດ້ຄຳນຶງກ່ຽວກັບບົດບາດຍິງຊາຍ. ຕົວຢ່າງ, ຄຳແນະນຳກ່ຽວກັບ ການຂະຫຍາຍກະສິກຳສ່ວນຫຼາຍແມ່ນໃຫ້ "ຊາວກະສິກອນ", ມັກຈະແນໃສ່ຊາວກະສິກອນຜູ້ຊາຍທີ່ຖືວ່າເປັນຜູ້ຕັດສິນໃຈຕົ້ນຕໍ. ໂດຍທົ່ວໄປແລ້ວ, ແມ່ຍິງເຂົ້າເຖິງວຽກງານສົ່ງເສີມ ແລະ ການຝຶກອົບຮົມ ຖືວ່າຍັງໜ້ອຍ ຍ້ອນເຫດຜົນຕ່າງໆ. ແມ່ຍິງມີທ່າອ່ຽງໜ້ອຍ ທີ່ຈະເຂົ້າຮ່ວມໃນຂະບວນການຕັດສິນໃຈ, ຍ້ອນວ່າມີຄວາມຫຍຸ້ງຍາກກັບວຽກພາຍໃນເຮືອນ ແລະ ຄອບຄົວ, ໄດ້ຮັບຂໍ້ມູນຜ່ານຜົວ ແລະ ມີຫຼາຍກໍລະນີໃນລະດັບການສຶກສາ ແລະ ການຮູ້ໜັງສືຕ່ຳກວ່າ. ອີງຕາມຊົນເຜົ່າ, ແມ່ຍິງລາວ ອາດຍັງຂາດທັກສະພາສາລາວ. ການມີສ່ວນຮ່ວມຂອງແມ່ຍິງ ໃນວຽກງານກະສິກຳ ມັກຈະຖືກປະເມີນຄ່າຕ່ຳລົງ ຈາກການລົງທຶນທາງດ້ານກະສິກຳ ແລະ ການບໍລິການສາທາລະນະ. ແມ່ຍິງບໍ່ໄດ້ຖືກຮັບຮູ້ວ່າ ເປັນຜູ້ນຳ ແລະ ເຮັດດ້ວຍຕົນເອງ ມັກຈະບໍ່ມີຄວາມຫມັ້ນໃຈພຽງພໍທີ່ຈະເຂົ້າຮ່ວມ ແລະ ເວົ້າໃນກອງປະຊຸມ ແລະ ການຝຶກອົບຮົມ. [49]

ເຖິງຢ່າງໃດກໍຕາມ, ການເຂົ້າຮ່ວມຂອງແມ່ຍິງໃນການເຄື່ອນໄຫວກະສິກຳ ແມ່ນມີຄວາມໝາຍສຳຄັນ ແລະ ເປັນຕົວຊີ້ນຳສຳຄັນຂອງຕ່ອງໂສ້ຄຸນຄ່າສະເພາະ. ໃນລະດັບຄົວເຮືອນ, ການຕັດສິນໃຈຈຳນວນຫຼາຍ ໄດ້ຖືກປະຕິບັດຮ່ວມກັນ, ແລະ ແມ່ຍິງຊົນນະບົດ ມີການເຂົ້າເຖິງຕະຫຼາດເທົ່າທຽມກັນ, ເຖິງແມ່ນວ່າສ່ວນຫຼາຍ ແມ່ນຜູ້ຊາຍທີ່ເຂົ້າເຖິງຂໍ້ມູນການຕະຫຼາດ. ໃນເຂດໂຄງການ, ອີງຕາມປະສົບການໂຄງການທີ່ຜ່ານມາ, ການກະຈາຍວຽກງານ ໃນຕ່ອງໂສ້ມູນຄ່າທີ່ເລືອກແມ່ນຖືວ່າມີດັ່ງນີ້:

[48] FAO: Country Gender Assessment of Agriculture and the Rural Sector in Lao People's Democratic Republic, 2018

[49] FAO: Country Gender Assessment of Agriculture and the Rural Sector in Lao People's Democratic Republic, 2018.

ຕາຕະລາງ 1: ການກະຈາຍວຽກງານ ອີງຕາມຕ່ອງໂສ້ມູນຄ່າທີ່ໄດ້ຖືກຄັດເລືອກ

ສິນຄ້າ[50]	**ການແບ່ງວຽກ ພາຍໃນຕ່ອງໂສ້ມູນຄ່າ**
ກາເຟ	ເທົ່າທຽມກັນ; ປູກໂດຍຜູ້ຊາຍ, ເສຍຫຍ້າໂດຍ ຍິງ ແລະ ຊາຍ, ເກັບກູ້ຜົນຜະລິດ ທັງຍິງ ແລະ ຊາຍ ແຕ່ຍິງຫຼາຍກວ່າ ແລະ ຂາຍໂດຍຍິງ ແລະ ຊາຍ
ຊາ	ເທົ່າທຽມກັນ; ປູກໂດຍຜູ້ຊາຍ, ເສຍຫຍ້າໂດຍ ຍິງ ແລະ ຊາຍ, ເກັບກູ້ຜົນຜະລິດ ທັງຍິງ ແລະ ຊາຍ ແຕ່ຍິງຫຼາຍກວ່າ ແລະ ຂາຍໂດຍຍິງ ແລະ ຊາຍ
ໄມ້ວິກ ແລະ ກະຖິນເທພາ	ສ່ວນຫຼາຍຜູ້ຊາຍ (ປູກ, ເສຍຫຍ້າ, ການຕັດຕົ້ນ)
ຢາງບິງ	ສ່ວນຫຼາຍຜູ້ຊາຍ (ປູກ, ເສຍຫຍ້າ, ເກັບກູ້ເປືອກ)
ໝາກເກົາ	ສ່ວນຫຼາຍຜູ້ຊາຍ (ປູກ, ເສຍຫຍ້າ, ເກັບກູ້ແກນ)
ຍານ	ສ່ວນຫຼາຍຜູ້ຊາຍ (ປູກ, ເສຍຫຍ້າ, ເກັບກູ້ຜົນຜະລິດ)
ຢາງພາລາ	ສ່ວນຫຼາຍຜູ້ຊາຍ (ປູກ, ເສຍຫຍ້າ, ເກັບກູ້ຢາງ)
ມອນ	ສ່ວນຫຼາຍແມ່ຍິງ; ປູກໂດຍຜູ້ຊາຍ, ເສຍຫຍ້າໂດຍແມ່ຍິງ, ເກັບກູ້ໝາກໂດຍ ແມ່ຍິງ ແລະ ປຸງແຕ່ງໂດຍແມ່ຍິງ
ໄມ້ໃຫ້ໝາກ	ສ່ວນຫຼາຍແມ່ຍິງ; ປູກໂດຍຜູ້ຊາຍ, ເສຍຫຍ້າໂດຍແມ່ຍິງ, ເກັບກູ້ໝາກໂດຍ ແມ່ຍິງ ແລະ ປຸງແຕ່ງໂດຍແມ່ຍິງ
ໄມ້ປ່ອງ	ຂຶ້ນກັບຜົນຜະລິດ. ປູກ, ບິວລະບັດ, ເກັບກູ້ລຳ ແລະ ປຸງແຕ່ງໂດຍຜູ້ຊາຍ ແລະ ຂາຍ ຫໍ່ໄມ້ທີ່ກິນໄດ້ໂດຍແມ່ຍິງ
ໝາກແໜ່ງ	ສ່ວນຫຼາຍແມ່ຍິງ (ປູກ, ບຳລຸງຮັກສາ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການ ຕະຫຼາດ)
ຫວາຍ	ຂຶ້ນກັບຜົນຜະລິດ. ປູກ, ບິວລະບັດ, ເກັບກູ້ລຳຫວາຍ ແລະ ປຸງແຕ່ງໂດຍຜູ້ຊາຍ ແລະ ຂາຍລຳອ່ອນທີ່ກິນໄດ້ໂດຍແມ່ຍິງ
ໝາກແຄ່ນ	ສ່ວນຫຼາຍຜູ້ຊາຍ (ປູກ, ເສຍຫຍ້າ, ເກັບກູ້ຜົນຜະລິດ)
ແຂມ	ສ່ວນຫຼາຍແມ່ຍິງ (ປູກ, ບິວລະບັດ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການຕະຫຼາດ)
ໝາກນັດ	ສ່ວນຫຼາຍແມ່ຍິງ (ປູກ, ບິວລະບັດ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການຕະຫຼາດ)
ໝາກນ້ຳມັນເຄືອ	ສ່ວນຫຼາຍແມ່ນຜູ້ຊາຍ (ປຸກ, ເສຍຫຍ້າ, ເກັບກູ້ຜົນຜະລິດ, ປຸງແຕ່ງໂດຍແມ່ຍິງ , ການຕະຫຼາດຮ່ວມກັນ)
ຝ້າຍ	ສ່ວນຫຼາຍແມ່ຍິງ (ປູກ, ບິວລະບັດ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການຕະຫຼາດ)
ໝາກເຍົາ	ສ່ວນຫຼາຍແມ່ຍິງ (ປູກ, ບິວລະບັດ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການຕະຫຼາດ)
ໝາກກະຈຽບ	ສ່ວນຫຼາຍແມ່ຍິງ (ປູກ, ບິວລະບັດ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການຕະຫຼາດ)
ອ້ອຍ	ສ່ວນຫຼາຍແມ່ນຜູ້ຊາຍ (ປູກ, ເສຍຫຍ້າ, ເກັບກູ້ຜົນຜະລິດ); ປຸງແຕ່ງໂດຍແມ່ຍິງ
ສາລີ	ເທົ່າທຽມກັນ
ຖົ່ວເຫຼືອງ/ຖົ່ວຂຽວ	ເທົ່າທຽມກັນ

[50] The project selected 35 commodities included in a “white list” which shall be promoted.

ຖົ່ວດິນ	ສ່ວນຫຼາຍແມ່ຍິງ (ປູກ, ບົວລະບັດ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການຕະຫຼາດ)
ມັນຕົ້ນ	ເທົ່າທຽມກັນ
ໝາກເດືອຍ	ເທົ່າທຽມກັນ
ງາ	ເທົ່າທຽມກັນ
ຜັກສວນຄົວ	ສ່ວນຫຼາຍແມ່ຍິງ (ປູກ, ບົວລະບັດ, ເກັບກູ້ຜົນຜະລິດ, ປຸງແຕ່ງ, ການຕະຫຼາດ)
ປູກຫຍ້າລ້ຽງສັດ	ສ່ວນຫຼາຍຜູ້ຊາຍ (ປູກ, ເສຍຫຍ້າ, ເກັບກູ້ຜົນຜະລິດ)
ໝອງປາ	ເທົ່າທຽມກັນ
ລ້ຽງເຜີ້ງ	ສ່ວນຫຼາຍແມ່ນຜູ້ຊາຍ

ໂຄງການຈະຕ້ອງຮັບປະກັນວ່າ ຈະມີການເນັ້ນໜັກໃສ່ ຕ່ອງໂສ້ມູນຄ່າຕ່າງໆຂ້າງເທິງ ທີ່ຮັບປະກັນການມີສ່ວນຮ່ວມ ຂອງແມ່ຍິງ ແລະ ຊຸກຍູ້ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງເຂົາເຈົ້າໃນຕ່ອງໂສ້ມູນຄ່ານັ້ນໆ. ບົດບາດຍິງ-ຊາຍ ແລະ ຂະແໜງການປ່າໄມ້

ສ່ວນຫຼາຍຄອບຄົວທີ່ທຸກຍາກ, ເຂົາເຈົ້າຈະເພິ່ງພາຊັບພະຍາກອນປ່າໄມ້ຫຼາຍຂຶ້ນ. ດັ່ງນັ້ນ, ຈຶ່ງສາມາດສົມມຸດໄດ້ວ່າ ຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ ມີທ່າອ່ຽງການເພິ່ງພາອາໄສຊັບພະຍາກອນປ່າໄມ້ຫຼາຍກວ່າ ຄອບຄົວທີ່ເປັນມີຫົວໜ້າເປັນເພດຊາຍ. ການຂາດແຄນເຂົ້າ ແມ່ນສູງທີ່ສຸດ ໃນລະດູແລ້ງຈາກເດືອນມີນາຫາເດືອນຕຸລາ. ເພື່ອ ຄວາມຢູ່ລອດ, ຜູ້ຊາຍ, ແມ່ຍິງ, ແລະ ເດັກນ້ອຍ ໄດ້ເກັບກູ້ ເຄື່ອງປ່າຂອງດົງ ຈາກປ່າອ້ອມຂ້າງເພື່ອເປັນອາຫານ ແລະ ລາຍຮັບຈຳນວນໜຶ່ງ. ປ່າໄມ້ເປັນແຫຼ່ງຊັບພະຍາກອນທີ່ສຳຄັນຕໍ່ການດຳລົງຊີວິດຂອງທ້ອງຖິ່ນ ໂດຍສະເພາະເຄື່ອງປ່າ ຂອງດົງ. ໃນປີ 2001, ການບໍລິໂພກເຄື່ອງປ່າຂອງດົງແມ່ນເທົ່າກັບ 40% ຂອງລາຍຮັບສະເລ່ຍຂອງຄອບຄົວໃນ ຊົນນະບົດ. ການເກັບກູ້ຫຼາຍເກີນໄປ ແລະ ຂາດຄວາມຮູ້ກ່ຽວກັບວິທີການເກັບກູ້ແບບຍືນຍົງ ສົ່ງຜົນໃຫ້ຜົນຜະລິດ ຂອງປ່າໄມ້ຫຼຸດລົງ ແລະ ຕ້ອງໃຊ້ແຮງງານຫຼາຍຂຶ້ນ, ແລະ ໃຊ້ເວລາໃນການເກັບເຄື່ອງປ່າຂອງດົງ (ເຊັ່ນ: ແມ່ຍິງສ່ວນ ຫຼາຍຕ້ອງຍ່າງໄປໄກຂຶ້ນ ຫຼື ໃຊ້ເວລາເກັບເຄື່ອງປ່າຂອງດົງ ເພື່ອລ້ຽງຊີບ). [51]

ເຄື່ອງປ່າຂອງດົງມີບົດບາດສຳຄັນ ໃນການສົ່ງເສີມຊີວິດການເປັນຢູ່ຂອງປະຊາຊົນຊົນນະບົດ ແລະ ເສດຖະກິດແຫ່ງ ຊາດ. ປະມານ 70% ຂອງປະຊາກອນທັງໝົດແມ່ນອາໄສຢູ່ໃນເຂດຊົນນະບົດ, ອາໄສການກະສິກຳໃນເຂດເນີນສູງ ແລະ ຜະລິດຕະພັນຈາກປ່າເພື່ອເປັນອາຫານ, ລາຍຮັບທີ່ເປັນເງິນ, ແລະ ການດຳລົງຊີວິດ. ເຂົາເຈົ້ານຳໃຊ້ເຄື່ອງປ່າ ຂອງດົງເພື່ອລ້ຽງຊີບປະຈຳວັນ. ມັນຍັງມີບົດບາດສຳຄັນ ໃນການຄ້ຳປະກັນສະບຽງອາຫານ ແລະ ລັດຖະບານລາວ ໄດ້ ຖືວ່າຜະລິດຕະພັນດັ່ງກ່າວ ເປັນຍຸດທະສາດທີ່ສຳຄັນໃນການລຶບລ້າງຄວາມທຸກຍາກ [52]. ບົດບາດສຳຄັນຂອງແມ່ຍິງ ໃນການຂຸດຄົ້ນ ແລະ ນຳໃຊ້, ແຕ່ເຂົາເຈົ້າມັກ ຈະບໍ່ມີບົດບາດໃນການຄວບຄຸມ ລາຍຮັບທີ່ໄດ້ມາຈາກເຄື່ອງປ່າຂອງ ດົງທາງການຄ້າໂດຍກົງ, ແລະ ສະນັ້ນ ເຂົາເຈົ້າຈະບໍ່ໄດ້ຮັບຜົນປະໂຫຍດໂດຍກົງຈາກການເພີ່ມຂຶ້ນທາງດ້ານການຄ້າ. ຮູບແບບທົ່ວໄປ ແມ່ນວ່າແມ່ຍິງຈະຖືກປ່ຽນແທນ ໂດຍຜູ້ຊາຍ ໃນເວລາທີ່ເຕັກໂນໂລຊີປະຫຍັດແຮງງານໃຫມ່ສຳລັບ ການປຸງແຕ່ງເຄື່ອງປ່າຂອງດົງ ໄດ້ຖືກນຳມາໃຊ້.

[51] Lao Women's Union (2018): Lao PDR Gender Profile

[52] Care international and European Union, 2016. Gender Profile of Natural Resources Sector in Lao PDR.

ປະມານ 10% ຂອງຄົວເຮືອນລາວ ແມ່ນນຳພາໂດຍແມ່ຍິງ ແລະ ສ່ວນຫຼາຍແມ່ນຢູ່ໃນເຂດຕົວເມືອງ. ຄາດຄະເນວ່າ ໜ້ອຍກວ່າ 5% ຂອງຄອບຄົວຢູ່ເຂດຊົນນະບົດແມ່ນແມ່ຍິງເປັນຫົວໜ້າຄອບຄົວ[53]. ໃນເຂດໂຄງການ, ອັດຕາສ່ວນຂອງຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າ ແມ່ນກວມ 3%. ຕາມ FAO ແລ້ວ[54], ຄວາມບໍ່ສະເໝີພາບຕົ້ນຕໍລະຫວ່າງ ແມ່ຍິງ ແລະ ເພດຊາຍ ຢູ່ໃນຊົນນະບົດຂອງລາວ ແມ່ນກ່ຽວກັບທີ່ດິນ, ຄວາມຫຼາກຫຼາຍທາງດ້ານຊີວິດການເປັນຢູ່ ແລະ ລາຍຮັບທີ່ເປັນເງິນຕາ. ຄົວເຮືອນທີ່ແມ່ຍິງເປັນຫົວໜ້າ ມີແນວໂນ້ມທີ່ຈະມີເນື້ອທີ່ດິນຂະຫນາດນ້ອຍກວ່າ, ທາງເລືອກໜ້ອຍໃນການສ້າງລາຍຮັບ ແລະ ອັດຕາການຂາຍຜົນຜະລິດທີ່ຕ່ຳກວ່າ. ນອກຈາກນັ້ນ, ແມ່ຍິງທີ່ເປັນຫົວໜ້າຄອບຄົວ ໃຊ້ອັດຕາລາຍຮັບຂອງເຂົາເຈົ້າຕໍ່ກັບອາຫານທີ່ສູງຂຶ້ນ. ແມ່ຍິງໃນເຂດຊົນນະບົດ ປະສົບກັບຄວາມທຸກຍາກຕາມເວລາ, ຍ້ອນມີວຽກເຮັດໄຮ່ຫລາຍເກີນໄປ ແລະ ໃນລະດັບຄົວເຮືອນ ບວກກັບຄວາມຄາດຫວັງທາງດ້ານວັດທະນະທຳກ່ຽວກັບບົດບາດຂອງຄອບຄົວ. ຄວາມທຸກຍາກແມ່ນຮ້າຍແຮງຂຶ້ນສຳລັບຄົວເຮືອນທີ່ແມ່ຍິງນຳພາ, ເຮັດໃຫ້ເຂົາເຈົ້າກາຍເປັນຄອບຄົວທີ່ມີຄວາມສ່ຽງທີ່ສຸດໃນລະດັບບ້ານ. ຄວາມຄິດ ແລະ ເຫດຜົນ ຂອງເຂົາເຈົ້າອາດຈະບໍ່ໄດ້ຮັບການພິຈາລະນາ ຍ້ອນວ່າພວກເຂົາ ຖືກຍົກເວັ້ນຈາກຂະບວນການຕັດສິນໃຈ, ການເຄື່ອນຍ້າຍຂອງພວກເຂົາແມ່ນຈຳກັດ, ດັ່ງນັ້ນ, ຄວາມສາມາດໃນການເຂົ້າເຖິງໂອກາດພາຍນອກ ເຊັ່ນ: ຕະຫຼາດ ພາຍນອກຂອບເຂດບ້ານ ແລະ ການຝຶກອົບຮົມໃນສູນກາງໃກ້ຄຽງ.

ແມ່ຍິງໃນຖານະ ເຈົ້າຂອງທຸລະກິດໃນ ຂະແໜງການກະສິກຳ ແລະ ປ່າໄມ້

ພາກເອກະຊົນ ແມ່ນສາມາດສ້າງໂອກາດໃໝ່ ໃຫ້ແກ່ຜູ້ປະກອບການ ໃນ ສປປ ລາວ ແລະ ຢ່າງໜ້ອຍ 40 ສ່ວນຮ້ອຍ ຂອງວິສາຫະກິດທັງໝົດ ແມ່ນເປັນຂອງແມ່ຍິງ, ໂດຍສະເພາະໃນເຂດຕົວເມືອງ. ສຳລັບວິສາຫະກິດທີ່ລົງທະບຽນໃໝ່, ສ່ວນຫຼາຍແມ່ນມີແມ່ຍິງເປັນເຈົ້າຂອງ[55]. ແນວໃດກໍ່ຕາມ, ວິສາຫະກິດທີ່ມີເຈົ້າຂອງເປັນແມ່ຍິງ ມັກຈະມີຂະຫນາດນ້ອຍກວ່າ (ສ່ວນຫຼາຍແມ່ນຢູ່ໃນລະດັບຈຸນລະພາກ) ແລະ ຈ້າງຄົນງານຫນ້ອຍກວ່າທີ່ຜູ້ຊາຍເປັນເຈົ້າຂອງ ແລະ ມີແນວໂນ້ມທີ່ມີການເຄື່ອນຍ້າຍຫນ້ອຍ, ຍ້ອນວ່າແມ່ຍິງ ໃນຖານະເປັນຜູ້ເບິ່ງແຍງຕົ້ນຕໍທຸລະກິດ ມັນຕັ້ງ ສະຖານທີ່ຂອງທຸລະກິດຢູ່ ໃກ້ກັບບ້ານຂອງພວກເຂົາ[56]. ໃນບັນດາຜູ້ປະກອບການທີ່ໄດ້ສຳພາດ 19 ທ່ານ ໃນການກະກຽມໂຄງການ 2, ມີເຈົ້າຂອງເປັນເພດຍິງ 5 ທ່ານ (ບາງບໍລິສັດເປັນເຈົ້າຂອງຮ່ວມກັບຜົວ). ຫ້າບໍລິສັດ ດັ່ງກ່າວ ໄດ້ສຸມໃສ່ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນກະສິກຳ, ໃນນັ້ນມີໝາກນັດ, ໝາກຖົ່ວ, ຜັກບົ້ງ, ສາລີ ແລະ ດອກແຂມ.

---

[53] FAO (2013): he Gender and Equity Implications of Land-related Investments on Land Access and Labour and Income-Generating Opportunities. Available online: https://repub.eur.nl/pub/51499/Metis_197510.pdf

[54] FAO (2013)

[55] Due to the absence of a universal definition of “woman-owned enterprise”, there exists multiple definitions for businesses owned or led by women. In this is case, a woman-owned enterprise is considered an business registered and managed by a women.

[56] USAID, 2016. The Ecosystem for Women’s Entrepreneurship in Lao PDR. Available online: https://www.researchgate.net/publication/301498066_The_Ecosystem_for_Women%27s_Entrepreneurship_in_Lao_PDR

ປະມານ 74% ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໃນລາວ ແມ່ນເປັນຂອງຄອບຄົວ, ລວມທັງຂະແໜງການ ປຸງແຕ່ງໄມ້ ທີ່ໄດ້ຮັບອິດທິພົນຈາກລະບຽບການ ແລະ ການເຈລະຈາກ່ຽວກັບຂະບວນການ FLEGT-VPA ຂອງ ສປປ ລາວ, ແລະ ທ່າແຮງອື່ນໆ ທີ່ຈະໄດ້ຮັບການສະໜັບສະໜູນຈາກໂຄງການ GCF ທີ່ໄດ້ວາງແຜນໄວ້. ເຖິງແມ່ນ ວ່າ, ຜູ້ຊາຍມັກຈະເປັນຜູ້ທີ່ເດັ່ນກວ່າ ໃນທຸລະກິດຄອບຄົວຂະຫນາດນ້ອຍເຫຼົ່ານີ້, ມັນມັກຈະເປັນຄອບຄົວທັງຫມົດ ທີ່ມີສ່ວນພົວພັນ ແລະ ດັ່ງນັ້ນຈຶ່ງໄດ້ຮັບຜົນກະທົບເທົ່າທຽມກັນຈາກກິດລະບຽບກັບທຸລະກິດຂອງພວກເຂົາ[57].
ການປະເມີນ ໂດຍທະນາຄານໂລກໃນປີ 2011 ໄດ້ກຳນົດສິ່ງກີດຂວາງຕົ້ນຕໍຕໍ່ໄປນີ້ ຂອງການປະກອບການທຸລະ ກິດຂອງເພດຍິງ: [58]:

• ຂໍ້ຈຳກັດການເຂົ້າເຖິງການຜະລິດທີ່ມີລັກສະນະນະວັດຕະກຳ, ເຮັດໃຫ້ມີຄວາມແຕກຕ່າງຂອງຜະລິດຕະພັນເລັກ ນ້ອຍ
• ຂາດການຝຶກອົບຮົມທາງທຸລະກິດຢ່າງເປັນທາງການ ແລະ ໂອກາດທີ່ຈຳກັດໃນການຫາຄວາມຮູ້ທາງດ້ານເຕັກນິກ , ການເງິນ ແລະ ທັກສະການບໍລິຫານເພີ່ມເຕີມສຳລັບຜູ້ຈັດການ ແລະ ພະນັກງານ.
• ການເຂົ້າເຖິງການະໂອກາດເຄືອຂ່າຍທີ່ຈຳກັດຫຼາຍ, ຂາດຕົວແບບຢ່າງທີ່ປະສົບຜົນສຳເລັດສຳລັບແມ່ຍິງທຸລະກິດ
• ການເຂົ້າເຖິງທຶນຮອນບໍ່ພຽງພໍເພື່ອຂະຫຍາຍ
• ຂໍ້ຈຳກັດທາງດ້ານແນວຄິດ, ເຊັ່ນ: ຄວາມໝັ້ນໃຈຕ່ຳ, ຄວາມທົນທານຕໍ່ຄວາມສ່ຽງ, ແລະ ຄວາມອ່ອນເພຍ/ທ່າ ອ່ຽງຕ່ຳໃນການຮັບຮູ້ ແລະ ປັບຕົວເຂົ້າກັບຄວາມຕ້ອງການຂອງຕະຫຼາດ.

ການປ່ຽນແປງ ແລະ ຄວາມຜັນຜວນຂອງຄວາມຕ້ອງການຂອງຕະຫຼາດ, ການເພີ່ມຂຶ້ນຂອງຜູ້ປະກອບການ ແລະ ໂອກາດໃນການເຮັດວຽກອື່ນທີ່ບໍ່ກ່ຽວຂ້ອງກັບກະສິກຳ ເຮັດໃຫ້ແມ່ຍິງໃນຊົນນະບົດ ມີຄວາມລຳບາກຫຼາຍ, ເນື່ອງ ຈາກເຂົາເຈົ້າຮູ້ວ່າ ເຂົາເຈົ້າຂາດການສຶກສາ ແລະ ທັກສະ, ລວມທັງການຂາດຄວາມຮູ້ວິທີການເຂົ້າຫາ ແລະ ເຂົ້າໃຈ ຕະຫຼາດ ທີ່ບໍ່ສາມາດເບິ່ງເຫັນໄດ້. ເປັນອຸປະສັກຕໍ່ທ່າແຮງຂອງເຂົາເຈົ້າ ສຳລັບການເພີ່ມຜົນຜະລິດ ຫຼື ການເລີ່ມຕົ້ນ ທຸລະກິດໃຫມ່. ແມ່ຍິງສ່ວນໃຫຍ່ມີຄວາມວິຕົກ ທີ່ຈະເລີ່ມຕົ້ນອັນໃໝ່ທັງໝົດ ແລະ ມັກຍຶດໝັ້ນກັບວຽກທີ່ຄຸ້ນເຄີຍ ເຊັ່ນ: ກະສິກຳ ແລະ ເຄື່ອງປ່າຂອງດົງ, ການລ້ຽງສັດ ແລະ ການຕຳຫູກ.

ການສຳພາດອົງການປົກຄອງທ້ອງຖິ່ນ ແລະ ຊາວບ້ານທ້ອງຖິ່ນ ຍິນດີຕ້ອນຮັບ ການລົງທຶນຂອງພາກເອກະຊົນ ກໍ່ຕໍ່ ເມື່ອ ມັນສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນໃນດ້ານລາຍຮັບທີ່ສູງຂຶ້ນ ແລະ ວຽກບໍ່ໜັກເກີນໄປ, ພ້ອມທັງຍົກລະດັບ ທັກສະ. ທຸກຝ່າຍສະແດງຄວາມປາດຖະໜາ ຢາກໃຫ້ລັດຖະບານ ຄວບຄຸມການລົງທຶນທີ່ມີທ່າແຮງດັ່ງກ່າວ ຢ່າງເຂັ້ມ ງວດ ເພື່ອຈຳກັດຄວາມສ່ຽງຕໍ່ຊຸມຊົນ. ແມ່ຍິງທີ່ຖືກສຳພາດກ່າວວ່າ ພວກເຂົາບໍ່ຫມັ້ນໃຈທີ່ຈະ ເຂົ້າຮ່ວມໃນການ ຕັດສິນໃຈກ່ຽວກັບການລົງທຶນ.

ບົດບາດຍິງຊາຍ ແລະ ການປັບຕົວຕໍ່ກັບສະພາບການປ່ຽນແປງດິນຟ້າອາກາດ

ການຄຸ້ມຄອງໄພພິບັດ ໄດ້ເປັນຈຸດທີ່ສຳຄັນ ສຳລັບສິ່ງທ້າທ້າຍຕ່າງໆ ທີ່ກ່ຽວຂ້ອງກັບ ຄວາມຍືນຍົງທາງສິ່ງແວດ ລ້ອມ ແລະ ມີການຍອມຮັບຢ່າງກວ້າງຂວາງ. ພາລະດ້ານສິ່ງແວດລ້ອມ ທີ່ກໍໃຫ້ເກີດພະຍາດຕິດແປດ ຊຶ່ງມີສະເຫດ

[57] USAID, 2016. The Ecosystem for Women's Entrepreneurship in Lao PDR.

[58] As cited in USAID, 2016. The Ecosystem for Women's Entrepreneurship in Lao PDR.

ຈາກ ການປ່ຽນແປງຂອງດິນຟ້າອາກາດແມ່ນກວມ 26% ຂອງພາລະທີ່ເກີດຈາກພະຍາດຕິດແປດທັງໝົດ ຂອງ ສປປ ລາວ. ແມ່ຍິງ ແລະ ຜູ້ຊາຍປະສົບຜົນກະທົບຈາກໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງແຕກຕ່າງກັນ. ຍ້ອນບົດບາດ ຂອງແມ່ຍິງໃນບ້ານ, ຄວາມຮັບຜິດຊອບຂອງເຂົາເຈົ້າໃນການດູແລຄອບຄົວ ແລະ ລັກສະນະການຈ້າງງານ, ເຂົາເຈົ້າ ມີແນວໂນ້ມທີ່ຈະຮັບຜົນກະທົບຈາກໄພທຳມະຊາດດັ່ງກ່າວ ຫຼາຍກວ່າ.[59]

ຫຼາຍຜົນການສຶກສາ ສະແດງໃຫ້ເຫັນວ່າແມ່ຍິງ ໄດ້ຮັບຜົນກະທົບ ຈາກໄພພິບັດທຳມະຊາດ ທີ່ເກີດຈາກສະພາບ ອາກາດ ຢ່າງບໍ່ດຸ່ນດ່ຽງ, ເຊິ່ງໃນຫຼາຍໆກໍລະນີມາພ້ອມກັບ ອັດຕາຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງທີ່ເພີ່ມຂຶ້ນ. ອັດຕາການຕາຍຂອງແມ່ຍິງມັກຈະສູງກວ່າຜູ້ຊາຍ. ອີງຕາມ Thurston et al, ສິ່ງດັ່ງກ່າວອາດມີສາເຫດ ມາຈາກ "ຄວາມແຕກຕ່າງທາງຊີວະພາບ, ການຈຳແນກເພດ ໃນຂະນະການຊ່ວຍເຫຼືອບັນເທົາທຸກ, ການເຂົ້າເຖິງຂໍ້ມູນ ແລະ ຊັບພະຍາກອນຕ່ຳ ຄວາມຮັບຜິດຊອບໃນການດູແລ ແລະ ຄວາມທຸກຍາກທາງເພດ"[60]. ໄພພິບັດທຳມະຊາດໃນ ລະດັບທີ່ແຕກຕ່າງກັນ ສ້າງປັດໃຈຄວາມສ່ຽງທີ່ໃນທາງກົງກັນຂ້າມ ເພີ່ມຄວາມສ່ຽງຕໍ່ຄວາມຮຸນແຮງທາງເພດ. ປັດໃຈເຫຼົ່ານີ້ແມ່ນ, ເຊັ່ນ, ໂລກຊຶມເສົ້າ ແລະ ບັນຫາສຸຂະພາບຈິດ ຫຼື ການເສບສານເສບຕິດ, ແຕ່ຍັງມີຜົນກະທົບ ທາງສັງຄົມເຊັ່ນ: ການແຕກແຍກຂອງໂຄງສ້າງຄອບຄົວ ຫຼື ການສູນເສຍທີ່ຢູ່ອາໄສ ແລະ ການດຳລົງຊີວິດ. ຍິ່ງໄປ ກວ່ານັ້ນ, ການຍຸບ ຫຼື ຂາດການບັງຄັບໃຊ້ກົດຫມາຍ ອາດຈະເຮັດໃຫ້ສະຖານະການຮ້າຍແຮງຂຶ້ນ. ໄພພິບັດທາງທຳ ມະຊາດ ເພີ່ມຄວາມສ່ຽງໃຫ້ແມ່ຍິງ ແລະ ເດັກຍິງຕົກເປັນເຫຍື່ອຂອງການຂູດຮີດທາງເພດ ແລະ ການລ່ວງລະເມີດ ທາງເພດ (SEAH). ກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ຫຼັງຈາກໄພພິບັດທຳມະຊາດລວມມີການຂົ່ມຂືນ/ ຂົ່ມເຫັງທາງເພດ ໂດຍຄູ່ນອນ ຫຼື ຄູ່ຮ່ວມງານທີ່ໃກ້ຊິດ, ແຕ່ຍັງມີການທຳລາຍກຽດສັກສີ ແລະ ການຄ້າມະນຸດ.[61]

ແມ່ຍິງມັກຈະໄດ້ຮັບຜົນກະທົບທາງລົບຈາກການປ່ຽນແປງດິນຟ້າອາກາດ. ຕົວຢ່າງ, ຄອບຄົວອາດຈະຕັດສິນໃຈທີ່ ຈະເອົາເດັກຍິງອອກຈາກໂຮງຮຽນ ເພື່ອເພີ່ມແຮງງານທີ່ຊ່ວຍວຽກພາຍໃນຄົວເຮືອນ, ໃນຂະນະທີ່ເດັກຊາຍມັກຈະ ຖືກເກັບໄວ້ໃນໂຮງຮຽນໃນໄລຍະວິກິດ. ຍຸດທະສາດການຮັບມືອີກອັນຫນຶ່ງ ອາດຈະເປັນການໃຫ້ລູກສາວແຕ່ງງານ ໄວ ໃຫ້ພວກເຂົາຢູ່ໃນເຮືອນຢ່າງປອດໄພ. ໃນເຂດຊົນນະບົດ, ລະບົບນິເວດທີ່ຂຸດໂຊມລົງ ຈາກການປ່ຽນແປງຂອງ ດິນຟ້າອາກາດ, ເຊິ່ງອາດຈະເພີ່ມພາລະໃນຄົວເຮືອນ ແລະ ໃຫ້ແມ່ຍິງ, ບັງຄັບໃຫ້ເຂົາເຈົ້າຊອກຫາຊັບພະຍາກອນ ເຊັ່ນ: ເຄື່ອງປ່າຂອງດົງ ຫຼື ຟືນໃນເຂດທີ່ບໍ່ມີຄວາມປອດໄພ, ເພີ່ມຄວາມຮຸນແຮງ ແລະ ການໂຈມຕີທາງເພດ. ໄພ ຂົ່ມຂູ່ດັ່ງກ່າວຈະສູງຂຶ້ນ ຖ້າຄອບຄົວຖືກຍົກຍ້າຍຈາກໄພພິບັດອື່ນໆ.

ແມ່ຍິງລາວ ມີບົດບາດສຳຄັນໃນທັງຍຸດທະສາດການຫຼຸດຜ່ອນ ແລະ ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ, ແຕ່ສິ່ງເຫຼົ່ານີ້ ຍັງບໍ່ໄດ້ຮັບການຍອມຮັບ ຫຼື ສະໜັບສະໜູນເທົ່າທີ່ຄວນ. ໂຄງການທີ່ສຸມໃສ່ການປັບຕົວເຂົ້າກັບການ ປ່ຽນແປງດິນຟ້າອາກາດ ຍັງສາມາດສົ່ງຜົນກະທົບທາງລົບຕໍ່ແມ່ຍິງໄດ້, ຫຼື ເອື້ອປະໂຫຍດໃຫ້ຜູ້ຊາຍ ແລະ ແມ່ຍິງທີ່ບໍ່ ເທົ່າທຽມກັນ ຖ້າຫາກວ່າການພິຈາລະນາ ບົດບາດຍິງຊາຍບໍ່ໄດ້ຖືກພິຈາລະນາຢ່າງເຕັມສ່ວນ ແລະ ເປັນຕົ້ນຕໍ.

[59] Thurston, et al (2020): Natural hazards, disasters and violence against women and girls: a global mixed-methods systematic review. Available online: https://gh.bmj.com/content/6/4/e004377

[60] Thurston, et al (2020): Natural hazards, disasters and violence against women and girls: a global mixed-methods systematic review.

[61] Virginie Le Masson (2022): Disasters, Climate Change, and Violence Against Women and Girls. Available online: https://doi.org/10.1093/acrefore/9780199389407.013.393

ຕົວຢ່າງ, ໂຄງການອາດຈະພຽງແຕ່ເພີ່ມກິດຈະກຳການປັບຕົວເຂົ້າໄປໃນບັນຊີລາຍຊື່ ຂອງຄວາມຮັບຜິດຊອບຂອງແມ່ຍິງໃນຊີວິດປະຈຳວັນຂອງເຂົາເຈົ້າ, ເຮັດໃຫ້ແມ່ຍິງມີເວລາ ແລະ ຊັບພະຍາກອນຫນ້ອຍ [62]
. ການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ ແມ່ນຂຶ້ນກັບບັນຫາຕ່າງໆເຊັ່ນ: ຄວາມຮັ່ງມີ, ພະລັງງານເຕັກໂນໂລຊີ, ການເຂົ້າເຖິງຂໍ້ມູນຂ່າວສານ, ທັງໝົດລ້ວນແຕ່ຖືກໄກ່ເກ່ຍດ້ວຍ ທ່າແຮງດ້ານເພດໃນຄອບຄົວ, ເສດຖະກິດ ແລະ ສັງຄົມ. ຄວາມຮັບຜິດຊອບດັ້ງເດີມຂອງແມ່ຍິງລາວໃນຄົວເຮືອນ ແລະ ໃນຖານະເປັນຜູ້ຄຸ້ມຄອງຊັບພະຍາກອນທຳມະຊາດ, ແລະ ໄດ້ສ້າງເງື່ອນໄຂທີ່ດີ ໃນການກຳນົດແຜນຍຸດທະສາດ ໃນການປັບຕົວເຂົ້າກັບສະພາບຕົວຈິງຂອງສິ່ງແວດລ້ອມ. ຕົວຢ່າງ, ແມ່ຍິງສາມາດມີຜົນກະທົບທີ່ສຳຄັນ ຕໍ່ການຫັນປ່ຽນໄປສູ່ການນຳໃຊ້ພະລັງງານທີ່ສະອາດ ສຳລັບການບໍລິໂພກໃນຄົວເຮືອນ (ຜົນປະໂຫຍດທັງສຸຂະພາບຄອບຄົວ ແລະ ສິ່ງແວດລ້ອມ) ແລະ ໃນການຮັກສາບົດບາດຕາມຮີດຄອງປະເພນີຂອງເຂົາເຈົ້າ ໃນການປົກປ້ອງຊີວະນາໆພັນ - ໂດຍສະເພາະໃນເຂດເນີນສູງທີ່ມີຄວາມສ່ຽງສູງ ແລະ ໃນເຂດປ່າສະຫງວນແຫ່ງຊາດ[63].

ຄວາມໝາຍຕໍ່ກັບ ໂຄງການ GCF ທີ່ໄດ້ວາງແຜນໄວ້

ດັ່ງທີ່ການວິເຄາະໄດ້ສະແດງໃຫ້ເຫັນ, ແມ່ຍິງມັກຈະເປັນຜູ້ສະໜອງຄວາມຮູ້ທີ່ສຳຄັນ ກ່ຽວກັບສະຖານະພາບຂອງປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ຂອງຊຸມຊົນ. ເນື່ອງຈາກໂຄງການດັ່ງກ່າວ ມີແຜນທີ່ຈະສະໜັບສະໜູນການພັດທະນາລະບົບການຕິດຕາມ ແລະ ກວດກາປ່າໄມ້ແຫ່ງຊາດ, ມັນມີຄວາມໝາຍຢ່າງຍິ່ງ ທີ່ຈະສຶກສາລະອຽດກ່ຽວກັບ ການມີສ່ວນຮ່ວມຂອງແມ່ຍິງທ້ອງຖິ່ນ ເພື່ອສະໜັບສະໜູນການຕິດຕາມຊຸມຊົນ. ຜູ້ທີ່ໄດ້ສຳພາດທັງຍິງ ແລະ ຊາຍ ແລະ ບັນດາຄູ່ຮ່ວມງານຂອງລັດຖະບານທ້ອງຖິ່ນ ລ້ວນແຕ່ເຫັນດີວ່າ ມາດຕະການດັ່ງກ່າວເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ, ແລະ ແມ່ຍິງທ້ອງຖິ່ນ ກໍ່ໄດ້ໃຫ້ການສະໜັບສະໜູນຢ່າງຫຼວງຫຼາຍ ຕໍ່ການກະທຳດັ່ງກ່າວ.

ນອກຈາກນັ້ນ, ການຄົ້ນຄວ້າ ທີ່ກຳນົດຂຶ້ນໂດຍໂຄງການ GCF ທີ່ໄດ້ວາງແຜນໄວ້ ເພື່ອກຳນົດ ແລະ ຊີ້ໃຫ້ເຫັນເຖິງໂອກາດໃດແດ່ ທີ່ຈະເສີມສ້າງບົດບາດຂອງແມ່ຍິງ ໃນຖານະຜູ້ຜະລິດ ແລະ ຜູ້ປຸງແຕ່ງໃນກະສິກຳ ແລະ ປ່າໄມ້, ລວມທັງການສະຫນັບສະຫນູນ ການບໍລິການທາງດ້ານການເງິນ, ການຄຸ້ມຄອງທາງດ້ານການເງິນ ແລະ ການບໍລິການພັດທະນາທຸລະກິດ. ຜົນໄດ້ຮັບຂອງການຄົ້ນຄວ້ານີ້ ຄວນເປັນພື້ນຖານຕໍ່ການວິເຄາະອື່ນໆກ່ຽວກັບຕ່ອງໂສ້ມູນຄ່າໃຫມ່ທີ່ມີທ່າແຮງທີ່ສົ່ງເສີມການກະສິກຳທີ່ບໍ່ມີການທຳລາຍປ່າໃນຕໍ່ໜ້າ. ລະບົບຕ່ອງໂສ້ມູນຄ່າທີ່ຈະໄດ້ຮັບການສົ່ງເສີມພາຍໃຕ້ໂຄງການຈະໄດ້ຮັບການປະເມີນກ່ຽວກັບການກະຈາຍວຽກງານລະຫວ່າງຜູ້ຊາຍ ແລະ ແມ່ຍິງ. ໃນຂະນະທີ່ຊາວກະສິກອນທີ່ເປັນເພດຍິງ ປະເຊີນກັບຂໍ້ຈຳກັດທີ່ສຳຄັນ, ໂຄງການຈະຮັບປະກັນວ່າແມ່ຍິງໄດ້ຮັບໂອກາດການຝຶກອົບຮົມທີ່ກ່ຽວຂ້ອງ (ເຊັ່ນ: ຄວາມອາດສາມາດທາງທຸລະກິດ, ຄວາມຮູ້ທາງດ້ານການເງິນ) ແລະກິດຈະກຳການສົ່ງເສີມກະສິກຳ ເຊັ່ນດຽວກັນກັບ ການເຂົ້າເຖິງຂໍ້ມູນກ່ຽວກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ ແລະ ການຜະລິດກະສິກຳແບບຍືນຍົງ.

[62] SEI, 2019. Why gender matters in climate adaptation. Available online : https://www.sei.org/perspectives/why-gender-matters-in-climate-adaptation/

[63] Lao Women's Union,2018. Lao PDR Gender Profile

ໂຄງການທີ 1 ໄດ້ລິເລີ່ມຫຼາຍຂະບວນການ ເພື່ອປັບປຸງການເຂົ້າເຖິງການເງິນ ຂອງແມ່ຍິງຊົນນະບົດ, ເພີ່ມທະວີການມີສ່ວນຮ່ວມຂອງແມ່ຍິງ ໃນການວາງແຜນນຳໃຊ້ທີ່ດິນ ແລະ ຂະບວນການຕັດສິນໃຈຂັ້ນບ້ານ. ແມ່ຍິງໄດ້ຮັບໂອກາດເຂົ້າຮ່ວມ ໃນທຸກກິດຈະກຳຂອງໂຄງການ 1. ບົດລາຍງານຄວາມຄືບໜ້າປະຈຳປີ [64]
ສະແດງໃຫ້ເຫັນວ່າ ການມີສ່ວນຮ່ວມຢ່າງເຂັ້ມແຂງ ຂອງແມ່ຍິງໃນກອງປະຊຸມຂັ້ນບ້ານຕ່າງໆ ແລະ ທຸກກິດຈະກຳທີ່ສຳຄັນຂອງໂຄງການ (ເຊັ່ນ: FPIC 54%, PLUP 46%[65], PSAP[66] 47%, VFAG[67] 47%).

ນອກຈາກນັ້ນ, ແມ່ຍິງທີ່ເປັນຫົວໜ້າຄອບຄົວ ແມ່ນໄດ້ຮັບບຸລິມະສິດໃນການຄັດເລືອກຜູ້ເຂົ້າຮ່ວມຂອງ PSAP. 7% ຂອງຄົວເຮືອນຜູ້ໄດ້ຮັບຜົນປະໂຫຍດຈາກ PSAP ແມ່ນນຳພາໂດຍແມ່ຍິງ, ເຊິ່ງ ເທົ່າກັບປະມານສອງເທົ່າຂອງອັດຕາສ່ວນຂອງແມ່ຍິງທີ່ເປັນຫົວຫນ້າຄອບຄົວ ຢູ່ໃນຊົນນະບົດຂອງລາວ. ນີ້ພິສູດວ່າ ການຈັດລຳດັບຄວາມສຳຄັນໄດ້ຖືກປະຕິບັດໃນການປະຕິບັດ. ໃນ 80% ຂອງແມ່ຍິງພາຍໃນບ້ານ ໄດ້ເປັນຕົວແທນ ໃນຄະນະກຳມະການ VFAG, ດ້ວຍເຫດນີ້ ຈຶ່ງບັນລຸຄວາມສາມາດໃນການຄຸ້ມຄອງທາງດ້ານການເງິນ ແລະ ສິ່ງເສີມການມີສ່ວນຮ່ວມຂອງແມ່ຍິງເຂົ້າໃນວຽກງານເສດຖະກິດ ທີ່ໂຄງການ 1ໄດ້ສົ່ງເສີມ.

ຂະບວນການເຫຼົ່ານີ້ໄດ້ຖືກວາງແຜນທີ່ ຈະສືບຕໍ່ຈັດຕັ້ງປະຕິບັດຢູ່ໃນສາມແຂວງຂອງໂຄງການ 1 ແລະ ຂະຫຍາຍໄປສູ່ສາມແຂວງໃຫມ່ທີ່ ຢູ່ພາຍໃຕ້ໂຄງການ 2. ການສຸມໃສ່ການເສີມສ້າງຄວາມທົນທານຕໍ່ດິນຟ້າອາກາດຈະເພີ່ມຄວາມຮັບຮູ້ເຖິງ ຄວາມສຳຄັນຂອງການອະນຸລັກປ່າໄມ້ ເພື່ອເສີມສ້າງຄວາມທົນທານຕໍ່ສະພາບອາກາດ, ແລະ ຈະລວມເອົາ ຂໍ້ມູນຂ່າວສານກ່ຽວກັບວິທີການຕ່າງໆໃນການສ້າງຜົນປະໂຫຍດທາງເພດ ທີ່ກ່ຽວຂ້ອງກັບວິທີການປັບຕົວຕາມລະບົບນິເວດ.

ນອກຈາກນັ້ນ, ໂຄງການ ທີ່ສຸມໃສ່ການປັບຕົວ ຈະຮັບປະກັນການເຊື່ອມໂຍງ ກັບວິທີການຍົກສູງຄວາມສຳຄັນຕໍ່ກັບບົດບາດຍິງຊາຍ, ຈຸດໃດທີ່ຈຳເປັນຕ້ອງໄດ້ປັບປຸງ, ຕ້ອງໄດ້ມີການພິຈາລະນາ ການຈັດບູລິມະສິດກ່ຽວກັບ ບົດບາດຍິງ-ຊາຍໃນທຸກໆກິດຈະກຳຂອງໂຄງການ, ໂດຍສະເພາະ ແມ່ນກິດຈະກຳການຈັດຕັ້ງປະຕິບັດ ເຊັ່ນ PLUP PSAP, VFAG, VMP. ແລະ ສັນຍາອະນຸລັກປ່າໄມ້ບ້ານ, ແລະ ອື່ນໆ. ການສະໜັບສະໜູນເພີ່ມເຕີມ ຈະຖືກສະໜອງໃຫ້ແກ່ ການສົ່ງເສີມກະສິກຳພາຍໃຕ້ໂຄງການ 2 ໃນໝາກຜົນ 2, ແລະ ແຜນການລົງທຶນຂອງ PSAP ຈະຕ້ອງພິຈາລະນາຄວາມຕ້ອງການທີ່ແຕກຕ່າງກັນ ແລະ ວິທີການທີ່ເລືອກ PSAP ສາມາດໃຫ້ຜົນປະໂຫຍດ ຫຼື ຜົນກະທົບທາງລົບຕໍ່ແມ່ຍິງ (ເຊັ່ນ: ການເພີ່ມພາລະເວລາເພີ່ມເຕີມ, ແລະອື່ນໆ) ເພື່ອກຳນົດທາງເລືອກ ຫຼື ມາດຕະການຫຼຸດຜ່ອນທີ່ເໝາະສົມ.

[64] GCF Programme Annual Progress Report, December 2021.

[65] Participatory Pland Use Planning

[66] Promotion of Sustainable and Deforestation-free Agricultural Practice and Value Chains

[67] Village Forest and Agriculture Grant

3.2. ໃນລະດັບພູມິພາກ: ບັນດານະໂຍບາຍ ແລະ ແຜນຍຸດທະສາດໃນຂະແໜງການ

ວິໄສທັດການພັດທະນາ 2030, ມາດຕະຖານ ແລະ ຕົວຊີ້ວັດຂອງ FAO

ວາລະ 2030 ສຳລັບການພັດທະນາແບບຍືນຍົງ, ລວມທັງສິບເຈັດເປົ້າໝາຍການພັດທະນາແບບຍືນຍົງ (SDGs), ເປັນຕົວແທນ ຂອງຂອບການລວມສຳລັບ ການພັດທະນາແບບຍືນຍົງໃນທົ່ວໂລກ ໃນຂະແໜງການຕ່າງໆ, ລວມທັງ ການປ້ອງກັນກ່ຽວກັບ ບົດບາດຍິງຊາຍ ແລະ ປ່າໄມ້. ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແມ່ນໄດ້ຖືກພິຈາລະນາ ເປັນ ເປົ້າໝາຍການພັດທະນາແບບຍືນຍົງໜຶ່ງ SDG 5, ແລະ ພ້ອມທັງ ຖືກເຊື່ອມໂຍງເຂົ້າໃນ SDGs ອື່ນໆອີກ. ກ່ຽວກັບການຄຸ້ມຄອງ ແລະ ການປົກປັກຮັກສາປ່າໄມ້, ສາມ SDGs ທີ່ກ່ຽວຂ້ອງ ແລະ ຊີ້ນຳໂຄງການທີ່ໄດ້ວາງ ແຜນໄວ້ ເຊິ່ງມີດັ່ງນີ້:

- ການຜະລິດ ແລະ ການບໍລິໂພກແບບຍືນຍົງ (SDG 12): ການພັດທະນາການຜະລິດ ແລະ ການຊົມໃຊ້ທີ່ຄຳນຶງ ເຖິງ ຄວາມຈຳກັດຂອງຊັບພະຍາກອນທຳມະຊາດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາກອນທ້ອງຖິ່ນ ລວມທັງ ແມ່ຍິງ ເພື່ອຮັກສາສິດເປັນເຈົ້າຂອງທີ່ດິນ ແລະ ວິທີການຜະລິດ.
- ການປະຕິບັດມາດຕາການດ້ານສະພາບອາກາດ (SDG 13): ແມ່ຍິງ, ຊົນເຜົ່າພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ແລະ ກຸ່ມອື່ນໆ ມີສິດເປັນຕົວແທນໃນກອງປະຊຸມສຸດຍອດ ກ່ຽວສະພາບອາກາດ ເນື່ອງຈາກການປ່ຽນແປງຂອງດິນ ຟ້າອາກາດສົ່ງຜົນກະທົບຕໍ່ເຂົາເຈົ້າໃນລັກສະນະຕ່າງໆ ແລະ ເຂົາເຈົ້າເປັນຜູ້ທີ່ມີຄວາມຮູ້ ແລະ ປະສົບການທີ່ສາມາດ ຊ່ວຍຊອກຫາ ວິທີການປັບຕົວ ແລະ ການແກ້ໄຂການປ່ຽນແປງຂອງດິນຟ້າອາກາດໄດ້.
- ການອະນຸລັກປ່າໄມ້ ແລະ ຊີວະນາໆພັນ (SDG 15): ຈຳກັດການຫັນເປັນການຜະລິດກະສິກຳ ແລະ ປ່າໄມ້ ແບບອຸດສະຫາກຳ ເພື່ອປົກປັກຮັກສາປ່າໄມ້, ຊີວະນາໆພັນ ແລະ ຮັກສາວິທີການດຳລົງຊີວິດຂອງຊຸມຊົນທ້ອງຖິ່ນ [68].

ແຜນງານສົ່ງເສີມບົດບາດແມ່ຍິງ 2030 ແມ່ນການສົມທົບຂອງອົງການຈັດຕັ້ງເຄືອຂ່າຍບົດບາດຍິງ-ຊາຍ ຊຶ່ງສະໜັ ບສະໜູນ ການຈັດຕັ້ງປະຕິບັດວິໄສທັດການພັດທະນາ 2030. ແຜນງານດັ່ງກ່າວ ໄດ້ຖືກຈັດຕັ້ງປະຕິບັດຢູ່ໃນ 50 ປະເທດທົ່ວໂລກ, ລວມທັງ ສປປ ລາວ, ເພື່ອແນໃສ່ ບັນລຸ SDGs ທີ່ມີຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ທົນທານຕໍ່ການປ່ຽນແປງສະພາບອາກາດ. ແຜນງານ ໄດ້ສະໜັບສະໜູນການສ້າງຄວາມອາດສາມາດ ຂອງອົງ ການຈັດຕັ້ງທາງສັງຄົມຂອງແມ່ຍິງ ແລະ ເຮັດໃຫ້ເຂົາເຈົ້າມີສ່ວນຮ່ວມໃນການສົນທະນາ ແລະ ການກຳນົດ ນະ�โยບາຍທີ່ກ່ຽວຂ້ອງ, ລວມທັງ ການມີສ່ວນຮ່ວມຂອງພົນລະເມືອງ. [69]

ໃນບັນດາອົງການສະຫະປະຊາຊາດ, ອົງການອາຫານ ແລະ ກະສິກຳ (FAO) ເປັນຜູ້ລິເລີ່ມ ການຈັດຕັ້ງປະຕິບັດວິທີ ການເຊື່ອມສານ ກ່ຽວກັບບົດບາດຍິງຊາຍ ເຂົ້າໃນວຽກງານປ່າໄມ້. ມາດຕະຖານ ແລະ ຕົວຊີ້ວັດຂອງ FAO ສຳລັບ ການຄຸ້ມຄອງປ່າໄມ້ແບບຍືນຍົງ (SFM) ໄດ້ຖືກປັບປຸງເມື່ອບໍ່ດົນມານີ້ ເຊິ່ງປະກອບມີ ເຄື່ອງມືໜຶ່ງ ທີ່ຄຳນຶງເຖິງ ບົດບາດຍິງ-ຊາຍ ທີ່ສະໜອງກອບທົ່ວໄປສຳລັບການເຊື່ອມສານ ຫົວຂໍ້ບົດບາດຍິງຊາຍ ສຳລັບຂະແໜງການ

[68] Women2030 Project: About the Sustainable Development Goals

[69] Women2030 Project: About Women2030

ພັດທະນາປ່າໄມ້ [70]. ອີງການ FAO ໄດ້ເຫັນວ່າ ເຖິງແມ່ນວ່າ ແມ່ຍິງມີບົດບາດສຳຄັນຫຼາຍ ໃນວຽກງານທີ່ກ່ຽວຂ້ອງກັບປ່າໄມ້ ແລະ ການສ້າງລາຍຮັບຈາກຊັບພະຍາກອນປ່າໄມ້, ແຕ່ການໃຫ້ຄວາມສຳຄັນຂອງແມ່ຍິງ ໃນການວາງແຜນ ແລະ ກຳນົດແຜນງານທີ່ກ່ຽວຂ້ອງກັບປ່າໄມ້ຍັງບໍ່ໄດ້ຖືກເອົາໃຈໃສ່ເທົ່າທີ່ຄວນ [71] .

ກອບສາກົນທີ່ສຳຄັນອີກອັນໜຶ່ງ ແມ່ນ ສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍທາງດ້ານຊີວະວິທະຍາ (CBD) ເຊິ່ງ ສປປ ລາວໄດ້ໃຫ້ສັດຕະຍາບັນໃນປີ 1996. ແຜນປະຕິບັດງານບົດບາດຍິງຊາຍ (ປະຈຸບັນຮອດປີ 2020) ແມ່ນ ສອດຄ່ອງກັບ ແຜນຍຸດທະສາດດ້ານຊີວະນາໆພັນ ແລະ ສະໜອງເຄື່ອງມື ແລະ ຂັ້ນຕອນການປະຕິບັດຕົວຈິງເພື່ອ ເຊື່ອມໂຍງບົດບາດຍິງ-ຊາຍ. ໃນນະໂຍບາຍແຫ່ງຊາດ ທີ່ກ່ຽວຂ້ອງ ແລະ ຄວາມພະຍາຍາມໃນການປະຕິບັດ. ບັນດາ ປະເທດພາຄີ ຂອງສົນທິສັນຍາໄດ້ຖືກຮ້ອງຂໍໃຫ້ລາຍງານ ກ່ຽວກັບການກະທຳທີ່ດຳເນີນການເພື່ອປະຕິບັດແຜນການ ປະຕິບັດບົດບາດຍິງຊາຍພາຍໃຕ້ CBD[72] .

ສີ່ຈຸດປະສົງຍຸດທະສາດ ຂອງແຜນການປະຕິບັດບົດບາດຍິງຊາຍ CBD ແມ່ນ:

1. ການເຊື່ອມສານທັດສະນະກ່ຽວກັບບົດບາດຍິງ-ຊາຍ
2. ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ
3. ສະແດງໃຫ້ເຫັນຜົນປະໂຫຍດ ຂອງການເຊື່ອມສານກ່ຽວກັບ ບົດບາດຍິງ-ຊາຍ
4. ຍົກສູງປະສິດທິຜົນຂອງ ຄວາມພະຍາຍາມຈັດຕັ້ງປະຕິບັດ

ບັນດາກິດຈະກຳ ໂດຍອີງໃສ່ຈຸດປະສົງເຫຼົ່ານີ້ ໄດ້ຮັບການຈັດຕັ້ງປະຕິບັດ ພາຍໃຕ້ກອບຂອງ ສີ່ດ້ານ: ນະໂຍບາຍ, ປັບປຸງອົງການຈັດຕັ້ງ, ການເຜີຍແຜ່ ແລະ ການສ້າງນິຕິກຳ. ແຜນການດັ່ງກ່າວ ໄດ້ສະໜອງການກະທຳທີ່ແທດຈິງ ເພື່ອເຊື່ອມໂຍງດ້ານເພດເຂົ້າໃນທຸກຂົງເຂດທີ່ກ່ຽວຂ້ອງເຖິງການປະຕິບັດສົນທິສັນຍາຢ່າງສຳເລັດຜົນ.

ສົນທິສັນຍາໃນລະດັບພາກພື້ນ ກ່ຽວກັບປ່າໄມ້ໃນພາກພື້ນອາຊຽນ

ສົນທິສັນຍາໜຶ່ງດຽວ ໃນຂະແໜງການປ່າໄມ້ ແລະ ຊີວະນາໆພັນ ໃນລະດັບພາກພື້ນ ແມ່ນບົດບັນທຶກຄວາມເຂົ້າໃຈ (MoU) ກ່ຽວກັບການຮ່ວມມືອາຊຽນ ໃນໂຄງການສົ່ງເສີມກະສິກຳ ແລະ ຜະລິດຕະພັນປ່າໄມ້. ບົດບັນທຶກຄວາມ ເຂົ້າໃຈດັ່ງກ່າວ ໄດ້ຖືກຕໍ່ອາຍຸ 3 ຄັ້ງ ນັບຕັ້ງແຕ່ປີ 1994, ເຊິ່ງປະຈຸບັນໄດ້ມີຜົນບັງຄັບໃຊ້ຕັ້ງແຕ່ປີ 2014. ໃນຖານະ ເປັນ ບົດບັນທຶກຄວາມເຂົ້າໃຈ, ຈຶ່ງບໍ່ມີການລົງນາມເພີ່ມຕື່ມ ຫຼື ສ້າງເອກະສານກ່ຽວກັບຂະບວນການເຊື່ອມສານອັນ ລະອຽດ, ແລະ ມັນສຸມໃສ່ການສົ່ງເສີມທາງດ້ານເສດຖະກິດຫຼາຍກວ່າ ການສົ່ງເສີມຊັບພະຍາກອນ. ບໍ່ມີເອກະສານ ໃດໆທີ່ກ່ຽວຂ້ອງ ພິຈາລະນາດ້ານບົດບາດຍິງຊາຍຂອງລະບົບການແກ້ໄຂ ແລະ ຕ່ອງโส້ການຜະລິດ[73].

---

[70] FAO 2018

[71] FAO 16/07/2018: Sustainable Forest Management Toolbox increases gender considerations in its modules.

[7272] Convention on Biological Diversity: 2015-2020 Gender Plan of Action

[73] Memorandum of Understanding on ASEAN Cooperation in Agriculture and Forest Products Promotion Scheme 2014

ປີ 2007 ເປັນຈຸດໝາຍທາງດ້ານການເມືອງໜຶ່ງທີ່ສຳຄັນ ໃນການຮ່ວມມືຂອງອາຊຽນ ກ່ຽວກັບການປົກປັກຮັກສາ ປ່າໄມ້ ແລະ ການບັງຄັບໃຊ້ກົດໝາຍປ່າໄມ້ທີ່ກ່ຽວຂ້ອງ ແລະ ການປັບປຸງການຄຸ້ມຄອງປ່າໄມ້. ຖະແຫຼງການອາຊຽນ ວ່າດ້ວຍການເພີ່ມທະວີການບັງຄັບໃຊ້ກົດໝາຍປ່າໄມ້ ແລະ ການປົກຄອງ (FLEG) ໄດ້ຖືກປະກາດໃນປີ 2007 ແລະ ໄດ້ເປີດຊ່ອງທາງ ໃນການປະຕິບັດ ການແກ້ໄຂບັນຫາການລັກລອບຕັດໄມ້ ແລະ ບັນຫາການຄ້າທີ່ກ່ຽວພັນກັນ ເປັນຄວາມພະຍາຍາມຮ່ວມກັນ ກັບບັນດາຄູ່ຮ່ວມໃນພາກພື້ນ ແລະ ພາກສ່ວນກ່ຽວຂ້ອງສາກົນ. ແຜນວຽກຂອງ FLEG 2016-2025 ບໍ່ໄດ້ໃຫ້ຄຳແນະນຳສະເພາະ ດ້ານເຜດຂອງການຄ້າສັດປ່າຂ້າມແດນ ຫຼື ການລັກລອບຕັດໄມ້ ຜິດກົດໝາຍ, ແຕ່ຮັບຮູ້ດ້ານສັງຄົມ ແລະ ວັດທະນະທຳໂດຍທົ່ວໄປ, ແລະ ຄວາມທຸກຍາກເປັນຕົວຂັບເຄື່ອນການ ປະຕິບັດທີ່ຜິດກົດໝາຍທີ່ກ່ຽວຂ້ອງ.
ການພິຈາລະນາບົດບາດຍິງຊາຍ ແມ່ນໄດ້ຂາດຫາຍໄປໃນການປະຕິບັດທີ່ຖືກກຳນົດ ສຳລັບການປັບປຸງການເຂົ້າເຖິງ ຕະຫຼາດ, ການສ້າງຄວາມອາດສາມາດ ໃຫ້ແກ່ອຳນາດການປົກຄອງທີ່ກ່ຽວຂ້ອງກັບການບັງຄັບໃຊ້ກົດຫມາຍ ແລະ ຜູ້ມີສ່ວນຮ່ວມໃນຊຸມຊົນ, ກົດຈະກຳການປູກຈິດສຳນຶກ ແລະ ການຝຶກອົບຮົມການຄຸ້ມຄອງປ່າໄມ້ສຳລັບ ນັກທຸລະກິດ, ອົງການຈັດຕັ້ງທາງສັງຄົມ ແລະ ຊຸມຊົນທ້ອງຖິ່ນ[74].

ປ່າໄມ້, ກະສິກຳ ແລະ ຊີວະນາໆພັນຢູ່ໃນ ສປປ ລາວ

ແຜນຍຸດທະສາດ ແລະ ແຜນປະຕິບັດງານ ດ້ານຊີວະນາໆພັນແຫ່ງຊາດລາວ 2016-2025 ໃນປັດຈຸບັນ ກ່າວເຖິງ ສະຫະພັນແມ່ຍິງລາວ ວ່າເປັນພາກສ່ວນກ່ຽວຂ້ອງ ຂອງພາກປະຊາສັງຄົມ ທີ່ມີທ່າແຮງທີ່ຈະເຂົ້າເຖິງກຸ່ມເປົ້າໝາຍ ເພດຍິງ, ແຕ່ບໍ່ໄດ້ເອົາບັນຫາ ບົດບາດຍິງຊາຍມາພິຈາລະນາ. ເຖິງຢ່າງໃດກໍຕາມ, ໃນຂໍ້ສະເໜີໃນທິດທາງໃນຕໍ່ໜ້າ ຂອງຍຸດທະສາດໃນປະຈຸບັນ, ໄດ້ລະບຸໄວ້ໃນ ແຜນຍຸດທະສາດແຫ່ງຊາດໃນອະນາຄົດ ຄວນມີການພິຈາລະນາແມ່ຍິງ , ຊາວໜຸ່ມ ແລະ ກຸ່ມຊົນເຜົ່າ ທີ່ບໍ່ຂຶ້ນກັບ ລະບົບຂອງລັດຖະບານ ນຳຕື່ມ. ນອກຈາກນັ້ນ, ຍຸດທະສາດດັ່ງກ່າວ ຍັງ ສະເໜີ ເພື່ອໃຫ້ພິຈາລະນາສະໜັບສະໜູນ ບັນດາຜູ້ນຳ ໄວໜຸ່ມ ທີ່ເປັນເພດຍິງ ໃຫ້ເປັນຊ່ຽວຊານສະເພາະດ້ານ ແລະ ເປັນຄູຝຶກ ເພື່ອໃຫ້ຂົວເຈົ້າເປັນຜູ້ຮັກສາຄວາມຮູ້ພື້ນເມືອງ[75].

ກ່ຽວກັບບົດບັນທຶກຄວາມເຂົ້າໃຈ (MoU) ກ່ຽວກັບການຮ່ວມມືອາຊຽນ ໃນໂຄງການສົ່ງເສີມກະສິກຳ ແລະ ປ່າໄມ້, ສປປ ລາວ ໄດ້ມອບໝາຍ ໃຫ້ຫົວໜ້າພະແນກແຜນການ ພາຍໃຕ້ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ ປະສານງານລະດັບຊາດ ແລະ ເປັນຈຸດປະສານງານ ຂອງບັນດາປະເທດສະມາຊິກອາຊຽນ. ການປະສານງານ ໂດຍລວມ ຂອງບັນດາສະມາຊິກອາຊຽນ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ສະບັບນີ້ ແມ່ນໄດ້ຮັບການອຳນວຍ ຄວາມສະດວກ ໂດຍຜ່ານສະພາອຸດສາຫະກຳຜະລິດຕະພັນປ່າໄມ້ຂອງອາຊຽນ ເຊິ່ງນຳພາໂດຍ ຄະນະກຳມະການ ອຸດສາຫະກຳໄມ້ຂອງມາເລເຊຍ ແລະ ພາກເອກະຊົນ. ເນື່ອງຈາກຄວາມຫຼາກຫຼາຍ ຂອງພາກສ່ວນກ່ຽວຂ້ອງທີ່ມີ ສ່ວນຮ່ວມໃນໂຄງການສົ່ງເສີມທີ່ກ່ຽວຂ້ອງ, ການພິຈາລະນາບົດບາດຍິງຊາຍ ຈະມີທ່າແຮງທີ່ກວ້າງຂວາງ ທີ່ຈະໄດ້ ຮັບການປະຕິບັດ, ແຕ່ບໍ່ໄດ້ເປັນສ່ວນຫນຶ່ງຂອງຫຼັກການແນະນຳ ຂອງສະພາດັ່ງກ່າວ ຫຼື ຂໍ້ຕົກລົງນັ້ນ.
ເຖິງຢ່າງໃດກໍຕາມ, ມີທ່າອ່ຽງສູງ ທີ່ ຈຸດໃຈກາງປະສານງານຂອງ ກະຊວງກະສິກຳ ແລະ ປ່າໄມ້ ທີ່ຈະບໍ່ໄດ້ ພິຈາລະນາກ່ຽວກັບບົດບາດຍິງ-ຊາຍ ເຂົ້າໃນການຮ່ວມມືດັ່ງກ່າວ. ນອກຈາກນີ້ ພາຍໃນກະຊວງກະສິກຳ ແລະ

[74] Compare Work Plan for Forest Law Enforcement and Governance (FLEG) in ASEAN, 2016-2025

[75] National Biodiversity Strategy and Action Plan 2016-2025

ປ່າໄມ້ ຍັງມີຈຸດໃຈກາງສະເພາະກ່ຽວກັບເລື່ອງບົດບາດຍິງ-ຊາຍ, ແຕ່ວ່າປົກກະຕິແລ້ວ ແມ່ນ ໄດ້ຖືກນຳມາພິຈະລະນາ ກໍຕໍ່ເມື່ອໂຄງການ/ຄູ່ຮ່ວມງານ ກຳນົດຄວາມຕ້ອງການສະເພາະ ຕໍ່ການສົ່ງເສີມບົດບາດຍິງຊາຍ.

ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA) ຂອງ ສປປ ລາວ FLEGT ຍັງຢູ່ໃນຂັ້ນຕອນການເຈລະຈາ, ເຊິ່ງຕາມແຜນຈະໄດ້ສິ້ນສຸດໃນເດືອນມີນາ 2021 ແຕ່ຍ້ອນພະຍາດໂຄວິດ[76] ກຳນົດດັ່ງກ່າວໄດ້ຖືກເລື່ອນອອກໄປ. ເຖິງວ່າຈະມີຄວາມກ່ຽວຂ້ອງ ກັບຫົວຂໍ້ດ້ານບົດບາດຍິງ-ຊາຍ ແລະ ຊົນເຜົ່າ ໃນຂົງເຂດການຜະລິດ ແລະ ປ່າໄມ້ບ້ານ, ແລະ ຄວາມໝາຍຄວາມສຳຄັນຕໍ່ກັບ VPA ກ່ຽວກັບໂຄງສ້າງການປົກຄອງປ່າໄມ້, ການເຈລະຈາ FLEG VPA ກໍຍັງຂາດທັດສະນະກ່ຽວກັບບົດບາດຍິງຊາຍ[77]. ໃນການວິເຄາະບົດບາດຍິງ-ຊາຍ ໃນປີ 2018, ໂຄງການ GIZ-FLEGT ໃນລາວ ຊີ້ໃຫ້ເຫັນວ່າ ກອງປະຊຸມ FLEGT-VPA ສ່ວນຫຼາຍ ແມ່ນນຳພາໂດຍຜູ້ອາວຸໂສທີ່ເປັນເພດຊາຍ. ຖ້າບັນຫາສັງຄົມຖືກຍົກຂຶ້ນມາ, ສ່ວນຫຼາຍແມ່ນຖືກລິເລີ່ມໂດຍຕົວແທນຈາກ ພາກປະຊາສັງຄົມ CSOs, ແລະ ເນັ້ນໃສ່ ການແບ່ງປັນຜົນປະໂຫຍດຂອງແຕ່ລະພາກສ່ວນຫຼາຍກວ່າ[78]. ຄວາມບໍ່ສົມດຸນລະຫວ່າງຍິງ-ຊາຍ ໃນລະດັບການຕັດສິນໃຈກຳນົດນະໂຍບາຍ, ບວກກັບ ຄວາມຮູ້ທົ່ວໄປກ່ຽວກັບບົດບາດຍິງ-ຊາຍ ທີ່ຍັງຕ່ຳ, ເປັນອຸປະສັກອັນສຳຄັນ ຕໍ່ການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນຂະແໜງການປ່າໄມ້ຂອງລາວ ໃຫ້ສຳເລັດ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 (NSEDP), ເປັນເອກະສານທີ່ຊີ້ນຳ ຍຸດທະສາດຂອງລາວ, ເຊິ່ງໄດ້ ກ່າວເຖິງການປົກປ້ອງສິ່ງແວດລ້ອມ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດ ພາຍໃຕ້ຜົນໄດ້ຮັບທີ 4, ແຕ່ເນື້ອໃນຂອງມັນບໍ່ໄດ້ມີການກ່າວເຖິງ ຄວາມແຕກຕ່າງທາງດ້ານເພດໂດຍສະເພາະ. ກ່ຽວກັບຫົວຂໍ້ທີ່ກ່ຽວພັນກັນ ກັບພັດທະນາແມ່ຍິງ ໄດ້ສະເໜີ ຫຼາຍເປົ້າຫມາຍທີ່ສົ່ງຜົນໂດຍກົງ ຫຼື ທາງອ້ອມ ຕໍ່ຂະແໜນງການປ່າໄມ້ ແລະ ດັ່ງນັ້ນ ຈຶ່ງສາມາດນຳໃຊ້ ສຳລັບການຕັດສິນໃຈ ກ່ຽວກັບຍຸດທະສາດ/ການສື່ສານຂອງການຕັດສິນໃຈດັ່ງກ່າວ ຕໍ່ກັບ ຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານຂອງໂຄງການ GCF, ເປັນຕົ້ນແມ່ນ: “ຂະຫຍາຍການມີສ່ວນຮ່ວມຂອງສະມາຊິກສະຫະພັນແມ່ຍິງລາວ ໃຫ້ກວມເອົາ ທຸກຂົງເຂດວຽກງານ, ແລະ ເສີມຂະຫຍາຍຄວາມສາມາດຂອງພະນັກງານນຳພາ-ຄຸ້ມຄອງ ແລະ ພະນັກງານສືບທອດ; “ຊຸກຍູ້ໃຫ້ແມ່ຍິງ ແລະ ເດັກນ້ອຍ ໄດ້ຮັບການຝຶກອົບຮົມວິຊາຊີບ ແລະ ວິຊາຊີບ ເຊັ່ນ: ຜະລິດກະສິກຳ, ປູກຝັງ, ລ້ຽງສັດ, ຫັດຖະກຳ, ການບໍລິການດ້ານການເງິນ, ການຄຸ້ມຄອງທຸລະກິດ, ການທະນາຄານ, ພາສີ, ກົດໝາຍ ແລະ ລະບຽບການທຸລະກິດ ພ້ອມທັງຄົ້ນຄວ້າ ແລະ ກຳນົດທິດທາງດ້ານການເມືອງ. ການເຂົ້າເຖິງການເງິນ ແລະ ການປະກອບການຂອງແມ່ຍິງ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມ; ແລະ ເປົ້າໝາຍ “ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໃຫ້ຂຶ້ນ ເປັນຜູ້ນຳ ແລະ ບໍລິຫານຂັ້ນຕ່າງໆໃຫ້ບັນລຸ ສະເລ່ຍ 20%”[79].

NDC ສະບັບປັບປຸງຂອງ ສປປ ລາວ (2021) ໃຫ້ຄວາມສຳຄັນ ຕໍ່ກັບຂະແໜງປ່າໄມ້, ທັງການຫຼຸດຜ່ອນ ແລະ ການປັບຕົວ. ມັນໄດ້ລະບຸ ວິທີການແກ້ໄຂທີ່ອີງໃສ່ທຳມະຊາດ ຈະໄດ້ຮັບການພິຈາລະນາ ເປັນບູລິມະສິດເພື່ອຕ້ານໄພພິ

[76] https://flegtlaos.com/flegt/flegt-vpa/

[77] Compare: FLEGT VPA process in Lao PDR 2018

[78] GIZ/Bode 2018

[79] Lao PDR´s 9th National Socio-Economic Development Plan 2021 - 2025

ບັດທີ່ເກີດຈາກດິນຟ້າອາກາດເຊັ່ນ: ໄພນ້ຳຖ້ວມ, ດິນເຈື່ອນ ແລະ ໄພແຫ້ງແລ້ງ. ມັນຊີ້ໃຫ້ເຫັນຕື່ມອີກວ່າ "ຜົນປະ�โຫຍດຮ່ວມກັນ ໃນການຫຼຸດຜ່ອນ ຈະໄດ້ຮັບການພິຈາລະນາຢ່າງຕັ້ງໜ້າ ໃນຍຸດທະສາດການປັບຕົວຂອງຂະແໜງການ ແລະ ແຜນການປັບຕົວ", ສະແດງໃຫ້ເຫັນທ່າແຮງ ທີ່ຈະເສີມຂະຫຍາຍການສິ່ງເສີມມາດຕະການຂ້າມຜ່ານ. ເອກະສານກົດໝາຍຕົ້ນຕໍ ໃນຂະແໜງປ່າໄມ້ແມ່ນກົດໝາຍວ່າດ້ວຍປ່າໄມ້ປີ 2021. ມັນບໍ່ໄດ້ກ່າວເຖິງ ເພດ ຫຼື ແມ່ຍິງ ໃນແຕ່ລະມາດຕາ. ຜູ້ຮ່ວມສຳພາດລັດຖະບານຂັ້ນແຂວງ ແລະ ເມືອງ ລ້ວນແຕ່ໃຫ້ທັດສະນະວ່າ: ກົດໝາຍວ່າດ້ວຍປ່າໄມ້ເອງ ບໍ່ຈຳເປັນຕ້ອງກ່າວເຖິງຂະໜາດເພດຢ່າງຊັດເຈນ, ນັບແຕ່ກົດໝາຍອື່ນໆທີ່ກ່ຽວຂ້ອງຄື: ລັດຖະທຳມະນູນ, ກົດໝາຍວ່າດ້ວຍແຮງງານ, ກົດໝາຍຄອບຄົວ, ກົດໝາຍວ່າດ້ວຍສະຫະພັນແມ່ຍິງ ແລະ ກົດໝາຍວ່າດ້ວຍການພັດທະນາ ແລະ ການປົກປ້ອງແມ່ຍິງ – ໄດ້ສ້າງພື້ນຖານທາງດ້ານກົດໝາຍ ໃຫ້ແກ່ຄວາມສະເໝີພາບລະຫວ່າງຍິງ-ຊາຍໃນທົ່ວທຸກຂະແໜງການ.

(ຮ່າງ) ຍຸດທະສາດການປ່ຽນແປງດິນຟ້າອາກາດ (2021) ສະໜອງຍຸດທະສາດຮອບດ້ານ ສຳລັບການປັບຕົວ ແລະ ຫຼຸດຜ່ອນການປ່ຽນແປງສະພາບດິນຟ້າອາກາດໃນ ສປປ ລາວ, ແລະ ເນັ້ນໜັກຢ່າງໜັກແໜ້ນ ບົດບາດຂອງການແກ້ໄຂທຳມະຊາດ. ຕົວຢ່າງ, ມັນລະບຸຢ່າງຊັດເຈນ ເຖິງຄວາມຈຳເປັນໃນ "ການເພີ່ມປະສິດທິພາບ ການປັບຕົວໂດຍອີງໃສ່ລະບົບນິເວດເຊັ່ນ: ການປົກຫຸ້ມຂອງພືດ, ການປົກປ້ອງດິນທາມ, ປ່າໄມ້ ແລະ ພູມີທັດເພື່ອເປັນບ່ອນຮອງຮັບ, ການຮັກສາ ແລະ ຈັດການນ້ຳໃນເວລາເກີດໄພນ້ຳຖ້ວມ" ເພື່ອສ້າງຄວາມເຂັ້ມແຂງ ຄວາມທົນທານຕໍ່ກັບຄວາມສ່ຽງຕໍ່ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມທີ່ເພີ່ມຂຶ້ນ[80]. ດຳລັດວ່າດ້ວຍການປ່ຽນແປງດິນຟ້າອາກາດ (2019) ເນັ້ນໃສ່ດ້ານເຕັກນິກຂອງການປ້ອງກັນຄວາມສ່ຽງຕ່າງໆ ເຊັ່ນ: ໄພທຳມະຊາດ ແລະ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດຕໍ່ກຸ່ມທີ່ມີຄວາມສ່ຽງ. ນີ້ສະໜອນອງ ທາງອອກ ສຳລັບການແກ້ໄຂບັນຫາຄວາມແຕກຕ່າງທາງດ້ານສັງຄົມ ທີ່ເກີດຈາກການປ່ຽນແປງດິນຟ້າອາກາດ, ເຊັ່ນ: ຄວາມສ່ຽງ ແລະ ຄວາມສາມາດໃນການປັບຕົວຂອງ ຜູ້ຊາຍ ແລະ ແມ່ຍິງ. ມັນຍັງສົ່ງເສີມ ຮູບແບບຕົວຢ່າງ ກ່ຽວກັບການມີສ່ວນຮ່ວມ ຂອງການປະຕິບັດການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ລວມທັງການມີສ່ວນຮ່ວມຂອງອົງການຈັດຕັ້ງແມ່ຍິງ ໃນການປະເມີນຄວາມສ່ຽງ ແລະ ການວາງແຜນການປັບຕົວ ແລະ ການຈັດຕັ້ງປະຕິບັດ. ໂດຍສະເພາະ ເຂດພາກເໜືອຂອງ ສປປ ລາວ ຄວາມສ່ຽງຕໍ່ການປ່ຽນແປງຂອງດິນຟ້າອາກາດ ແມ່ນມີສູງ ເນື່ອງຈາກ ສະພາບພູມສັນຖານຂອງເຂດດັ່ງກ່າວ, ຄວາມອາດສາມາດໃນການປັບຕົວຍັງຕ່ຳ ແລະ ມີຄວາມອ່ອນໄຫວສູງ. ພາກພື້ນນີ້ ເປັນເຂດທີ່ທຸກຍາກທີ່ສຸດ ໃນປະເທດ, ປະຊາຊົນໃນເຂດນີ້ ສ່ວນຫຼາຍແມ່ນ ອາໄສການປູກຝັງ-ລ້ຽງສັດ ໃນເຂດເນີນສູງ ເພື່ອ ດຳລົງຊີວິດການເປັນຢູ່.

ແຜນງານການປັບຕົວແຫ່ງຊາດຂອງ ສປປ ລາວ (NAPA) [81] ບໍ່ໄດ້ກ່າວເຖິງສິ່ງທ້າທາຍດ້ານບົດບາດຍິງຊາຍ ຫຼື ໂອກາດຕ່າງໆ ທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ. ໃນປີ 2009, NAPA ໄດ້ຖືກເຜີຍແຜ່ ແລະ ກຳນົດ 45 ໂຄງການບູລິມະສິດກ່ຽວກັບການປັບຕົວ ໃນຂົງເຂດຊັບພະຍາກອນນ້ຳ, ປ່າໄມ້, ກະສິກຳ ແລະ ສາທາລະນະສຸກ, ແຕ່ບໍ່ໄດ້ລວມເອົາການວິເຄາະ, ຍຸດທະສາດ ຫຼື ກິດຈະກຳໃດໆ ໃນການແກ້ໄຂບັນຫາບົດບາດຍິງ-ຊາຍ. ສປປ ລາວ

[80] Government of Lao PDR [2020]. Draft Climate Change Strategy. p.30.

[81] National Adaptation Programme of Action to Climate Change (2009). Available online: https://www.adaptation-undp.org/sites/default/files/downloads/laos_pdr_napa.pdf

ກຳລັງຢູ່ໃນຂັ້ນຕອນຂອງການສ້າງແຜນປັບຕົວກ່ຽວກັບການປ່ຽນແປງສະພາບແຫ່ງຊາດ, ເຖິງແມ່ນວ່າ ນັ້ນຍັງບໍ່ທັນເປັນທີ່ຈະແຈ້ງເທື່ອວ່າ ແຜນການດັ່ງກ່າວ ຈະສຳເລັດ ແລະ ອະນຸມັດເມື່ອໃດ.

ຍຸດທະສາດ ເຣດ+ ແຫ່ງຊາດ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ໄດ້ຊີ້ນຳ ການຈັດຕັ້ງປະຕິບັດ ເຣດ+ ຢູ່ ສປປ ລາວ, ແລະ ພ້ອມກັນດຽວກັນນັ້ນ ໄດ້ແນໃສ່ ປັບປຸງຄຸນນະພາບ ແລະ ຂອບເຂດຂອງປ່າໄມ້ ໃນທົ່ວປະເທດ ເພື່ອສະໜອງຜົນປະ�โยດທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໃຫ້ແກ່ແມ່ຍິງ ແລະ ຜູ້ຊາຍ. ທັງນີ້, ຍັງ ສອດຄ່ອງກັບຍຸດທະສາດປ່າໄມ້ຂອງປະເທດປີ 2035, ເຊິ່ງລວມມີ 3 ເນື້ອໃນຫຼັກຄື: i) ຮັບປະກັນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ແບບຍືນຍົງ ii) ການອະນຸລັກຊັບພະຍາກອນປ່າໄມ້ ເພື່ອປົກປັກຮັກສາປ່າໄມ້, ປ່າດົງ, ພືດ ແລະ ສັດ, ສັດນ້ຳ ແລະ ສັດປ່າ; ລວມທັງການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ, ສະໜັບສະໜູນການຟື້ນ ຟູປ່າ, ແລະ ຫຼຸດຜ່ອນການທຳລາຍປ່າ ແລະ ການທຳລາຍປ່າ, ແລະ iii) ພັດທະນາອຸດສາຫະກຳປ່າໄມ້ ແລະ ໄມ້ໃຫ້ ຍືນຍົງ. ໃນປີ 2017, ແຜນປະຕິບັດງານ ເຣດ+ ຂັ້ນແຂວງ ໄດ້ຖືກສ້າງຂຶ້ນ ສຳລັບ 6 ແຂວງ ແຜນງານ. ການປຶກສາ ຫາລືລະຫວ່າງການພັດທະນາຂອງ PRAP ໄດ້ລວມເອົາສະຫະພັນແມ່ຍິງລາວ ເພື່ອຮັບປະກັນການພິຈາລະນາດ້ານ ບົດບາດຍິງຊາຍ. ກິດຈະກຳທີ່ສະເໜີຂອງ PRAPs ລວມມີ ການປັບປຸງການເຂົ້າເຖິງການບໍລິການສົ່ງເສີມຂອງ ແມ່ຍິງ ແລະ ໄວໜຸ່ມ ແລະ ລະບົບການຕິດຕາມທີ່ໃຫ້ຄວາມສຳຄັນທາງດ້ານເພດ ເພື່ອຮັບປະກັນການມີສ່ວນຮ່ວມ ຢ່າງຍືນຍົງຂອງທັງຍິງ ແລະ ຊາຍ ໃນລະຫວ່າງຂະບວນການ PRAP[82].

ຄວາມໝາຍສຳລັບໂຄງການ GCF

ໂຄງສ້າງໃນລະດັບພາກພື້ນ ແລະ ກອບກົດໝາຍທີ່ມີຢູ່ແລ້ວ ບໍ່ໄດ້ໃຫ້ຄຳແນະນຳທີ່ພຽງພໍ ສຳລັບທຸກພາກສ່ວນທີ່ ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໂຄງການທີ່ໃຫ້ຄວາມສຳຄັນເລື່ອງບົດບາດຍິງ-ຊາຍ. ໂຄງການທີ່ວາງແຜນໄວ້ ສາມາດດຶງເອົາຂໍ້ສະເຫນີແນະອັນມີຄ່າ ສຳລັບການເຊື່ອມສານໃນພາກປະຕິບັດຕົວຈິງ ກ່ຽວກັບບົດບາດຍິງຊາຍ ເຂົ້າ ໃນການຄຸ້ມຄອງປ່າໄມ້ ຈາກກອບສາກົນ ແລະ ແຜນປະຕິບັດງານ, ດັ່ງທີ່ໄດ້ກ່າວມາຂ້າງເທິງ.
ການປະກອບສ່ວນອັນມີຄ່າຂອງໂຄງການ ຈະເປັນໄປໃນຮູບການ ການສະໜັບສະໜຸນການສ້າງບົດແນະນຳ ແລະ ລະບຽບການໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ທີ່ໃຫ້ຄວາມສຳຄັນກ່ຽວກັບ ຄວາມຕ້ອງການທີ່ຫຼາກຫຼາຍ ຂອງຊຸມຊົນກ່ຽວກັບບົດບາດຍິງ-ຊາຍ, ຊົນເຜົ່າ ແລະ ຖານະເສດຖະກິດ. ນອກຈາກນັ້ນ, ໂຄງການ ອາດຈະສາມາດ ສົ່ງເສີມຄວາມສົມດຸນລະຫວ່າງຍິງ-ຊາຍໄດ້ຢ່າງຫຼວງຫຼາຍ ໃນກອງປະຊຸມຜູ້ມີສ່ວນຮ່ວມ ແລ ເວທີອື່ນໆທີ່ກ່ຽວຂ້ອງ ກັບການຕັດສິນໃຈ.
ມາຮອດປະຈຸບັນ, ໂຄງການ 1 ໄດ້ຊຸກຍູ້ ການສ້າງບົດແນະນຳຈຳນວນໜຶ່ງ ໃນຂະບວນການທີ່ເນັ້ນໜັກຄວາມສຳຄັນ ດ້ານບົດບາດຍິງຊາຍ. ບົດແນະນຳການສົ່ງເສີມການປະຕິບັດກະສິກຳແບບຍືນຍົງ ແລະ ບໍ່ມີການທຳລາຍປ່າ ແລະ ຕ່ອງໂສ້ມູນຄ່າ (PSAP), ໄດ້ຖືກສ້າງຂຶ້ນ ໂດຍໄດ້ເປີດໂອກາດໃຫ້ມີຂະບວນການມີສ່ວນຮ່ວມ ລວມທັງແມ່ຍິງ ແລະ ກຸ່ມທີ່ມີຄວາມສ່ຽງ. ຄຽງຄູ່ກັນນັ້ນ, ການສ້າງບົດແນະນຳກ່ຽວກັບ ກອງທຶນກະສິກຳ ແລະ ປ່າໄມ້ຂອງບ້ານ (VFAG) ໄດ້ຮັບການສະໜັບສະໜູນຈາກໂຄງການ 1. ແນວທາງຮັບປະກັນວ່າ ການຈັດສັນກອງທຶນຈາກ VFAG

[82] Provincial REDD+ Action Plans (PRAP) for Houaphan, Bokeo, Lung Namtha, Luang Prabang, Oudomxay, and Sayabouri. 2017.

ແມ່ນໃຫ້ບຸລິມະສິດ ການສະໜັບສະໜູນແກ່ຄອບຄົວຊາວກະສິກອນທີ່ມີຫົວໜ້າເປັນແມ່ຍິງ, ໄວໜຸ່ມ ໂຄງການ 2 ຈະໄດ້ຖອດຖອນບົດຮຽນຈາກ ບົດແນະນຳເຫຼົ່ານີ້ ແລະ ຈະໄດ້ຜັນຂະຫຍາຍການຈັດຕັ້ງປະຕິບັດຕາມບົດແນະນຳ ດັ່ງກ່າວ.

3.3. ລະດັບຊາດ: ຂໍ້ມູນກ່ຽວກັບບົດບາດຍິງ-ຊາຍ ໃນບັນດາອົງການຈັດຕັ້ງໃນຂະແໜງການ ແລະ ພາກສ່ວນທີ່ ກ່ຽວຂ້ອງ

ຈາກການສຳພາດສະແດງໃຫ້ເຫັນວ່າ ອົງການປ່າໄມ້ແຂວງ ແລະ ເມືອງ ອາດມີຄວາມຮູ້ ທີ່ຂ້ອນຂ້າງຈຳກັດ ກ່ຽວກັບ ຄວາມກ່ຽວຂ້ອງຂອງມາດຕະການການສົ່ງເສີມບົດບາດຍິງ-ຊາຍໃນຂະແໜງການຂອງຕົນ. ນີ້ແມ່ນສັນຍານໜຶ່ງ ຈາກຄຳຕອບຂອງເຂົາເຈົ້າ, ເຊິ່ງຂາດຄວາມເຂົ້າໃຈຢ່າງຈິງຈັງ ກ່ຽວກັບການເຊື່ອມ�โยงบົດบาดยิง-ชาย, ເຊັ່ນດຽວ ກັນກັບ ຄວາມຈິງທີ່ວ່າຜູ້ທີ່ຖືກສຳພາດສ່ວນໃຫຍ່ໃນຫ້ອງການປ່າໄມ້ ແມ່ນເປັນຜູ້ຊາຍ. ຫ້ອງການໜຶ່ງບອກວ່າ ເຂົາເຈົ້າມີຈຸດປະສານງານກ່ຽວກັບບົດບາດຍິງ-ຊາຍ ແຕ່ບໍ່ໄດ້ພິຈາລະນາເຂົາເຈົ້າ ມາເຂົ້າຮ່ວມສຳພາດ. ນີ້ແມ່ນສິ່ງທີ່ ຊີ້ບອກ ການບໍ່ໄດ້ນຳໃຊ້ ຊັບພະຍາກອນດ້ານເພດໃນໂຄງສ້າງການຈັດຕັ້ງຂອງຂະແໜງການດັ່ງກ່າວ.

ຂໍ້ຄວາມທີ່ສຳຄັນ ຈາກຜູ້ທີ່ຖືກສຳພາດ ແມ່ນມີຄວາມສອດຄ່ອງກັນກັບຜົນການປະເມີນຈາກໂຄງການອື່ນໆ: ສິ່ງທ້າ ທາຍທີ່ສຳຄັນ ຕໍ່ການສົ່ງເສີມບົດບາດຍິງຊາຍຢ່າງມີປະສິດທິພາບໃນຂະແໜງປ່າໄມ້ ແມ່ນ ມີບາງສ່ວນໃນຂັ້ນນິຕິກຳ ແຕ່ສ່ວນໃຫຍ່ແມ່ນຢູ່ໃນລະດັບການຈັດຕັ້ງປະຕິບັດ. ອັນນີ້ລວມເຖິງຄວາມຮູ້ ແລະ ຄວາມເຂົ້າໃຈ, ລວມທັງບຸກ ຄະລາກອນ ແລະ ແຫຼ່ງການເງິນ, ແລະ ການຂາດຄວາມຮັບຜິດຊອບທີ່ໄດ້ຖືກມອບໝາຍໃຫ້ ທີ່ ນອກເໜືອ ຈາກ ພາລະບົດບາດຂອງ ສະຫະພັນແມ່ຍິງລາວ.

ໂຄງສ້າງການຈັດຕັ້ງ ເພື່ອປັບປຸງຄວາມສຳຄັນຂອງບົດບາດຍິງ-ຊາຍ ແມ່ນມີຢູ່ແລ້ວ (ຈຸດໃຈກາງປະສານງານຂອງ ບັນດາກະຊວງ ກຳຄື ສະຫະພັນແມ່ຍິງລາວ) ແຕ່ ໃນປະຈຸບັນ, ຍັງຂາດຄວາມຮູ້ດ້ານວິຊາການສະເພາະດ້ານ, ງົບປະມານ ແລະ ແຮງຈູງໃຈທີ່ຈະຈັດຕັ້ງປະຕິບັດຢ່າງຈິງຈັງ.

ຄວາມສຳຄັນຕໍ່ກັບ ໂຄງການ GCF

ໂຄງການຄວນສືບຕໍ່ຮ່ວມມືກັບ ສະຫະພັນແມ່ຍິງ ຢ່າງຈິງຈັງໃນລະຫວ່າງການຈັດຕັ້ງປະຕິບັດ. ນອກຈາກນີ້ ເພື່ອນຳ ໃຊ້ຊັບພະຍາກອນ, ປະສົບການ ແລະ ເຄືອຂ່າຍທ້ອງຖິ່ນຂອງ ສະຫະພັນແມ່ຍິງ ໃນການສົ່ງເສີມຄວາມສະເໝີພາບ ທາງເພດ ໃນຂະແໜງການນຳໃຊ້ທີ່ດິນ. ຄຽງຄູ່ກັນນັ້ນ, ເພື່ອແນໃສ່ເພີ່ມທະວີ ການສ້າງຄວາມເຂັ້ມແຂງໃຫ້ແກ່ ອົງການດັ່ງກ່າວ ໃນການຊຸກຍູ້ຄວາມສະເໝີພາບລະຫວ່າງຍິງຊາຍ ໃນການຈັດຕັ້ງປະຕິບັດ ການຜະລິດກະສິກຳທີ່ບໍ່ ທຳລາຍປ່າໄມ້, ການພັດທະນາຕ່ອງໂສ້ມູນຄ່າ, ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງ ປ່າໄມ້ຂອງຊຸມຊົນ. ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ 1, ສະຫະພັນແມ່ຍິງລາວ ໄດ້ກາຍມາເປັນຄູ່ຮ່ວມມື ສຳຄັນໃນກິດຈະກຳໂຄງການ ທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ. ສະຫະພັນແມ່ຍິງລາວ ໄດ້ເຂົ້າຮ່ວມກິດຈະກຳຂັ້ນ ບ້ານທີ່ສຳຄັນ ເພື່ອຮັບປະກັນການເຊື່ອມ�โยงของทัดสะนะบົດบาดยิง-ชาย. ອີງຕາມບົດລາຍງານຄວາມຄືບໜ້າ

ປະຈຳປີ, ຂໍ້ມູນການຕິດຕາມສະແດງໃຫ້ເຫັນວ່າ ສະຫະພັນແມ່ຍິງລາວ ໄດ້ເຂົ້າຮ່ວມໃນ 87% ຂອງທຸກກິດຈະກຳ ຂັ້ນບ້ານ[83]. ການຮ່ວມມືທີ່ເຂັ້ມແຂງກັບ ສະຫະພັນແມ່ຍິງລາວນີ້ ຈະຖືກສືບຕໍ່ພາຍໃຕ້ໂຄງການ 2.

ນອກຈາກນັ້ນ, ໂຄງການ ຄວນແນໃສ່ປັບປຸງ ຄວາມສາມາດຂອງຄູ່ຮ່ວມຈັດຕັ້ງປະຕິບັດກ່ຽວກັບ GESI, ຄວາມ ສະເໝີພາບລະຫວ່າງຍິງ-ຊາຍ ແລະ ຂະບວນການມີສ່ວນຮ່ວມ ໂດຍຜ່ານການຝຶກອົບຮົມຢ່າງພຽງພໍ. ນອກຈາກ ນັ້ນ, GESI ຕ້ອງໄດ້ຖືກເຊື່ອມສານເຂົ້າ ໃນຖານະເປັນຫົວຂໍ້ທີ່ກ່ຽວພັນກັນໃນຫຼາຍດ້ານ ເຂົ້າໄປໃນ ຊຸດເຄື່ອງມື ການຝຶກອົບຮົມດ້ານວິຊາການທັງຫມົດ.

ໃນລະດັບທ້ອງຖິ່ນ: ການປຶກສາຫາລືຮ່ວມກັບກຸ່ມເປົ້າໝາຍຕ່າງໆໃນຂະແໜງການ

ການສະຫຼຸບການປຶກສາຫາລືຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບບົດບາດຍິງ-ຊາຍ ສຳລັບແຜນງານ (ໂຄງການ 1)

ການປຶກສາຫາລືພາກສະໜາມ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 15-24 ມັງກອນ 2019: ການລົງພາກສະໜາມ 1ຄັ້ງ ທີ່ແຂວງຫົວພັນ ແຕ່ວັນທີ 15-18 ມັງກອນ 2019 ແລະ ອີກ 1 ຄັ້ງທີ່ແຂວງຫຼວງນ້ຳທາ ໃນລະຫວ່າງວັນທີ 22-24 ມັງກອນ 2019. ຢູ່ທັງສອງແຂວງ ການສຳພາດ ໄດ້ຈັດຂຶ້ນ ຢູ່ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ສະຫະພັນແມ່ຍິງແຂວງ.
ໃນລະດັບເມືອງ, ໄດ້ມີການສຳພາດກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO) ແລະ ຫ້ອງການສະຫະພັນ ແມ່ຍິງ ເມືອງຊຳເໜືອ (ຫົວພັນ) ແລະ ເມືອງໜຶ່ງ ຢູ່ແຂວງຫຼວງນ້ຳທາ. ໃນນັ້ນ, ໄດ້ມີການປຶກສາຫາລືຢູ່ 4 ຄັ້ງ ຢູ່ ບັນດາບ້ານຄື: ບ້ານ ຢາດ ເມືອງຊຳເໜືອ; ບ້ານນ້ຳແມດໃໝ່ ແລະ ບ້ານນ້ຳດີ ເມືອງຫຼວງນ້ຳທາ. ໃນນັ້ນ, ໄດ້ສຳພາດ ແລະ ປຶກສາຫາລືພາກສ່ວນກ່ຽວຂ້ອງລວມທັງໝົດ 148 ຄົນ (ຊາຍ 79 ຄົນ ຍິງ 69 ຄົນ).

ບ້ານທີ່ຄັດເລືອກ ແມ່ນມີພື້ນຖານເສດຖະກິດ ແລະ ຊົນເຜົ່າທີ່ແຕກຕ່າງກັນ, ແລະ ສະແດງໃຫ້ເຫັນການເຂົ້າຮ່ວມ ຂອງແມ່ຍິງໃນລະດັບຕ່າງໆ:

- ບ້ານຢ້າວ/ຫົວພັນ: ຊົນເຜົ່າຂະມຸ ແລະ ເຜົ່າມົ້ງ, ມີສອງບ້ານລວມເຂົ້າເປັນໜຶ່ງ. ອັດຕາຄວາມທຸກຍາກ ແລະ ການ ຫວ່າງງານສູງ, ມາດຕະຖານການສຶກສາຕ່ຳ. ຮີດຄອງປະເພນີທີ່ເຂັ້ມແຂງ, ການລ້ຽງສັດເປັນແຫຼ່ງລາຍຮັບຕົ້ນຕໍ, ເຮັດ ໄຮ່ເລື່ອນລອຍ ແລະ ການຜະລິດເຂົ້ານາ. ແມ່ຍິງ ໄດ້ມີການປະກອບຄຳຄິດເຫັນ ຢ່າງຕັ້ງໜ້າໃນລະຫວ່າງການປຶກສາ ຫາລື, ແລະ ໄດ້ມີການຈັດກຸ່ມສົນທະນາແຍກກັນລະຫວ່າງ ຊາຍ ແລະ ຍິງ.

- ບ້ານນ້ຳແມດໃໝ່/ຫຼວງນ້ຳທາ: ຊົນເຜົ່າອາຄາ. ຊາວບ້ານໄດ້ຖືກຍົກຍ້າຍຫຼາຍຄັ້ງໃນຮອບ 20 ປີຜ່ານມາ ແລະ ໄດ້ ປະສົບກັບການປັບປຸງລະດັບລາຍຮັບ ເນື່ອງຈາກປັດຈຸບັນເຂົາເຈົ້າອາໄສຢູ່ໃກ້ກັບເມືອງຫຼວງນ້ຳທາ. ລະດັບການສຶກ ສາຍັງຕ່ຳຫຼາຍ. ຢາງພາລາເປັນລາຍຮັບຕົ້ນຕໍ ນອກຈາກລາຍຮັບຈາກຊັບພະຍາກອນປ່າໄມ້ ແລະ ການຜະລິດຫວາຍ.

[83] GCF Programme Annual Progress Report, December 2021.

ປະຊາຊົນຍັງເຮັດໄຮ່ຢູ່. ຊາວບ້ານປະຕິເສດການສະເໜີຈັດກອງປະຊຸມແຍກ ລະຫວ່າງຍິງ ແລະ ຊາຍ. ແມ່ຍິງ ຕ້ອງການການແປພາສາ ລະຫວ່າງພາສາອາຄາ ແລະ ລາວ, ແລະ ເບິ່ງຄືວ່າມີຄວາມອາຍຫຼາຍ ທີ່ຈະເວົ້າຕໍ່ຫນ້າອຳນາດ ການປົກຄອງບ້ານ ແລະ ຜູ້ຊາຍອື່ນໆ.

- ບ້ານນ້ຳດີ/ຫຼວງນ້ຳທາ: ເຜົ່າແລນແຕນ/ເຍົ້າ. ໝູ່ບ້ານ ແມ່ນແຫຼ່ງທ່ອງທ່ຽວແບບນິເວດ. ລະດັບລາຍຮັບແມ່ນເພີ່ມ ຂຶ້ນຕາມລຳດັບ, ແຕ່ຍ້ອນການເພິ່ງພາແຫຼ່ງທ່ອງທ່ຽວສູງ ແລະ ຈະສິ້ນສຸດໃນໄວໆນີ້, ແລະ ລາຍຮັບຂອງເຂົາເຈົ້າຈາກ ຢາງພາລາ ທີ່ຜັນຜວນເໜັງຕີງດ້ານລາຄາຢ່າງແຂງແຮງ (ການຜູກຂາດຂອງບໍລິສັດໜຶ່ງຂອງຈີນ). ລະດັບການສຶກສາ ຕ່ຳຫຼາຍຂອງແມ່ຍິງ; ແມ່ຍິງຈຳນວນຫນ້ອຍທີ່ເຂົ້າໂຮງຮຽນມີແນວໂນ້ມທີ່ຈະອອກຈາກບ້ານ. ຊາວບ້ານບໍ່ໄດ້ຈັດ ກອງປະຊຸມແຍກ, ແລະ ນາຍບ້ານໄດ້ໃຊ້ອຳນາດອອກຄຳຄິດຄຳເຫັນແທນປະຊາຊົນທີ່ເຂົ້າຮ່ວມ. ການມີສ່ວນຮ່ວມ ຂອງແມ່ຍິງ ສາມາດຊຸກຍູ້ໄດ້ຜ່ານຕົວແທນສະຫະພັນແມ່ຍິງແຫ່ງຊາດທີ່ເຂົ້າຮ່ວມ.

ໂດຍທົ່ວໄປ, ແຜນງານ ໄດ້ຖືກຕ້ອນຮັບ ເປັນຢ່າງດີ ຈາກ ຜູ້ມີສ່ວນກ່ຽວຂ້ອງທັງໝົດ ທີ່ໄດ້ປຶກສາຫາລືນຳ. ຢູ່ຂັ້ນ ເມືອງ ແລະ ຂັ້ນບ້ານ, ຜູ້ເຂົ້າຮ່ວມຫຼາຍຄົນ ໄດ້ສັງເກດເຫັນວ່າ ຊັບພະຍາກອນ ນັບມື້ຫາຍາກ ແລະ ມີຄຸນນະພາບຕ່ຳ ລົງ. ແມ່ຍິງ, ຊຶ່ງເປັນຜູ້ເກັບກູ້ຜະລິດຕະພັນປ່າໄມ້ ຕົ້ນຕໍ, ຮູ້ຈັກປ່າໄມ້ ດີ ແລະ ໄດ້ເຫັນຜົນກະທົບ ຈາກ ການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຕໍ່ ຊີວິດການເປັນຢູ່ ຂອງເຂົາເຈົ້າ. ໃນຄະນະທີ່ປ່າໄມ້ເສື່ອມໂຊມລົງເທື່ອລະ ນ້ອຍ, ແມ່ຍິງຈຳຕ້ອງເດີນທາງໄກຂຶ້ນ ຫຼື ນຳໃຊ້ ເຄື່ອງປ່າຂອງດົງ ສຳລັບບໍລິໂພກ ແລະ ອຸປະໂພກ ໜ້ອຍລົງ. ນອກຈາກນັ້ນ, ຜູ້ມີສ່ວນກ່ຽວຂ້ອງ ຈຳນວນໜຶ່ງ ໄດ້ສັງເກດເຫັນວ່າ ຄວາມຫຼາກຫຼາຍທາງຊີວະນາໆພັນປ່າໄມ້ ໄດ້ ຫຼຸດລົງ. ໃນດ້ານກະສິກຳ, ແມ່ຍິງ ທີ່ໄດ້ປຶກສາຫາລືນຳ ຍັງສັງເກດເຫັນວ່າ ຄຸນນະພາບດິນ ໄດ້ຫຼຸດລົງ. ບາງບ້ານ ໄດ້ ສັງເຫັນວ່າ ໃນເບື້ອງຕົ້ນ ເຂົາເຈົ້າ ໄດ້ພະຍາຍາມ ນຳໃຊ້ ຝຸ່ນມູນສັດ ແຕ່ວ່າ ຕໍ່ຈາກນັ້ນ ໄດ້ປ່ຽນໄປໃຊ້ ຝຸ່ນເຄມີຈຳ ນວນໜຶ່ງ. ໃນຄະນະທີ່ ເຂົາເຈົ້າສາມາດ ເຫັນຜົນກະທົບ ຈາກ ການນຳໃຊ້ທີ່ດິນ ຈຳນວນໜຶ່ງ (ເຊັ່ນ ການເຮັດໄຮ່ ເລື່ອນລອຍ), ເຂົາເຈົ້າໄດ້ສັງເກດເຫັນ ອຸປະສັກອັນໃຫຍ່ ຕໍ່ ເຂົາເຈົ້າ ໃນການແກ້ໄຂ ສິ່ງດັ່ງກ່າວນີ້ ແມ່ນການຂາດ ດ້ານການເງິນ ແລະ ຄວາມຮູ້ ກ່ຽວກັບ ການເຮັດກະສິກຳ ແລະ ການນຳໃຊ້ທີ່ດິນ "ທີ່ດີ" ທີ່ເປັນທາງເລືອກ. ເຂົາເຈົ້າ ສືບຕໍ່ສັງເກດເຫັນ ຄວາມຈຳເປັນ ສຳລັບ ສະໜັບສະໜູນ ເຮັດການຕະຫຼາດ ແລະ ກຳນົດ ໂອກາດທີ່ເໝາະສົມ (ໂດຍ ອີງໃສ່ ການວາງແຜນນຳໃຊ້ທີ່ດິນ).
ບົດສັງລວມ ຄຳຄິດເຫັນ ຈາກ ການປຶກສາຫາລື ກັບຜູ້ມີສ່ວນກ່ຽວຂ້ອງ ທີ່ເວົ້າສະເພາະເລື້ອງບົດບາດຍິງຊາຍ ແລະ ລາຍລະອຽດຫຍໍ້ ກ່ຽວກັບວ່າ ພວກມັນຖືກລວມເຂົ້າໃສ່ໃນແຜນງານ ແລະ/ຫຼື GAP ຖືກກຳນົດ ຢູ່ໃນຕາຕະລາງຕໍ່ ໄປນີ້ ແນວໃດ.
ຄວາມໝາຍສຳຄັນຕໍ່ກັບໂຄງການ GCF

ຕາຕະລາງ 2 ສະຫຼຸບລວມບັນດາຄຳເຫັນ (ຈາກໂຄງການ 1)

#	ຄຳຄິດເຫັນ ແລະ/ຫຼື ຄຳແນະນຳ ຂອງຜູ້ມີສ່ວນກ່ຽວຂ້ອງ	ມັນຖືກເຊື່ອມໂຍງເຂົ້າໃນແຜນປະຕິບັດງານບົດບາດຍິງຊາຍ ຂອງແຜນງານໄດ້ແນວໃດ:	ໝາກຜົນ/ກິດຈະກຳ ທີ່ກ່ຽວຂ້ອງ ຂອງແຜນງານ	ຈຳນວນ ມາດ ຕະການ ຕອບໂຕ້ ຢູ່ ໃນ GAP
1	ສະຫະພັນແມ່ຍິງ ເປັນສະຖາບັນການຈັດຕັ້ງ ທີ່ສຳຄັນ ໃນການສະໜັບສະໜູນ ຄວາມເທົ່າທຽມກັນທາງດ້ານບົດບາດຍິງຊາຍ ແລະ ການພັດທະນາທີ່ຄຳນຶງເຖິງບົດບາດຍິງຊາຍ ຢູ່ ສ.ປ.ປ.ລາວ. ແຕ່ເຖິງຢ່າງໃດກໍຕາມ, ຄວາມອາດສາມາດ ຂອງເຂົາເຈົ້າ ສາມາດ ຖືກສ້າງໃຫ້ເຂັ້ມແຂງ ຕໍ່ໄປ ເພື່ອເຮັດໃຫ້ເຂົາເຈົ້າມີຄວາມສາມາດຫຼາຍຂຶ້ນ ໃນການ ສະໜັບສະໜູນ ຄວາມເທົ່າທຽມກັນ ທາງ ເພດ ທັງຢູ່ພາຍໃນ ຂອບເຂດ ຂອງແຜນງານ ແລະ ຢູ່ທົ່ວໄປ.	ແຜນງານ ຈະພັດທະນາຄວາມອາດສາມາດ ຂອງບັນດາອົງການລັດ ທີ່ຈັດຕັ້ງປະຕິບັດ ຢູ່ ພາຍໃນ ຂະແໜງການ ແລະ ສະຫະພັນ ແມ່ຍິງລາວ ເພື່ອໃຫ້ສາມາດສະໜອງ ການອຳນວຍຄວາມສະດວກ ແກ່ບັນດາກິດ ຈະກຳ ຂອງແຜນງານ ທີ່ຄຳນຶງເຖິງບົດບາດ ຍິງຊາຍ ຢູ່ໃນຊຸມຊົນບ້ານ. ຈັດຕັ້ງປະຕິບັດ ການຝຶກອົບຮົມ ທີ່ເປັນເປົ້າໝາຍ ກ່ຽວກັບ REDD+ ແລະ ບົດບາດຍິງຊາຍ. ພະນັກງານວິຊາການ ຈາກ ຫ້ອງການກະສິ ກຳ ແລະ ປ່າໄມ້ເມືອງ, ກອງກວດກາປ່າໄມ້ ເມືອງ ແລະ ສະຫະພັນແມ່ຍິງເມືອງ ຈະໄດ້ ຮັບການຝຶກອົບຮົມ ກ່ຽວກັບ “REDD+ ແລະ ບົດບາດຍິງຊາຍ”, ລວມທັງ ການລວມເອົາສັງຄົມເຂົ້າມາມີສ່ວນຮ່ວມ. ມັນຈະສືບຕໍ່ ສະໜັບສະໜູນ ຄວາມອາດ ສາມາດ ຂອງ ພະນັກງານຍິງ ຢູ່ພາຍໃນອົງ ການຈັດຕັ້ງຂອງລັດ ເພື່ອປັບປຸງ ຄວາມສົມ ດຸນທາງເພດ ຢູ່ພາຍໃນ ຂະແໜງກະສິກຳ ແລະ ປ່າໄມ້ ແລະ ຈະເລັງໃສ່ ເພື່ອເພີ່ມ ຈຳ ນວນແມ່ຍິງ ທີ່ສະໜັບສະໜູນ ການຈັດຕັ້ງ ປະຕິບັດ ກິດຈະກຳຂອງແຜນງານ.	ທົ່ວທຸກຂະ ແໜງການ/ ທັງໝົດ	(3) (3) (7) (6) (13)
2	ອົງການຈັດຕັ້ງປະຕິບັດຂອງລັດ ມີຄວາມ ອາດສາມາດ ທີ່ອ່ອນແອ ກ່ຽວກັບ ບົດບາດ ຍິງຊາຍ.			
3	ການເຂົ້າຮ່ວມກອງປະຊຸມ, ການຝຶກອົບຮົມ ແລະ ຄະນະກຳມະການ ຂອງແມ່ຍິງ ມັກຈະ ມີຂໍ້ຈຳກັດ. ສິ່ງກ່າວນີ້ ເປັນຍ້ອນຫຼາຍປັດໃຈ (ເຊັ່ນ. ທຳນິບທຳນຽມທາງວັດທະນາທຳ, ການນຳນິດເວລາ ແລະ ທີ່ຕັ້ງຂອງສະຖານທີ່ ຝຶກອົບຮົມ, ລະດັບການສຶກສາ ຂອງແມ່ຍິງ, ແລະ ອື່ນໆ). ການສະໜັບສະໜູນ ດ້ານວິຊາ ການທີ່ເປັນເປົ້າໝາຍ ແມ່ນເປັນສິ່ງຈຳເປັນ ສຳລັບສ້າງຄວາມເຂັ້ມແຂງ ແກ່ ການເຂົ້າ ຮ່ວມ ຂອງແມ່ຍິງ ຢູ່ໃນກອງປະຊຸມ ຂອງ ແຜນງານ.	ຊຸກຍູ້ ການເຂົ້າຮ່ວມ ຢ່າງຕັ້ງໜ້າ ແລະ ມີ ປະສິດທິພາບ ຂອງ ແມ່ຍິງ ໃນກອງປະຊຸມ ຂອງຊຸມຊົນ ຜ່ານການປະຕິບັດ ຕໍ່ໄປນີ້: • ການສ້າງຄວາມອາດສາມາດ ຂອງ ສະຫະພັນແມ່ຍິງ ແລະ ອົງການຈັດຕັ້ງ ລັດ ກ່ຽວກັບ ບົດບາດຍິງຊາຍ ແລະ ການລວມເອົາສັງຄົມ (ເບິ່ງ ຄຳແນະນຳ ຂ້າງເທິງ) • ກຳນົດໂກຕ້າ ການເຂົ້າຮ່ວມ ຂອງ ແມ່ຍິງໃຫ້ໄດ້ 40% ຢູ່ໃນກອງປະຊຸມ ຂອງຊຸມຊົນ • ດຳເນີນການສຳຫຼວດ ເພື່ອກຳນົດ ຖ້າວ່າແມ່ຍິງຮູ້ສຶກ ຕັ້ງໜ້າ ຢາກລວມ	ທົ່ວທຸກຂະ ແໜງການ/ ທັງໝົດ	(1) (2) (3) (4) (5) (6) (7) (8) (13) (14) (16) (30)

#	ຄຳຄິດເຫັນ ແລະ/ຫຼື ຄຳແນະນຳ ຂອງຜູ້ມີສ່ວນກ່ຽວຂ້ອງ	ມັນຖືກເຊື່ອມໂຍງເຂົ້າໃນແຜນປະຕິບັດງານບົດບາດຍິງຊາຍ ຂອງແຜນງານໄດ້ແນວໃດ:	ໝາກຜົນ/ກິດຈະກຳ ທີ່ກ່ຽວຂ້ອງ ຂອງແຜນງານ	ຈຳນວນ ມາດ ຕະການ ຕອບໂต້ ຢູ່ ໃນ GAP
		ຢູ່ໃນກອງປະຊຸມ ທີ່ກ່ຽວຂ້ອງກັບ REDD+ • ກຳນົດເວລາ ແລະ ສະຖານທີ່ ການຝຶກອົບຮົມ ທີ່ຄຳນຶງເຖິງ ເວລາການເຮັດວຽກຂອງແມ່ຍິງ ລວມທັງ ການເຂົ້າເຖິງ ເພື່ອຮັບປະກັນ ການມີສ່ວນຮ່ວມ ແລະ ການເຂົ້າເຖິງ ຫຼາຍທີ່ສຸດ, ປະສານງານ ກັບ ສະຫະພັນແມ່ຍິງລາວ, ແນວລາວສ້າງ ຊາດ, ແລະ ອົງການຈັດຕັ້ງ ຂອງ ແມ່ຍິງ ພາຍໃນທ້ອງຖິ່ນ ເພື່ອສ້າງຕັ້ງ ບົນເຄືອຂ່າຍທີ່ມີຢູ່ແລ້ວ ແລະ ຫຼັກການປະຕິບັດທີ່ດີທີ່ສຸດ ສຳລັບ ການເຂົ້າເຖິງ. • ຮັບປະກັນວ່າ ການປຶກສາຫາລືຂັ້ນ ບ້ານ ກ່ຽວກັບ ການລົງທຶນທີ່ມີ ທ່າແຮງ ຂອງພາກເອກະຊົນ ຢູ່ໃນ ການຜະລິດກະສິກຳປ່າໄມ້ ແບບ ປະສົມປະສານ ທີ່ອາໃສຊຸມຊົນ ສາມາດເຮັດໃຫ້ຊາວບ້ານໝົດທຸກຄົນ ເຂົ້າຮ່ວມເທົ່າທຽມກັນ ໃນການ ຕັດສິນໃຈ ກ່ຽວກັບການລົງທຶນ.		
4	ແມ່ຍິງ ແລະ ຜູ້ຊາຍ ສົນໃຈ ໃນການຍຸດຕິ ການເຮັດໄຮ່ເລື່ອນລອຍ ເນື່ອງຈາກວ່າ ມັນ ເປັນການໃຊ້ແຮງງານໜັກ ແລະ ເປັນວຽກທີ່ ຍາກ, ແຕ່ເຖິງຢ່າງໃດກໍຕາມ, ເຂົາເຈົ້າ ຕ້ອງການທາງເລືອກ ທີ່ເໝາະສົມ. ຄວາມ ອາດສາມາດ ຂອງແມ່ຍິງ ແມ່ນມີຕ່ຳ ແລະ ເຂົາເຈົ້າມັກຈະມີການເຂົ້າເຖິງໜ້ອຍກວ່າຜູ້ ຊາຍ ຕໍ່ກັບ ການບໍລິການສົ່ງເສີມ, ການຝຶກ ອົບຮົມ ແລະ ຂໍ້ມູນຂ່າວສານ.	ກິດຈະກຳ 1.4 ຈະສະໜັບສະໜູນ ຊາວບ້ານ ດ້ວຍການວາງແຜນນຳໃຊ້ທີ່ດິນ ຊຶ່ງຈະຊ່ວຍກຳນົດ ກິດຈະກຳ ການນຳໃຊ້ທີ່ ດິນ ທີ່ເໝາະສົມ. ໝາກຜົນ 2 ແລະ 3 ຈະ ສະໜອງ ການສະໜັບສະໜູນ ດ້ານວິຊາ ການ ແລະ ດ້ານການເງິນ ແກ່ ຊຸມຊົນ ໃນ ການຍອມຮັບ ຫຼັກການປະຕິບັດນຳໃຊ້ທີ່ ດິນ ແບບຍືນນານ ຕໍ່ທີ່ດິນກະສິກຳ ແລະ ປ່າໄມ້. ການເຂົ້າຮ່ວມໃນແຜນງານ ແມ່ນ ເປັນຄວາມສະໝັກໃຈ ແລະ ອິງໃສ່ ຂະບວນການແບບມີສ່ວນຮ່ວມທີ່ຊາວບ້ານ ສາມາດ ກຳນົດຫຼັກການປະຕິບັດ ທີ່ເໝ າະສົມ ແລະ ເປັນຜົນປະໂຫຍດ ໂດຍອິງໃສ່ ສະພາບທ້ອງຖິ່ນ ຂອງເຂົາເຈົ້າ.	ກິດຈະກຳ 1.2.2. ໝົ ດທຸກກິດຈະ ກຳ ຢູ່ພາຍ ໃນ ໝາກ ຜົນ 2 ແລະ 3	(1-14) (16-19) (20) (21) (22) (23) (24-16) (27-30)

#	ຄຳຄິດເຫັນ ແລະ/ຫຼື ຄຳແນະນຳ ຂອງຜູ້ມີສ່ວນກ່ຽວຂ້ອງ	ມັນຖືກເຊື່ອມໂຍງເຂົ້າໃນແຜນປະຕິບັດງານບົດບາດຍິງຊາຍ ຂອງແຜນງານໄດ້ແນວໃດ:	ໝາກຜົນ/ກິດຈະກຳ ທີ່ກ່ຽວຂ້ອງ ຂອງແຜນງານ	ຈຳນວນ ມາດ ຕະການ ຕອບໂຕ້ ຢູ່ ໃນ GAP
		ແຜນງານ ຈະສະໜັບສະໜູນ ການສ້າງ ຄວາມອາດສາມາດ ຂອງແມ່ຍິງ ໃນການ ຍອມຮັບ ຫຼັກການປະຕິບັດ ການນຳໃຊ້ທີ່ດິນ ທີ່ເໝາະສົມ ແລະ ກ້າວເຂົ້າສູ່ ການ ຜະລິດ, ການປຸງແຕ່ງ ແລະ ການເຮັດການ ຕະຫຼາດ ຕ່ອງໂສຄຸນຄ່າໃໝ່. ທຸກອົງ ປະກອບການຝຶກອົບຮົມ ແລະ ວັດຖຸ ອຸປະກອນການສົ່ງເສີມ ຈະຖືກທົບທວນ ໂດຍ ຊ່ຽວຊານດ້ານບົດບາດຍິງຊາຍ, ທຸກ ອົງການຈັດຕັ້ງໂຕແທນ ແລະ ຄູຝຶກດ້ານ ການສົ່ງເສີມ ຈະໄດ້ຮັບການຝຶກອົບຮົມ ກ່ຽວກັບຄວາມເທົ່າທຽມກັນທາງເພດ ແລະ ການລວມເອົາສັງຄົມ (ເຊັ່ນ ການສົ່ງເສີມ ຫຼັກການປະຕິບັດ ທີ່ປະຫຍັດເວລາ). ນອກຈາກນັ້ນ, ແຜນງານ ຈະ ຮັບປະກັນ ການຮ່ວມມືກັນຢ່າງໃກ້ຊິດ ກັບ ສະຫະພັນ ແມ່ຍິງລາວ ເພື່ອເຂົ້າເຖິງ ແມ່ຍິງ ໃຫ້ຫຼາຍ ເທົ່າທີ່ເປັນໄປໄດ້ ແລະ ຊຸກຍູ້ ການເຂົ້າ ຮ່ວມ ຂອງເຂົາເຈົ້າ. ການຝຶກອົບຮົມ ໃຫ້ສະເພາະແມ່ຍິງ ກ່ຽວ ກັບ “ການສ້າງທັດສະຄວາມຮູ້ ດ້ານທຸລະ ກິດ” ຈະຖືກຈັດຕັ້ງປະຕິບັດ, ເພື່ອຊ່ວຍ ແມ່ຍິງ ປັບປຸງຄວາມຮູ້ດ້ານທຸລະກິດ ຂອງ ເຂົາເຈົ້າ, ສ້າງຄວາມເຊື່ອໝັ້ນ ແລະ ພັດທະນາ ທັດສະຄວາມຮູ້ ໃນການເປັນ ຜູ້ນຳ. ການປະເມີນ ກ່ຽວກັບ ຕ່ອງໂສ້ຄຸນຄ່າທີ່ ເປັນເປົ້າໝາຍ ຈະລວມເອົາການປະເມີນ ບົດບາດຍິງຊາຍ, ເພື່ອເຂົ້າໃຈ ໂອກາດທີ່ສຳ ຄັນ ແລະ ສິ່ງທ້າທາຍ ສຳລັບ ແມ່ຍິງ. ຮັບປະກັນວ່າ ການປົກສາຫາລືຂັ້ນບ້ານ ກ່ຽວກັບ ການລົງທຶນທີ່ມີທ່າແຮງ ຈາກ ພາກເອກະຊົນ ເຂົ້າໃນການເຮັດກະສິກຳ ແລະ ປ່າໄມ້ແບບປະສົມປະສານ ທີ່ອາໃສ ຊຸມຊົນ ເຮັດໃຫ້ ຊາວບ້ານໝົດທຸກຄົນ ເຂົ້າ		

#	ຄຳຄິດເຫັນ ແລະ/ຫຼື ຄຳແນະນຳ ຂອງຜູ້ມີສ່ວນກ່ຽວຂ້ອງ	ມັນຖືກເຊື່ອມໂຍງເຂົ້າໃນແຜນປະຕິບັດງານບົດບາດຍິງຊາຍ ຂອງແຜນງານໄດ້ແນວໃດ:	ໝາກຜົນ/ກິດຈະກຳ ທີ່ກ່ຽວຂ້ອງ ຂອງແຜນງານ	ຈຳນວນ ມາດ ຕະການ ຕອບໂຕ້ ຢູ່ ໃນ GAP
		ຮ່ວມໃນການຕັດສິນໃຈກ່ຽວກັບການ ລົງທຶນ ແບບເທົ່າທຽມກັນ. ສຳລັບ ການເຂົ້າເຖິງ ຂອງແມ່ຍິງ ຕໍ່ການ ບໍລິການດັ່ງກ່າວ, ໃຫ້ເບິ່ງ ຄຳແນະນຳເພີ່ມ ຕື່ມ ໃນແຖວຂ້າງເທິງ.		
5	ແມ່ຍິງ ມັກຈະມີການເຂົ້າເຖິງທີ່ໜ້ອຍກວ່າ ຕໍ່ກັບ ຂະບວນການຕັດສິນໃຈ ແລະ ວາງ ແຜນ, ເຖິງແມ່ນວ່າຈະເປັນຜູ້ຊົມໃຊ້ທີ່ດິນ ປ່າໄມ້ຕົ້ນຕໍ ກໍຕາມ.	ແຜນງານ ຈະຊ່ວຍ ສ້າງຄວາມເຂັ້ມແຂງ ແກ່ແມ່ຍິງ ໃຫ້ກາຍເປັນສະມາຊິກ ຂອງ ຄະນະຄຸ້ມຄອງປ່າໄມ້ບ້ານ ແລະ ອົງ ການຈັດຕັ້ງຂັ້ນບ້ານອື່ນໆ ທີ່ທຳການ ຕັດສິນໃຈ ໃນລະດັບທ້ອງຖິ່ນ. ແຜນງານ ຈະສະໜັບສະໜູນ ການສ້າງບົດແນະນຳ ທີ່ ຄະນະຄຸ້ມຄອງປ່າໄມ້ບ້ານທ້ອງຖິ່ນ ສ້າງ ຄວາມເຂັ້ມແຂງ ບົດບາດຍິງຊາຍ ແລະ ການລວມເອົາສັງຄົມ. ມັນຈະສືບຕໍ່ ຮັບປະກັນ ໃຫ້ບົດບາດຍິງ ຊາຍ ມີທົ່ວທຸກຂະແໜງການ ຢູ່ທົ່ວ ອົງ ປະກອບ ແລະ ວັດຖຸອຸປະກອນການຝຶກ ອົບຮົມທັງໝົດ ແລະ ຈະຊຸກຍູ້ການຄຳນຶງ ເຖິງເພດ ສຳລັບຍິງ ແລະ ຊາຍ.	ໝົດທຸກກິດ ຈະກຳ ທີ່ຢູ່ ພາຍໃນໝ າກຜົນ 2 ແລະ ໝາກ ຜົນ 3	(1-14) (16-19) (20) (21) (22) (23) (24-16) (27-30)
6	ແມ່ຍິງ ມັກຈະຮູ້ ປ່າໄມ້ ດີກວ່າຜູ້ຊາຍ, ແຕ່ ມັກຈະບໍ່ໄດ້ເຂົ້າຮ່ວມ ຢູ່ໃນການຕົດຕາມ ຫຼື ການບັງຄັບໃຊ້ກົດໝາຍ/ການລາດຕະເວນ ຍ້ອນຫຼາຍເຫດຜົນ (ເຊັ່ນ ທຳນິບທຳນຽມ ທາງວັດທະນາທຳ, ເປັນແຮງງານທີ່ບໍ່ໄດ້ ຈ້າງ/ມີຄວາມຮັບຜິດຊອບຕໍ່ຄອບຄົວ, ມີ ລະດັບການສຶກສາຕ່ຳ). ແຕ່ເຖິງຢ່າງໃດກໍ ຕາມ, ແມ່ຍິງ ຄວນຈະໄດ້ມີການເຂົ້າຮ່ວມ ຫຼາຍຂຶ້ນ ຢູ່ໃນກິດຈະກຳເຫຼົ່ານີ້ (ຖ້າວ່າ ກິດ ຈະກຳ ຫາກມີຄວາມປອດໄພ ແລະ ຢູ່ໃກ້ ບ້ານ). ແມ່ຍິງ ຄວນຈະໄດ້ຮັບການປຶກສາ ຫາລື ຢ່າງເຕັມເມັດເຕັມໜ່ວຍ ກ່ຽວກັບ ບັນດາກິດຈະກຳລາດຕະເວນ.	ທົບທວນ ທ່າແຮງ ສຳລັບກຸ່ມລາດຕະເວນ ທີ່ອາໃສຊຸມຊົນ ແລະ ນຳພາໂດຍແມ່ຍິງ[84], ແລະ ສະໜັບສະໜູນ ການສ້າງສັນ ຂອງ ເຂົາເຈົ້າ ດ້ວຍການສ້າງຄວາມອາດສາມາດ ແລະ ປູກຈິດສຳນຶກ.	ກິດຈະກຳ 1.2.1, 3.1.1	(1-14) (16-19) (20) (21) (22) (23) (27-30)

[84] ນຳພາໂດຍແມ່ຍິງ ໝາຍຄວາມວ່າ ກຸ່ມຕ່າງໆ ຖືກຈັດຕັ້ງ ແລະ ນຳພາໂດຍແມ່ຍິງ, ແຕ່ເຖິງຢ່າງໃດກໍຕາມ ມັນບໍ່ໝາຍຄວາມວ່າ ການເຂົ້າຮ່ວມ ແມ່ນມີແຕ່ແມ່ຍິງ. ກຸ່ມເຫຼົ່ານີ້ ສາມາດ ເປັນກຸ່ມລາດຕະເວນ ທີ່ປະສົມປະສານກັນ, ແຕ່ແນວໃດກໍ່ຕາມ, ຫົວໜ້າ ແລະ ຜູ້ຈັດຕັ້ງກຸ່ມ ສ່ວນໃຫຍ່ ຄວນຈະເປັນແມ່ຍິງ.

#	ຄຳຄິດເຫັນ ແລະ/ຫຼື ຄຳແນະນຳ ຂອງຜູ້ມີສ່ວນກ່ຽວຂ້ອງ	ມັນຖືກເຊື່ອມໂຍງເຂົ້າໃນແຜນປະຕິບັດງານບົດບາດຍິງຊາຍ ຂອງແຜນງານໄດ້ແນວໃດ:	ໝາກຜົນ/ກິດຈະກຳ ທີ່ກ່ຽວຂ້ອງ ຂອງແຜນງານ	ຈຳນວນ ມາດ ຕະການ ຕອບໂຕ້ ຢູ່ ໃນ GAP
	ຄວາມປອດໄພ ຈະຕ້ອງໄດ້ຮັບການ ພິຈາລະນາ ຢ່າງໃກ້ຊິດ ສຳລັບ ການ ລາດຕະເວນປ່າໄມ້ ເນື່ອງຈາກວ່າ ມັນມັກຈະ ເປັນກິດຈະກຳທີ່ອັນຕະລາຍ ແລະ ອາດຈະຢູ່ ໃກ ຈາກໝູ່ບ້ານ.			
7	ສຳລັບ ການຕິດຕາມ ແລະ ບັງຄັບໃຊ້ກົດໝາຍ, ເຖິງແມ່ນວ່າ ແມ່ຍິງຈະມີຄວາມຮູ້ທີ່ ເລິກເຊິ່ງ ກ່ຽວກັບປ່າໄມ້ກຳຕາມ, ເຂົາເຈົ້າ ມັກຈະບໍ່ໄດ້ເຂົ້າຮ່ວມ ຢູ່ໃນກິດຈະກຳ ການ ຕິດຕາມ. ແມ່ຍິງຄວນຈະໄດ້ຮັບການຜັກດັນ ໃຫ້ເຂົ້າຮ່ວມ ແລະ ປຶກສາຫາລື ກ່ຽວກັບ ການຕິດຕາມປ່າໄມ້.	ສວຍໃຊ້ ຄວາມຮູ້ທີ່ກວ້າງຂວາງ ຂອງ ແມ່ຍິງພາຍໃນທ້ອງຖິ່ນ ກ່ຽວກັບປ່າໄມ້ຊຸມ ຊົນ ໃນການເຮັດໃຫ້ເຂົາເຈົ້າ ເປັນໃຈກາງທີ່ ສຳຄັນ ຂອງການປະກອບສ່ວນຈາກຊຸມຊົນ ຕໍ່ ລະບົບການຕິດຕາມປ່າໄມ້ແຫ່ງຊາດ. ສິ່ງ ດັ່ງກ່າວນີ້ ລວມມີ ກົນໄກທີ່ຕອບສະໜອງ ທາງດ້ານບົດບາດຍິງຊາຍ ສຳລັບ ການ ຕິດຕາມ ຂອງຊຸມຊົນ ຢູ່ໃນລະບົບຕິດຕາມ ປ່າໄມ້ແຫ່ງຊາດ.	ກິດຈະກຳ 2.1	(6) (7) (27-28) (29-30)
8	ໄດ້ກ່າວໄວ້ ຢູ່ໃນການປຶກສາຫາລື ວ່າ ແມ່ຍິງ ມັກຈະຮູ້ຫຼາຍກວ່າຜູ້ຊາຍ ກ່ຽວກັບ ການຕະຫຼາດ ໃນຄະນະທີ່ ຜູ້ຊາຍມັກຈະໄດ້ ເຂົ້າຮ່ວມ ໃນກິດຈະກຳຕ່າງໆ ທີ່ຕ້ອງການ ແຮງງານໜັກ ຫຼາຍກວ່າ. ເມື່ອເປັນເຊັ່ນນັ້ນ , ມັນຈົງສຳຄັນ ສຳລັບ ການປະເມີນຕ່ອງໂສ້ ຄຸນຄ່າ ທີ່ດຳເນີນ ຢູ່ພາຍໃນ ກອບຂອງແຜນ ງານ ທີ່ ບັນຫາກ່ຽວຂ້ອງກັບບົດບາດຍິງຊາຍ ຖືກພິຈາລະນາ ຢູ່ພາຍໃນ ການປະເມີນຕ່ອງ ໂສ້ຄຸນຄ່າ ທີ່ລວມມີ ໂອກາດ ຕົ້ນຕໍ ສຳລັບ ແມ່ຍິງ ໃນການສ້າງຄວາມເຂັ້ມແຂງ ແກ່ ບົດບາດ ແລະ ຄວາມອາດສາມາດຂອງ ເຂົາເຈົ້າ.	ແຜນງານ ຈະຮັບປະກັນວ່າ ການປະເມີນ ບົດບາດຍິງຊາຍ ຖືກເຊື່ອມໂຍງ ຢູ່ໃນທຸກໆ ການວິເຄາະ ສຳລັບ ການເຮັດກະສິກຳ ແບບໃໝ່ ທີ່ມີທ່າແຮງ ແລະ ຕ່ອງໂສຄຸນຄ່າ ທີ່ຖືກນຳໃຊ້ ໂດຍ ແຜນງານ. ການສຶກສາ ຄວາມເປັນໄປໄດ້ທັງໝົດ ສຳລັບ ການສ້າງ ຕ່ອງໂສ້ຄຸນຄ່າ ຫຼື ການເຮັດກະສິກຳແບບໃ ໝ່ ຄວນທົບທວນຄືນ ຜົນກະທົບທີ່ໄດ້ປະ ເມີນກ່ຽວກັບບົດບາດຍິງຊາຍ ຂອງການ ປ່ຽນແປງທີ່ຕ້ອງການ (ການເຂົ້າເຖິງ, ຄວາມຕ້ອງການຈຳເປັນ, ອຸປະສັກ, ທ່າແຮງ , ຈຳນວນວຽກ, ຜົນປະໂຫຍດ).	ກິດຈະກຳ 2.1.1 ແລະ 2.1.2	(2) (7) (9) (8) (20-26)

ສະຫລຸບຜົນຈາກການປຶກສາຫາລືທຸກພາກສ່ວນທີ່ກ່ຽວຂ້ອງສຳລັບ ໂຄງການ 2

ເພື່ອການປັບປຸງເອກະສານກ່ຽວກັບ ມາດຕາການປົກປ້ອງ ໃນໄລຍະກະກຽມໂຄງການ 2, ການປຶກສາຫາລືພາກສະໜາມ ໄດ້ດຳເນີນຢູ່ແຂວງອຸດົມໄຊ, ຫຼວງພະບາງ ແລະ ໄຊຍະບູລີ ໃນລະຫວ່າງວັນທີ 13 ຫາ 26 ມີນານີ້. ໃນຂັ້ນເມືອງ, ບັນດາອົງການລັດຖະບານ, ສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດ ໄດ້ເຂົ້າຮ່ວມການປຶກສາຫາລື. ນອກຈາກນັ້ນ, ຍັງໄດ້ມີການສຳພາດພາກເອກະຊົນ, ລວມທັງການປຶກສາຫາລືກັບຜູ້ມີສ່ວນກ່ຽວຂ້ອງ 39 ພາກສ່ວນ ຈາກວິສາຫະກິດກະສິກຳ-MSMEs, ຜູ້ເກັບເຄື່ອງປ່າຂອງດົງ ແລະ ຜະລິດຕະພັນກະສິກຳ ແລະ ໂຮງງານປຸງແຕ່ງ. ນອກຈາກນັ້ນ, ຍັງໄດ້ມີການສຳພາດອົງການຈັດຕັ້ງທາງສັງຄົມ (CSO) ຈຳນວນໜຶ່ງ, ແລະ ໄດ້ດຳເນີນກອງປະຊຸມຂັ້ນແຂວງ ແລະ ຂັ້ນແຂວງ (ທັງໝົດ 6 ແຂວງ) ຕື່ມອີກ. ການປຶກສາຫາລື ກັບອົງການຈັດຕັ້ງທາງສັງຄົມ ລວມມີອົງການຈັດຕັ້ງທີ່ສຸມໃສ່ຫົວຂໍ້ບົດບາດຍິງຊາຍ ແລະ ສິດທິຂອງແມ່ຍິງ (ສະມາຄົມພັດທະນາບົດບາດຍິງຊາຍ (GDA) ແລະ ສະມາຄົມເພື່ອການພັດທະນາແມ່ຍິງ ແລະ ການສຶກສາທາງດ້ານກົດໝາຍ (ADWLE)). ລວມທັງໝົດ 543 ຄົນ (ຍິງ 30%) ໄດ້ປະກອບສ່ວນໃນການປຶກສາຫາລື. ພາກສ່ວນຕໍ່ໄປນີ້ ຈະໃຫ້ຮູ້ກ່ຽວວັກບພາບລວມຂອງຄຳຄິດເຫັນ ແລະ ຄຳແນະນຳທີ່ເກັບກຳໃນລະຫວ່າງ ການເຮັດວຽກພາກສະໜາມສຳລັບໂຄງການ 2.

ການປຶກສາຫາລືສະແດງ ໃຫ້ເຫັນວ່າແມ່ຍິງໄດ້ເຂົ້າຮ່ວມກິດຈະກຳທີ່ດຳເນີນພາຍໃຕ້ໂຄງການ 1. ມີລາຍງານທົ່ວໄປວ່າແມ່ຍິງ ມີໂອກາດເທົ່າທຽມກັນໃນການມີສ່ວນຮ່ວມ ແລະ ໄດ້ຮັບຜົນປະ�โยດຈາກໂຄງການ. ໃນບາງບ້ານ, ໄດ້ມີການເນັ້ນໃຫ້ແມ່ຍິງ ມີການປັບປຸງດ້ານຄວາມຮູ້ ກ່ຽວກັບປ່າໄມ້ທ້ອງຖິ່ນ ເຊິ່ງຄວນໄດ້ຮັບຄວາມເອົາໃຈໃສ່ ຈາກຜູ້ຈັດຕັ້ງປະຕິບັດໂຄງການ. ດ້ວຍໂຄງການ 1, ແມ່ຍິງໄດ້ມີສ່ວນຮ່ວມໂດຍສະເພາະ ໃນການບັງຄັບໃຊ້ກົດໝາຍ ແລະ ເຂົ້າຮ່ວມໃນຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ ແລະ ກຸ່ມລາດຕະເວນປ່າໄມ້ໃນລະດັບບ້ານ. ໂຄງການດັ່ງກ່າວ ໄດ້ຖືກພົບເຫັນວ່າ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານ ການຄຸ້ມຄອງປ່າໄມ້ໃນລະດັບທ້ອງຖິ່ນ ໂດຍສະເພາະແມ່ຍິງທີ່ມີຄວາມເຂົ້າໃຈດີຂຶ້ນກ່ຽວກັບບົດບາດຍິງ-ຊາຍ.

ຄວາມສຳຄັນສຳລັບໂຄງການ GCF

ຕາຕະລາງ 1. ສັງລວມບັນດາຄຳເຫັນ (ໂຄງການ 2)

ຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ/ຂໍ້ສະເໜີແນະ	ວິທີການເຊື່ອມສານໃສ່ແຜນການຈັດຕັ້ງປະຕິບັດບົດບາດຍິງ-ຊາຍ ຂອງໂຄງການ	ໝາກຜົນ/ກິດຈະກຳ ກຳທີ່ກ່ຽວຂ້ອງ ຂອງໂຄງການ	ມາດຕາການທີ່ ສອດຄ່ອງກັນກັບ ແຜນການຈັດຕັ້ງ ປະຕິບັດບົດບາດ ຍິງ-ຊາຍ
ແມ່ຍິງຮູ້ຈັກປ່າໄມ້ດີ. ແມ່ຍິງມັກໄປປ່າເພື່ອຊອກຫາຜະລິດຕະພັນຈາກປ່າ ເພື່ອບໍລິໂພກ ແລະ ຂາຍຕາມທ້ອງຕະຫຼາດ, ແລະ ເຂົາເຈົ້າມີຄວາມຮູ້ດີ ກ່ຽວກັບສະພາບ ຂອງຊັບພະຍາກອນຕ່າງໆ. ນອກຈາກນັ້ນ, ແມ່ຍິງຍັງໄດ້ສະແດງໃຫ້ເຫັນຄວາມ ສົນໃຈໃນການຮັກສາປ່າໄມ້ຢ່າງກວ້າງຂວາງ. ແມ່ຍິງສ່ວນຫຼາຍໄປປ່າເພື່ອຫາຫໍ່ໄມ້, ຜັກກາດ, ຫໍ່ຫວາຍ, ຫໍ່ໄມ້, ໝາກແໜ່ງ, ແລະ ພືດສະໝຸນໄພເພື່ອບໍລິໂພກ ແລະ ຂາຍ. ແມ່ຍິງມັກໄປປ່າຊອກຫາຜະລິດຕະ ພັນປ່າໄມ້ຫຼາຍກວ່າຜູ້ຊາຍ.	GAP ໄດ້ກຳນົດໄວ້ວ່າ ບົດແນະນຳໃຫມ່ທີ່ຖືກພັດທະນາພາຍ ໃຕ້ໂຄງການ ຄວນພິຈາລະນາບົດບາດຍິງຊາຍ ເປັນປັດໃຈສຳຄັນ ໃນການປົກປ້ອງປ່າໄມ້, ການຕິດຕາມ, ສິດຜູ້ໃຊ້ເທົ່າທຽມກັນ, ແລະ ການແບ່ງປັນຜົນປະໂຫຍດ, ເຊັ່ນດຽວກັນກັບການຄຸ້ມ ຄອງຊັບພະຍາກອນ.	ກິດຈະກຳ 1.2.2, 3.1.1 ແລະ 3.1.2	(3) (7) (8) (27-30)
ໂດຍທົ່ວໄປແລ້ວ ແມ່ຍິງຈະມີສ່ວນຮ່ວມໃນການນຳໃຊ້ປ່າໄມ້ ແລະ ທີ່ດິນຫຼາຍກວ່າ ຜູ້ຊາຍ ເນື່ອງຈາກເຂົາເຈົ້າມັກຊອກຫາຊັບພະຍາກອນປ່າໄມ້ເພື່ອບໍລິໂພກ ແລະ ຂາຍ ໃນຕະຫຼາດ ແລະ ຈະໄດ້ຮັບຮູ້ລາຍລະອຽດຫຼາຍຢ່າງກ່ຽວກັບສະພາບຂອງ ຊັບພະຍາກອນ. ນອກຈາກນັ້ນ, ແມ່ຍິງຍັງໄດ້ສະແດງຄວາມສົນໃຈໃນການປົກປ້ອງ ປ່າໄມ້ຢ່າງກວ້າງຂວາງ.	ເບິ່ງຫົວຂໍ້ 5 ໃນ **Error! Reference source not found.**	-	-
ແມ່ຍິງມີສິດເທົ່າທຽມກັບຜູ້ຊາຍ ໃນການເຂົ້າຮ່ວມກອງປະຊຸມເພື່ອສົນທະນາ, ການ ຕັດສິນໃຈ, ແລະ ສະແດງຄຳຄິດເຫັນກ່ຽວກັບວຽກງານ. ເຖິງວ່າຈະມີຄວາມຈິງທີ່ວ່າ ແມ່ຍິງ ມີສິດເທົ່າທຽມກັບຜູ້ຊາຍ ແລະ ສ່ວນໃຫຍ່ ແມ່ນໃຊ້ພື້ນທີ່ປ່າໄມ້ສຳລັບ	ເບິ່ງຫົວຂໍ້ 3 ໃນ **Error! Reference source not found.**	-	-

ຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ/ຂໍ້ສະເໜີແນະ	ວິທີການເຊື່ອມສານໃສ່ແຜນການຈັດຕັ້ງປະຕິບັດບົດບາດຍິງ-ຊາຍ ຂອງໂຄງການ	ໝາກຜົນ/ກິດຈະກຳ ກຳທີ່ກ່ຽວຂ້ອງ ຂອງໂຄງການ	ມາດຕາການທີ່ສອດຄ່ອງກັນກັບ ແຜນການຈັດຕັ້ງ ປະຕິບັດບົດບາດ ຍິງ-ຊາຍ
ການດຳລົງຊີວິດ, ແຕ່ການຈະມີສ່ວນຮ່ວມໃນການຕັດສິນໃຈຫຼືການວາງແຜນອື່ນໆ ຍັງຂ້ອນຂ້າງຈຳກັດ. (ເຖິງຢ່າງໃດກໍຕາມ, ສະພາບດັ່ງກ່າວມີຄວາມແຕກຕ່າງກັນ ຕາມແຕ່ລະບ້ານ ຄືໃນ ບ້ານບາງບ້ານທີ່ໄດ້ສອບຖາມ, ແມ່ຍິງເປັນອົງປະກອບທີ່ສຳຄັນຂອງການຕັດສິນໃຈ ຕົ້ນຕໍໃນການປູກຝັງ ແລະ ທຸລະກິດອື່ນໆ, ໂດຍມີແມ່ຍິງສ່ວນໃຫຍ່ເປັນຜູ້ຈັດການ).			
ຍ້ອນ ພາລະທີ່ບັງຄັບຈາກສະພາບຄອບຄົວ ຈຶ່ງເຮັດໃຫ້ແມ່ຍິງບໍ່ສາມາດ ເຮັດວຽກ ແບບດຽວກັນກັບຜູ້ຊາຍໄດ້ ໂດຍສະເພາະ ໃນການຄຸ້ມຄອງປ່າໄມ້ ແລະ ກະສິກຳ.	ພະນັກງານສົ່ງເສີມ ແລະ ຄູຝຶກ ແມ່ນໄດ້ຮັບການຝຶກອົບຮົມ ກ່ຽວກັບການສົ່ງເສີມບົດບາດຍິງ-ຊາຍ, ແລະ ການມີສ່ວນຮ່ວມ ໃນສັງຄົມ ເພື່ອຮັບຮູ້ເຂົ້າເຈົ້າຕໍ່ກັບສິ່ງທ້າທາຍທີ່ແມ່ຍິງປະເຊີນ. ຜູ້ຊ່ຽວຊານດ້ານບົດບາດຍິງຊາຍ ທົບທວນຄືນຊຸດການຝຶກ ອົບຮົມທັງໝົດ (ວັດສະດຸ, ຫຼັກສູດ, ແລະ ອື່ນໆ) ເພື່ອຮັບປະກັນ ການເຂົ້າເຖິງຂອງແມ່ຍິງ. ມັນເປັນເປົ້າໝາຍຂ້າມຜ່ານຂອງ GAP ທີ່ຄວາມສຳຄັນທາງດ້ານບົດບາດຍິງຊາຍ ແລະ ຄວາມ ສົນໃຈຂອງແມ່ຍິງ ແມ່ນໄດ້ຖືກຮັບປະກັນໃນໂຄງການ. ໂຄງການດັ່ງກ່າວ ຈະພິຈາລະນາສິ່ງທ້າທາຍສະເພາະຂອງແມ່ຍິງ ໃນເວລາສົ່ງເສີມການປະຕິບັດດ້ານກະສິກຳ ແລະ ເຕັກໂນ�โลຊີ.	ທຸກຂະແໜງການ	(3) (10) (11) (22)
ມີສິ່ງທ້າທາຍບາງຢ່າງທີ່ແມ່ຍິງ ແລະ ທຸລະກິດທີ່ແມ່ຍິງເປັນເຈົ້າຂອງ ຫຼື ນຳພາໄດ້ ພົບພໍ້ ລວມມີ ການຂາດແຮງງານຕົ້ນຕໍໃນຄົວເຮືອນຂອງເຂົາເຈົ້າ.	ໂຄງການດັ່ງກ່າວ ຈະສົ່ງເສີມທຸລະກິດຂອງແມ່ຍິງໂດຍການ ສົ່ງເສີມການມີສ່ວນຮ່ວມຂອງເຂົາເຈົ້າ ໃນກິດຈະກຳສົ່ງເສີມ ກະສິກຳ PSAP. ຢ່າງໜ້ອຍ 7% ຂອງຄົວເຮືອນທີ່ເຂົ້າຮ່ວມ	ທັງໝົດ ໂດຍ ສະເພາະ ໝາກຜົນ ທີ 2	(21) (22)

ຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ/ຂໍ້ສະເໜີແນະ	ວິທີການເຊື່ອມສານໃສ່ແຜນການຈັດຕັ້ງປະຕິບັດບົດບາດຍິງ-ຊາຍ ຂອງໂຄງການ	ໝາກຜົນ/ກິດຈະກຳ ກຳທີ່ກ່ຽວຂ້ອງ ຂອງໂຄງການ	ມາດຕາການທີ່ ສອດຄ່ອງກັນກັບ ແຜນການຈັດຕັ້ງ ປະຕິບັດບົດບາດ ຍິງ-ຊາຍ
	ກິດຈະກຳສົ່ງເສີມກະສິກຳຂອງ PSAP ແລະ ໄດ້ຮັບການສະໜັບສະໜູນແມ່ນເປັນຄົວເຮືອນ ທີ່ແມ່ຍິງນຳພາ.		
ການສື່ສານທີ່ຊັດເຈນ ຄວນໄດ້ຮັບການຮັບປະກັນໂດຍໂຄງການ. ແນະນຳໃຫ້ສ້າງ ຄວາມອາດສາມາດ ຂອງຜູ້ປະສານງານຂອງລັດຖະບານໃນດ້ານການສື່ສານ ແລະ ອຳນວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມຂອງແມ່ຍິງ, ເພາະວ່າຜູ້ປະສານງານ ຂອງລັດຖະບານມີໜ້າທີ່ໃນການປະກາດ ໃຫ້ແມ່ຍິງເຂົ້າຮ່ວມກິດຈະກຳຕ່າງໆ. ໂຄງການນີ້ ຄວນສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ຕົນເອງຂອງແມ່ຍິງ ແລະ ມີຄວາມເຊື່ອໝັ້ນໃນຕົນເອງຫລາຍຂຶ້ນ. ໂຄງການ ຄວນເຮັດວຽກຢ່າງໃກ້ຊິດກັບ ນາຍບ້ານ ແລະ ຕົວແທນແມ່ຍິງຂັ້ນບ້ານ ເພື່ອຮັບປະກັນການມີສ່ວນຮ່ວມຂອງ ແມ່ຍິງໃນໂຄງການ.	ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະການລວມເຂົ້າສັງຄົມ (GESI) ຖືກພິຈາລະນາເປັນອົງປະກອບຂ້າມຜ່ານ ແລະຈະຖືກ ນຳມາຖ່າຍທອດຜ່ານຜະລິດຕະພັນ/ວັດສະດຸທີ່ກ່ຽວຂ້ອງກັບ ໂຄງການ ແລະການຝຶກອົບຮົມ. ພະນັກງານວິຊາການຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ກົມກວດກາປ່າໄມ້ ແລະ ສະຫະພັນແມ່ຍິງເມືອງ ຈະໄດ້ຮັບການ ຝຶກອົບຮົມກ່ຽວກັບບັນຫາບົດບາດຍິງຊາຍ.	ທຸກຂະແໜງການ	(1) (3) (6) (10) (16) ທຸກຂະແໜງການ
ຄະນະກຳມະການໃນລະດັບຕ່າງໆ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດໂຄງການ ຄວນປະກອບດ້ວຍສະມາຊິກທີ່ເປັນແມ່ຍິງ ໂດຍສະເພາະຂັ້ນເມືອງ ແລະ ຂັ້ນບ້ານ.	LWU ແມ່ນສ່ວນຫນຶ່ງ ຂອງຄະນະກຳມະການຊີ້ນຳທຸກລະດັບ ແລະ ຍັງມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ. ສຳລັບຂັ້ນບ້ານ, ໂຄງການໄດ້ເນັ້ນໃສ່ການມີສ່ວນຮ່ວມຂອງແມ່ຍິງ ສຳລັບຄະນະ ກຳມະການຕ່າງໆ. ຕົວຢ່າງ, ສຳລັບຄະນະກຳມະການຄຸ້ມຄອງປ່າ ຂອງບ້ານ ໂດຍມີໂກຕ້າ 30% ຂອງຈຳນວນສະມາຊິກທັງໝົດ;	ກິດຈະກຳ 2.1.2 ແລະ 3.1.1	(3) (13) (17-19) (21) (22) (23) (28)
ໂຄງການຄວນຮັບປະກັນໃຫ້ມີການຝຶກອົບຮົມເປັນພາສາທ້ອງຖິ່ນ ແລະ ສະໜອງ ນາຍພາສາຖ້າຈຳເປັນ. ສິ່ງທ້າທາຍສ່ວນໃຫຍ່ ຕໍ່ການມີສ່ວນຮ່ວມຂອງແມ່ຍິງ	ໂຄງການໄດ້ຮັບຮູ້ເຖິງສິ່ງທ້າທາຍນີ້ ແລະ ຈະຮັບປະກັນວ່າມີນາຍ ພາສາ ຖ້າຈຳເປັນ. ແຜນຜັດທະນາຊົນເຜົ່າໄດ້ເນັ້ນໜັກວ່າ ຈະມີ	ທຸກຂະແໜງການ	ທຸກຂະແໜງການ

ຄຳເຫັນຂອງພາກສ່ວນທີ່ກ່ຽວຂ້ອງ/ຂໍ້ສະເໜີແນະ	ວິທີການເຊື່ອມສານໃສ່ແຜນການຈັດຕັ້ງປະຕິບັດບົດບາດຍິງ-ຊາຍ ຂອງໂຄງການ	ໝາກຜົນ/ກິດຈະກຳ ກ່ຽວຂ້ອງ ຂອງໂຄງການ	ມາດຕາການທີ່ສອດຄ່ອງກັນກັບ ແຜນການຈັດຕັ້ງ ປະຕິບັດບົດບາດ ຍິງ-ຊາຍ
ບັນດາເຜົ່າແມ່ນການສື່ສານ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ ເນື່ອງຈາກເປັນ ອຸປະສັກທາງດ້ານພາສາ ໂດຍສະເພາະຊົນເຜົ່າມົ້ງ ແລະ ລາຫູ.	ການສະໜັບສະໜູນການແປພາສາ, ແລະ ເອກະສານທີ່ສຳຄັນຈະ ຖືກສະໜອງໃຫ້ເປັນພາສາທ້ອງຖິ່ນ, ເໝາະສົມ. ໂຄງການ 1 ໄດ້ສັງລວມປະສົບການ ແລະ ການຕິດຕາມການນຳໃຊ້ພາສາ ທ້ອງຖິ່ນ. ສິ່ງດັ່ງກ່າວໄດ້ຢັ້ງຢືນວ່າ ພາສາທ້ອງຖິ່ນໄດ້ຖືກນຳໃຊ້ ໃນກອງປະຊຸມບ້ານກ່ຽວກັບທຸກກິດຈະກຳ (ລວມທັງ FPIC) ໃນບ້ານທີ່ກ່ຽວຂ້ອງ. ໂຄງການ 2 ຈະສ້າງປະສົບການນີ້ ແລະ ຮັບປະກັນການເຂົ້າເຖິງທຸກກິດຈະກຳ.		
ຄວາມຮູ້ທ້ອງຖິ່ນ ແລະ ແບບດັ້ງເດີມຄວນຖືກບັນທຶກໄວ້, ແບ່ງປັນ, ແລະ ຂະຫຍາຍ ຂຶ້ນໂດຍອີງໃສ່ສະຖານທີ່ທີ່ເຫມາະສົມ. ແມ່ຍິງຮູ້ວິທີການນຳໃຊ້ເຄື່ອງປ່າຂອງດົງ, ສະນັ້ນ ຈຶ່ງລວມເອົາພວກເຂົາ ຢູ່ໃນຄະນະກຳມາທິການປ່າໄມ້ບ້ານ. ແຕ່ລະຊົນເຜົ່າ ສ່ວນໜ້ອຍລ້ວນແຕ່ມີຄວາມຮູ້ ແລະ ຄວາມສາມາດດັ້ງເດີມຂອງຕົນ. ຄວາມຮູ້ ແລະ ຄວາມສາມາດນີ້ຄວນຈະຖືກລະບຸໄວ້ ແລະ ລະດົມ ເພື່ອສະໜັບສະໜູນການຈັດຕັ້ງ ປະຕິບັດໂຄງການ.	ການຄຸ້ມຄອງ ແລະ ພັດທະນາເຄື່ອງປ່າຂອງດົງ ຈະຖືກສົ່ງເສີມ ພາຍໃຕ້ກິດຈະກຳ 3.1.1 ກ່ຽວກັບການຄຸ້ມຄອງປ່າຂອງບ້ານ. ໂຄງການດັ່ງກ່າວຈະຮັບປະກັນ ການມີສ່ວນຮ່ວມຢ່າງຍຸດຕິທຳ ແລະ ການເຂົ້າເຖິງກິດຈະກຳເຫຼົ່ານີ້ສຳລັບແມ່ຍິງ ແລະ ຊົນເຜົ່າ.	ໝາກຜົນ 3 3	(27) (28)
ມີການຈຳກັດ ການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບກົດໝາຍ ແລະ ລະບຽບການ ກ່ຽວກັບການອະນຸລັກ ແລະ ການຄຸ້ມຄອງປ່າໄມ້ ແລະ ການນຳໃຊ້ທີ່ດິນແບບຍືນຍົງ ທີ່ມີໃຫ້ແກ່ຊາວບ້ານ, ລວມທັງຊົນເຜົ່າ. ຂໍ້ມູນ ແລະ ການສຶກສາທີ່ເໝາະສົມສຳລັບ ແມ່ຍິງຊົນເຜົ່າ ແລະ ຊົນເຜົ່າຄວນຖືກພັດທະນາ ແລະ ແຈກຢາຍຢ່າງທົ່ວເຖິງ, ເຊັ່ນ: ເນື້ອໃນກົດໝາຍວ່າດ້ວຍປ່າໄມ້ ຫຼື ທີ່ດິນ.	ຊຸມຊົນບ້ານ ພາຍໃຕ້ຜົນໄດ້ຮັບ 3 ຈະໄດ້ຮັບການຝຶກອົບຮົມ ຈາກພະນັກງານລັດ ທີ່ມີຄວາມສາມາດໃນການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ (ບ້ານ). ກິດຈະກຳນີ້ຈະ ປະກອບມີການພັດທະນາຂໍ້ມູນຂ່າວສານທີ່ເຫມາະສົມ ແລະ ອຸປະກອນການສຶກສາ.	ໝາກຜົນ 3	(16) (19)

4. ຄວາມສຳຄັນຂອງບົດບາດຍິງ-ຊາຍ, ຄວາມຊຳນານ ແລະ ຄວາມເທົ່າທຽມກັນທາງເພດພາຍໃນອົງການຈັດຕັ້ງຂອງຄູ່ຮ່ວມງານພາກລັດ

ຄູ່ຮ່ວມຈັດຕັ້ງປະຕິບັດຫຼັກຂອງໂຄງການ GCF ທີ່ໄດ້ວາງແຜນໄວ້ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ (MAF) ແລະ EPF (ຄຸ້ມຄອງກອງທຶນ REDD+ ແຫ່ງຊາດ).
ພະນັກງານສ່ວນໃຫຍ່ - ໂດຍສະເພາະໃນລະດັບອາວຸโส - ພາຍໃນພະແນກການ ແລະ ພະແນກທີ່ຮັບຜິດຊອບ, ລວມທັງຫ້ອງການປະສານງານ REDD+, ແມ່ນຜູ້ຊາຍ. ດັ່ງນັ້ນ, ມີຄວາມບໍ່ສົມດຸນລະຫວ່າງເພດທົ່ວໄປ ໃນລະດັບຄູ່ຮ່ວມງານ. ຄວາມບໍ່ສົມດຸນນີ້ ນັບມື້ນັບຮ້າຍແຮງຂຶ້ນຢູ່ຂັ້ນແຂວງ ແລະ ເມືອງ. ດັ່ງທີ່ກ່າວມາຂ້າງເທິງ, ກົມຄຸ້ມຄອງແຮງງານ ຄວນພະຍາຍາມຈ້າງ ແລະ ສົ່ງເສີມແມ່ຍິງໃຫ້ຫຼາຍຂຶ້ນເຂົ້າໃນພະແນກຂອງຕົນ ເພື່ອເພີ່ມຈຳນວນແມ່ຍິງໃນວຽກງານອະນຸລັກໃຫ້ໄດ້ຢ່າງໜ້ອຍ 30%. ຕົວເລກປະຈຸບັນບໍ່ສາມາດເຂົ້າເຖິງໄດ້.

ການເປັນຕົວແທນໃນທາງຕົວເລກ ແມ່ນບັນຫາຫນຶ່ງ; ການມີສ່ວນຮ່ວມຕົວຈິງຂອງພະນັກງານຍິງ ທີ່ເຮັດວຽກຢູ່ພະແນກຕ່າງໆແລ້ວ, ໂດຍສະເພາະແມ່ນພະນັກງານຍິງໜຸ່ມ ມັກຈະບໍ່ມີສ່ວນຮ່ວມຢ່າງຫ້າວຫັນໃນກອງປະຊຸມ. ນີ້ຍັງໄດ້ສັງເກດເຫັນໃນການສຳພາດ DAFO/DOFI ແຂວງ.

ຄວາມສຳຄັນສຳລັບໂຄງການ GCF ທີ່ໄດ້ວາງແຜນໄວ້

ນອກຈາກການສະໜັບສະໜູນ ບັນດາຄູ່ຮ່ວມມືໃນຂະບວນການຮັບສະໝັກ ແລະ ຍົກລະດັບພະນັກງານຍິງຢ່າງຕັ້ງໜ້າ, ໃນປະຈຸບັນ, ຄວາມສາມາດດ້ານເພດ ຂອງພະນັກງານລ້ວນແຕ່ຍັງຕ່ຳ. ໂຄງການ GCF ຄວນເນັ້ນຫນັກເຖິງຄວາມສຳຄັນ ຂອງບົດບາດຍິງຊາຍຢ່າງຈະແຈ້ງ ແລະ ຈາກຂັ້ນຕອນການອອກແບບຕະຫຼອດໄປຈົນເຖິງການປະເມີນຜົນຂອງກິດຈະກຳ. ໂດຍຮູ້ວ່າຄູ່ຮ່ວມງານເຮັດໄດ້ດີໂດຍສະເພາະ ໃນການຕອບສະຫນອງຕໍ່ການວິເຄາະປະລິມານຂອງຄ່າໃຊ້ຈ່າຍຂອງຄວາມບໍ່ສະເຫມີພາບລະຫວ່າງຍິງຊາຍ, ໂຄງການ GCF ສາມາດໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍ ຈາກການສຶກສາຄະນະກຳມະທີ່ໃຊ້ສຳລັບການສື່ສານຄູ່ຮ່ວມງານ ແລະ ມາດຕະການພັດທະນາຄວາມສາມາດ.
ການຝຶກອົບຮົມບົດບາດຍິງຊາຍ ສຳລັບຄູ່ຮ່ວມງານທີ່ກ່ຽວຂ້ອງທັງຫມົດ - ລວມທັງ LWU - ຄວນໄດ້ຮັບການສະຫນັບສະຫນູນ, ໂດຍເນັ້ນໃສ່ຂະຫນາດຂອງເພດຂອງຂະແຫນງປ່າໄມ້, ເຣດ+ ແລະ ລະບົບການກະສິກຳທີ່ທົນທານຕໍ່ດິນຟ້າອາກາດ ແລະ ການທຳລາຍປ່າໄມ້ແລະລະບົບຕ່ອງໂສ້ມູນຄ່າກະສິກຳ.

ສະຫະພັນແມ່ຍິງລາວ ບໍ່ໄດ້ຖືວ່າເປັນຄູ່ຮ່ວມມືປະຕິບັດໂດຍກົງ ແຕ່ຄວນໄດ້ຮັບການສະໜັບສະໜູນຈາກ ແຜນງານໃຫ້ຫຼາຍທີ່ສຸດ ເທົ່າທີ່ເປັນໄປໄດ້ ເພື່ອຊຸດເຊີຍ ການຂາດຄວາມສາມາດລະຫວ່າງຍິງຊາຍໃນປະຈຸບັນ ແລະ ເພື່ອຮັບປະກັນຄວາມໝັ້ນໃຈຕໍ່ ຄວາມສະເໝີພາບທາງເພດ (ເບິ່ງຕື່ມ. ບົດທີ 3.3).

5. ຄວາມສຳຄັນກ່ຽວກັບບົດບາດຍິງ-ຊາຍ ແລະ ຄວາມຮູ້ຄວາມຊຳນານ ຂອງໂຄງການ/ຂອງພະນັກງານໂຄງການພາຍໃນປະເທດ

ເນື່ອງຈາກໂຄງການ 2 ຍັງບໍ່ທັນໄດ້ເລີ່ມເທື່ອ, ບໍ່ມີຫຍັງສາມາດເວົ້າໄດ້ ກ່ຽວກັບການຕອບສະໜອງທາງເພດຂອງພະນັກງານໂຄງການທີ່ຍັງບໍ່ທັນຖືກຈ້າງງານ. ຢ່າງໃດກໍ່ຕາມ, ຈາກການຈັດຕັ້ງປະຕິບັດໂຄງການ 1 ຊຶ່ງເປັນຈະຜູ້ສືບຕໍ່ຂອງໂຄງການ 2, ສະນັ້ນຈຶ່ງສາມາດປະເມີນໄດ້.

ສຳລັບໂຄງການ 1, ໄດ້ມີການຈ້າງທີມງານທີ່ປຶກສາ ເພື່ອຮັບປະກັນວ່າການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມໄດ້ຖືກບັງຄັບໃຊ້ ແລະ ຕໍ່ກັບບົດບາດຍິງຊາຍ. ທີມງານປ້ອງກັນບົດບາດຍິງ-ຊາຍ ໄດ້ສຸມໃສ່ການເຊື່ອມສານບົດບາດຍິງ-ຊາຍ ແລະ ແຜນປະຕິບັດງານບົດບາດຍິງຊາຍ ເຂົ້າໃນຂະບວນການຕົວຈິງ, ກິດຈະກຳທີ່ກວ້າງຂວາງ ແລະ ທຸກລະບົບຂອງໂຄງການ.

ຫນຶ່ງໃນວຽກງານເບື້ອງຕົ້ນຂອງທີມງານ ແມ່ນ ຄວນທົບທວນຄືນວິທີການ ຫຼື ບົດແນະນຳທັງຫມົດ (ລະດັບບ້ານ) ແລະ ເພື່ອຮັບປະກັນການເຊື່ອມສານບົດບາດຍິງຊາຍເຂົ້າໃນບັນດາບົດແນະນຳດັ່ງກ່າວ. ນອກຈາກນີ້, ແຜນງົບປະມານລວມ ໄດ້ຖືກກວດກາຢ່າງລະອຽດ ກ່ຽວກັບຄວາມສ່ຽງທີ່ກ່ຽວຂ້ອງກັບບົດບາດຍິງຊາຍ, ສະຖານະພາບຊົນເຜົ່າ, ສະຖານະພາບຄວາມພິການ, ການຮູ້ຫນັງສື, ແລະ ແກນຂອງຄວາມອ່ອນແອອື່ນໆ, ແລະ ການປະຕິບັດທີ່ສະເຫນີ. ໃນລະຫວ່າງການວາງແຜນແຕ່ລະໄຕມາດ, ເຈົ້າຂອງໂຄງການ ທັງໝົດໄດ້ທົບທວນຄືນ ແລະ ປະເມີນຄວາມສ່ຽງ ແລະ ມາດຕະການຫຼຸດຜ່ອນທີ່ຊັກຊ້າ ຕໍ່ກັບປັດໄຈປະຕິບັດທີ່ໄດ້ວາງແຜນໄວ້.

ເມື່ອພັດທະນາລະບົບ, ESMP ແລະ ແຜນການປະຕິບັດບົດບາດຍິງຊາຍ ໄດ້ຖືກວິເຄາະຢ່າງລະອຽດໂດຍທີມງານມ ການປົກປ້ອງທາງສິ່ງແວດລ້ອມ ແລະ ສັງຄົມ, ແລະ ອົງປະກອບທີ່ສຳຄັນຂອງສິ່ງເຫຼົ່ານັ້ນ ໄດ້ຖືກລວມເຂົ້າໃນກິດຈະກຳ ແລະ ລະບົບການດຳເນີນງານຂອງໂຄງການ.

ການພິຈາລະນາບົດບາດຍິງຊາຍ ແມ່ນໄດ້ຖືກຝັງຢູ່ໃນພື້ນຖານຂອງວິທີການຂອງທຸກກິດຈະກຳຂັ້ນບ້ານ, ຕົ້ນຕໍແມ່ນ FPIC, ການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP), ແລະ ການຄຸ້ມຄອງປ່າໄມ້ບ້ານ ແລະ ການສົ່ງເສີມການປະຕິບັດກະສິກຳແບບຍືນຍົງ (PSAP) .

ຄວາມສຳຄັນ ສຳລັບໂຄງການ GCF ທີ່ໄດ້ວາງແຜນໄວ້

ໂຄງການ 2 ທີ່ໄດ້ວາງແຜນໄວ້ ຈະໄດ້ຖືກຈັດຕັ້ງປະຕິບັດ ໂດຍອີງໃສ່ປະສົບການຂອງໂຄງການ 1 ແລະ ສ້າງຕັ້ງທີມງານປົກປ້ອງ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມລະບົບການຄຸ້ມຄອງ ແລະ ການຄຸ້ມຄອງບົດບາດຍິງຊາຍຂອງໂຄງການ. ໂຄງການ ຄວນຈະຈ້າງທີ່ປຶກສາຢ່າງຫນ້ອຍຫນຶ່ງຄົນ ທີ່ມີຄວາມຮູ້ຢ່າງເລິກເຊິ່ງ ແລະ ປະສົບການການປະຕິບັດ ກ່ຽວກັບຄວາມສະເຫມີພາບລະຫວ່າງຍິງຊາຍ ແລະ ການໝຸນໃຊ້ໃນຂະແຫນງການອະນຸລັກ. ຕຳແຫນ່ງ ທີ່ວ່າງ ຄວນເຝັ້ນຫາຊ່ຽວຊານສະເພາະດ້ານ ຢ່າງຊັດເຈນ.

ເພື່ອຮັບປະກັນການເຊື່ອມໂຍງເຂົ້າກັບກິດຈະກຳທັງຫມົດ, ຕຳແຫນ່ງນີ້ ຄວນເປັນຕຳແຫນ່ງທີ່ປຶກສາດ້ານວິຊາການອາວຸໂສ ແທນທີ່ຈະເປັນບຸກຄະລາກອນຜູ້ຫນຸ່ມນ້ອຍ. ບຸກຄົນນີ້ຈະເຫມາະສົມທີ່ສຸດທີ່ຈະເປັນຈຸດປະສານງານທົ່ວໄປ ກ່ຽວກັບເລື່ອງບົດບາດຍິງຊາຍ ຂອງໂຄງການ ເພື່ອກວດກາເບິ່ງຄວາມພະຍາຍາມ ທີ່ຈະເສີມສ້າງບົດບາດຍິງ-ຊາຍ, ລວມທັງການຮັບຮູ້ທາງເພດສຳລັບທັງຍິງ ແລະ ຊາຍ.

ເຖິງຢ່າງໃດກໍ່ຕາມ, ທຸກຄົນພາຍໃນທີມ ໃຫ້ຄວາມສຳຄັນໃນການເຊື່ອມສານວຽກບົດບາດຍິງ-ຊາຍເຂົ້າໃນວຽກຂອງຂົງເຂດຂອງເຂົາເຈົ້າ ກໍ່ຖືວ່າສຳຄັນເຊັ່ນດຽວກັນ, ໂດຍສະເພາະພະນັກງານອາວຸໂສ ແລະ ພະນັກງານທີ່ຮັບຜິດຊອບໃນການຕິດຕາມ ແລະ ການປະເມີນຜົນ.

ຖ້າຫາກວ່າພະນັກງານໂຄງການບໍ່ມີຄວາມຮູ້ກ່ຽວກັບບົດບາດຍິງຊາຍ ພຽງພໍ, ໂຄງການຄວນລົງທຶນໃສ່ການຝຶກອົບຮົມທາງດ້ານເຕັກນິກກ່ຽວກັບບົດບາດຍິງ-ຊາຍ ເພື່ອແນໃສ່ ເຮັດໃຫ້ທີມງານສາມາດເຊື່ອມໂຍງບົດບາດຍິງ-ຊາຍເຂົ້າໃນທຸກວຽກງານຢ່າງຕັ້ງໜ້າ ແລະ ມີປະສິດທິຜົນ.
ທຸກໆຂັ້ນຕອນມາດຕະຖານ ຂອງໂຄງການຄວນຖືກປັບປຸງ ເພື່ອທົບທວນບົດບາດຍິງຊາຍຕະຫຼອດໄລຍະຂອງ ໂຄງການ.
ຍຸດທະສາດບົດບາດຍິງຊາຍຂອງ GIZ, ຄຳແນະນຳຂອງ GIZ ກ່ຽວກັບການອອກແບບ ລະບົບການຕິດຕາມຜົນທີ່ ໃຫ້ຄວາມສຳຄັນຕໍ່ກັບບົດບາດຍິງ-ຊາຍ, ຄູ່ມືພາກປະຕິບັດໃນການຄຸ້ມຄອງໂຄງການທີ່ຕອບສະໜອງຕໍ່ບົດບາດຍິງ-ຊາຍ ແລະ ບົດແນະນຳກ່ຽວກັບບົດບາດຍິງຊາຍ ໃນການລາຍງານໃຫ້ຄຳແນະນຳ ທີ່ເປັນປະໂຫຍດສຳລັບທີມງານທັງ ຫມົດ.
ຄວາມຊຳນານດ້ານວິຊາການເພີ່ມເຕີມ ເພື່ອປະສົມປະສານບົດບາດຍິງຊາຍເຂົ້າໃນໂຄງການປ່າໄມ້ ແມ່ນອີງຕາມ ຄູ່ມືພາກສະປະຕິບັດຂອງ FAO, "ວິທີການຕົ້ນຕໍຂອງບົດບາດຍິງຊາຍໃນປ່າໄມ້" [85].

6. ຊ່ອງວ່າງທາງເພດ ທີ່ໂດດເດັ່ນ ແລະ ຄຳແນະນຳ ໃຫ້ເຊື່ອມໂຍງເຂົ້າໃນແຜນງານ GCF

ຕາຕະລາງຕໍ່ໄປນີ້ ເປັນໂຕເຊື່ອມໂຍງຊ່ອງວ່າງ ທີ່ໄດ້ຍົກຂຶ້ນມາ ເຂົ້າຫາກັນ (ເປັນຕົ້ນແມ່ນ ນອກຈາກ ໂຕທີ່ຖືກກຳນົດຢູ່ໃນ ການປຶກສາຫາລືກັບຜູ້ມີສ່ວນກ່ຽວຂ້ອງ), ທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ໂດຍມີການສະເໜີຄຳແນະນຳ ໃຫ້ລົງມືແກ້ໄຂ ສາເຫດເຫຼົ່ານີ້. ຖັນທີສາມ ສະແດງໃຫ້ເຫັນ ການເຊື່ອມໂຍງເຂົ້າໃສ່ໃນ ຮ່າງທີ່ມີຢູ່ແລ້ວ ສຳລັບໝາກ ຜົນ ແລະ ກິດຈະກຳ ຂອງແຜນງານ GCF ທີ່ໄດ້ວາງແຜນໄວ້ ແລະ ຖັນທີສີ່ ແມ່ນຖັນທີ່ພວກມັນ ຖືກເຊື່ອມໂຍງ ເຂົ້າໃສ່ໃນແຜນປະຕິບັດງານ ບົດບາດຍິງຊາຍ.

ພວກມັນ ບໍ່ຖືກຈັດລຽງ ຕາມບູລິມະສິດ. ພວກມັນ ຄວນຈະຖືກເຊື່ອມໂຍງ ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ຜ່ານທາງ ໄລຍະຂອງແຜນງານ ຊຶ່ງເລີ້ມຕົ້ນດ້ວຍ ບົດສະເໜີຂໍການສະໜອງເງິນ, ກອບຄວາມສົມເຫດສົມຜົນ, ການວາງ ແຜນດຳເນີນງານ, ແລະ ລະບົບການຕິດຕາມ ແລະ ປະເມີນຜົນ..

ນອກຈາກນັ້ນ, ແນະນຳ ຢ່າງໜັກແໜ້ນ ໃຫ້ທົບທວນຄືນ ບົດວິເຄາະສະບັບນີ້ ແລະ ເບິ່ງປະສິດທິພາບ ຂອງ ບັນດາ ກິດຈະກຳ ທີ່ໄດ້ແນະນຳ ບົນພື້ນຖານປົກກະຕິ ແລະ ລວມເອົາມັນເຂົ້າໃນເອກະສານທີ່ຕ້ອງການ ສຳລັບພະນັກງານ ຂອງແຜນງານຄົນໃໝ່.

[85] FAO 2016

ຕາຕະລາງ 4: ຊ່ອງว่างທີ່ກ່ຽວຂ້ອງກັບບົດບາດຍິງຊາຍ

ຊ່ອງว่างບົດບາດຍິງຊາຍ ທີ່ຖືກຍົກຂຶ້ນມາ	ຄວາມຄືບໜ້າຈາກ ໂຄງການ 1	ຄຳແນະນຳ	ກິດຈະກຳທີ່ ກ່ຽວຂ້ອງ ຂອງ ໂຄງການ	ເລກທີ ມາດຕາການ ຢູ່ໃນ GAP
ຄວາມອາດສາມາດ ໃນປັດຈຸບັນ ຂອງ ພະນັກງານລັດ ຢູ່ທຸກ ລະດັບ ໃນການເຊື່ອມ ໂຍງບົດບາດຍິງຊາຍ ຢ່າງຕັ້ງໜ້າ ແລະ ການ ພິຈາລະນາຊົນເຜົ່າ ເຂົ້າ ໃສ່ໃນ ແນວທາງ ປະຕິບັດການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ຂອງເຂົາເຈົ້າ ແມ່ນມີ ຂໍ້ຈຳກັດຫຼາຍ, ແລະ ພະນັກງານສ່ວນໃຫຍ່ ແມ່ນເປັນຜູ້ຊາຍ. ພາສາຊົນເຜົ່າ ມັກຈະ ເປັນອຸປະສັກ ຂອງ ການສື່ສານ ຊຶ່ງບໍ່ໄດ້ ຮັບການແກ້ໄຂ ຢ່າງ ເອົາຈິງເອົາຈັງ. ສິ່ງ ດັ່ງກ່າວນີ້ ສົ່ງຜົນ ກະທົບ ຕໍ່ ການ ລວບລວມ ໃນລະດັບ ຮາກຖານ, ທີ່ແມ່ຍິງ ມັກຈະຖືກມອງຂ້າມ ໃນກິດຈະກຳ ການວາງ ແຜນ ແລະ ການທຳ ການຕັດສິນໃຈ ຖ້າວ່າ ບໍ່ໄດ້ຮັບການຍຸກຍູ້ໃຫ້ ເຂົ້າຮ່ວມ ຢ່າງຕັ້ງໜ້າ.	• ໂຄງການທີ 1 ໄດ້ດຳ ເນີນການຝຶກອົບຮົມ ແລະ ຝຶກອົບຮົມຕ່າງໆ ໃຫ້ແກ່ພະນັກງານ ສະຫະພັນແມ່ຍິງລາວ ແລະ ຫ້ອງການກະສິກຳ ແລະ ປ່າໄມ້. ໃນລະດັບ ບ້ານໄດ້ຮັບປະກັນ ການລວມທັງສອງເພດ ໃນທຸກການຝຶກອົບຮົມ ທີ່ກ່ຽວຂ້ອງກັບການ ວາງແຜນການນຳໃຊ້ທີ່ ດິນແບບມີສ່ວນຮ່ວມ ແລະ ການພັດທະນາ ກະສິກຳ. ວິທີການນີ້ຈະ ຖືກສືບຕໍ່ພາຍໃຕ້ ໂຄງການ 2. • ບົດແນະນຳທັງໝົດ ກ່ຽວກັບ FPIC, PSAP, PLUP, VFM ແລະ VFAG ທີ່ ຖືກພັດທະນາ ຫຼືປັບປຸງ ພາຍໃຕ້ຂອບເຂດຂອງ ໂຄງການ ໄດ້ຮັບການ ທົບທວນຄືນຢ່າງຖີ່ ຖ້ວນໂດຍທີມງານປົກ ປ້ອງ ແລະ ສາມາດ ຢືນຢັນໄດ້, ວ່າແຕ່ລະວິ ທີການເຫຼົ່ານີ້ມີການພິຈາ ຈະນາກ່ຽວກັບບົດບາດ ຍິງຊາຍ.	ແຜນງານຈະຝຶກອົບຮົມ ພະນັກງານ ລັດທັງໝົດ ທີ່ກ່ຽວຂ້ອງ ຊຶ່ງລວມ ມີ ສະຫະພັນແມ່ຍິງລາວ (LWU) ແລະ ການຄຸ້ມຄອງປະຕູ ການສະໜ ອງທຶນ REDD+, ທີ່ກ່ຽວຂ້ອງກັບ ບົດບາດຍິງຊາຍ, ສິດສະເໝີພາບ, ຄວາມສ່ຽງທີ່ກ່ຽວກັບການ ປ່ຽນແປງດິນຟ້າອາກາດ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອເສີມ ຂະຫຍາຍຄວາມທົນທານ, ມາດຕາ ການການສ້າງຄວາມທົນທານຕໍ່ກັບ ສະພາບອາກາດ ແລະ ທີ່ບໍ່ທຳລາຍ ປ່າໄມ້ໃນຂະແໜງການ AFOLU ແລະ ການມີສ່ວນຮ່ວມທາງສັງຄົມ. ໂຄງການຈະໄດ້ເຊື່ອມສານບົດບາດ ຍິງຊາຍ ເຂົ້າໃນທຸກໆບົດແນະນຳ, ຄູ່ມື ແລະ ຊຸດເຄື່ອງມືການຝຶກ ອົບຮົມ. ມັນຈະສືບຕໍ່ ຈັດຕັ້ງປະຕິບັດ ການ ຝຶກອົບຮົມ ທີ່ເປັນເປົ້າໝາຍ ເພື່ອ ສະໜັບສະໜູນ ການພັດທະນາ ຄວາມອາດສາມາດ ຂອງ ພະນັກງານເພດຍິງ ແກ່ ທຸກອົງ ການຈັດຕັ້ງປະຕິບັດຂອງລັດ ໃນ ທຸກລະດັບ ເພື່ອປັບປຸງ ຄວາມເທົ່າ ທຽມກັນ ທາງເພດ ຢູ່ພາຍໃນຂະແ ໜງການນຳໃຊ້ທີ່ດິນ. ວັດຖຸອຸປະກອນສື່ສານ ກ່ຽວກັບ ການປົກປັກຮັກສາປ່າໄມ້, ການ ຜະລິດກະສິກຳ ທີ່ບໍ່ທຳລາຍປ່າໄມ້ ແລະ ກິດຈະກຳອື່ນໆ ທີ່ກ່ຽວຂ້ອງ ກັບການປູກຈິດສຳນຶກ ແລະ ຝຶກ ອົບຮົມຕ່າງໆ ຄວນຈະ ຄຳນຶງເຖິງ ບົດບາດຍິງຊາຍ, ເປັນມິດຕໍ່ຜູ້ນຳ ໃຊ້ ແລະ ເຮັດເປັນຫຼາຍພາສາ ຊົນເຜົ່າ ຖ້າເປັນໄປໄດ້. ທຸກວັດຖຸ	ທົ່ວທຸກຂະແ ໜງການ/ ທັງໝົດ	(1) (3) (4)

ຊ່ອງว่างบົດບາດຍິງ ຊາຍ ທີ່ຖືກຍົກຂຶ້ນມາ	ຄວາມຄືບໜ້າຈາກ ໂຄງການ 1	ຄຳແນະນຳ	ກິດຈະກຳທີ່ ກ່ຽວຂ້ອງ ຂອງ ໂຄງການ	ເລກທີ ມາດຕາການ ຢູ່ໃນ GAP
		ອຸປະກອນການສື່ສານ ແລະ ທີ່ເປັນ ຂໍ້ມູນຂ່າວສານ ຈະໄດ້ຮັບການ ປັບປຸງ ໂດຍ ຊ່ຽວຊານບົດບາດຍິງ ຊາຍ.		
ການປົກສາຫາລື ໄດ້ ສະແດງໃຫ້ເຫັນວ່າ ແມ່ຍິງ ຖືກພິຈາລະນາ ເປັນຜູ້ຊົມໃຊ້ ຊັບພະຍາກອນປ່າໄມ້ ຕົ້ນຕໍ ແລະ ມີຄວາມຮູ້ ຢ່າງຫຼວງຫຼາຍ ກ່ຽວ ກັບ ທີ່ຢູ່ອາໃສທາງທຳ ມະຊາດ ທີ່ຢູ່ອ້ອມຂ້າງ ຂອງເຂົາເຈົ້າ ລວມທັງ ສະພາບຄວາມເສື່ອມ ໂຊມ ແຕ່ບໍ່ມັກຈະເຂົ້າ ຮ່ວມ ຢູ່ໃນການຄຸ້ມ ຄອງ ແລະ ການ ຕິດຕາມປ່າໄມ້ ຍ້ອນ ຂາດການສຶກສາ ແລະ ຍ້ອນທຳນິບທຳນຽມ ທາງປະເພນີ.	• ບົດແນະນຳ ແຜນການຄຸ້ມຄອງ ປ່າໄມ້ບ້ານ (VFMP) ອະທິບາຍເຖິງ ຂະບວນການສ້າງ ຄະນະກຳມາທິການ VFM (VFMC) ແລະ ລວມໂຄຕ້າ ຂອງສະມາຊິກ ກຳມະບານເພດຍິງ ຢ່າງໜ້ອຍ 30%. • ມາຮອດປະຈຸບັນ (ເດືອນເມສາ 2021) 40% ຂອງ VFMCs ປະກອບດ້ວຍຢ່າງ ໜ້ອຍ 30% ແມ່ ຍິງກັບ 40 ບ້ານ ຕາມການປະເມີນ. ອັດຕາສ່ວນຕ່ຳຂອງ ສະມາຊິກແມ່ຍິງ ໃນບ້ານເບື້ອງຕົ້ນ ໄດ້ຖືກລາຍງານໃຫ້ ທີ່ປຶກສາ GIZ ແລະ ຜູ້ປະຕິບັດ ໂດຍທີມງານປົກ ປ້ອງ ແລະ ນັບ ຕັ້ງແຕ່ນັ້ນມາ ການ ມີສ່ວນຮ່ວມຂອງ ແມ່ຍິງໄດ້ເພີ່ມຂຶ້ນ ເທື່ອລະກ້າວ.	ແຜນງານຈະສະໜັບສະໜູນ ການ ສ້າງບົດແນະນຳ ຂອງ ຄະນະຄຸ້ມ ຄອງຈັດສັນປ່າໄມ້ບ້ານ ພ້ອມທັງ ກຳນົດ ມາດຕະຖານ ທີ່ຮັບປະກັນ ໃຫ້ຄະນະດັ່ງກ່າວ ສາມາດເຂົ້າເຖິງ ໄດ້ ໂດຍແມ່ຍິງ, ສະມາຊິກທີ່ມາ ຈາກຫຼາຍຊົນເຜົ່າ ແລະ ຄົນທຸກ ຍາກ, ຊຶ່ງລວມມີໂກຕາ ຢ່າງໜ້ອຍ 30% ຂອງສະມາຊິກທີ່ເປັນເພດ ຍິງ ຕໍ່ ໜຶ່ງຄະນະກຳມະການ. ນອກຈາກນັ້ນ, ລະບຽບການທ້ອງ ຖິ່ນ ຄວນຈະສະໜອງຊ່ອງທາງ ທີ່ ເປັນຕົວເລືອກ ແກ່ ປະຊາຊົນ ໃນ ການປະຕິບັດຕາມ ຄວາມຕ້ອງການ ອັນຈຳເປັນ ເພື່ອໃຫ້ກາຍເປັນ ສະມາຊິກ ຂອງຄະນະໄດ້ (ເຊັ່ນວ່າ ມີມາດຕະຖານ ການສຶກສາຕ່ຳສຸດ ຫຼື ຜ່ານມາດຕະຖານ ການທົດ ສອບດ້ວຍປາກເປົ່າ). ສະຫະພັນແມ່ຍິງລາວ ຈະສະໜັບ ສະໜູນ ຂະບວນການປົກສາຫາລື ເພື່ອຊ່ວຍສ້າງຄວາມເຂັ້ມແຂງ ທາງ ດ້ານຄວາມເທົ່າທຽມກັນທາງເພດ ຢູ່ໃນ ການຈັດຕັ້ງປະຕິບັດແຜນ ງານ. VFMs ຈະຖືກອອກແບບໃນ ລັກສະນະທີ່ ໃຫ້ຄວາມສຳຄັນຕໍ່ກັບ ບົດບາດຍິງ-ຊາຍ, ພິຈາລະນາ ຄວາມສຳຄັນ ແລະ ຄວາມ ຕ້ອງການຂອງແມ່ຍິງທີ່ຫຼາກຫຼາຍ (ອຳນວຍຄວາມສະດວກຕາມ ແນວທາງທີ່ອ່ອນໄຫວຕໍ່ກັບ	1.1	(1) (4) (13)

ຊ່ອງว่างบົດບາດຍິງ ຊາຍ ທີ່ຖືກຍົກຂຶ້ນມາ	ຄວາມຄືບໜ້າຈາກ ໂຄງການ 1	ຄຳແນະນຳ	ກິດຈະກຳທີ່ ກ່ຽວຂ້ອງ ຂອງ ໂຄງການ	ເລກທີ ມາດຕາການ ຢູ່ໃນ GAP
		ບົດບາດຍິງ-ຊາຍ, ແລະ ພະນັກງານ ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການລວມຕົວທາງ ສັງຄົມ). ຄວາມຕ້ອງການສະເພາະ ຂອງແມ່ຍິງທີ່ເປັນຫົວໜ້າຄົວ ເຮືອນ ຈະຖືກປຶກສາຫາລືໃນລະດັບ ບ້ານ ເພື່ອໃຫ້ສາມາດມີສ່ວນຮ່ວມ ໃນຄະນະຄຸ້ມຄອງປ່າໄມ້.		
ການປຶກສາຫາລື ຢູ່ຂັ້ນ ບ້ານ ໄດ້ສະແດງໃຫ້ ເຫັນວ່າ ຈິດສຳນຶກ ຕໍ່ ກັບສິ່ງແວດລ້ອມ ແມ່ນມີຂໍ້ຈຳກັດຫຼາຍ. ສິ່ງກະຕຸ້ນອັນໃຫຍ່ສຸດ ສຳລັບ ຊາວບ້ານ ທີ່ຈະ ເຂົ້າຮ່ວມ ໃນມາດ ຕະການປົກປັກ ຮັກສາ ແມ່ນພົບໄດ້ ເມື່ອເຂົາເຈົ້າ ເຫັນຜົນ ກະທົບທີ່ເກີດຂຶ້ນ ທັນທີ ກ່ຽວກັບ ຊີວິດ ການເປັນຢູ່ ຂອງ ເຂົາເຈົ້າ ຜ່ານທາງ ຊັບພະຍາກອນ ທີ່ຫຼຸດ ໜ້ອບຖອຍລົງ (ລາຍ ຮັບໜ້ອຍລົງ, ອາຫານ ໜ້ອຍລົງ). ການ ແລກປ່ຽນກັບບ້ານອື່ນ ມັກຈະພົບເຫັນໄດ້ທົ່ວ ໄປ ຊຶ່ງມັນເປັນເຄື່ອງມື ທີ່ມີປະສິດທິພາບຫຼາຍ ໃນການເລີ້ມການປຽນ ແປງ ແຕ່ ແມ່ຍິງມັກ ຈະຖືກກີດກັ້ນ ບໍ່ໃຫ້ ເດີນທາງ ຍ້ອນທຳ ນຶບທຳນຽມທາງ ປະເພນີ ແລະ ການ	ໂຄງການທີ 1 ນຳໃຊ້ ການສື່ສານທີ່ໃຫ້ຄວາມ ສຳຄັນຕໍ່ກັບບົດບາດຍິງ-ຊາຍ ຕະຫຼອດ ການຈັດຕັ້ງປະຕິບັດ. LWU ໄດ້ມີສ່ວນຮ່ວມ ຢ່າງຫ້າວຫັນໃນການ ແລກປ່ຽນ ແລະ ກອງ ປະຊຸມໃນລະດັບບ້ານ ເພື່ອໃຫ້ແມ່ຍິງມີສ່ວນ ຮ່ວມ.	ແຜນງານ ຈະສົ່ງເສີມ ການ ໂຄສະນາປູກຈິດສຳນຶກ ຜ່ານທາງ ການນຳໃຊ້ ເຄື່ອງມືສື່ສານພົວພັນ ແລະ ວັດຖຸອຸປະກອນສື່ສານທີ່ຄຳ ນຶງເຖິງບົດບາດຍິງຊາຍ/ຊົນເຜົ່າ ທີ່ ພິຈາລະນາ ປັດໃຈການກະຕຸ້ນທີ່ມີ ຢູ່ໃນປັດຈຸບັນ ແລະ ຄວາມ ຕ້ອງການ ແລະ ບູລິມະສິດ. ທຸກວັດ ສະດຸອຸປະກອນ ການສື່ສານ ອັນໃຫຍ່ໆ ແລະ ການໂຄສະນາປູກ ຈິດສຳນຶກ ຈະຖືກທົບທວນ ແລະ ຮັບຮອງໂດຍ ຊ່ຽວຊານດ້ານການ ປົກປ້ອງ, ດ້ານບົດບາດຍິງຊາຍ ແລະ ດ້ານການຕິດຕາມ ແລະ ປະ ເມີນຜົນ ເປົ້າໝາຍທີ່ຄວນສຸມໃສ່ ຄືການ ເຜີຍແຜ່ ຄວາມຮູ້ກ່ຽວກັບຜົນ ກະທົບຈາກການປ່ຽນແປງສະພາບ ອາກາດ ແລະ ການເຊື່ອມສານການ ປັບຕົວເຂົ້າໃນທຸກໆກິດຈະກຳ ໂຄງການ ເພື່ອເສີມຂະຫຍາຍ ຄວາມທົນທານຂອງ ຜູ້ຊາຍ ແລະ ແມ່ຍິງ. ເນື່ອງຈາກແມ່ຍິງ ແລະ ຜູ້ ຊາຍໄດ້ຮັບຜົນກະທົບຢ່າງແຕກ ຕ່າງກັນ ກິດຈະກຳຕ່າງໆ ຈະຕ້ອງ ໄດ້ຄຳນຶງເຖິງມິຕິກ່ຽວກັບບົດບາດ ຍິງຊາຍ.	1.2.2 2.1.1 3.1.1 3.2.1	(1) ງົບປະມານ GAP ພິຈາລະນາ ເງິນ DSA ແກ່ ຊາວບ້ານ, ແລະ ຈະສະ ໜອງ ການ ສະໜັບສະໜູນ ການເຂົ້າ ເຖິງ ການ ຝຶກອົບຮົມ.

ຊ່ອງว่างบົດບາດຍິງ ຊາຍ ທີ່ຖືກຍົກຂຶ້ນມາ	ຄວາມຄືບໜ້າຈາກ ໂຄງການ 1	ຄຳແນະນຳ	ກິດຈະກຳທີ່ ກ່ຽວຂ້ອງ ຂອງ ໂຄງການ	ເລກທີ ມາດຕາການ ຢູ່ໃນ GAP
ຂາດການ ຄົມມະນາຄົມ.		ແຜນງານ ຈະສືບຕໍ່ ເຮັດໃຫ້ ຊາວບ້ານທີ່ເປັນເພດຍິງ ເຂົ້າຮ່ວມ ຢູ່ໃນ ການແລກປ່ຽນ ແລະ ກອງ ປະຊຸມ ຢູ່ນອກບ້ານ ຜ່ານທາງການ ໂຄສະນາໂດຍກົງ ຜ່ານສະຫະພັນ ແມ່ຍິງລາວ ແລະ ພະນັກງານລັດ ແລະ ສະໜອງເບ້ຍລ້ຽງ ແລະ ວິທີ ການເດີນທາງ ຖ້າຫາກຈຳເປັນ.		
ປັດຈຸບັນນີ້ ບໍ່ມີກຸ່ມ ແມ່ຍິງສະເພາະ ທີ່ ເຄື່ອນໄຫວ ຢູ່ໃນການ ຄຸ້ມຄອງຈັດສັນປ່າໄມ້. ໂດຍປົກກະຕິ ສະຫະພັນແມ່ຍິງລາວ (LWU) ແມ່ນເປັນ ພຽງອົງການຈັດຕັ້ງ ດຽວ ທີ່ເຄື່ອນໄຫວ ຊຶ່ງສາມາດ ສົ່ງຜົນ ຕໍ່ ການຕັດສິນໃຈ ໃນ ທຸກລະດັບ.	• ອົງການ LWU ໄດ້ມີ ສ່ວນຮ່ວມໃນກິດຈະກຳ ຫຼັກໆຂັ້ນບ້ານ ເພື່ອໃຫ້ ແນ່ໃຈວ່າ ບົດບາດຍິງ-ຊາຍຕໍ່ແຕ່ລະທັດສະນະ ຖືກຈັດຕັ້ງປະຕິບັດ. ຂໍ້ ມູນການຕິດຕາມ ສະແດງໃຫ້ເຫັນວ່າ, ໃນ 87% ຂອງກິດຈະກຳ ຂັ້ນບ້ານທັງໝົດ, LWU ໄດ້ເຂົ້າຮ່ວມຕົວຈິງ (ທັງ ໝົດ 1,415 ວັນເຮັດ ວຽກ).	ໂຄງການຈະສືບຕໍ່ ໃນການປະສານ ສົມທົບ ສະຫະພັນແມ່ຍິງລາວ ໃຫ້ ຫຼາຍເທົ່າທີ່ຈະຫຼາຍໄດ້ ເພື່ອເປັນ ຕົວແທນ ແລະ ເຂົ້າເຖິງແມ່ຍິງ ແລະ ແນະນຳໃຫ້ຈັດສັນ ງົບປະມານ ໂດຍກົງ ແກ່ ຫ້ອງການສະຫະພັນ ແມ່ຍິງລາວ ປະຈຳທ້ອງຖິ່ນ ເພື່ອ ເຮັດໃຫ້ເຂົາເຈົ້າ ສາມາດ ຮ່ວມອຳ ນວຍຄວາມສະດວກ ແກ່ກິດຈະກຳ ຂອງໂຄງການ ດ້ວຍຄວາມ ຮັບຜິດຊອບ.	ທົ່ວທຸກຂະແ ໜງການ/ ທັງໝົດ	(3) (13) (16)-(19) (23) (25)
ບັນຫາຕົ້ນຕໍ ແມ່ນການຂາດຕະຫຼາດຈຳໜ່າຍ, ບໍ່ແມ່ນການຜະລິດ. PSEDP ພະຍາຍາມ ແກ້ໄຂ ຊ່ອງວ່າງຕະຫຼາດ ແລະ ຄວາມຈຳເປັນໃນການຜະລິດ. ເຂົ້າ ບໍ່ຖືກກຳນົດເປັນພືດເສດຖະກິດ ຢູ່ແຂວງຫົວພັນ, ເປັນພືດທີ່ໃຊ້ບໍລິໂພດສະເພາະພາຍໃນ.

16. **ການເຂົ້າເຖິງ ການເງິນຈຸລະພາກ ສຳລັບ ຕ່ອງໂສ້ຄຸນຄ່າໃໝ່ ເຫຼົ່ານີ້: ແມ່ຍິງໄດ້ຮັບຜົນປະໂຫຍດ ຈາກສິ່ງດັ່ງກ່າວນັ້ນ ແນວໃດ?**

ສະຫະພັນແມ່ຍິງ: ການເງິນຈຸລະພາກ ແມ່ນເປັນກົນໄກ ທີ່ຈຳເປັນຫຼາຍ ໃນການສົ່ງເສີມກິດຈະກຳສ້າງເສດຖະກິດ ຂອງແມ່ຍິງ. ແຕ່ເຖິງຢ່າງໃດກໍຕາມ, ສະຖາບັນການເງິນຈຸລະພາກ ມີຄວາມຫຍຸ້ງຍາກ ໃນການເຂົ້າເຖິງ ສຳລັບ ປະຊາຊົນ, ມີພຽງແຕ່ທະນາຄານບ້ານ ສອງສາມທະນາຄານ ເທົ່ານັ້ນ ທີ່ເກີດຂຶ້ນ/ຜ່ານທາງກອງທຶນພັດທະນາບ້ານ). ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ PLWU ຄິດວ່າ ມັນອາດຈະມີຄວາມຈຳເປັນ ທີ່ຈະເພີ່ມການເຂົ້າເຖິງ ການເງິນຈຸລະພາກ/ທະນາຄານບ້ານ ຢູ່ແຂວງຫົວພັນ ເພື່ອສົ່ງເສີມຄວາມເຊື່ອໝັ້ນຂອງປະຊາຊົນ ໃນວິທີການຜະລິດໃໝ່ໆ ແລະ ອື່ນໆ.

17. **ທ່ານເຫັນທ່າແຮງ ແລະ ສິ່ງທ້າທາຍແນວໃດ ໃນການດຶງເອົາການລົງທຶນຈາກພາກເອກະຊົນ ເຂົ້າມາເຮັດການຜະລິດກະສິກຳປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ຢູ່ໃນປ່າຜະລິດແຫ່ງຊາດ ຊຶ່ງລວມມີ ການເຮັດອຸດສະຫາກຳໄມ້ ແລະ ອຸດສະຫາກຳເສັ້ນໄຍ? ທ່ານຄິດບໍ່ວ່າ ຊາວບ້ານ ຈະໄດ້ຮັບຜົນປະໂຫຍດ ຈາກການລົງທຶນດັ່ງກ່າວ? ລັດຖະບານລາວ ຈະສາມາດ ຮັບປະກັນໄດ້ບໍ່ວ່າ ການລົງທຶນ ຈະສ້າງຜົນປະໂຫຍດ ແກ່ຊາວບ້ານ?**

ການລົງທຶນ ແມ່ນມີທ່າແຮງອັນໃຫຍ່ຫຼວງ ແຕ່ຈຳເປັນຈະຕ້ອງຖືກອອກແບບມາ ໃຫ້ເໝາະສົມ ກັບ ທ່າແຮງທີ່ແຕກຕ່າງກັນ ຂອງເມືອງເຊັ່ນ ການລ້ຽງສັດ ຈະແມ່ນຢູ່ເມືອງຫົວເມືອງ ແລະ ຊຳເໜືອ, ການປູກໄມ້ໃຫ້ໝາກ ແມ່ນຢູ່ເມືອງວຽງໄຊ, ແລະ ອື່ນໆ, ການທ່ອງທ່ຽວແບບອະນຸລັກ ເປັນທ່າແຮງໃຫຍ່ ສຳລັບ ເຂດປ່າສະຫງວນແຫ່ງຊາດ. ທ່າແຮງ ຖືກປະເມີນຮຽບຮ້ອຍແລ້ວ ແລະ ຖືກຂຽນ ໃສ່ໃນຍຸດທະສາດ ຂອງ ເຂົາເຈົ້າ.
ລັດຖະບານລາວ ຈະຕ້ອງສະໜັບສະໜູນ ດ້ວຍການສຶກສາຜົນກະທົບ ທີ່ຈະມີຕໍ່ ບັນດາຊຸມຊົນທ້ອງຖິ່ນ ຢ່າງຄັກແນ່ – ຖ້າການລົງທຶນ ບໍ່ສ້າງຜົນປະໂຫຍດ ແລະ ບໍ່ສ້າງລາຍຮັບທີ່ເພີ່ມຂຶ້ນ ແກ່ປະຊາຊົນ, ພວກ ເຮົາບໍ່ສາມາດ ອະນຸຍາດ ການລົງທຶນດັ່ງກ່າວໄດ້.

18. **ຄຳຄິດເຫັນອື່ນໆເດ?**

ສະຫະພັນແມ່ຍິງ: ບັນດາກົດໝາຍ ແລະ ຍຸດທະສາດແຫ່ງຊາດ ລວມທັງ ໂກຕ້າຕຳແໜ່ງການນຳ ແມ່ນມີ ໄວ້ແລ້ວ – ຊ່ອງວ່າ ແມ່ນມີຢູ່ໃນລະດັບການຈັດຕັ້ງປະຕິບັດ ທີ່ພວກເຮົາ ຕ້ອງການ ບົດແນະນຳ ທີ່ເປັນຮູບ ປະທຳຫຼາຍ ໂດຍທີ່ມີລາຍລະອຽດ ກ່ຽວກັບ ຄວາມເທົ່າທຽມກັນ ທາງເພດ, ມີຕົວເລກການເຂົ້າຮ່ວມ.

ແມ່ຍິງ ຂາດຄວາມຮູ້ ເນື່ອງຈາກມີລະດັບການສຶກສາທີ່ຕ່ຳ, ມີການແຕ່ງງານແຕ່ນ້ອຍ ຊຶ່ງເປັນບັນຫາ, ມີບົດບາດໜ້ອຍ ໃນສັງຄົມ ເຖິງແມ່ນວ່າຈະມີກົດໝາຍກ່າວເຖິງຄວາມເທົ່າທຽມກັນ ກໍຕາມ. ພຽງແຕ່ກຳນົດໂກຕ້າ ຈະບໍ່ຊ່ວຍຫຍັງ ຖ້າວ່າ ມັນບໍ່ມີການສົມທົບກັບ ການປູກຈິດສຳນຶກ ໃນທຸກລະດັບ (ທີ່ລວມມີບ້ານຕ່າງໆ); ຈຳເປັນຕ້ອງມີການຝຶກອົບຮົມ ສຳລັບພະນັກງານຂອງລັດຖະບານລາວ ທີ່ເຮັດວຽກ ຮ່ວມກັບ ຊາວບ້ານ; ສະຫະພັນແມ່ຍິງ ມີໜ້າຢູ່ທຸກບ້ານ ແຕ່ຈຳເປັນຕ້ອງມີການສວຍໃຊ້ ທີ່ເຂັ້ມຂຸ້ນຕື່ມຂຶ້ນອີກ ໃນການຄຸ້ມຄອງບ້ານ.

ແມ່ຍິງ ສາມາດໃຊ້ບົດບາດ ຢ່າງໃຫຍ່ຫຼວງ ໃນການຜະລິດກະສິກຳ ທີ່ປາສະຈາກການທຳລາຍປ່າໄມ້ ເຊັ່ນ ການລ້ຽງມ້ອນ ແລະ ການຜະລິດເສັ້ນໄໝ, ຝ້າຍ ອາດຈະສາມາດເປັນການຜະລິດ ທີ່ອາໃສແມ່ຍິງ. ປັດຈຸບັນນີ້ ແມ່ນນຳເຂົ້າຫຼາຍໂພດ ຈາກປະເທດຫວຽດນາມ ແຕ່ ພວກເຮົາອາດຈະສາມາດ ສະໜັບສະໜຸນ ການພັດທະນາ ຕ່ອງໂສ້ຄຸນຄ່າເຫຼົ່ານີ້ ຢູ່ແຂວງຫົວພັນ. ອຸດສະຫາກຳທຳຜ້າ ແມ່ນເປັນອຸດສະຫາກຳ ທີ່ແຜ່ຫຼາຍ ເນື່ອງຈາກວ່າ ມັນບໍ່ຕ້ອງການໃຫ້ມີລະດັບການສຶກສາທີ່ສູງ ແລະ ນອກຈາກນັ້ນ ແມ່ຍິງທີ່ເສຍອົງຄະ ຍັງສາມາດ ເຮັດວຽກກັບມັນໄດ້.

GCF/GIZ, ການສຳພາດພາກລັດ: ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຊຳເໜືອ, ແຂວງຫົວພັນ

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນຜູມສັນຖານປ່າໄມ້ ແບບຍືນນານ

1. **ບົດບາດ ຂອງທ່ານມີຫຍັງແດ່ ໃນການຈັດຕັ້ງປະຕິບັດ ກົນໄກ REDD+?**

   ເມືອງ/ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແມ່ນເປັນຜູ້ຈັດຕັ້ງປະຕິບັດ ກົນໄກ REDD+ ຕົ້ນຕໍ.
   ບົດບາດ: ຂະບວນການວາງແຜນ, ການວິເຄາະຈຸດຫຼໍ່ແຫຼມ ແລະ ທ່າແຮງ,

2. **ໃນມຸມມອງ ຂອງທ່ານ: ບົດບາດອັນສະເພາະ ຂອງແມ່ຍິງ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ ລວມທັງ ການປົກປັກຮັກສາປ່າໄມ້?**

   ແມ່ຍິງເປັນຜູ້ຊົມໃຊ້ປ່າໄມ້ ຕົ້ນຕໍ, ດັ່ງນັ້ນ, ເຂົາເຈົ້າ ຈຳເປັນຈະຕ້ອງເຂົ້າຮ່ວມ ໃນໝົດທຸກກິດຈະກຳ ແລະ ໄດ້ຮັບການອຳນວຍຄວາມສະດວກ ຈາກ ໝົດທຸກອົງການຈັດຕັ້ງ ພາຍໃນຂະແໜງ ທີ່ລວມມີ ສະຫະພັນແມ່ຍິງ

3. **ແມ່ຍິງ ເປັນສ່ວນໜຶ່ງຮຽບຮ້ອຍແລ້ວ ຂອງກົນໄກ REDD+ ໄດ້ແນວໃດ?**

   ການມີສ່ວນຮ່ວມ ຂອງແມ່ຍິງ ໃນຂະບວນການວາງແຜນ ແມ່ນມີຂໍ້ຈຳກັດຫຼາຍ ເນື່ອງຈາກວ່າ ສ່ວນໃຫຍ່ມີພຽງແຕ່ ຫົວໜ້າຄອບຄົວເທົ່ານັ້ນ ທີ່ມີສ່ວນຮ່ວມ.

4. **ເຂົາເຈົ້າ ຈະສາມາດເປັນສ່ວນໜຶ່ງໃຫ້ໄດ້ຫຼາຍຂຶ້ນ ແນວໃດ?**

   ພວກເຮົາ ຈະຕ້ອງມີແມ່ຍິງຫຼາຍຂຶ້ນ ທີ່ມີສ່ວນຮ່ວມຮຽບຮ້ອຍແລ້ວ ນັບຕັ້ງແຕ່ ຂະບວນການວາງແຜນໃນບ້ານ ເປັນຕົ້ນມາ. ສິ່ງດັ່ງກ່າວ ເລີ່ມຈາກ ການປູກຈິດສຳນຶກ ແກ່ ແມ່ຍິງ (ຄວາມຮັບຜິດຊອບຕົ້ນຕໍ ຂອງ ຫ້ອງການສະຫະພັນແມ່ຍິງລາວ ຂັ້ນເມືອງ ໂດຍປະສານສົມທົບ ກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ບັນດາອົງການຈັດຕັ້ງອື່ນໆ ພາຍໃນຂະແໜງ).

5. **ທ່ານເຫັນສິ່ງທ້າທາຍຫຍັງແດ່ ເມື່ອເວົ້າເຖິງເຂດຫ່າງໄກສອກຫຼີກ, ແມ່ຍິງ ແລະ ກຸ່ມຊົນເຜົ່າ?**

   ອຸປະສັກທາງດ້ານພາສາ; ໂດຍປົກກະຕິ, ກອງປະຊຸມ ລະດັບຄຸ້ມບ້ານ ລວມມີ ການເດີນທາງ ທີ່ແມ່ຍິງບໍ່

ສາມາດໄປໄດ້ ດັ່ງນັ້ນ ຈຶ່ງມີແຕ່ຜູ້ຊາຍເຂົ້າຮ່ວມ.
ຂໍ້ແກ່ໄຂ: ຈ້າງພະນັກງານ ທີ່ເປັນຊົນເຜົ່າຫຼາຍຂຶ້ນ ເຂົ້າໃນທີມງານ ຂອງເມືອງ. ໃຫ້ຈັດກອງປະຊຸມໃນ ລະດັບບ້ານເທົ່ານັ້ນ ຫຼື ຈັດສັນຊັບພະຍາກອນ ແລະ ລິດຂົນສົ່ງ ແມ່ຍິງ ເພື່ອໃຫ້ເຂົາເຈົ້າເດີນທາງໄດ້.

6. **ທ່ານຮູ້ສຶກບໍ່ວ່າ ແມ່ຍິງມີການເຂົ້າເຖິງຜົນປະໂຫຍດ ອັນດຽວກັນ ທີ່ມາຈາກຊັບພະຍາກອນປ່າໄມ້ ແລະ ການຄຸ້ມຄອງ/ການທຳການຕັດສິນ ຂອງເຂົາເຈົ້າ? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ່ ສຳລັບ ຕົວແບບການ ຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ, ເຊັ່ນ ປ່າໄມ້ຊຸມຊົນ, ປ່າໄມ້ລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງ ຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ?**

ແມ່ຍິງ ມີການເຂົ້າເຖິງບໍ່ຫຼາຍ ຕໍ່ຂະບວນການທຳການຕັດສິນໃຈ ແລະ ການວາງແຜນ ກ່ຽວກັບ ຊັບພະຍາກອນປ່າໄມ້ ແຕ່ຜັດເປັນຜູ້ຊົມໃຊ້ຕົ້ນຕໍ ໃນສິ່ງດຽວກັນ (ເກັບກູ້ ແລະ ຊື້ຂາຍເຄື່ອງປ່າຂອງດົງ). ສຳລັບ ການສ້າງຜົນປະໂຫຍດ ຈາກວຽກດັ່ງກ່າວ ໃນຮູບແບບ ການຕັດສິນໃຈຮ່ວມ, ແນ່ນອນ ຄອບຄົວ ຕ່າງໆ ໂອ້ລົມເຖິງການຊື້ ແລະ ການລົງທຶນຮ່ວມກັນ ແຕ່ ການຕັດສິນໃຈ ຂັ້ນສຸດທ້າຍ ແມ່ນຜົວ ທີ່ຕາມ ປະເພນີ ແມ່ນເປັນຫົວໜ້າຄອບຄົວ.

7. **ແມ່ນກຸ່ມໃດ ຂອງແມ່ຍິງ ທີ່ໃນປັດຈຸບັນ ໄດ້ເຂົ້າຮ່ວມໃນ ຕົວແບບການຄຸ້ມຄອງຈັດສັນປ່າໄມ້?**

ບໍ່ມີແມ່ຍິງກຸ່ມໃດເລີຍ ຍົກເວັ້ນ ສະຫະພັນແມ່ຍິງລາວ.

8. **ທ່ານ ປະເມີນຄວາມອາດສາມາດໃນປັດຈຸບັນ ຂອງທ່ານໄດ້ແນວໃດ ສຳລັບ ສະໜັບສະໜຸນ ແຜນງານ ທີ່ ໄດ້ວາງແຜນໄວ້ ທີ່ພົວພັນກັບ ຄວາມສະເໝີພາບທາງເພດ?**

ຍັງຕ້ອງການ ການສ້າງຄວາມອາດສາມາດ; ເຕັກໂນໂລຊີ ໃໝ່ ທີ່ຕ້ອງການການຝຶກອົບຮົມ ຫຼາຍຂຶ້ນ ແລະ ການຂຶ້ນລົງ ຂອງພະນັກງານ ແມ່ນມີຄວາມທ້າທາຍ; ຕ້ອງການ ການຝຶກອົບຮົມ ຫຼາຍຂຶ້ນ ກ່ຽວກັບ ບັນຫາບົດບາດຍິງຊາຍ ບວກກັບ ໂອກາດທົ່ວໄປ ໃນການປຶກສາຫາລື ແລະ ແລກປ່ຽນ ກ່ຽວກັບ ປະສົບ ການຈັດຕັ້ງປະຕິບັດ.

9. **ທ່ານຄິດວ່າ ກົນໄກ REDD+ ໃນປັດຈຸບັນ ໄດ້ຄຳນຶງເຖິງບົດບາດຍິງຊາຍແນວໃດ? ວຽກງານ REDD+ ລວມທັງ ບົດບາດຍິງຊາຍຂອງມັນ ຖືກເຊື່ອມໂຍງເຂົ້າໃນແຜນພັດທະນາເສດຖະກິດສັງຄົມ ຫຼາຍປານໃດ?**

ບໍ່ມີການເຊື່ອມໂຍງເທົ່າທີ່ຄວນ ໃນລະດັບການຈັດຕັ້ງປະຕິບັດ. ແນະນຳ ໃຫ້ມີການທັດສະນະສຶກສາ ລະຫວ່າງຊາວບ້ານ (ແລກປ່ຽນບົດຮຽນ), ແລະ ເຊື່ອມໂຍງເອົາບົດບາດຍິງຊາຍ ເຂົ້າໃນການແລກປ່ຽນ ເຫຼົ່ານີ້.

10. **ແຜນງານ ຈະສະໜັບສະໜູນ ການສ້າງ ລະບຽບການ ແລະ ບົດແນະນຳ ໂດຍອີງໃສ່ ກົດໝາຍປ່າໄມ້ ສະບັບໃໝ່: ສຳລັບໃນມຸມມອງກ່ຽວກັບບົດບາດຍິງຊາຍ, ຈະຕ້ອງຄຳນຶງເຖິງຫຍັງແດ່?**

ກົດໝາຍປ່າໄມ້ ເວົ້າກວມລວມໂພດ ດັ່ງນັ້ນ ລະບຽບການ ຈຳເປັນຈະຕ້ອງອີງໃສ່ ຄວາມເປັນຈິງ ຂອງ ເມືອງ ແລະ ແຂວງ. ສຳລັບ ການສ້າງລະບຽບການ, ມັນອາດຈະເປັນການດີທີ່ສຸດ ທີ່ຈະລວມເອົາ ທັງອຳ ນາດການປົກຄອງເມືອງ ແລະ ບ້ານ ເຂົ້າໃນການປຶກສາຫາລື. ຊຶ່ງເປັນແນວທາງປະຕິບັດ ທີ່ເລີ່ມແຕ່ຂັ້ນລຸ່ມ ໄປຫາຂັ້ນເທິງ.

11. **ແມ່ຍິງ ສາມາດເປັນສ່ວນໜຶ່ງ ໃນ ມາດຕະການບັງຄັບໃຊ້ກົດໝາຍໄດ້ແນວໃດ?**

ຊາວບ້ານ ທີ່ລວມທັງແມ່ຍິງ ທຳອິດຕ້ອງເຂົ້າໃຈວ່າ ເປັນຫຍັງ ກົດໝາຍຕ່າງໆ ຈຶ່ງມີສ່ວນກ່ຽວຂ້ອງ, ດັ່ງນັ້ນ ການບັງຄັບໃຊ້ ຈຶ່ງເລີ່ມດ້ວຍ ການຊຸກຍູ້ ການສະໜັບສະໜູນ ຂອງຊາວບ້ານ ໃນການປະຕິບັດ ຕາມ ບັນດາກົດໝາຍຕ່າງໆ.

12. **ການສ້າງລະບົບຕິດຕາມປ່າໄມ້ ແຫ່ງຊາດ: ແມ່ຍິງສາມາດປະກອບສ່ວນແນວໃດ?**

ແມ່ຍິງ ອາດຈະສາມາດ ເປັນສ່ວນໜຶ່ງ ຂອງ ການຕິດຕາມ ເຄື່ອງປ່າຂອງດົງ, ແຕ່ຕ້ອງການ ການສະໜັບ ສະໜູນດ້ານການເງິນ ຢ່າງຫຼວງຫຼາຍ ລວມທັງການຕິດຕາມ.

13. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ມາຮອດປັດຈຸບັນນີ້, ການວາງແຜນນຳໃຊ້ທີ່ດິນ ບໍ່ພຽງແຕ່ ຈັດສັນທີ່ດິນ ໃນລະດັບບ້ານ ເທົ່ານັ້ນ ແຕ່ ເວລາສ່ວນໃຫຍ່, ບໍ່ມີການອອກໃບຕາດິນເທື່ອ. ສິ່ງດັ່ງກ່າວນັ້ນ ເຮັດໃຫ້ແມ່ຍິງເສຍປຽບ ຍ້ອນວ່າ ການ ຕັດສິນໃຈຫຼັກໆ ໃນການວາງແຜນນຳໃຊ້ທີ່ດິນ ແມ່ນຂຶ້ນກັບອຳນາດການປົກຄອງບ້ານ (ທີ່ສ່ວນຫຼາຍເປັນ ຜູ້ຊາຍ) ແລະ ຫົວໜ້າຄອບຄົວ. ການວາງແຜນນຳໃຊ້ທີ່ດິນ ໃນອະນາຄົດ ຈຳເປັນຈະຕ້ອງເຈາະຈົງຫຼາຍຂຶ້ນ ກ່ຽວກັບ ການນຳໃຊ້ທີ່ດິນ ແລະ ສ່ວນ ຂະບວນການວາງແຜນນຳໃຊ້ທີ່ດິນ ທີ່ສຳເລັດໄປແລ້ວເຄິ່ງໜຶ່ງ ຈຳ ເປັນຈະຕ້ອງເຮັດໃຫ້ແລ້ວ. ໃນປັດຈຸບັນນີ້, ບໍ່ມີການຄ້ຳປະກັນການຄອບຄອງທີ່ດິນໃດເລີຍ.

14. **ແຜນງານ ຕ້ອງການ ສິ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສິ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ: ຈຸດໃດ ທີ່ຈະສົ່ງຜົນ ຕໍ່ຈຳ ນວນວຽກ ຂອງແມ່ຍິງ? ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນເດ? ສິ່ງດັ່ງກ່າວນັ້ນ ຈະມີຄວາມໝາຍແນວໃດ**

ສຳລັບ ການບໍລິການສິ່ງເສີມກະສິກຳ ທີ່ໄດ້ສະໜອງ? ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສ ຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ.

ຈຳເປັນຕ້ອງມີການວິເຄາະ ທ່າແຮງ ແລະ ຄວາມສ່ຽງ ຢ່າງເລິກເຊິ່ງ ເປັນແຕ່ລະບ້ານ. ການສະໜອງເງິນ ລົງທຶນ ຈຳເປັນຈະຕ້ອງມີ. ປະຊາຊົນ ມີຄວາມພໍໃຈ ທີ່ຈະຢຸດຕິ ການເຮັດໄຮ່ເລື່ອນລອຍ ແຕ່ປັດຈຸບັນນີ້ ບໍ່ ມີທາງເລືອກ.

15. **ການສິ່ງເສີມ ຕ່ອງໂສ້ຄຸນຄ່າ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ການເຂົ້າເຖິງຕະຫຼາດ: ປັດຈຸບັນນີ້ ແມ່ນຫຍັງ ເປັນສິ່ງທ້າທາຍ ທີ່ໃຫຍ່ທີ່ສຸດ ຂອງແມ່ຍິງ ໃນການພັດທະນາ ຕ່ອງໂສ້ຄຸນຄ່າດັ່ງກ່າວ, ແມ່ນ ຫຍັງເປັນອຸປະສັກ ຂອງເຂົາເຈົ້າ ໃນການເຂົ້າເຖິງຕະຫຼາດ ໃນປັດຈຸບັນນີ້?**

ການຂາດ ຊັບພະຍາກອນການເງິນ ບວກກັບ ການຂາດຄວາມເຊື່ອໝັ້ນ ໃນການລົງທຶນ ທີ່ມີຄວາມສ່ຽງ. ຕະຫຼາດ ແມ່ນເປັນຕະຫຼາດທ້ອງຖິ່ນ ແລະ ມີຫຼາຍບ້ານ ທີ່ຢູ່ຫ່າງໄກຈາກຕະຫຼາດ ແລະ ບໍ່ສາມາດເຂົ້າເຖິງ ຕະຫຼາດໄດ້.
ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແນະນຳໃຫ້ສ້າງ ແບບຟອມຕິດຕາມວ່າ ຜະລິດຕະພັນໃດ ຖືກຜະລິດ ແລະ ຂາຍຢູ່ໃສ ຈົ່ນວ່າ ມີຄວາມສາມາດໃນການປະເມີນຕະຫຼາດ ແລະ ສາມາດຄວບຄຸມລາຄາ ເພື່ອຜົນ ປະໂຫຍດ ຂອງຊາວນາ (ຊຶ່ງເປັນຜູ້ທີ່ປົກກະຕິ ບໍ່ໄດ້ຮັບການຈ່າຍເງິນເທົ່າທີ່ຄວນ). ການສ້າງແບບຟອມນີ້ ຂຶ້ນມາ ອາດຈະສາມາດມາຈາກ ພະແນກອຸດສະຫາກຳ ແລະ ການຄ້າແຂວງ, ການເກັບກຳຂໍ້ມູນໂຕເລກ ຂອງຫ້ອງການຂັ້ນເມືອງຂອງພະແນກ.

16. **ການເຂົ້າເຖິງ ການເງິນຈຸລະພາກ ສຳລັບ ຕ່ອງໂສ້ຄຸນຄ່າໃໝ່ ເຫຼົ່ານີ້: ແມ່ຍິງໄດ້ຮັບຜົນປະ�โຫຍດ ຈາກສິ່ງ ດັ່ງກ່າວນັ້ນ ແນວໃດ?**

ບາງທີ ເຂົາເຈົ້າ ອາດຈະໄດ້ຮັບຜົນປະໂຫຍດ ຈາກສິ່ງທີ່ກ່າວມານັ້ນ ຖ້າວ່າ ບໍ່ມີຄວາມສຽງຫຼາຍ ທີ່ຈະຫຼຸບ ທຶນ ຈາກການລົງທຶນ (ເຊັ່ນ ໃນເວລາທີ່ ພະຍາດສັດ ຂ້າສັດ ທີ່ເຂົາເຈົ້າຊື້ມາ ດ້ວຍເງິນທີ່ກູ້ຢືມ). ນອກຈາກນັ້ນ, ອັດຕາດອກເບ້ຍ ຈຳເປັນຈະຕ້ອງຕ່ຳ ຈົ່ນເຮັດໃຫ້ຄົນທຸກຍາກ ສາມາດເຂົ້າເຖິງ ການເງິນຈຸ ລະພາກໄດ້ ເປັນຕົ້ນແມ່ນ ຢູ່ນຳທະນາຄານບ້ານ.

17. **ທ່ານເຫັນທ່າແຮງ ແລະ ສິ່ງທ້າທາຍແນວໃດ ໃນການດຶງເອົາການລົງທຶນຈາກພາກເອກະຊົນ ເຂົ້າມາເຮັດ ການຜະລິດກະສິກຳປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ຢູ່ໃນປ່າຜະລິດແຫ່ງຊາດ ຊຶ່ງລວມມີ ການ ເຮັດອຸດສະຫາກຳໄມ້ ແລະ ອຸດສະຫາກຳເສັ້ນໄຍ? ທ່ານຄິດບໍ່ວ່າ ຊາວບ້ານ ຈະໄດ້ຮັບຜົນປະໂຫຍດ ຈາກ ການລົງທຶນດັ່ງກ່າວ? ລັດຖະບານລາວ ຈະສາມາດ ຮັບປະກັນໄດ້ບໍ່ວ່າ ການລົງທຶນ ຈະສ້າງຜົນປະໂຫຍດ ແກ່ຊາວບ້ານ?**

ບົດສະເໜີ ຈະໄປຜ່ານ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຊຶ່ງຈະທົບທວນຄືນ ຜົນປະໂຫຍດ ສຳລັບ ຊາວບ້ານ ດ້ວຍຄວາມເອົາໃຈໃສ່. ປຶກສາຫາລື ກັບຊາວບ້ານ ແລະ ດຳເນີນການສຳຫຼວດພື້ນທີ່. ຕິດຕາມ ແລະ ກວດກາ ໂດຍ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

18. ຄຳຄິດເຫັນອື່ນໆເດ?

ແຜນ ຈຳເປັນຈະຕ້ອງເປັນໄປຕາມຄວາມເປັນຈິງ ໃນດ້ານງົບປະມານ. ໃຫ້ນຳໃຊ້ ການລົງຢ້ຽມຢາມບ້ານ ເປັນປົກກະຕິ ເພື່ອມີການຍົກບັນຫາອື່ນໆຂຶ້ນມາ ນອກຈາກຫົວຂໍ້ປົກກະຕິ (ເຊັ່ນ ບັນຫາບົດບາດຍິງຊາຍ ທີ່ຢູ່ໃນກອບ ຂອງການປັບປຸງຊີວິດການເປັນຢູ່, ບາງຢ່າງທີ່ເປັນຮູບປະທຳ ສຳລັບ ຊາວບ້ານ). ສ້າງໃຫ້ກອງ ປະຊຸມ ມີຄວາມດຶງດູດ ຫຼາຍຂຶ້ນ ສຳລັບຊາວບ້ານ, ສ້າງຄວາມກະຈ່າງແຈ້ງໃຫ້ຮູ້ວ່າ ມີຜົນປະໂຫຍດຫຍັງ ແດ່ ທີ່ເຂົາເຈົ້າຮ່ວມກອງປະຊຸມ.
ຮອງຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ: ເລັງເປົ້າໃສ່ ຜູ້ຊາຍ ທີ່ເປັນຜູ້ອາວຸโส ພາຍໃນບ້ານ ຖ້າວ່າ ທ່ານຕ້ອງການສິ່ງເສີມ ຄວາມເທົ່າທຽມກັນທາງເພດ ແລະ ເຮັດແບບທຳມະດາ ແລະ ໜ້າສົນໃຈ (ວິດີໂອ, ເກມ ແລະ ອື່ນໆ).

GCF/GIZ, ການສຳພາດພາກລັດ: ສະຫະພັນແມ່ຍິງລາວ ເມືອງຊຳເໜືອ, ແຂວງຫົວພັນ

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນຜູມສັນຖານປ່າໄມ້ ແບບຍືນນານ

1. **ບົດບາດຂອງທ່ານ ມີຫຍັງແດ່ ຢູ່ໃນ ການຈັດຕັ້ງປະຕິບັດກົນໄກ REDD+?**

   ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງ FPIC ແລະ ກອງທຶນພັດທະນາບ້ານ; ບໍ່ມີຄວາມຮັບຜິດຊອບໃນການຈັດຕັ້ງໂດຍກົງ ສຳລັບ REDD+, ເຊັ່ນ ສັນຍາຄຸ້ມຄອງຈັດສັນປ່າໄມ້ບ້ານ ທີ່ເປັນສ່ວນໜຶ່ງ ຂອງ ຂະບວນການ FPIC

2. **ໃນມຸມມອງ ຂອງທ່ານ: ບົດບາດອັນສະເພາະ ຂອງແມ່ຍິງ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ ລວມທັງ ການປົກປັກຮັກສາປ່າໄມ້?**

   ສະຫະພັນແມ່ຍິງລາວ ປະກອບສ່ວນ ຕໍ່ ການເຜີຍແຜ່ນິຕິກຳ ແລະ ປຸກລະດົມ ແມ່ຍິງໃນບ້ານ ເພື່ອຊ່ວຍ ປົກປັກຮັກສາປ່າໄມ້.

3. **ທ່ານເຫັນສິ່ງທ້າທາຍຫຍັງແດ່ ເມື່ອເວົ້າເຖິງເຂດຫ່າງໄກສອກຫຼີກ, ແມ່ຍິງ ແລະ ກຸ່ມຊົນເຜົ່າ?**
   ຄວາມຮູ້ ແລະ ການເຂົ້າໃຈແມ່ຍິງ ມີຕ່ຳ ຊຶ່ງສົງຜົນກະທົບ ຕໍ່ກອງປະຊຸມ ແລະ ການເຂົ້າຮ່ວມ ທີ່ສຳຄັນ: ອັດຕາການສຶກສາຕ່ຳ ໂດຍສະເພາະ ຢູ່ໃນກຸ່ມແມ່ຍິງ ທີ່ຢູ່ເຂດຫ່າງໄກສອກຫຼີກ.

4. **ທ່ານຮູ້ສຶກບໍວ່າ ແມ່ຍິງມີການເຂົ້າເຖິງຜົນປະ�โยດ ອັນດຽວກັນ ທີ່ມາຈາກຊັບພະຍາກອນປ່າໄມ້ ແລະ ການຄຸ້ມຄອງ/ການທຳການຕັດສິນ ຂອງເຂົາເຈົ້າ? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ ສຳລັບ ຕົວແບບການ ຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ, ເຊັ່ນ ປ່າໄມ້ຊຸມຊົນ, ປ່າໄມ້ລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງ ຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ?**

   ຄະນະກຳມະການຄຸ້ມຄອງຈັດສັນປ່າໄມ້ ມີສະມາຊິກສະຫະພັນແມ່ຍິງລາວ ແຕ່ ໂດຍປົກກະຕິ ຈະບໍ່ມີ ແມ່ຍິງຫຼາຍກວ່າ (ທັງໝົດ 7 ຄົນ) – ດັ່ງນັ້ນ ອຳນາດການທຳການຕັດສິນໃຈ ຂອງແມ່ຍິງ ມີຂໍ້ຈຳກັດ ຫຼາຍ. ມັນມີຄວາມຫຍຸ້ງຍາກ ທີ່ຈະຊອກຫາແມ່ຍິງມາຕື່ມ ສຳລັບໜ້າວຽກນີ້ ເພາະວ່າ ສ່ວນໃຫຍ່ ບໍ່ຮູ້ສຶກ ວ່າມີການສຶກສາເທົ່າທີ່ຄວນ ທີ່ຈະມາເຮັດວຽກວິຊາການ ທີ່ພົວພັນ ກັບຄວາມຮັບຜິດຊອບດັ່ງກ່າວ.

5. **ທ່ານ ປະເມີນຄວາມອາດສາມາດໃນປັດຈຸບັນ ຂອງທ່ານໄດ້ແນວໃດ ສຳລັບ ສະໜັບສະໜຸນ ແຜນງານ ທີ່ໄດ້ວາງແຜນໄວ້ ທີ່ພົວພັນກັບ ຄວາມສະເໝີພາບທາງເພດ? ມີກິດຈະກຳ ຢູ່ໃນແຜນງານງານທີ່ວາງແຜນໄວ້ບໍ ທີ່ເຂົາເຈົ້າຄິດວ່າ ເຂົາເຈົ້າຈະ/ຢາກຈະ ສະໜັບສະໜຸນ ແຕ່ຈະຕ້ອງມີຄວາມຮູ້ທີ່ເລີກເຊິ່ງຂຶ້ນຕື່ມ ສຳລັບສິ່ງດັ່ງກ່າວ?**

ເມື່ອໃດທີ່ມີຄະນະຊີ້ນຳຂັ້ນເມືອງ, ໃຫ້ດຳເນີນການຝຶກອົບຮົມກ່ຽວກັບບົດບາດຍິງຊາຍ ແກ່ເຂົາເຈົ້າ ແລະ ພວກເຮົາ ເນັ້ນໃສ່ ປະເພດກິດຈະກຳ ທີ່ຈະຖືກຈັດຕັ້ງປະຕິບັດ ໃນຂັ້ນບ້ານ.

6. **ທ່ານຄິດວ່າ ກົນໄກ REDD+ ໃນປັດຈຸບັນ ໄດ້ຄຳນຶງເຖິງບົດບາດຍິງຊາຍແນວໃດ?**

ໂດຍປົກກະຕິແລ້ວ, ການຈັດຕັ້ງປະຕິບັດ ບໍ່ຄຳນຶງເຖິງ ບົດບາດຍິງຊາຍ, ມີພຽງໜ້ອຍຄົນເທົ່ານັ້ນ ທີ່ເຂົ້າໃຈ ຄວາມເທົ່າທຽມກັນ ທາງເພດ.

7. **ແຜນງານ ຈະສະໜັບສະໜຸນ ການສ້າງ ລະບຽບການ ແລະ ບົດແນະນຳ ໂດຍອີງໃສ່ ກົດໝາຍປ່າໄມ້ ສະບັບໃໝ່: ສຳລັບໃນມຸມມອງກ່ຽວກັບບົດບາດຍິງຊາຍ, ຈະຕ້ອງຄຳນຶງເຖິງຫຍັງແດ່?**

ລະບຽບການ ແລະ ເອກະສານນິຕິກຳທັງໝົດ ຄວນຈະກວມເອົາ ບັນຫາຄວາມເທົ່າທຽມກັນ ທາງເພດ ຊຶ່ງ ສ້າງພື້ນຖານ ແກ່ ການຈັດຕັ້ງປະຕິບັດ. ສ້າງບົດແນະນຳອັນສະເພາະ ກ່ຽວບົດບາດຍິງຊາຍ ສຳລັບ ຈັດຕັ້ງ ປະຕິບັດ ບັນດາກິດຈະກຳ ຂອງແຜນງານ. ໃຫ້ເພີ່ມໃສ່ໃນບົດແນະນຳ ວ່າ ອົງການຈັດຕັ້ງພາຍໃນຂະແໜງ ຈະຕ້ອງສົ່ງ ຢ່າງໜ້ອຍມີພະນັກງານທີ່ເວົ້າພາສາທ້ອງຖິ່ນໜຶ່ງໄດ້ ໄປບ້ານ ເພື່ອຮັບປະກັນວ່າ ທຸກຄົນເຂົ້າໃຈ ກິດຈະກຳ ແລະ ສາມາດເຂົ້າຮ່ວມ.

8. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ຄວາມທ້າທາຍ ໃນການຕິດຕາມ ຜ່ານທາງ ທີ່ປັດຈຸບັນນີ້ ເຊັນໃບຕາດິນຮ່ວມກັນ ສຳລັບເມຍ ແລະ ຜົວ. ສະຫະພັນແມ່ຍິງລາວ ແມ່ນເປັນສ່ວນໜຶ່ງ ຂອງ ຄະນະກຳມະການວາງແຜນນຳໃຊ້ທີ່ດິນ ຢູ່ບ້ານ ແລະ ພະຍາຍາມດຶງເອົາຊາວບ້ານທີ່ເປັນເພດຍິງເຂົ້າຮ່ວມ ໃນການປຶກສາຫາລື.

9. **ການສ້າງລະບົບຕິດຕາມປ່າໄມ້ ແຫ່ງຊາດ: ແມ່ຍິງສາມາດປະກອບສ່ວນແນວໃດ?**

ຄະນະຄຸ້ມຄອງປ່າໄມ້ແຫ່ງຊາດ ຂອງໝົດທຸກບ້ານ ມີສະມາຊິກທີ່ເປັນເພດຍິງຢ່າງຕາຍໂຕໜຶ່ງຄົນແລ້ວ (ສະມາຊິກ ຂອງສະຫະພັນແມ່ຍິງລາວ), ດັ່ງນັ້ນ ລາວ ອາດຈະສາມາດ ສະໜັບສະໜຸນແມ່ຍິງ ໃນການ ຕິດຕາມປ່າໄມ້.

10. **ແຜນງານ ຕ້ອງການ ສົ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ເລື່ອນລອຍ ພ້ອມທັງ ສົ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ: ຈຸດໃດ ທີ່ຈະສົ່ງຜົນ ຕໍ່ຈຳນວນວຽກ ຂອງແມ່ຍິງ? ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນເດ? ສິ່ງດັ່ງກ່າວນັ້ນ ຈະມີຄວາມໝາຍແນວໃດ ສຳລັບ ການບໍລິການສົ່ງເສີມກະສິກຳ ທີ່ໄດ້ສະໜອງ? ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສ ຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ.**

ທາງເລືອກທີ່ສົ່ງເສີມ ຈຳເປັນຈະຕ້ອງຮັບປະກັນວ່າ ໜ້າວຽກຢູ່ໃນການຜະລິດ ສາມາດຖືກແຈກຢາຍ ຢ່າງເປັນທຳ ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ ເພື່ອຫຼີກລ້ຽງ ປະລິມານວຽກທີ່ເພີ່ມຂຶ້ນ ສຳລັບຝ່າຍໃດຝ່າຍໜຶ່ງ ໂດຍສະເພາະແມ່ນແມ່ຍິ. ຄຽງຄູ່ກັບ ການສົ່ງເສີມການແບ່ງປັນວຽກພາຍໃນ ທີ່ມີຄວາມເທົ່າທຽມກັນ ຫຼາຍຂຶ້ນ (ການໂຄສະນາປູກຈິດສຳນຶກ).

11. **ການສົ່ງເສີມ ຕ່ອງໂສ້ຄຸນຄ່າ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ການເຂົ້າເຖິງຕະຫຼາດ: ປັດຈຸບັນນີ້ ແມ່ນຫຍັງ ເປັນສິ່ງທ້າທາຍ ທີ່ໃຫຍ່ທີ່ສຸດ ຂອງແມ່ຍິງ ໃນການພັດທະນາ ຕ່ອງໂສ້ຄຸນຄ່າດັ່ງກ່າວ, ແມ່ນຫຍັງເປັນອຸປະສັກ ຂອງເຂົາເຈົ້າ ໃນການເຂົ້າເຖິງຕະຫຼາດ ໃນປັດຈຸບັນນີ້?**

ກະຊວງອຸດສະຫາກຳ ແລະ ການຄ້າ ຈະຕ້ອງສະໜັບສະໜູນ ການກຳນົດ ຕະຫຼາດໃໝ່ໆ. ປັດຈຸບັນນີ້ ຕະຫຼາດ ແມ່ນຢູ່ໃກໂພດ ຈາກບ້ານຕ່າງໆ ທີ່ຢູ່ຫ່າງໄກສອກຫຼີກທີ່ສຸດ. ບາງຄັ້ງ ບ້ານຕ່າງໆ ຜະລິດໄດ້ຫຼາຍ (ເຊັ່ນ ຜັກ) ແຕ່ຕະຫຼາດ ຢູ່ໃກໂພດ ທີ່ຈະນຳໄປຂາຍຢູ່ຕະຫຼາດ.

12. **ການເຂົ້າເຖິງ ການເງິນຈຸລະພາກ ສຳລັບ ຕ່ອງໂສ້ຄຸນຄ່າໃໝ່ ເຫຼົ່ານີ້: ແມ່ຍິງໄດ້ຮັບຜົນປະໂຫຍດ ຈາກສິ່ງ ດັ່ງກ່າວນັ້ນ ແນວໃດ?**

ການເງິນຈະລະພາກ ສາມາດຊ່ວຍ ແມ່ຍິງ ເລີ່ມຕົ້ນທຸລະກິດ ເຄື່ອງຈັກສານ, ການລ້ຽງສັດ, ແລະ ກະສິກຳ. ປັດຈຸບັນນີ້, ລູກຄ້າຕົ້ນຕໍ ຂອງ ສະຖາບັນການເງິນຈຸລະພາກ ແມ່ນແມ່ຍິງ. ສົມທົບ ການເຂົ້າເຖິງການເງິນ ຈຸລະພາກ ກັບ ການຝຶກອົບຮົມກ່ຽວກັບ ທຸລະກິດ ແກ່ ແມ່ຍິງ. ໃນກໍລະນີ ຂອງ ການສົ່ງເສີມພືດ ເສດຖະກິດ, ສະໜອງການຝຶກອົບຮົມກ່ອນ ແນະນຳພືດເສດຖະກິດໃໝ່ ຈົ່ນກວ່າວ່າ ແມ່ຍິງ ໄດ້ຖືກ ກະກຽມ ແລະ ມີຄວາມເຊື່ອໝັ້ນເພີ່ມຂຶ້ນ.
ມີຄວາມຈຳເປັນຈະຕ້ອງມີການຝຶກອົບຮົມ ກ່ຽວກັບງານຝີມື ຫຼາຍຂຶ້ນ ເພື່ອຮຽນຮູ້ ທັດສະໃໝ່ໆ (ເຊັ່ນ ເຄື່ອງຈັກສານ). ບໍ່ພຽງແຕ່ເວົ້າກ່ຽວກັບ ວິທີເຂົ້າເຖິງຕະຫຼາດເທົ່ານັ້ນ ແຕ່ກໍຍັງຈັດຕັ້ງ ການທັດສະນະສຶກ ສາ ແກ່ ຊາວບ້ານ ເພື່ອເຂົ້າເຖິງຕະຫຼາດ.
ເມື່ອສ້າງການເຂົ້າເຖິງ ການເງິນຈະລະພາກ: ໃຫ້ດຳເນີນ ການຝຶກອົບຮົມ ດ້ານການສຶກສາ ກ່ຽວກັບ ການ

ເງິນຈຸລະພາກ ທີ່ມີການປ່ຽນແປງ ຕ່ຳ ການຢ້ານກວາ ແລະ ຄວາມບໍ່ໝັ້ນຄົງ ຂອງແມ່ຍິງ ກ່ຽວກັບ ຄວາມ ສ່ຽງ ແລະ ລະດັບການສຶກສາທີ່ ຕ່ຳ.

13. **ທ່ານເຫັນທ່າແຮງ ແລະ ສິ່ງທ້າທາຍແນວໃດ ໃນການດຶງເອົາການລົງທຶນຈາກພາກເອກະຊົນ ເຂົ້າມາເຮັດ ການຜະລິດກະສິກຳປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ຢູ່ໃນປ່າຜະລິດແຫ່ງຊາດ ຊຶ່ງລວມມີ ການ ເຮັດອຸດສະຫາກຳໄມ້ ແລະ ອຸດສະຫາກຳເສັ້ນໄຍ? ທ່ານຄິດບໍ່ວ່າ ຊາວບ້ານ ຈະໄດ້ຮັບຜົນປະ�โຫຍດ ຈາກ ການລົງທຶນດັ່ງກ່າວ? ລັດຖະບານລາວ ຈະສາມາດ ຮັບປະກັນໄດ້ບໍ່ວ່າ ການລົງທຶນ ຈະສ້າງຜົນປະโຫຍດ ແກ່ຊາວບ້ານ?**

ຄ່າສຳປະທານ ແລະ ຄ່າແຮງງານ ຄວນຈະໄປຫາ ຊາວບ້ານ, ທີ່ດິນກັບໄປຫາຊາວບ້ານ. ຄວາມຮູ້ດ້ານວິຊາ ການ ຄວນຈະຖືກສະໜອງ ໂດຍບໍລິສັດ ໃຫ້ແກ່ ຊາວບ້ານ.

GCF/GIZ, ການສຳພາດພາກລັດ: ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫຼວງນ້ຳທາ

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນຜູມສັນຖານປ່າໄມ້ ແບບຍືນນານ

1. **ບົດບາດຂອງທ່ານ ມີຫຍັງແດ່ ຢູ່ໃນ ການຈັດຕັ້ງປະຕິບັດກົນໄກ REDD+?**

   ກະກຽມ ໂຄງສ້າງໃໝ່ ສຳລັບ ການຈັດຕັ້ງປະຕິບັດ REDD+ ໃນຕອນນີ້; ໄດ້ສຳເລັດແຜນ PRAP ແລ້ວ ແຕ່ຍັງລໍຖ້າເຊັນ. ໄດ້ປຶກສາຫາລື ກັບ ຄະນະຊີ້ນຳ REDD+ ຂັ້ນແຂວງ. ປັດຈຸບັນ ງົບປະມານກິດຈະກຳ ຖືກກະກຽມ, ຊຶ່ງມີ ຫ້າ ກິດຈະກຳ ຕົ້ນຕໍ: ການເຜີຍແຜ່ REDD, ການເຜີຍແຜ່ ລະບຽບການປ່າໄມ້, ການຜັນຂະຫຍາຍ ແລະ ຝຶກອົບຮົມ ກ່ຽວກັບ ກິດຈະກຳ PRAP, ງົບປະມານບໍລິຫານ

2. **ໃນມຸມມອງ ຂອງທ່ານ: ບົດບາດອັນສະເພາະ ຂອງແມ່ຍິງ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ ລວມທັງ ການປົກປັກຮັກສາປ່າໄມ້?**

   ບໍ່ມີການແຍກຈາກຝ່າຍລັດ. ກອງທຶນພັດທະນາບ້ານ ຫຼື ກອງທຶນອະນຸລັກ ມັກຈະແມ່ນຜູ້ຍິງເປັນຜູ້ນຳ ແລະ ຖືກເບິ່ງເໝືອນກັບວ່າ ເປັນຜູ້ມີບົດບາດຫຼັກ ໃນການຄຸ້ມຄອງ ແລະ ການບັນຊີ. ຕາມປະເພນີ, ການລາດຕະເວນ ແມ່ນຜູ້ຊາຍເປັນຜູ້ເຮັດ ເຖິງແມ່ນວ່າ ຈະບໍ່ໄດ້ເຈາະຈົງໃຫ້ເປັນເຊັ່ນນັ້ນກໍຕາມ. ແຕ່ເມື່ອໃດ ທີ່ ປ່າໄມ້ ຢູ່ໃກ້ບ້ານ, ແມ່ຍິງຍັງອາດສາມາດ ທຳໜ້າທີ່ນັ້ນໄດ້.

3. **ແມ່ຍິງ ເປັນສ່ວນໜຶ່ງຮຽບຮ້ອຍແລ້ວ ຂອງກົນໄກ REDD+ ໄດ້ແນວໃດ?**

   ແມ່ຍິງ ອາດຈະສາມາດ ມີບົດບາດຫຼາຍຢ່າງ – ເພາະວ່າ ເຂົາເຈົ້າ ມີຄວາມເອົາໃຈໃສ່ ແລະ ມີການຄິດຄຳນຶງ ຫຼາຍກວ່າ ຕໍ່ ຊັບພະຍາກອນທຳມະຊາດ. ແມ່ຍິງ ມັກຈະມີວຽກເພີ່ມທີ່ມີຄ່າ ຫຼາຍກວ່າ ເຊັ່ນ ຫັດຖະກຳ/ທໍຜ້າ. ການເກັບເຄື່ອງປ່າຂອງດົງ, ການເກັບກູ້ຢາງພາລາ ແມ່ນແມ່ຍິງຈະເຮັດມີປະສິດທິຜົນ ແລະ ປະສົບຜົນສຳເລັດ ຫຼາຍກວ່າ.

4. **ເຂົາເຈົ້າ ຈະສາມາດເປັນສ່ວນໜຶ່ງໃຫ້ໄດ້ຫຼາຍຂຶ້ນ ແນວໃດ?**

   ພວກເຮົາຮັບຮູ້ວ່າ ພວກເຮົາຈຳເປັນຈະຕ້ອງມີສ່ວນຮ່ວມ ໂດຍສະເພາະແມ່ນແມ່ຍິງ ເມື່ອເວົ້າເຖິງ ການເຜີຍແຜ່ ຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບ ແມ່ຍິງພາຍໃນບ້ານ. ພວກເຮົາຈະແຍກ ເປັນກຸ່ມປຶກສາຫາລືຍິງ ແລະ ຊາຍ ເພາະວ່າ ຖ້າບໍ່ດັ່ງນັ້ນ ແມ່ຍິງຈະບໍ່ເວົ້າ. ນອກຈາກນັ້ນ, ແມ່ຍິງຍັງເປັນຜູ້ໃຫ້ການອົບຮົມສຶກສາ

ເດັກ ທີ່ສຳຄັນ.

5. **ທ່ານເຫັນສິ່ງທ້າທາຍຫຍັງແດ່ ເມື່ອເວົ້າເຖິງເຂດຫ່າງໄກສອກຫຼີກ, ແມ່ຍິງ ແລະ ກຸ່ມຊົນເຜົ່າ?**

ແມ່ຍິງ ແມ່ນເປັນບຸກຄົນຕົ້ນຕໍ ໃນການເກັບກຳ ເຄື່ອງປ່າຂອງດົງ ແລະ ອື່ນໆ ແຕ່ວ່າ ຢູ່ໃນບ້ານຊົນເຜົ່າ, ສ່ວນໃຫຍ່ ແມ່ນຜູ້ຊາຍ ທີ່ເປັນຜູ້ຕັດສິນໃຈທັງໝົດ. ພວກເຮົາ ຈຳເປັນຈະຕ້ອງເພີ່ມ ການປູກຈິດສຳນຶກ ຂອງພວກເຮົາ ໃຫ້ແກ່ ຊຸມຊົນເຫຼົ່ານີ້ ກ່ຽວກັບ ການທຳການຕັດສິນໃຈທີ່ເທົ່າທຽມກັນ.
ການຂາດຄວາມຮູ້ພາສາລາວ ເຮັດໃຫ້ມີຄວາມຫຍຸ້ງຍາກ ໃນການສື່ສານ ກັບ ຊາວບ້ານທີ່ເປັນກຸ່ມຊົນເຜົ່າ ໂດຍສະເພາະແມ່ນແມ່ຍິງ. ເຂົາເຈົ້າມັກແຕ່ຈະເວົ້າກັບນາຍບ້ານເທົ່ານັ້ນ. ແຕ່ວ່າ ຫຼາຍກຸ່ມຊົນເຜົ່າ ທີ່ລວມມີ ເຜົ່າອາຄາ ໄດ້ປັບປຸງ ການເວົ້າພາສາລາວ ຂອງຕົນ ໃນສິບປີຜ່ານມາ. ດັ່ງນັ້ນ, ມັນຈຶ່ງງ່າຍຂຶ້ນ ໃນການເຂົ້າ ເຖິງເຂົ້າເຈົ້າ.

6. **ທ່ານຮູ້ສຶກບໍ່ວ່າ ແມ່ຍິງມີການເຂົ້າເຖິງຜົນປະໂຫຍດ ອັນດຽວກັນ ທີ່ມາຈາກຊັບພະຍາກອນປ່າໄມ້ ແລະ ການຄຸ້ມຄອງ/ການທຳການຕັດສິນ ຂອງເຂົາເຈົ້າ? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ່ ສຳລັບ ຕົວແບບການ ຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ, ເຊັ່ນ ປ່າໄມ້ຊຸມຊົນ, ປ່າໄມ້ລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງ ຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ?**

ແມ່ຍິງ ທີ່ເປັນຜູ້ເກັບເງິນໃຫ້ຄອບຄົວ ມີຜົນປະໂຫຍດສູງ ຈາກ ຊັບພະຍາກອນ. ແຕ່ເຖິງຢ່າງໃດກໍຕາມ, ສຳລັບຫຼາຍຊົນເຜົ່າ, ຜູ້ຊາຍມັກຈະເປັນຜູ້ໃຫ້ "ຄຳສຸດທ້າຍ" ໃນການຕັດສິນໃຈ. ຕ່າງກັບຢູ່ໃນຕົວເມືອງ, ປົກກະຕິ ແມ່ຍິງມີອຳນາດໃນການຕັດສິນໃຈ ຫຼາຍກວ່າ.
ຜູ້ຊາຍມີການເຂົ້າເຖິງຫຼາຍກວ່າ ຕໍ່ ການຄຸ້ມຄອງຊັບພະຍາກອນປ່າໄມ້. ພວກເຮົາຈຳເປັນຈະຕ້ອງ ໃຫ້ ແມ່ຍິງເຂົ້າຮ່ວມ ໃນການຄຸ້ມຄອງຈັດສັນປ່າໄມ້ ໃຫ້ຫຼາຍຂຶ້ນ. ໂດຍປົກກະຕິ, ແມ່ຍິງຈະເປັນຜູ້ເກັບເງິນ ໂດຍອີງຕາມວັດທະນາທຳລາວ, ດັ່ງນັ້ນ ຖ້າແມ່ຍິງເຫັນ "ຄຸນຄ່າຂອງເງິນ" ທີ່ມາຈາກຊັບພະຍາກອນປ່າໄມ້ ແລະ ການຄຸ້ມຄອງຂອງເຂົາເຈົ້າ, ເຂົາເຈົ້າຈະຕ້ອງການເຂົ້າຮ່ວມຫຼາຍຂຶ້ນ ຢ່າງເປັນທຳມະຊາດ.

7. **ແມ່ນກຸ່ມໃດ ຂອງແມ່ຍິງ ທີ່ໃນປັດຈຸບັນ ໄດ້ເຂົ້າຮ່ວມໃນ ຕົວແບບການຄຸ້ມຄອງຈັດສັນປ່າໄມ້?**

ສະຫະພັນແມ່ຍິງລາວ ເປັນພຽງກຸ່ມດຽວ. ກອງທຶນພັດທະນາບ້ານ ໄດ້ສົ່ງເສີມ ໃຫ້ແມ່ຍິງຫຼາຍຄົນ ມີ ບົດບາດໃນການຄຸ້ມຄອງ ໂດຍສະເພາະ ກ່ຽວກັບ ການພັດທະນາ ວິສະຫາກິດຂະໜາດກາງ ແລະ ນ້ອຍ. ກິດຈະກຳ ການທ່ອງທ່ຽວແບບອະນຸລັກ ໄດ້ສົ່ງເສີມ ແມ່ຍິງ ເຂົ້າໃນຕຳແໜ່ງບໍລິຫານ.
ພະແນກກະສິກຳ ແລະ ປ່າໄມ້ແຂວງ ມີແມ່ຍິງບາງຄົນ ຢູ່ໃນ ຂະແໜງປົກປັກຮັກສາທຳມະຊາດ (3 ຄົນ ໃນຈຳນວນ 8 ຄົນ), ຂະແໜງປ່າໄມ້ (13 ຄົນ ໃນຈຳນວນ 6 women).

8. **ຄວາມອາດສາມາດ ຂອງເຂົາເຈົ້າ ມີຫຍັງແດ່ ເຂົາເຈົ້າອາດຈຳເປັນຈະຕ້ອງການປັບປຸງຫຍັງແດ່?**

ພະນັກງານຍິງ ຂອງ ພະແນກກະສິກຳ ແລະ ປ່າໄມ້ແຂວງ ມີຄວາມອາດສາມາດ ອັນດຽວກັນ ແຕ່ ການ ເກີດລູກ ເຮັດໃຫ້ເຂົາເຈົ້າຢູ່ແຖວຫຼັງ. ມີຜູ້ລາດຕະເວນເພດຍິງສອງຄົນ ຢູ່ເມືອງລ່ອງ ທີ່ເຮັດວຽກຮ່ວມກັບ ກອງກວດກາປ່າໄມ້ແຂວງ ຊຶ່ງເປັນສ່ວນໜຶ່ງ ຂອງການບັງຄັບໃຊ້ກົດໝາຍ.

9. **ທ່ານ ປະເມີນຄວາມອາດສາມາດໃນປັດຈຸບັນ ຂອງທ່ານໄດ້ແນວໃດ ສຳລັບ ສະໜັບສະໜູນ ແຜນງານ ທີ່ ໄດ້ວາງແຜນໄວ້ ທີ່ພົວພັນກັບ ຄວາມສະເໝີພາບທາງເພດ?**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ມີຈຸດປະສານງານບົດບາດຍິງຊາຍ ສອງ ຫາ ສາມຄົນ, ຊຶ່ງເປັນຜູ້ຊາຍ ແລະ ແມ່ຍິງ ທີ່ມັກຈະເຂົ້າຮ່ວມ ໃນການຈັດຕັ້ງ ກິດຈະກຳຕ່າງໆ ແລະ ບາງຄັ້ງ ກຳລັງໄປບ້ານຕ່າງໆ. ນອກຈາກນັ້ນ, ສະຫະພັນແມ່ຍິງ ຍັງມີໂຄງສ້າງໃນການລົງວຽກ ເພື່ອຈັດຕັ້ງປະຕິບັດ ທຸກກິດຈະກຳອັນ ສະເພາະ.

ການຝຶກອົບຮົມທີ່ລົງເລິກດ້ານ REDD+ ແລະ ບົດບາດຍິງຊາຍ ອາດຈະເປັນປະໂຫຍດ ກ່ອນເລີ່ມຈັດຕັ້ງ ປະຕິບັດ. ນອກຈາກນັ້ນ, ຍັງມີການຝຶກອົບຮົມ ກ່ຽວກັບ ການປັບປຸງທັດສະຄວາມຮູ້ ໃນການອຳນວຍ ຄວາມສະດວກ ແລະ ການຂຶ້ນນຳສະເໜີ ແກ່ ພະນັກງານ ເພື່ອປັບປຸງ ວຽກໃນຂັ້ນບ້ານ.

10. **ທ່ານຄິດວ່າ ກົນໄກ REDD+ ໃນປັດຈຸບັນ ໄດ້ຄຳນຶງເຖິງບົດບາດຍິງຊາຍແນວໃດ? ວຽກງານ REDD+ ລວມທັງ ບົດບາດຍິງຊາຍຂອງມັນ ຖືກເຊື່ອມໂຍງເຂົ້າໃນແຜນພັດທະນາເສດຖະກິດສັງຄົມ ຫຼາຍປານໃດ?**

ແມ່ຍິງ ມີສ່ວນຮ່ວມຫຼາຍ ຢູ່ໃນຂະບວນການວາງແຜນ REDD* ໃນປັດຈຸບັນ. ສຳລັບການຄຳນຶກ ບົດບາດຍິງຊາຍ, ມັນຍາກສຳລັບພວກເຮົາ ທີ່ຈະປະເມີນໄດ້.

11. **ແຜນງານ ຈະສະໜັບສະໜູນ ການສ້າງ ລະບຽບການ ແລະ ບົດແນະນຳ ໂດຍອີງໃສ່ ກົດໝາຍປ່າໄມ້ ສະບັບໃໝ່: ສຳລັບໃນມຸມມອງກ່ຽວກັບບົດບາດຍິງຊາຍ, ຈະຕ້ອງຄຳນຶງເຖິງຫຍັງແດ່?**

ບໍ່ຈຳເປັນຈະຕ້ອງກ່າວເຖິງບົດບາດຍິງຊາຍ ແບບສະເພາະເຈາະຈົງ ຢູ່ໃນລະບຽບການ, ແຕ່ແທນທີ່ຈະ ເຮັດເຊັ່ນນັ້ນ ໃຫ້ເອົາແມ່ຍິງເຂົ້າມາຈັດຕັ້ງປະຕິບັດ ໃຫ້ຫຼາຍຂຶ້ນຕື່ມອີກ. ຢູ່ໃນບາງກໍລະນີ, ແມ່ນມີຄວາມ ສົມດຸນກັນແລ້ວ ແຕ່ບໍ່ແມ່ນຢູ່ທຸກບອນ. ຢູ່ຂັ້ນແຂວງ, ຄວາມສົມດຸນ ແມ່ນດີ ແຕ່ບໍ່ແມ່ນຢູ່ເກືອບທຸກບ້ານ ດັ່ງນັ້ນ ໃຫ້ເນັ້ນໜັກໃສ່ບ່ອນນັ້ນ.

12. ແມ່ຍິງ ສາມາດເປັນສ່ວນໜຶ່ງ ໃນ ມາດຕະການບັງຄັບໃຊ້ກົດໝາຍໄດ້ແນວໃດ?

ການລາດຕະເວນ ແມ່ນຈະຕິດຕາມດ້ວຍ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ກອງກວດກາປ່າໄມ້ເມືອງ ຮ່ວມກັບ ທະຫານ ແລະ ຕຳຫຼວດ. ມັນຈະເປັນໄປບໍ່ໄດ້ ຖ້າບໍ່ມີ ການເຂົ້າຮ່ວມ ຂອງຊາວບ້ານ. ບ້ານມັກຈະຂໍການສະໜັບສະໜູນຈາກລັດຖະບານ. ວຽກສາມາດເປັນສິ່ງ ອັນຕະລາຍ (ຜູ້ລ້າ, ຜູ້ຂຸດຄົ້ນ). ແມ່ຍິງບາງຄົນ ອາດຈະມີ ຄວາມອາດສາມາດ ແຕ່ບໍ່ແມ່ນເລື້ອງປົກກະຕິ.

13. ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?

ການວາງແຜນນຳໃຊ້ທີ່ດິນ ສ່ວນໃຫຍ່ແມ່ນສຳເລັດແລ້ວ ຍົກເວັ້ນບ້ານ ທີມີການຍົກຍ້າຍຫຼາຍ ຊຶ່ງເຮັດໃຫ້ ມັນຫຍຸ້ງຍາກ ແກ່ອຳນາດການປົກຄອງ ໃນການອັບເດດຂໍ້ມູນທີ່ຈຳເປັນ ໃນການຈັດສັນທີ່ດິນ. ການວາງ ແຜນນຳໃຊ້ທີ່ດິນ ແບບຍືນນານ ຈຳເປັນຈະຕ້ອງຄິດເຖິງໄລຍະຍາວ ໃຫ້ຫຼາຍຂຶ້ນກວ່າໃນອະດີຜ່ານມາ. ໂດຍສະເພາະແມ່ນ ເມືອງສິງ ທີ່ມີບັນຫາ ກ່ຽວກັບການຍົກຍ້າຍ ຍ້ອນມີການຜັດທະນາທີ່ໄວ (ດຶງເອົາທີ່ຕັ້ງ ແກ່ຫຼາຍຄົນ). ສຳລັບຄວາມເທົ່າທຽມກັນທາງເພດ, ການວາງແຜນນຳໃຊ້ທີ່ດິນ ປັດຈຸບັນນີ້ ສ້າງຜົນ ປະໂຫຍດ ໃຫ້ແກ່ທຸກຄົນ ຢ່າງເທົ່າທຽມກັນ. ການເຂົ້າຮ່ວມ ຢູ່ໃນການຕັດສິນໃຈ ທີ່ກ່ຽວຂ້ອງກັບປ່າໄມ້ ແມ່ນເທົ່າທຽມກັນຫຼາຍ, ສ່ວນ ແມ່ຍິງ ແລະ ຜູ້ຊາຍ ຮູ້ສຶກວ່າໄດ້ເຂົ້າຮ່ວມເທົ່າທຽມກັນ.

14. ການສ້າງລະບົບຕິດຕາມປ່າໄມ້ ແຫ່ງຊາດ: ແມ່ຍິງສາມາດປະກອບສ່ວນແນວໃດ?

ແມ່ຍິງຮູ້ປ່າໄມ້ດີ ແລະ ຄວນຈະມີສ່ວນຮ່ວມ ຢ່າງກວ້າງຂວາງ ຢູ່ໃນການຕິດຕາມ ຂອງເຂົາເຈົ້າ. ນອກຈາກນັ້ນ, ເຂົາເຈົ້າຍັງຖືກເບິ່ງເປັນຄົນທີ່ໜ້າເຊື່ອຖື ແລະ ຊື່ສັດກວ່າຜູ້ຊາຍ ໃນການສະໜອງຂໍ້ມູນ ປະເພດນີ້.

15. ແຜນງານ ຕ້ອງການ ສິ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສິ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ: ຈຸດໃດ ທີ່ຈະສົ່ງຜົນ ຕໍ່ຈຳ ນວນວຽກ ຂອງແມ່ຍິງ? ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນເດ? ສິ່ງດັ່ງກ່າວນັ້ນ ຈະມີຄວາມໝາຍແນວໃດ ສຳລັບ ການບໍລິການສົ່ງເສີມກະສິກຳ ທີ່ໄດ້ສະໜອງ? ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສ ຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ.

ໝາກແໜ່ງ, ຊາ, ເຄື່ອງປ່າຂອງດົງ. ດ້ານລົບ: ການທີ່ຈະປູກພືດເສດຖະກິດ, ມັກຈະມີການຕັດຕົ້ນໄມ້ ນ້ອຍອອກ. ດັ່ງນັ້ນ, ຄວາມສົມດຸນ ທາງດ້ານຊີວະວິທະຍາການກະເສດ ແມ່ນຈະບໍ່ສົມບູນ, ຊຶ່ງນຳໄປສູ່ ການຫຼຸດລົງ ຂອງຊີວະນາໆພັນ. ຖ້າວ່າ ພວກເຮົາ ເພີ່ມພືດເສດຖະກິດຂຶ້ນ, ສິ່ງດັ່ງກ່າວນີ້ ຍັງໝາຍເຖິງ

ການລົບກວນສັດປ່າ, ດັ່ງນັ້ນ ພວກເຮົາຄວນຈະຊອກວິທີທາງ ເພື່ອຈຳກັດສິ່ງລົບກວນ.
ການເຮັດໄຮ່ເລື່ອນລອຍ ຕ້ອງການແຮງງານ ຢ່າງຫຼວງຫຼາຍ ດັ່ງນັ້ນ ທຸກການປ່ຽນແປງ ຈາກ ສິ່ງດັ່ງກ່າວ ໄປເປັນພືດເສດຖະກິດ ເບິ່ງເໝືອນກັບວ່າຈະດີ ໃນແງ່ຂອງວຽກເຮັດງານທຳ ຂອງປະຊາຊົນ.
ຢູ່ໃນການປົກສາຫາລືຂັ້ນບ້ານ, ຄວນຈະເລັງເປົ້າໝາຍເຈາະຈົງໃສ່ແມ່ຍິງ ໂດຍສະເພາະ ດ້ານຄວາມຮູ້ວິຊາການ ທີ່ຈະສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າ ແລະ ນຳໃຊ້ບົດບາດ ຂອງເຂົາເຈົ້າ ເປັນຜູ້ອົບຮົມສັ່ງສອນ ລູກຂອງເຂົາເຈົ້າເອງ.

16. ການສົ່ງເສີມ ຕ່ອງໂສ້ຄຸນຄ່າ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ການເຂົ້າເຖິງຕະຫຼາດ: ປັດຈຸບັນນີ້ ແມ່ນຫຍັງ ເປັນສິ່ງທ້າທາຍ ທີ່ໃຫຍ່ທີ່ສຸດ ຂອງແມ່ຍິງ ໃນການພັດທະນາ ຕ່ອງໂສ້ຄຸນຄ່າດັ່ງກ່າວ, ແມ່ນ ຫຍັງເປັນອຸປະສັກ ຂອງເຂົາເຈົ້າ ໃນການເຂົ້າເຖິງຕະຫຼາດ ໃນປັດຈຸບັນນີ້?

ໃນການສົ່ງເສີມ, ຈະເປັນການດີ ທີ່ຈະປົກສາຫາລື ກ່ຽວກັບ ການແບ່ງວຽກ ຕາມທ່າແຮງ ຊຶ່ງເປັນສິ່ງຈຳເປັນ ສຳລັບ ໂຄງການໃໝ່ (ເຊັ່ນ ຜູ້ຊາຍເປັນຜູ້ປູກ, ແມ່ຍິງເປັນຜູ້ເກັບກູ້, ແລະ ອື່ນໆ).
ປົກກະຕິ ແມ່ຍິງ ຮູ້ກ່ຽວກັບ ການເຂົ້າເຖິງຕະຫຼາດ ຫຼາຍກວ່າຜູ້ຊາຍ ລວມທັງວ່າ ຜະລິຕະພັນໃດໜຶ່ງ ມີ ລາຄາເທົ່າໃດ. ສິ່ງດັ່ງກ່າວນັ້ນ ສາມາດຖືກນຳໃຊ້ ຢູ່ໃນການຝຶກອົບຮົມ.

17. ການເຂົ້າເຖິງ ການເງິນຈຸລະພາກ ສຳລັບ ຕ່ອງໂສ້ຄຸນຄ່າໃໝ່ ເຫຼົ່ານີ້: ແມ່ຍິງໄດ້ຮັບຜົນປະ�โຫຍດ ຈາກສິ່ງ ດັ່ງກ່າວນັ້ນ ແນວໃດ?

ສະຖາບັນການເງິນຈຸລະພາກ ມັກຈະເປັນອຸປະສັກໃຫຍ່ ສຳລັບປະຊາຊົນ ທີ່ຈະນຳໃຊ້ ເພື່ອເປັນຈຸດເລີ່ມຕົ້ນ ສຳລັບ ຕ່ອງໂສ້ຄຸນຄ່າ/ຜະລິດຕະພັນ ໃໝ່ ແລະ ອື່ນໆ ເພາະວ່າ ປະຊາຊົນ ຢ້ານອັດຕາດອກເບ້ຍ ແລະ ການ ຈ່າຍເງິນຄືນ ໃຫ້ທັນຕາມກຳນົດເວລາ ແລະ ດັ່ງນັ້ນ ອາດຈະບໍ່ນຳໃຊ້ສະຖາບັນດັ່ງກ່າວ. ສະຖາບັນການເງິນ ຈຸລະພາກ ເປັນເຈົ້າຂອງ ຄວາມຮູ້ເຕັກນິກ ທີ່ມີຄຸນຄ່າຫຼາຍ ຜ່ານທາງ ຊຶ່ງວ່າສາມາດ ເປັນປະ�โຫຍດ ສຳລັບ ຊາວບ້ານ ທີ່ຈະຮຽນຮູ້ ວິທີກຳນົດ ຊັບພະຍາກອນ ສຳລັບການລົງທຶນ ດ້ວຍຕົນເອງ ດັ່ງການ ການຮ່ວມມື ກັນ ອາດຈະເປັນສິ່ງທີ່ດີ ທີ່ສຸດ.

18. ທ່ານເຫັນທ່າແຮງ ແລະ ສິ່ງທ້າທາຍແນວໃດ ໃນການດຶງເອົາການລົງທຶນຈາກພາກເອກະຊົນ ເຂົ້າມາເຮັດ ການຜະລິດກະສິກຳປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ຢູ່ໃນປ່າຜະລິດແຫ່ງຊາດ ຊຶ່ງລວມມີ ການ ເຮັດອຸດສະຫາກຳໄມ້ ແລະ ອຸດສະຫາກຳເສັ້ນໄຍ? ທ່ານຄິດບໍ່ວ່າ ຊາວບ້ານ ຈະໄດ້ຮັບຜົນປະ�โຫຍດ ຈາກ ການລົງທຶນດັ່ງກ່າວ? ລັດຖະບານລາວ ຈະສາມາດ ຮັບປະກັນໄດ້ບໍ່ວ່າ ການລົງທຶນ ຈະສ້າງຜົນປະ�โຫຍດ ແກ່ຊາວບ້ານ?

ບົດຮຽນທີ່ຖອດຖອນໄດ້ ຈາກອະດີດ: ໄດ້ຈັດການທັດສະນະສຶກສາ ແກ່ ຊາວບ້ານ ແລະ ສະໝອງແກ່ນ ພັນ ໃຫ້ເຂົາເຈົ້າ ເພື່ອສ້າງຄວາມເຂັ້ມແຂງໃຫ້ເຂົ້າເຈົ້າ ເພື່ອເລີ່ມຜະລິດຕະພັນໃໝ່ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ ໄດ້ຮັບປະກັນວ່າ ບໍລິສັດ ຈະຊື້ ຜະລິດຕະພັນ (ໝາກເດົາ). ໃນບາງກໍລະນີ, ບໍລິສັດ ໄດ້

ສະໜອງເງິນທຶນ ແກ່ ກິດຈະກຳເຫຼົ່ານີ້, ບາງຄັ້ງແມ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຖ້າວ່າ ມີ ງົບປະມານ ສຳລັບກິດຈະກຳ. ອີກຕົວຢ່າງໜຶ່ງ: ບໍລິສັດຜະລິດເຈ້ຍ ຖືກສ້າງຂຶ້ນ ດັ່ງນັ້ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ໄດ້ຝຶກອົບຮົມ ແກ່ຊາວບ້ານ ກ່ຽວກັບ ວິທີປູກໄມ້ໃຜ ເພື່ອຂາຍໃຫ້ບໍລິສັດດັ່ງກ່າວ. ທັງສອງຢ່າງ ແມ່ນກຳລັງໄປໄດ້ດີ ແຕ່ ເຂົາເຈົ້າ ບໍ່ຮູ້ສຶກວ່າ ສິ່ງເຫຼົ່ານີ້ ແມ່ນເປັນຂໍ້ແກ້ໄຂ ທີ່ຍືນນານ ເພາະວ່າ ການຂຶ້ນລົງ ຂອງລາຄາ ມີທ່າອຽງ ທີ່ຈະສົ່ງຜົນກະທົບ ຢ່າງໜັກໜ່ວງ ຕໍ່ບ້ານຕ່າງໆ, ຊຶ່ງມັກຈະນຳ ໄປສູ່ ການທຳລາຍປ່າໄມ້ ເພາະວ່າ ຊາວບ້ານ ຕ້ອງການປູກພືດອື່ນ ຢ່າງໄວວາ ເພື່ອສ້າງລາຍຮັບເພີ່ມຕື່ມ. ຖ້າວ່າ ມີຫຼາຍບໍລິສັດ ສົນໃຈລົງທຶນ, ບາງທີ ທີ່ດິນກະສິກຳ ສາມາດ ຈັດສັນໂດຍກົງໃຫ້ເຂົາເຈົ້າ.

GCF/GIZ, ການສຳພາດພາກລັດ: ສະຫະພັນແມ່ຍິງລາວ ແຂວງຫຼວງນ້ຳທາ

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນຜູມສັນຖານປ່າໄມ້ ແບບຍືນນານ

1. **ບົດບາດຂອງທ່ານ ມີຫຍັງແດ່ ຢູ່ໃນ ການຈັດຕັ້ງປະຕິບັດກົນໄກ** REDD+?

   ປົກກະຕິ ພະແນກກະສິກຳ ແລະ ປ່າໄມ້ແຂວງ ປະສານງານ ກັບ ສະຫະພັນແມ່ຍິງລາວຂັ້ນແຂວງ ກ່ຽວກັບ ກິດຈະກຳທີ່ກ່ຽວຂ້ອງກັບປ່າໄມ້ ສ່ວນ ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການໜຶ່ງຄົນ ຖືກມອບໝາຍໃຫ້ເຂົ້າຮ່ວມ ໃນທຸກການປຶກສາຫາລືກ່ຽວກັບ REDD+ ລວມທັງໃນຂັ້ນບ້ານ. ນອກນັ້ນ ຍັງເຂົ້າຮ່ວມ ກິດຈະກຳ ຂອງ SUFORD ໃນລະດັບບ້ານ. ລວມທັງ ການເຜີຍແຜ່ຂໍ້ມູນ ກ່ຽວກັບບົດບາດຍິງ ຊາຍ ແກ່ ຊາວບ້ານ.

2. **ໃນມຸມມອງ ຂອງທ່ານ: ບົດບາດອັນສະເພາະ ຂອງແມ່ຍິງ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ ລວມທັງ ການປົກປັກຮັກສາປ່າໄມ້?**

   ແຜນນຳໃຊ້ທີ່ດິນ ຖືກຮັບຮອງ, ຫຼາຍຄົນ ຢຸດຕິ ການເຮັດໄຮ່ເລື່ອນລອຍ, ອາຊີບຕ່າງໆ ຖືກສ້າງຂຶ້ນ

3. **ທ່ານຮູ້ສຶກບໍ່ວ່າ ແມ່ຍິງມີການເຂົ້າເຖິງຜົນປະໂຫຍດ ອັນດຽວກັນ ທີ່ມາຈາກຊັບພະຍາກອນປ່າໄມ້ ແລະ ການຄຸ້ມຄອງ/ການທຳການຕັດສິນ ຂອງເຂົາເຈົ້າ? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ່ ສຳລັບ ຕົວແບບການຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ, ເຊັ່ນ ປ່າໄມ້ຊຸມຊົນ, ປ່າໄມ້ລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ?**

4. **ແມ່ນກຸ່ມໃດ ຂອງແມ່ຍິງ ທີ່ໃນປັດຈຸບັນ ໄດ້ເຂົ້າຮ່ວມໃນ ຕົວແບບການຄຸ້ມຄອງຈັດສັນປ່າໄມ້?**

   ສະຫະພັນແມ່ຍິງລາວ ບໍ່ແມ່ນຜູ້ຈັດຕັ້ງປະຕິບັດຕົ້ນຕໍ ແຕ່ເປັນຜູ້ປະສານງານກັບທຸກຂະແໜງການ ເພື່ອ ຮັບປະກັນ ຄວາມເທົ່າທຽມກັນທາງເພດ. ພວກເຮົາ ຕ້ອງການໃຫ້ແມ່ຍິງມີສ່ວນຮ່ວມເພີ່ມຂຶ້ນ ໃນການ ບໍລິຫານຄຸ້ມຄອງ ລະດັບບ້ານ. ພວກເຮົາ ຈຳເປັນຈະຕ້ອງ ລະດົມແມ່ຍິງໃນບ້ານ ແລະ ຂໍໃຫ້ອຳນາດການ ປົກຄອງບ້ານ ຮັບປະກັນວ່າ ແມ່ຍິງເຂົ້າຮ່ວມ ຢ່າງເທົ່າທຽມກັນ. ທຸກຄັ້ງ ມັກເປັນບັນຫາ ຖ້າມີພຽງແຕ່ຫົວ ໜ້າຄອບຄົວ ຖືກຮຽກໃຫ້ເຂົ້າຮ່ວມປະຊຸມ ເພາະວ່າ ຈະມີແຕ່ຜູ້ຊາຍເຂົ້າຮ່ວມ. ສິ່ງທີ່ເຄີຍປະຕິບັດຕາມ ປະເພນີ ແລະ ການທີ່ມີວຽກເຮືອນການຊານຫຼາຍ ເປັນການກີດກັ້ນ ແມ່ຍິງ ອອກຈາກການເຂົ້າຮ່ວມ.

ລະດັບການສຶກສາ ແມ່ນມີຕ່ຳ ສຳລັບແມ່ຍິງ, ດັ່ງນັ້ນ ເຂົາເຈົ້າຮູ້ສຶກມີຄວາມເຊື່ອໝັ້ນໜ້ອຍ ໃນການເຂົ້າຮ່ວມ. ທັງໝົດປັດໃຈເຫຼົ່ານີ້ ຈຳເປັນຕ້ອງໄດ້ຄຳນຶງເຖິງ ໃນເວລາວາງແຜນ ກິດຈະກຳຕ່າງໆ ໃນຂັ້ນບ້ານ.

5. **ທ່ານ ປະເມີນຄວາມອາດສາມາດໃນປັດຈຸບັນ ຂອງທ່ານໄດ້ແນວໃດ ສຳລັບ ສະໜັບສະໜູນ ແຜນງານ ທີ່ໄດ້ວາງແຜນໄວ້ ທີ່ພົວພັນກັບ ຄວາມສະເໝີພາບທາງເພດ?**

ພວກເຮົາ ມີການຝຶກອົບຮົມ ຈຳນວນໜຶ່ງ ທີ່ເປັນການແນະນຳ ເຂົ້າໃນຂະແໜງການ ແຕ່ອາດຈະເປັນການດີ ຖ້າມີການຝຶກອົບຮົມ ທີ່ລົງເລິກຕື່ມ ກ່ຽວກັບ REDD+ ແລະ ວິທີສະໜັບສະໜູນ ກິດຈະກຳ ຂອງ ແຜນງານ ໃຫ້ໄດ້ດີທີ່ສຸດ. .

6. **ທ່ານຄິດວ່າ ກົນໄກ REDD+ ໃນປັດຈຸບັນ ໄດ້ຄຳນຶງເຖິງບົດບາດຍິງຊາຍແນວໃດ? ວຽກງານ REDD+ ລວມທັງ ບົດບາດຍິງຊາຍຂອງມັນ ຖືກເຊື່ອມໂຍງເຂົ້າໃນແຜນພັດທະນາເສດຖະກິດສັງຄົມ ຫຼາຍປານໃດ?**

ມັນເປັນການດີ ທີ່ ສະຫະພັນແມ່ຍິງລາວຂັ້ນແຂວງ ໄດ້ມີສ່ວນຮ່ວມ ໃນທຸກໆ ການປຶກສາຫາລື ທີ່ກ້າວໄປ ສູ່ ການສ້າງກິດຈະກຳ REDD+ ໃນປີຜ່ານມາ, ດັ່ງນັ້ນ ເຂົາເຈົ້າ ຮູ້ສຶກວ່າ ມັນໄດ້ມີການປັບປຸງ ການຄຳນຶງເຖິງບົດບາດຍິງຊາຍ ຢູ່ໃນຂະບວນການ.

7. **ແຜນງານ ຈະສະໜັບສະໜູນ ການສ້າງ ລະບຽບການ ແລະ ບົດແນະນຳ ໂດຍອີງໃສ່ ກົດໝາຍປ່າໄມ້ ສະບັບໃໝ່: ສຳລັບໃນມຸມມອງກ່ຽວກັບບົດບາດຍິງຊາຍ, ຈະຕ້ອງຄຳນຶງເຖິງຫຍັງແດ່?**

ສະຫະພັນແມ່ຍິງລາວ ຄວນຈະມີສ່ວນຮ່ວມ ຢູ່ໃນການສ້າງ ລະບຽບການ ແລະ ບົດແນະນຳເຫຼົ່ານີ້. ກົດໝາຍປ່າໄມ້ ບໍ່ທັນໄດ້ຖືກທົບທວນຄືນ ຈາກເຂົາເຈົ້າເທື່ອ ດັ່ງນັ້ນ ເຂົາເຈົ້າ ບໍ່ຮູ້ສຶກ ວ່າ ເຂົາເຈົ້າ ຮັບຮູ້ຂໍ້ມູນເທົ່າທີ່ຄວນ. ເຂົາເຈົ້າ ຕ້ອງການປັບປຸງ ຄວາມເຂົ້າໃຈ ຂອງຕົນ ເມື່ອໃດທີ່ ກົດໝາຍ ໄດ້ຮັບການປັບປຸງ ໃນສະພາແຫ່ງຊາດ.

8. **ແມ່ຍິງ ສາມາດເປັນສ່ວນໜຶ່ງ ໃນ ມາດຕະການບັງຄັບໃຊ້ກົດໝາຍໄດ້ແນວໃດ?**

ແມ່ຍິງ ເປັນສ່ວນໜຶ່ງ ຂອງ ຄະນະທີ່ແຕກຕ່າງກັນ ໃນປ່າໄມ້ ແລະ ຄວນຈະໄດ້ຮັບການຝຶກອົບຮົມ ຢ່າງເປັນລະບົບ ເພື່ອໃຫ້ເຂົ້າຮ່ວມ ຢູ່ໃນມາດຕະການບັງຄັບໃຊ້ກົດໝາຍ ທີ່ລວມມີ ການລາດຕະເວນ.

9. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ບໍ່ມີສິ່ງທ້າທາຍສະເພາະເຈາະຈົງ ກ່ຽວກັບ ບົດບາດຍິງຊາຍ, ສ່ວນຫຼາຍ ຈະເປັນສິ່ງທ້າທາຍທົ່ວໄປ ທີ່ການ ວາງແຜນນຳໃຊ້ທີ່ດິນບໍ່ສຳເລັດ ໃນບາງພື້ນທີ່.

10. **ການສ້າງລະບົບຕິດຕາມປ່າໄມ້ ແຫ່ງຊາດ: ແມ່ຍິງສາມາດປະກອບສ່ວນແນວໃດ?**

ແມ່ຍິງ ຮູ້ ປ່າໄມ້ ດີກວ່າ ຜູ້ຊາຍ ແລະ ດັ່ງນັ້ນ ຄວນຈະມີສ່ວນຮ່ວມ ຢ່າງເຂັ້ມແຂງ ໃນການຕິດຕາມ ຊັບພະຍາກອນປ່າໄມ້ ໂດຍສະເພາະແມ່ນເຄື່ອງປ່າຂອງດົງ.

11. **ແຜນງານ ຕ້ອງການ ສິ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສິ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ: ຈຸດໃດ ທີ່ຈະສົ່ງຜົນ ຕໍ່ຈຳ ນວນວຽກ ຂອງແມ່ຍິງ? ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນເດ? ສິ່ງດັ່ງກ່າວນັ້ນ ຈະມີຄວາມໝາຍແນວໃດ ສຳລັບ ການບໍລິການສົ່ງເສີມກະສິກຳ ທີ່ໄດ້ສະໜອງ? ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສ ຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ.**

ພືດໃໝ່ ຈຳເປັນຕ້ອງມີການວິເຄາະ ທີ່ຄຳນຶງເຖິງບົດບາດຍິງຊາຍ ກ່ອນຈະມີການແນະນຳ ຖ້າພືດດັ່ງກ່າວ ຈະສ້າງຜົນປະໂຫຍດ ແກ່ທຸກຄົນ ພາຍໃນບ້ານ ແລະ ບໍ່ສ້າງວຽກຕື່ມ ໃຫ້ແກ່ແມ່ຍິງ.
ກິດຈະກຳການຮຽນຮູ້ ທີ່ອາໃສ ຊຸມຊົນ ແລະ ການປຶກສາຫາລື ຈຳເປັນຈະຕ້ອງແຍກຍິງ ແລະ ຊາຍອອກ ຈາກກັນ ເພື່ອຮັບປະກັນວ່າ ທຸກສຽງ ແມ່ນໄດ້ຮັບຟັງ ເທົ່າທຽມກັນ.

12. **ການສົ່ງເສີມ ຕ່ອງໂສ້ຄຸນຄ່າ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ການເຂົ້າເຖິງຕະຫຼາດ: ປັດຈຸບັນນີ້ ແມ່ນຫຍັງ ເປັນສິ່ງທ້າທາຍ ທີ່ໃຫຍ່ທີ່ສຸດ ຂອງແມ່ຍິງ ໃນການພັດທະນາ ຕ່ອງໂສ້ຄຸນຄ່າດັ່ງກ່າວ, ແມ່ນ ຫຍັງເປັນອຸປະສັກ ຂອງເຂົາເຈົ້າ ໃນການເຂົ້າເຖິງຕະຫຼາດ ໃນປັດຈຸບັນນີ້?**

ເຮັດໃຫ້ແມ່ຍິງ ມີຄວາມເຊື່ອໝັ້ນຫຼາຍຂຶ້ນ ໃນການເລີ່ມຕົ້ນ ຕ່ອງໂສ້ພືດ/ຄຸນຄ່າ ອັນໃໝ່. ສະຫະພັນ ແມ່ຍິງລາວ ແລະ ຂະແໜງການອື່ນໆ ຄວນຈະຖືກລວມຢູ່ໃນການໃຫ້ຄວາມຮູ້ແກ່ເຂົ້າເຈົ້າ ຫຼາຍຄັ້ງ ແລະ ຊ່ວຍເຂົາເຈົ້າ ກຳນົດ ຕະຫຼາດ ແລະ ສົ່ງເສີມ ການເຂົ້າເຖິງ ຂອງເຂົາເຈົ້າ ໂດຍສະເພາະແມ່ນແມ່ຍິງ ຕໍ່ ຕະຫຼາດເຫຼົ່ານີ້. ຍົກຕົວຢ່າງ, ປີນີ້ ໝາກແໜ່ງ ຂາຍບໍ່ໄດ້ດີ ຊຶ່ງເຮັດໃຫ້ ຊາວບ້ານຫຼາຍຄົນ ຍ້ານກວ່າ ທີ່ຈະ ລອງຜະລິດຕະພັນໃໝ່ ຍ້ອນຍ້ານປັນຫາເລື່ອງການເງິນ. ພວກເຮົາ ຕ້ອງການ ໃຫ້ມີການຈັດເອກະສານ ບົດຮຽນທີ່ຖອດຖອນໄດ້ ຢ່າງທົ່ວເຖິງ ຄ້າຍໆແບບນີ້ ແລະ ຊອກຫາຂໍ້ແກ້ໄຂ ທີ່ຍືນນານນຳກັນ.

13. **ການເຂົ້າເຖິງ ການເງິນຈຸລະພາກ ສຳລັບ ຕ່ອງໂສ້ຄຸນຄ່າໃໝ່ ເຫຼົ່ານີ້: ແມ່ຍິງໄດ້ຮັບຜົນປະໂຫຍດ ຈາກສິ່ງ ດັ່ງກ່າວນັ້ນ ແນວໃດ?**

ການທີ່ມີການສະໜັບສະໜູນ ຈາກການເງິນຈຸລະພາກ ດີກວ່າບໍ່ມີຫຍັງເລີຍ ແຕ່ວ່າ ມັນບໍ່ແມ່ນຂໍ້ແກ້ໄຂ ພຽງອັນດຽວ ແລະ ບໍ່ແມ່ນຂໍ້ແກ່ໄຂທີ່ດີທີ່ສຸດ. ສຳລັບແມ່ຍິງບາງຄົນ, ສິ່ງດັ່ງກ່າວນີ້ ອາດຈະຊ່ວຍ ໃຫ້ເລີ່ມ ຕົ້ນໄດ້. ຄອບຄົວທີ່ທຸກຍາກແຮງ ບໍ່ໃຊ້ຄວາມສ່ຽງໃນເບື້ອງຕົ້ນ ດັ່ງນັ້ນ ການເງິນຈຸລະພາກຢ່າງດຽວ ຈຶ່ງບໍ່ ເປັນຂໍ້ແກ້ໄຂໄດ້.

14. **ທ່ານເຫັນທ່າແຮງ ແລະ ສິ່ງທ້າທາຍແນວໃດ ໃນການດຶງເອົາການລົງທຶນຈາກພາກເອກະຊົນ ເຂົ້າມາເຮັດ ການຜະລິດກະສິກຳປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ຢູ່ໃນປ່າຜະລິດແຫ່ງຊາດ ຊຶ່ງລວມມີ ການ ເຮັດອຸດສະຫາກຳໄມ້ ແລະ ອຸດສະຫາກຳເສັ້ນໄຍ? ທ່ານຄິດບໍ່ວ່າ ຊາວບ້ານ ຈະໄດ້ຮັບຜົນປະໂຫຍດ ຈາກ ການລົງທຶນດັ່ງກ່າວ? ລັດຖະບານລາວ ຈະສາມາດ ຮັບປະກັນໄດ້ບໍ່ວ່າ ການລົງທຶນ ຈະສ້າງຜົນປະໂຫຍດ ແກ່ຊາວບ້ານ?**

ການປຶກສາຫາລືຂັ້ນບ້ານ ກ່ຽວກັບ ການລົງທຶນຈາກພາກເອກະຊົນທີ່ມີທ່າແຮງ ດັ່ງກ່າວ ຈຳເປັນຈະຕ້ອງ ຮັບປະກັນວ່າ ສຽງຂອງແມ່ຍິງພາຍໃນບ້ານ ແລະ ຄວາມກັງວົນ ຖືກນຳໄປພິຈາລະນາ ຢ່າງເປັນຈິງເປັນຈັງ (ກອງປະຊຸມສະເພາະແມ່ຍິງ ແລະ ອື່ນໆ).

15. **ຄຳຄິດເຫັນອື່ນໆເດ?**

ທຸກຄັ້ງ ສະຫະພັນແມ່ຍິງລາວ ຄວນຈະເຂົ້າຮ່ວມ ໃນກິດຈະກຳຂັ້ນບ້ານ ເພາະວ່າ ເຂົາເຈົ້າສາມາດ ເຂົ້າເຖິງ ແມ່ຍິງພາຍໃນບ້ານ ຢ່າງງ່າຍດາຍ. ດັ່ງນັ້ນ, ເຂົາເຈົ້າຈຶ່ງແນະນຳ ໃຫ້ກຳນົດ ຄວາມຮັບຜິດຊອບ ທີ່ຈະແຈ້ງ ຫຼາຍໆ ຄື ສະຫະພັນແມ່ຍິງ ເປັນຜູ້ຮັບຜິດຊອບ ຕໍ່ ການຈັດຕັ້ງປະຕິບັດ ໝົດທຸກກິດຈະກຳ ທີ່ກ່ຽວຂ້ອງ ກັບ REDD+ ແລະ ບົດບາດຍິງຊາຍ. ສຳລັບວິທີທາງນີ້, ມັນຮັບປະກັນວ່າ ບົດບາດຍິງຊາຍ ເປັນອົງ ປະກອບໃຈກາງ ສະເໝີ. ເຂົາເຈົ້າຮູ້ສຶກພ້ອມແລ້ວ ທີ່ຈະສະໜັບສະໜູນໂຄງການ ຢ່າງເຕັມທີ.

GCF/GIZ, ການສຳພາດພາກລັດ: ສະຫະພັນແມ່ຍິງລາວຂັ້ນເມືອງ, ແຂວງຫຼວງນ້ຳທາ

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນພູມສັນຖານປ່າໄມ້ ແບບຍືນນານ

1. **ບົດບາດຂອງທ່ານ ມີຫຍັງແດ່ ຢູ່ໃນ ການຈັດຕັ້ງປະຕິບັດກົນໄກ REDD+?**

   ໂດຍປົກກະຕິແລ້ວ, ສະຫະພັນແມ່ຍິງລາວຂັ້ນເມືອງ ແມ່ນຖືກເຊີນຈາກ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໃຫ້ເຂົ້າຮ່ວມ ບັນດາກິດຈະກຳຕ່າງໆ ທີ່ກ່ຽວຂ້ອງກັບປ່າໄມ້. ບໍ່ມີປະສົບການອັນສະເພາະ ກ່ຽວກັບການຈັດຕັ້ງປະຕິບັດ ກິດຈະກຳ REDD+ ຈົນມາຮອດປັດຈຸບັນນີ້ ແຕ່ ຮອງຫົວໜ້າ ສະຫະພັນແມ່ຍິງລາວຂັ້ນເມືອງ ໄດ້ເຂົ້າຮ່ວມໃນ ກອງປະຊຸມປຶກສາຫາລື ສຳລັບໂຄງການ ICBF (ໂດຍ KfW), ແລະ ໂຄງການໄມ້ປ່ອງ.

2. **ໃນມຸມມອງ ຂອງທ່ານ: ບົດບາດອັນສະເພາະ ຂອງແມ່ຍິງ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ ລວມທັງ ການປົກປັກຮັກສາປ່າໄມ້?**

   ແມ່ຍິງ ເຂົ້າຮ່ວມ ໃນການຄຸ້ມຄອງຈັດສັນ ແລະ ການປົກປັກຮັກສາປ່າໄມ້ ໂດຍສະເພາະທີ່ກ່ຽວຂ້ອງກັບເຄື່ອງປ່າຂອງດົງ. ສຳລັບໂຄງການ ICBF, ມີແມ່ຍິງທຸກຄັ້ງ ໃນຄະນະຊີ້ນຳບ້ານ (ປົກກະຕິ ແມ່ນ ຕ່າງໜ້າ ສະຫະພັນແມ່ຍິງ ຂັ້ນບ້ານ).

3. **ແມ່ຍິງ ເປັນສ່ວນໜຶ່ງຮຽບຮ້ອຍແລ້ວ ຂອງກົນໄກ REDD+ ໄດ້ແນວໃດ?**
4. **ເຂົາເຈົ້າ ຈະສາມາດເປັນສ່ວນໜຶ່ງໃຫ້ໄດ້ຫຼາຍຂຶ້ນ ແນວໃດ?**

5. **ທ່ານເຫັນສິ່ງທ້າທາຍຫຍັງແດ່ ເມື່ອເວົ້າເຖິງເຂດຫ່າງໄກສອກຫຼີກ, ແມ່ຍິງ ແລະ ກຸ່ມຊົນເຜົ່າ?**

   ພາສາ, ວັດທະນາທຳ, ລະດັບການສຶກສາທີ່ຕ່ຳ. ມີການແຕ່ງການແຕ່ນ້ອຍ ຢູ່ໃນຫຼາຍກຸ່ມຊົນເຜົ່າ. ເດັກນ້ອຍ ດຳລົງຊີວິດ ຢູ່ໃກ້ກັບທຳມະຊາດ ຫຼາຍໂພດ ແລະ ມີຊີວິດການເປັນຢູ່ຕາມປະເພນີ ທີ່ເຮັດໃຫ້ເຂົາເຈົ້າບໍ່ຕ້ອງການໄປໂຮງຮຽນ. ຢູ່ໃນບາງກຸ່ມຊົນເຜົ່າ ແລະ ບາງບ້ານ, ແມະກະທັງ ສະຫະພັນແມ່ຍິງລາວ ກໍຍັງບໍ່ສາມາດ ລວມຕົວແມ່ຍິງພາຍໃນບ້ານໄດ້: ໃນເວລາ ທີ່ເຂົາເຈົ້າຮຽກປະຊຸມແມ່ຍິງ ໃນບ້ານເຜົ່າອາຄາ, ຜູ້ຊາຍສົ່ງແມ່ຍິງໜີ ແລະ ເຂົ້າຮ່ວມກອງປະຊຸມເອງ ແທນທີຈະເປັນແມ່ຍິງ. ມັນມີຄວາມຫຍຸ້ງຍາກ ທີ່ຈະເອົາ ຊະນະປະເພນີຂອງເຂົາເຈົ້າໄດ້.
   ນອກຈາກນັ້ນ, ການເຂົ້າເຖິງດ້ວຍຖະໜົນ ແລະ ຄວາມຫ່າງໄກສອກຫຼີກ (ສົມທົບກັບ ການຂາດຍານພາຫາ

ນະທີ່ເໝາະສົມ) ເປັນອຸປະສັກ ແກ່ ພະນັກງານ ທີ່ຈະເຂົ້າໄປເຖິງບ້ານເຫຼົ່ານີ້. ບັນດາຫ້ອງການຂັ້ນເມືອງ ພະຍາຍາມ ທີ່ຈະຊ່ວຍກັນ ດ້ວຍພາຫານະ ແລະ ເຊື່ອມກິດຈະກຳນຳກັນ.

ສິ່ງທີ່ເຂົາເຈົ້າເຮັດ ເພື່ອທີ່ຈະເອົາຊະນະ ອຸປະສັກເຫຼົ່ານີ້: ການເຜີຍແຜ່ຂໍ້ມູນ ໃຫ້ແກ່ ທັງຍິງ ແລະ ຊາຍ ຜ່ານທາງຂໍ້ມູນກ່ຽວກັບ ກົດໝາຍ ຂອງແມ່ຍິງ ທີ່ເຊື່ອມໂຍງເຂົ້າໃນບັນຫາ ກ່ຽວກັບບົດບາດຍິງຊາຍ. ທຳນິບທຳນຽມທາງປະເພນີ ກ່ຽວກັບບົດບາດຍິງຊາຍ ທີ່ເຮັດໃຫ້ຜູ້ຊາຍ ແລະ ແມ່ຍິງ ເຊື່ອວ່າ ການທີ່ແມ່ຍິງມີ ປະໂຫຍດໜ້ອຍກວ່າຜູ້ຊາຍ ແມ່ນເປັນອຸປະສັກໃຫຍ່ທີ່ສຸດ ໃນການລວມເອົາແມ່ຍິງ ເຂົ້າໃນກິດຈະກຳ ຕ່າງໆ. ນອກຈາກນັ້ນ, ພະນັກງານ ຈຳເປັນຈະຕ້ອງປັບໂຕເຂົ້າກັບ ຕາຕະລາງ ຂອງຊາວບ້ານ. ຍົກຕົວຢ່າງ ແມ່ຍິງເຜົ່າອາຄາ ບໍ່ໄດ້ຢູ່ບ້ານໝົດມື້ ດັ່ງນັ້ນ ທ່ານຕ້ອງການພົບເຂົາເຈົ້າ, ທີມງານ ຈຳເປັນຈະຕ້ອງມີຄວາມ ບໍ່ຕາຍໂຕ ແລະ ລໍຖ້າຈົ່ນກວ່າ ຮອດຕອນແລງ ແລະ ນອນຢູ່ໃນບ້ານ. ນອກຈາກນັ້ນ, ການປ່ຽນແປງປະເພນີ ແມ່ນຈະໃຊ້ເວລາ – ໂຄງການຕ່າງໆ ຈຳເປັນຈະຕ້ອງວາງແຜນ ກິດຈະກຳ ທີ່ຈັດຕັ້ງປະຕິບັດຄືນ ແລະ ມີ ກອບເວລາທີ່ບໍ່ຕາຍໂຕ ເພື່ອຄວບຄຸມການປ່ຽນແປງ.

6. **ທ່ານຮູ້ສຶກບໍວ່າ ແມ່ຍິງມີການເຂົ້າເຖິງຜົນປະໂຫຍດ ອັນດຽວກັນ ທີ່ມາຈາກຊັບພະຍາກອນປ່າໄມ້ ແລະ ການຄຸ້ມຄອງ/ການທຳການຕັດສິນ ຂອງເຂົາເຈົ້າ? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ ສຳລັບ ຕົວແບບການ ຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ, ເຊັ່ນ ປ່າໄມ້ຊຸມຊົນ, ປ່າໄມ້ລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງ ຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ?**

ແມ່ຍິງ ແມ່ນເປັນຜູ້ເກັບກູ້ ຊັບພະຍາກອນປ່າໄມ້ ຫຼັກ ແຕ່ວ່າ ກອບເວລາສ່ວນໃຫຍ່ ບໍ່ໄດ້ໃຫ້ໂອກາດ ໃນ ການເຂົ້າຮ່ວມໃດເລີຍ ທີ່ກ່ຽວຂ້ອງກັບ ການເມືອງບ້ານ ທີ່ລວມມີ ການຄຸ້ມຄອງຈັດສັນປ່າໄມ້.

7. **ທ່ານ ປະເມີນຄວາມອາດສາມາດໃນປັດຈຸບັນ ຂອງທ່ານໄດ້ແນວໃດ ສຳລັບ ສະໜັບສະໜູນ ແຜນງານ ທີ່ ໄດ້ວາງແຜນໄວ້ ທີ່ພົວພັນກັບ ຄວາມສະເໝີພາບທາງເພດ?**

ເຂົາເຈົ້າຮູ້ສຶກວ່າ ເຂົາເຈົ້າຕ້ອງການ ການຝຶກອົບຮົມດ້ານວິຊາການ ໃຫ້ຫຼາຍຂຶ້ນອີກ ກ່ຽວກັບ REDD+ ແລະ ຄວາມໝາຍຂອງມັນ ໃນແງ່ບົດບາດຍິງຊາຍ ເພື່ອສາມາດ ສະໜັບສະໜູນ ແຜນງານໃໝ່ ຢ່າງ ເຕັມທີ່.

8. **ທ່ານຄິດວ່າ ກົນໄກ REDD+ ໃນປັດຈຸບັນ ໄດ້ຄຳນຶງເຖິງບົດບາດຍິງຊາຍແນວໃດ? ວຽກງານ REDD+ ລວມທັງ ບົດບາດຍິງຊາຍຂອງມັນ ຖືກເຊື່ອມໂຍງເຂົ້າໃນແຜນພັດທະນາເສດຖະກິດສັງຄົມ ຫຼາຍປານໃດ?**

ໜ້ອຍຫຼາຍ. ບົດບາດຍິງຊາຍ ບໍ່ແມ່ນໃຈກາງ ຂອງຂະບວນການວາງແຜນ ແລະ ປຶກສາຫາລື ເຫຼົ່ານີ້.

9. **ແຜນງານ ຈະສະໜັບສະໜູນ ການສ້າງ ລະບຽບການ ແລະ ບົດແນະນຳ ໂດຍອີງໃສ່ ກົດໝາຍປ່າໄມ້ ສະບັບໃໝ່: ສຳລັບໃນມຸມມອງກ່ຽວກັບບົດບາດຍິງຊາຍ, ຈະຕ້ອງຄຳນຶງເຖິງຫຍັງແດ່?**

ກົດໝາຍວ່າດ້ວຍ ສະຫະພັນແມ່ຍິງລາວ ຄວນຈະຖືກນຳມາປຶກສາຫາລື ເມື່ອມີການຮ່າງ ບົດແນະນຳ ແລະ ລະບຽບການ ເຫຼົ່ານັ້ນ. ໂອກາດສຳລັບແມ່ຍິງ ໃນການມີສ່ວນຮ່ວມ ຈຳເປັນຈະຕ້ອງຖືກເຊື່ອໂຍງ ຢ່າງຕັ້ງໜ້າ ເຂົ້າໃສ່ໃນ ໝົດທຸກບົດແນະນຳ, ຖ້າບໍ່ເຮັດເຊັ່ນນັ້ນ, ຈະບໍ່ມີຫຍັງເກີດຂຶ້ນໄດ້. ນອກຈາກນັ້ນ, ໃຫ້ລວມເອົາ ຄື ອີງຕາມມາດຕະຖານ, ສະຫະພັນແມ່ຍິງ ຄວນຈະມີສ່ວນຮ່ວມທຸກຄັ້ງ ໃນກິດຈະກຳການ ວາງແຜນ ແລະ ການຈັດຕັ້ງປະຕິບັດ ລວມທັງ ທຸກໆ ການປຶກສາຫາລື. ຈາກນັ້ນ, ສິ່ງທີ່ກ່າວມາ ອາດ ຈະລວມມີ ຄື ສະຫະພັນແມ່ຍິງ ໄດ້ຮັບການສະໜັບສະໜູນ ງົບປະມານ ໃນການເຮັດສິ່ງທີ່ກ່າວມານີ້.

10. **ແມ່ຍິງ ສາມາດເປັນສ່ວນໜຶ່ງ ໃນ ມາດຕະການບັງຄັບໃຊ້ກົດໝາຍໄດ້ແນວໃດ?**

ສະຫະພັນແມ່ຍິງລາວ ອາດຈະຕ້ອງການ ເປັນສ່ວນໜຶ່ງ ຂອງ ການບັງຄັບໃຊ້ກົດໝາຍປ່າໄມ້. ແມ່ຍິງພາຍ ໃນບ້ານ ຄວນຈະເປັນສ່ວນໜຶ່ງ ຂອງຄະນະຊີ້ນຳບ້ານ ເມື່ອມີການຕັດສິນໃຈ ກ່ຽວກັບ ການຄຸ້ມຄອງຈັດ ສັນປ່າໄມ້ ແລະ ການບັງຄັບໃຊ້ກົດໝາຍ.

11. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ແມ່ຍິງ ແລະ ຜູ້ຊາຍ ມີສິດອັນດຽວກັນ ອີງຕາມ ກົດໝາຍ ແຕ່ວ່າ ແມ່ຍິງມັກຈະບໍ່ມີໂອກາດແບບດຽວກັນ ໃນການຕັດສິນໃຈ ກ່ຽວກັບ ການນຳໃຊ້ທີ່ດິນ ຂອງເຂົາເຈົ້າ ເມື່ອສົມທຽບກັບ ຜູ້ຊາຍ. ສິ່ງທີ່ກ່າວນັ້ນ ເລີ່ມຕົ້ນດ້ວຍ ການມີສ່ວນຮ່ວມຢ່າງຕັ້ງໜ້າ ແລະ ມີຄວາມເທົ່າທຽມກັນ ຫຼາຍຂຶ້ນ ຂອງແມ່ຍິງ ຢູ່ໃນກອງ ປະຊຸມ ກ່ຽວກັບການວາງແຜນນຳໃຊ້ທີ່ດິນ ຂອງບ້ານ ຊຶ່ງມັກຈະບໍ່ຖືກຮັບຮູ້. ໂດຍສະເພາະ ແມ່ຍິງຈຳເປັນ ຈະຕ້ອງຄິດເຖິງ ການມີພຽງແຕ່ຊື່ຂອງຕົນເອງເທົ່ານັ້ນ ຢູ່ໃນຊັບສິນທີ່ດິນ ທີ່ເຂົາເຈົ້າໄດ້ຮັບຈາກການສືບ ທອດ. ຊັບສິນທີ່ດິນ ທີ່ໄດ້ແບ່ງປັນ ສາມາດ ມີຊື່ທັງສອງຄົນໄດ້ ແຕ່ວ່າ ເນື່ອງຈາກວ່າ ແມ່ຍິງມັກຈະເປັນ ຝ່າຍທີ່ເສຍປຽບ ເມື່ອເວົ້າເຖິງຂັນຕອນທາງກົດໝາຍ ພາຍໃນທ້ອງຖິ່ນ, ເຂົາເຈົ້າມັກຈະສູນເສຍທີ່ດິນ ຂອງຕົນ ເຊັ່ນ ເມື່ອຜົວຂອງເຂົາເຈົ້າ ເສຍຊີວິດ ແລະ ແມ່ຍິງໄປແຕ່ງງານກັບຜູ້ໃໝ່, ສ່ວນ ສິດຕໍ່ທີ່ດິນ ແມ່ນບໍ່ມີຄວາມຈະແຈ້ງ ກັບແມ່ຍິງ – ຈາກນັ້ນ ໂດຍປົກກະຕິ ທີ່ດິນຈະຕົກເປັນຂອງຄອບຄົວ ຂອງຝ່າຍ ຊາຍ.

12. **ການສ້າງລະບົບຕິດຕາມປ່າໄມ້ ແຫ່ງຊາດ: ແມ່ຍິງສາມາດປະກອບສ່ວນແນວໃດ?**

ເມື່ອໃດກໍຕາມ ທີ່ສະພາບຂອງບ້ານເອື້ອອຳນວຍ, ທັງຊາຍ ແລະ ຍິງ ຄວນຈະເຂົ້າຮ່ວມ ໃນຄວາມ ພະຍາຍາມຕິດຕາມ ຊັບພະຍາກອນປ່າໄມ້ ທີ່ປະກອບມີ ການລາດຕະເວນ ຖ້າວ່າ ໃນແງ່ຂອງປະເພນີ

ສາມາດເຮັດເຊັ່ນນັ້ນໄດ້. ເມື່ອໃດກໍຕາມ ທີ່ມັນເປັນໄປບໍ່ໄດ້ ທີ່ຈະມີການຕິດຕາມຢ່າງຕັ້ງໜ້າ ສຳລັບ ຊາວບ້ານ (ໄກໂພດ, ບໍ່ມີພາຫານະເດີນທາງ, ອັນຕະລາຍໂພດ, ມີວຽກອື່ນຫຼາຍໂພດ), ຢ່າງໜ້ອຍ ເຂົາເຈົ້າ ຄວນຈະໄດ້ຮັບການປຶກສາຫາລື ຢ່າງເປັນປົກກະຕິ.

13. **ແຜນງານ ຕ້ອງການ ສົ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສົ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ: ຈຸດໃດ ທີ່ຈະສົ່ງຜົນ ຕໍ່ຈຳນວນວຽກ ຂອງແມ່ຍິງ? ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນເດ? ສິ່ງດັ່ງກ່າວນັ້ນ ຈະມີຄວາມໝາຍແນວໃດ ສຳລັບ ການບໍລິການສົ່ງເສີມກະສິກຳ ທີ່ໄດ້ສະໜອງ? ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສ ຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ.**

ໃຫ້ເບິ່ງຄຳຕອບ ຕໍ່ໄປ

14. **ການສົ່ງເສີມ ຕ່ອງໂສ້ຄຸນຄ່າ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ການເຂົ້າເຖິງຕະຫຼາດ: ປັດຈຸບັນນີ້ ແມ່ນຫຍັງ ເປັນສິ່ງທ້າທາຍ ທີ່ໃຫຍ່ທີ່ສຸດ ຂອງແມ່ຍິງ ໃນການພັດທະນາ ຕ່ອງໂສ້ຄຸນຄ່າດັ່ງກ່າວ, ແມ່ນ ຫຍັງເປັນອຸປະສັກ ຂອງເຂົາເຈົ້າ ໃນການເຂົ້າເຖິງຕະຫຼາດ ໃນປັດຈຸບັນນີ້?**

ສະຫະພັນແມ່ຍິງ ມັກຈະຖືກຂໍຮ້ອງ ຈາກໂຄງການ ໃຫ້ກຳນົດຕະຫຼາດ ໂດຍສະເພາະ ສຳລັບແມ່ຍິງ ຊຶ່ງຈຳເປັນ ທີ່ຈະຕ້ອງໄດ້ເຮັດ ໃນເວລາແນະນຳ ຕ່ອງໂສ້ຄຸນຄ່າໃໝ່. ຫຼາຍໂຄງການ ສະໜັບສະໜູນ ກິດຈະກຳ ການສ້າງລາຍຮັບ ສຳລັບແມ່ຍິງ ເຊັ່ນ ການຕຳແຜ່ນ/ທໍຜ້າ ແຕ່ວ່າ ຖ້າບໍ່ມີຕະຫຼາດ ແລະ ການສົ່ງເສີມ ການ ເຂົ້າເຖິງຕະຫຼາດ ຂອງແມ່ຍິງ, ຕ່ອງໂສ້ຄຸນຄ່າໃໝ່ ແມ່ນຈະບໍ່ປັບປຸງ ຊີວິດການເປັນຢູ່ ຂອງແມ່ຍິງ

15. **ການເຂົ້າເຖິງ ການເງິນຈຸລະພາກ ສຳລັບ ຕ່ອງໂສ້ຄຸນຄ່າໃໝ່ ເຫຼົ່ານີ້: ແມ່ຍິງໄດ້ຮັບຜົນປະໂຫຍດ ຈາກສິ່ງ ດັ່ງກ່າວນັ້ນ ແນວໃດ?**

ສຳລັບຜົນປະໂຫຍດ ຕໍ່ແມ່ຍິງ, ແມ່ຍິງພາຍໃນບ້ານ ຄວນຈະຖືກລວມເຂົ້າໃນ ການຄຸ້ມຄອງທະນາຄານ ເຫຼົ່ານີ້ ຢູ່ໃນລະດັບບ້ານ ນັບຕັ້ງແຕ່ຈາກຈຸດເລີ່ມຕົ້ນ. ສະຫະພັນແມ່ຍິງລາວຂັ້ນເມືອງ ໃນແຂວງຫຼວງນ້ຳທາ ບໍ່ໄດ້ເຂົ້າຮ່ວມໃນການເງິນຈຸລະພາກ. ມັນມີຄວາມຫຍຸ້ງຍາກໃນການເຂົ້າເຖິງ ສຳລັບເຂົາເຈົ້າ ຖ້າວ່າ ໃນ ຄວາມເປັນຈິງ ການເຂົ້າເຖິງການເງິນຈະລະພາກ ອາດຈະສ້າງຄວາມເຂັ້ມແຂງ ແກ່ແມ່ຍິງ ໃນການເລີ່ມ ຜະລິດຕະພັນ/ທຸລະກິດໃໝ່ໆ, ແຕ່ ສະຫະພັນແມ່ຍິງລາວຂັ້ນເມືອງ ອາດຈະສະໜັບສະໜູນ ກິດຈະກຳທີ່ມີ ທ່າແຮງສ້າງຜົນປະໂຫຍດນີ້ ເພື່ອຮັບປະກັນວ່າ ແມ່ຍິງ ແມ່ນເປັນສ່ວນໜຶ່ງ ໃນ ການຄຸ້ມຄອງ ແລະ ຈັດຕັ້ງ ປະຕິບັດ.

16. **ທ່ານເຫັນທ່າແຮງ ແລະ ສິ່ງທ້າທາຍແນວໃດ ໃນການດຶງເອົາການລົງທຶນຈາກພາກເອກະຊົນ ເຂົ້າມາເຮັດການຜະລິດກະສິກຳປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ຢູ່ໃນປ່າຜະລິດແຫ່ງຊາດ ຊຶ່ງລວມມີ ການເຮັດອຸດສະຫາກຳໄມ້ ແລະ ອຸດສະຫາກຳເສັ້ນໄຍ? ທ່ານຄິດບໍ່ວ່າ ຊາວບ້ານ ຈະໄດ້ຮັບຜົນປະ�โຫຍດ ຈາກການລົງທຶນດັ່ງກ່າວ? ລັດຖະບານລາວ ຈະສາມາດ ຮັບປະກັນໄດ້ບໍ່ວ່າ ການລົງທຶນ ຈະສ້າງຜົນປະโຫຍດແກ່ຊາວບ້ານ?**

ເຂົາເຈົ້າບໍ່ເຫັນ ທ່າແຮງ ສຳລັບ ເມືອງຫຼວງນ້ຳທາ ເນື່ອງຈາກວ່າ ບໍ່ມີພື້ນທີ່ ສຳລັບເຮັດສິ່ງນັ້ນ. ມັນມີສ່ວນຢ່າງພາລາແລ້ວ. ປະຊາຊົນ ບໍ່ມີເງິນ ທີ່ຈະເລີ້ມຄວາມພະຍາຍາມດັ່ງກ່າວ ດ້ວຍຕົນເອງ, ແລະ ບໍ່ມີຕະຫຼາດຂາຍ ຜະລິດຕະພັນໃໝ່ໆ. ດັ່ງນັ້ນ, ທຸກການລົງທຶນ ທີ່ມີທ່າແຮງ ອາດຈະຕ້ອງວິເຄາະ ສິ່ງທ້າທາຍເຫຼົ່ານີ້ ແລະ ຄຳນຶງເຖິງ ຄວາມຍືນນານ ແລະ ຜົນປະโຫຍດທີ່ຍັງມີຢູ່ ສຳລັບ ປະຊາຊົນທີ່ເຂົ້າຮ່ວມ.

17. **ຄຳຄິດເຫັນອື່ນໆເດ?**

ສະຫະພັນແມ່ຍິງລາວ ເມືອງຫຼວງນ້ຳທາ ອາດຈະມີຄວາມຍິນດີ ທີ່ຈະຈັດຕັ້ງປະຕິບັດ ສ່ວນໃດໜຶ່ງ ຂອງແຜນງານ ເພາະວ່າ ໂດຍປົກກະຕິແລ້ວ ເຂົາເຈົ້າເປັນພຽງອົງການຈັດຕັ້ງດຽວ ທີ່ໄດ້ຮັບການປຶກສາຫາລື. ດັ່ງນັ້ນ, ການຈັດຕັ້ງປະຕິບັດກິດຈະກຳຍ່ອຍ ທີ່ມີການສະໜອງງົບປະມານ ອາດຈະເປັນຂໍ້ແກ້ໄຂ ທີ່ເຂົາເຈົ້າມັກ ຫຼື ຢ່າງໜ້ອຍ ໃຫ້ເຂົາເຈົ້າເຂົ້າຮ່ວມໃນ ຄະນະຊີ້ນຳແຜນງານ.

GCF/GIZ, ການສໍາພາດພາກລັດ: ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ກອງກວດກາປ່າໄມ້ເມືອງ, ຫຼວງນໍ້າທາ

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນພູມສັນຖານປ່າໄມ້ ແບບຍືນນານ

1. **ບົດບາດຂອງທ່ານ ມີຫຍັງແດ່ ຢູ່ໃນ ການຈັດຕັ້ງປະຕິບັດກົນໄກ REDD+**?

   ໂດຍປົກກະຕິ, ຮອງຫົວໜ້າຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ເຂົ້າຮ່ວມ ການປຶກສາຫາລື ກ່ຽວກັບ REDD+, ແຕ່ວ່າ ເຂົາເຈົ້າຮູ້ສຶກວ່າ ເຂົາເຈົ້າຍັງຄົງມີພຽງແຕ່ ຄວາມຮູ້ທີ່ຈໍາກັດກ່ຽວກັບ REDD+ ແຕ່ວ່າ ບົດບາດຕົ້ນຕໍ ຂອງ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແມ່ນການປົກປ້ອງປ່າໄມ້ ແລະ ພັນໄມ້ ລວມທັງ ການປົກປ້ອງຊີວະນາໆພັນ/ສັດປ່າທົ່ວໄປ ແລະ ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ແລະ ການປະຕິບັດຕາມລະບຽບກົດໝາຍ, ການລາດຕະເວນ, ການທໍາລາຍປ່າໄມ້.

2. **ໃນມຸມມອງ ຂອງທ່ານ: ບົດບາດອັນສະເພາະ ຂອງແມ່ຍິງ ມີຫຍັງແດ່ ໃນການນໍາໃຊ້ປ່າໄມ້ ແລະ ທີ່ດິນ ລວມທັງ ການປົກປັກຮັກສາປ່າໄມ້**?

   ການປົກປັກຮັກສາປ່າໄມ້ ໃນລະດັບບ້ານ, ແມ່ຍິງ ມີບົດບາດ ແລະ ຄວາມຮັບຜິດຊອບ ຫຼາຍກວ່າ ເພາະວ່າ ໂດຍປົກກະຕິ ແມ່ຍິງໄປເກັບເຄື່ອງປ່າຂອງດົງ/ຜັກ ຢູ່ໃນປ່າ. ສ່ວນຜູ້ຊາຍ ສິ່ງຕົ້ນຕໍທີ່ເຮັດ ແມ່ນ ເຜີຍແຜ່ ແລະ ບັງຄັບໃຊ້ລະບຽບການ; ມີພຽງແຕ່ແມ່ຍິງຈໍານວນເລັກນ້ອຍເທົ່ານັ້ນ ທີ່ມີສ່ວນຮ່ວມ ໃນລະດັບ ການ ປົກປັກຮັກສາ/ຄຸ້ມຄອງຊັບພະຍາກອນ.

3. **ແມ່ຍິງ ເປັນສ່ວນໜຶ່ງຮຽບຮ້ອຍແລ້ວ ຂອງກົນໄກ REDD+ ໄດ້ແນວໃດ?**

   ໂດຍທົ່ວໄປ, ກິດຈະກໍາທັງໝົດ ເລັງໃສ່ ສ້າງຜົນປະ�โຫຍດ ແກ່ ຊາວບ້ານໝົດທຸກຄົນ ຢ່າງເທົ່າທຽມກັນ. ແຕ່ວ່າ ໂດຍສະເພາະ ຢູ່ໃນຫຼາຍຊົນເຜົ່າ, ແມ່ຍິງ ເຂົ້າຮ່ວມໜ້ອຍ ໃນກິດຈະກໍາຕ່າງໆ ຍ້ອນເຫດຜົນທາງ ປະເພນີ.

4. **ທ່ານເຫັນສິ່ງທ້າທາຍຫຍັງແດ່ ເມື່ອເວົ້າເຖິງເຂດຫ່າງໄກສອກຫຼີກ, ແມ່ຍິງ ແລະ ກຸ່ມຊົນເຜົ່າ?**

   ພາສາ, ລະດັບການສຶກສາ, ຄວາມເຂົ້າໃຈ ຕໍ່ ລະບຽບກົດໝາຍ ແມ່ນມີຕໍ່າຫຼາຍ. ໃຫ້ນໍາໃຊ້ເຄື່ອງມືການ ສື່ສານທີ່ທັນສະໄໝ ເຊັ່ນ ແຜນໂປດສະເຕີ, ວິດີໂອ ທີ່ໃຊ້ເຄື່ອງສາຍ LCD ເພື່ອດຶງເອົາຊາວບ້ານທັງໝົດມີ ສ່ວນຮ່ວມ ແລະ ເພື່ອສື່ຂໍ້ຄວາມອອກໄປ ດ້ວຍຄວາມເຜີດເພີນ.

5. **ທ່ານຮູ້ສຶກບໍ່ວ່າ ແມ່ຍິງມີການເຂົ້າເຖິງຜົນປະ�โຫຍດ ອັນດຽວກັນ ທີ່ມາຈາກຊັບພະຍາກອນປ່າໄມ້ ແລະ ການຄຸ້ມຄອງ/ການທຳການຕັດສິນ ຂອງເຂົາເຈົ້າ? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ ສຳລັບ ຕົວແບບການ ຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ, ເຊັ່ນ ປ່າໄມ້ຊຸມຊົນ, ປ່າໄມ້ລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງ ຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ?**

ຢູ່ໃນບາງບ້ານ, ແມ່ຍິງເປັນສ່ວນໜຶ່ງຮຽບຮ້ອຍແລ້ວ ຂອງຄະນະຄຸ້ມຄອງບ້ານ ແລະ ປ່າໄມ້. ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ຄິດວ່າ ຕົວແທນ ຂອງສະຫະພັນແມ່ຍິງລາວ ປະຈຳທ້ອງຖິ່ນ ແມ່ນເປັນຕົວ ເລືອກ ທີ່ດີທີ່ສຸດ ທີ່ຈະບັນຈຸເຂົ້າໃນຄະນະຄຸ້ມຄອງປ່າໄມ້ ຢ່າງເປັນລະບົບ ເພາະວ່າ ໂດຍປົກກະຕິແລ້ວ, ເຂົາເຈົ້າ ມີລະດັບການສຶກສາ ທີ່ດີກວ່າ.

6. **ທ່ານ ປະເມີນຄວາມອາດສາມາດໃນປັດຈຸບັນ ຂອງທ່ານໄດ້ແນວໃດ ສຳລັບ ສະໜັບສະໜູນ ແຜນງານ ທີ່ ໄດ້ວາງແຜນໄວ້ ທີ່ພົວພັນກັບ ຄວາມສະເໝີພາບທາງເພດ?**

ສຳລັບ ການຈັດຕັ້ງປະຕິບັດທີ່ສະຫຼາດ ແມ່ນພວກເຮົາພ້ອມແລ້ວ ແຕ່ທຸກຄັ້ງ ມັນຈະເປັນການດີ ຖ້າມີການ ຝຶກອົບຮົມພິເສດ ເພີ່ມຕື່ມອີກ ເພື່ອປັບປຸງ ວຽກຂອງພວກເຮົາ ໂດຍສະເພາະ ໃນຍາມ ທີ່ແຜນງານ ຕ້ອງການ ຄວາມຮູ້ໃດໜຶ່ງ ແລະ ທັດຊະນະທາງວິຊາການ. ພວກເຮົາ ມີພະນັກງານ ແລະ ຄວາມອາດສາມາດ ທີ່ພຽງພໍ ສຳລັບຈັດຕັ້ງປະຕິບັດ ແຜນງານ. ການທັດສະນະສຶກສາ ໄປແຂວງອື່ນໆ ແມ່ນເປັນ ເຄື່ອງມືການ ຮຽນຮູ້ ທີ່ເປັນປະ�โຫຍດຫຼາຍ ສຳລັບເຂົ້າເຈົ້າ.

7. **ທ່ານຄິດວ່າ ກົນໄກ REDD+ ໃນປັດຈຸບັນ ໄດ້ຄຳນຶງເຖິງບົດບາດຍິງຊາຍແນວໃດ? ວຽກງານ REDD+ ລວມທັງ ບົດບາດຍິງຊາຍຂອງມັນ ຖືກເຊື່ອມໂຍງເຂົ້າໃນແຜນພັດທະນາເສດຖະກິດສັງຄົມ ຫຼາຍປານໃດ?**

ກົດຈະກຳ ຍັງໃໝ່ໂພດ ສຳລັບເຂົາເຈົ້າ ທີ່ຈະສາມາດປະເມີນສິ່ງນັ້ນ.

8. **ແຜນງານ ຈະສະໜັບສະໜູນ ການສ້າງ ລະບຽບການ ແລະ ບົດແນະນຳ ໂດຍອີງໃສ່ ກົດໝາຍປ່າໄມ້ ສະບັບໃໝ່: ສຳລັບໃນມຸມມອງກ່ຽວກັບບົດບາດຍິງຊາຍ, ຈະຕ້ອງຄຳນຶງເຖິງຫຍັງແດ່?**

ກົດໝາຍປ່າໄມ້ ແມ່ນເປັນກາງ ຕໍ່ທຸກເພດ ເພາະວ່າ ກົດໝາຍ ກໍຄືກົດໝາຍ ແລະ ທັງຊາຍ ແລະ ຍິງ ຈຳ ເປັນຈະຕ້ອງຕິດຕາມກົດໝາຍດັ່ງກ່າວ ເມື່ອຖືກຮັບຮອງ. ບົດແນະນຳ ສາມາດຊ່ວຍໄດ້ ໃນການກຳນົດ ມາດຕະຖານ ສຳລັບ ການມີສ່ວນຮ່ວມ ຂອງຊາວບ້ານ. ແນ່ນອນ ພວກເຮົາຍັງຈະຕ້ອງຄຳນຶງເຖິງ ຄວາມ ເປັນຈິງ – ຊົນເຜົ່າບາງກຸ່ມ ຈະບໍ່ໃຫ້ແມ່ຍິງເຂົ້າຮ່ວມ ແລະ ແມກກະທັ່ງ ໃນລະດັບການປົກຄອງເມືອງ, ພວກ ເຮົາມັກຈະສູ້ຊົນ ຊອກຫາ ຜູ້ສະໝັກຍິງ ທີ່ເໝາະສົມ ຢ່າງພຽງພໍ ມາເຮັດວຽກກັບພວກເຮົາ.

ເນື່ອງຈາກວ່າ ແມ່ຍິງ ຖືກເບິ່ງສະເໝືອນເປັນ “ຜູ້ປົກປັກຮັກສາ” ປ່າໄມ້ ຢ່າງເປັນທຳມະຊາດ, ການສ້າງບົດແນະນຳ ສາມາດເປັນໂອກາດ ສິ່ງເສີມບົດບາດ ສຳລັບແມ່ຍິງນີ້.

9. **ແມ່ຍິງ ສາມາດເປັນສ່ວນໜຶ່ງ ໃນ ມາດຕະການບັງຄັບໃຊ້ກົດໝາຍໄດ້ແນວໃດ?**

ແມ່ຍິງ ມີຄວາມໜ້າເຊື່ອຖື ແລະ ລົງມືປະກອບສ່ວນ ເຂົ້າໃນການປົກປັກຮັກສາປ່າໄມ້ ຫຼາຍກວ່າ. ເຂົາເຈົ້າ ປົກປັກຮັກສາ, ຜູ້ຊາຍເປັນຜູ້ທຳລາຍ. ດັ່ງນັ້ນ, ພວກເຮົາຈຳເປັນຈະຕ້ອງຊອກຫາ ວິທີທາງ ໃນການສະໜັບສະໜູນ ຄວາມພະຍາຍາມ ໃນການປົກປັກຮັກສາທຳມະຊາດ ຂອງແມ່ຍິງ.
ແມ່ຍິງ ຈຳເປັນຈະຕ້ອງເປັນສ່ວນໜຶ່ງ ຂອງໜ່ວຍງານບັງຄັບໃຊ້ກົດໝາຍ ຢ່າງເປັນທາງການ. ຖ້າບໍ່ກຳນົດ ຢ່າງເປັນທາງການ ລ່ວງໜ້າ, ອຳນາດການປົກຄອງບ້ານ ຈະເຮັດເອງໝົດ. ແທນທີ່ຈະເຂົ້າຫາ ນາຍບ້ານ, ໃຫ້ເຂົ້າຫາ ສະຫະພັນແມ່ຍິງລາວຂັ້ນບ້ານ. ອາດຈະສາມາດ ເປັນຈຸດເລີ່ມຕົ້ນ ສຳລັບ ສະຫະພັນແມ່ຍິງລາວ ຂັ້ນແຂວງ/ເມືອງ. ນອກຈາກນັ້ນ, ຖ້າວ່າແມ່ຍິງ ຖືກບັນຈຸເຂົ້າໃນຄະນະຊີ້ນຳບ້ານ ຢ່າງເປັນລະບົບຫຼາຍຂຶ້ນ, ເຂົາເຈົ້າ ຈະມີສ່ວນຮ່ວມຫຼາຍຂຶ້ນ ໃນທຸກໆມາດຕະການບັງຄັບໃຊ້ກົດໝາຍ.

10. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ໃນປັດຈຸບັນນີ້, ຊື່ ຂອງທັງຍິງ ແລະ ຊາຍ ແມ່ນມີຢູ່ໃນໃບນຳໃຊ້ທີ່ດິນ ດັ່ງນັ້ນ, ສະຖານະພາບທາງກົດໝາຍ ແມ່ນເທົ່າກັນ. ຊຶ່ງເປັນແບບດຽວກັນກັບ ແຜນນຳໃຊ້ທີ່ດິນ.
ສິ່ງທ້າທາຍ ແມ່ນມີຢູ່ໃນ ສາຍພົວພັນພາຍໃນຄອບຄົວ ກ່ຽວກັບອຳນາດໃນການຕັດສິນໃຈ ຊຶ່ງມັນມີ ຄວາມຫຍຸ້ງຍາກ ທີ່ຈະແກ້ໄຂໄດ້. ການເຮັດໃບຕາດິນ ແມ່ນບໍ່ທັນການເທົ່າໃດ ໃນເຂດຫ່າງໄກສອກຫຼີກ ຂອງຫຼວງນ້ຳທາ.

11. **ການສ້າງລະບົບຕິດຕາມປ່າໄມ້ ແຫ່ງຊາດ: ແມ່ຍິງສາມາດປະກອບສ່ວນແນວໃດ?**

ຖ້າລະບົບດັ່ງກ່າວ ຖືກສ້າງຂຶ້ນ, ໃຫ້ນຳເອົາ ການສະໜັບສະໜູນ ແລະ ການປະກອບສ່ວນຂອງແມ່ຍິງ ເຂົ້າ ໃນລະບົບດັ່ງກ່າວ ຢ່າງເປັນທາງການ ໂດຍເລີ່ມຕັ້ງແຕ່ຕອນເລີ່ມຕົ້ນ. ແມ່ຍິງ ຈຳເປັນຈະຕ້ອງ ເປັນສ່ວນໜຶ່ງ ຂອງ ລະບົບດັ່ງກ່າວ ເພາະວ່າ ເຂົາເຈົ້າ ແມ່ນເປັນທັງຜູ້ຊົມໃຊ້ ແລະ ຜູ້ປົກປັກຮັກສາປ່າໄມ້ຕົ້ນຕໍ.

12. **ແຜນງານ ຕ້ອງການ ສິ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສິ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ: ຈຸດໃດ ທີ່ຈະສົ່ງຜົນ ຕໍ່ຈຳ ນວນວຽກ ຂອງແມ່ຍິງ? ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນເດ? ສິ່ງດັ່ງກ່າວນັ້ນ ຈະມີຄວາມໝາຍແນວໃດ ສຳລັບ ການບໍລິການສິ່ງເສີມກະສິກຳ ທີ່ໄດ້ສະໜອງ? ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສ ຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ.**

ຖ້າວ່າ ພວກເຮົາ ຕ້ອງການຢຸດຕິ ການທຳລາຍປ່າໄມ້, ຈຳເປັນຈະຕ້ອງເນັ້ນໜັກໃສ່ ກິດຈະກຳ ການສ້າງ ລາຍຮັບ ທີ່ລວມມີ ການອະນຸລັກ ເຄື່ອງປ່າຂອງດົງ, ການນຳໃຊ້ເຄື່ອງປ່າຂອງດົງ ແບບຍືນນານ, ຜະລິດຕະ ພັນ ທີ່ເພີ່ມມູນຄ່າ.
ລັດຖະບານ ຈຳເປັນຈະຕ້ອງເຂົ້າຮ່ວມ ຢູ່ໃນການປຶກສາຫາລື ຂັ້ນບ້ານ ເນື່ອງຈາກວ່າ ລັດ ຈະເປັນສ່ວນໜຶ່ງ ຂອງການຈັດຕັ້ງປະຕິບັດ.

13. ການສົ່ງເສີມ ຕ່ອງໂສ້ຄຸນຄ່າ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ການເຂົ້າເຖິງຕະຫຼາດ: ປັດຈຸບັນນີ້ ແມ່ນຫຍັງ ເປັນສິ່ງທ້າທາຍ ທີ່ໃຫຍ່ທີ່ສຸດ ຂອງແມ່ຍິງ ໃນການພັດທະນາ ຕ່ອງໂສ້ຄຸນຄ່າດັ່ງກ່າວ, ແມ່ນ ຫຍັງເປັນອຸປະສັກ ຂອງເຂົາເຈົ້າ ໃນການເຂົ້າເຖິງຕະຫຼາດ ໃນປັດຈຸບັນນີ້?

ມັນມີຄວາມສຳຄັນຈຳເປັນ ທີ່ຈະຕ້ອງເລັງໃສ່ ຄວາມຕ້ອງການ ຂອງຕະຫຼາດ ເມື່ອມີການສ້າງ ຕ່ອງໂສ ຄຸນຄ່າໃໝ່, ແຕ່ວ່າ ທັງໝົດຕ້ອງຢູ່ໃນຂອບເຂດສະພາບເງື່ອນໄຂ ຂອງທ້ອງຖິ່ນ (ເຊັ່ນ: ການຕຳຫູກ) ເພື່ອ ເຮັດໃຫ້ມັນ ມີຄ່າ ແລະ ເປັນໄປຕາມສະພາບຕົວຈິງ ສຳລັບຊາວບ້ານ.
ລັດຖະບານ ຈຳເປັນຈະຕ້ອງ ມີສ່ວນຮ່ວມ ໃນການເຈລະຈາ ເພື່ອຮັບປະກັນໃຫ້ມີການຕິດຕາມ ແລະ ສະ ໜັບສະໜູນ.

14. ການເຂົ້າເຖິງ ການເງິນຈຸລະພາກ ສຳລັບ ຕ່ອງໂສ້ຄຸນຄ່າໃໝ່ ເຫຼົ່ານີ້: ແມ່ຍິງໄດ້ຮັບຜົນປະໂຫຍດ ຈາກສິ່ງ ດັ່ງກ່າວນັ້ນ ແນວໃດ?

ຫຼວງນ້ຳທາ ມີພຽງແຕ່ປະສົບການ ທີ່ຈຳກັດເທົ່ານັ້ນ ສຳລັບ ການເງິນຈຸລະພາກ. ມັນອາດສາມາດ ເປັນ ປະໂຫຍດຫຼາຍ ສຳລັບປະຊາຊົນ ເຖິງແມ່ນວ່າຈະສ້າງຄວາມເຂັ້ມແຂງ ແກ່ເຂົາເຈົ້າ ໃຫ້ສາມາດເລີ່ມ ວິທີ ການຜະລິດໃໝ່ໆ, ຜະລິດຕະພັນ ແລະ ອື່ນໆ.
ນອກຈາກການເງິນຈຸລະພາກ, ກອງກວດກາປ່າໄມ້ເມືອງ ເຫັນ ກອງທຶນພັດທະນາບ້ານ ແມ່ນເປັນວິທີທາງ ທີ່ດີ ສຳລັບ ສ້າງຄວາມເຂັ້ມແຂງ ໂດຍສະເພາະແກ່ແມ່ຍິງ ໃນການນຳພາ ແລະ ການຄຸ້ມຄອງ. ການແນະ ນຳ ກອງທຶນທີ່ບ້ານຄຸ້ມຄອງ ສຳລັບ ການປົກປັກຮັກສາປ່າໄມ້ ອາດຈະສ້າງຄວາມເຂັ້ມແຂງແກ່ ແມ່ຍິງ ທີ່ ຈະເຂົ້າໄປເປັນເຈົ້າຂອງບົດບາດນັ້ນ.

15. ທ່ານເຫັນທ່າແຮງ ແລະ ສິ່ງທ້າທາຍແນວໃດ ໃນການດຶງເອົາການລົງທຶນຈາກພາກເອກະຊົນ ເຂົ້າມາເຮັດ ການຜະລິດກະສິກຳປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ຢູ່ໃນປ່າຜະລິດແຫ່ງຊາດ ຊຶ່ງລວມມີ ການ ເຮັດອຸດສະຫາກຳໄມ້ ແລະ ອຸດສະຫາກຳເສັ້ນໄຍ? ທ່ານຄິດບໍ່ວ່າ ຊາວບ້ານ ຈະໄດ້ຮັບຜົນປະໂຫຍດ ຈາກ ການລົງທຶນດັ່ງກ່າວ? ລັດຖະບານລາວ ຈະສາມາດ ຮັບປະກັນໄດ້ບໍ່ວ່າ ການລົງທຶນ ຈະສ້າງຜົນປະໂຫຍດ ແກ່ຊາວບ້ານ?

ຢູ່ຫຼວງນ້ຳທາ, ການປູກຢາງພາລາ ແມ່ນເປັນໜຶ່ງ ໃນຈຳນວນສາເຫດ ຂອງການທຳລາຍປ່າໄມ້. ສິ່ງ

ດັ່ງກ່າວນີ້ ຈຳເປັນຈະຕ້ອງໄດ້ເອົາໃຈໃສ່ ແລະ ຫຼີກລ້ຽງການເຮັດຂໍ້ຜິດພາດ ແບບເກົ່າ ອີກຄັ້ງ ກັບ ການ ສົ່ງເສີມການລົງທຶນທີ່ມີທ່າແຮງອື່ນ.
ລັດຖະບານ ຈຳເປັນຈະຕ້ອງ ເປັນສ່ວນໜຶ່ງ ຂອງການເຈລະຈາ ເພື່ອຮັບປະກັນ ການຕິດຕາມ ແລະ ສະໜັບ ສະໜູນ.

16. ຄຳຄິດເຫັນອື່ນໆເດ?

ການສຶກສາຄວາມເປັນໄປໄດ້ ຂອງແຕ່ລະບ້ານ ແມ່ນເປັນສິ່ງຈຳເປັນ ກ່ອນກິດຈະກຳຕ່າງໆ ໄດ້ຮັບການ ຕັດສິນໃຈ ເພາະວ່າ ແຕ່ລະບ້ານ ມີຄວາມແຕກຕ່າງກັນ.
ການເຂົ້າເຖິງ/ການປັບປຸງຖະໜົນຫົນທາງ ແມ່ນເປັນບັນຫາໃຫຍ່ ສຳລັບ ການຈັດຕັ້ງປະຕິບັດແຜນງານ – ຫຼາຍບ້ານ ທີ່ການທຳລາຍປ່າໄມ້ ເປັນບັນຫາ ແມ່ນຢູ່ຫ່າງໄກສອກຫຼີກ ແລະ ມີຄວາມຫຍຸ້ງຍາກທີ່ຈະໄປ ຫາ. ດັ່ງນັ້ນ, ການປັບປຸງພື້ນຖານໂຄງລ່າງ ຂະໜາດນ້ອຍ ຄວນຈະເປັນສ່ວນໜຶ່ງ ຂອງແຜນງານ.
ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຕ້ອງການພາຫານະ ສຳລັບເຂົ້າຫາ ພື້ນທີ່ທີ່ຫ່າງໄກອອກ ໄປ.

GCF/GIZ, ການສຳພາດບ້ານ: ແຂວງຫົວພັນ, ເມືອງຊຳເໜືອ, ບ້ານຢາດ (ເຜົ່າຄະມຸ ແລະ ເຜົ່າມົ້ງ) – ກຸ່ມແມ່ຍິງ (15 ຄົນ)

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນພູມສັນຖານປ່າໄມ້ ແບບຍືນນານ

1. **ບອກເຮົາບາງຢ່າງແດ່ ກ່ຽວກັບວ່າ ຊີວິດຂອງທ່ານ ເປັນແນວໃດ.**

   ການຕຳຫູກ, ຂາຍຢູ່ຊຳເໜືອ, ບາງຄັ້ງ ເຂົາເຈົ້າມີພໍ່ຄ້າ ທີ່ປົກກະຕິ ມັກຈະມາຊື້ສິນຄ້າຈາກການຕຳຫູງ ຂອງ ເຂົາເຈົ້າ, ການເຮັດໄຮ່ເລື່ອນລອຍ, ເຮັດນາ, ການລ້ຽງສັດ.

2. **ບົດບາດອັນສະເພາະ ຂອງແມ່ຍິງ ແລະ ຜູ້ຊາຍ ຢູ່ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ ມີຫຍັງແດ່?**

   ປ່າໄມ້:
   ການຖາກຖາງປັກຫຼັກໝາຍເຂດແດນ ເຮັດໄດ້ທັງສອງ, ກິດຈະກຳຟື້ນຟູໂດຍທຳມະຊາດ ກໍເຮັດໄດ້ທັງ ສອງ (ໂດຍສະເພາະແມ່ນ ໄວໜຸ່ມ);
   ຜູ້ຊາຍ ນຳພາ ກຸ່ມປັກຫຼັກໝາຍ, ການລາດຕະເວນ, ການຂຸດຄົ້ນໄມ້ ສຳລັບ ການກໍ່ສ້າງພາຍໃນ, ການ ເກັບໄມ້ດົງໄຟ (ຮ່ວມກັນ ກັບແມ່ຍິງ), ການລ້າສັດ
   ແມ່ຍິງ ເກັບຜັກ, ເຄື່ອງປ່າຂອງດົງ ແລະ ໝາກໄມ້ ແລະ ຫໍ່ໄມ້

   ທີ່ດິນ: ເຮັດວຽກນຳກັນ, ນາ, ສວນ

   ການລ້ຽງສັດ: ເປັດໄກ່, ທຸກຢ່າງ ທີ່ຢູ່ໃກ້ເຮືອນ – ແມ່ນໜ້າທີ່ຂອງແມ່ຍິງ; ໃກອອກໄປອີກ (ສັດທີ່ໃຫຍ່ ກວ່າ): ແມ່ນໜ້າທີ່ຂອງຜູ້ຊາຍ

3. **…ແລະ ຢູ່ໃນການປົກປັກຮັກສາປ່າໄມ້ເດ?**

   ກິດຈະກຳການປູກຝັງ ຂະໜາດນ້ອຍ; ການປູກຕົ້ນໄມ້ (ຢາງພາລາ) ຢູ່ໃນຄວາມປົກຫຸ້ມຂອງປ່າໄມ້; ປະຕິບັດຕາມ ຕົວແບບການຄຸ້ມຄອງປ່າໄມ້ ທີ່ແຕກຕ່າງກັນ ໂດຍອີງຕາມ ແຜນນຳໃຊ້ທີ່ດິນ

4. **ທ່ານ ຮູ້ສຶກບໍວ່າ ວຽກທີ່ກ່ຽວຂ້ອງກັບ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຖືກແບ່ງກັນ ລະຫວ່າງຍິງ ແລະ ຊາຍຢ່າງເປັນທຳ?**

ແມ່ຍິງ ມີວຽກເຮັດຫຼາຍກວ່າ ຜູ້ຊາຍ ເພາະວ່າ ເຂົາເຈົ້າ ເບິ່ງແຍງວຽກທັງໝົດ "ທີ່ບໍ່ໜັກຫຼາຍ"; ສ່ວນຜູ້ຊາຍເຮັດວຽກທີ່ໜັກ ເຊັ່ນ ໄຖນາ. ສິ່ງທີ່ກ່າວມານີ້ ເຮັດໃຫ້ແມ່ຍິງມີວຽກຫຼາຍ ຕະຫຼອດທັງວັນເລີຍ.

5. **ທ່ານ ຮູ້ຈັກກົນໄກ REDD+ ບໍ ແລະ ເປັນຫຍັງ ມັນຈຶ່ງເກີດຂຶ້ນມາ?**

ສິ່ງດັ່ງກ່າວ ບໍ່ແມ່ນ ຂອງວຽກງານ REDD+ ແຕ່ມັນກ່ຽວກັບ ການປົກປັກຮັກສາ ສິ່ງແວດລ້ອມ, ການປ່ຽນແປງດິນຟ້າອາກາດ, ການປົກປັກຮັກສາປ່າໄມ້ ແລະ ສິ່ງທີ່ພວກເຮົາ ຈະຕ້ອງເບິ່ງແຍງມັນ.

6. **ຈາກ ຄວາມຮູ້ ຂອງທ່ານ ກ່ຽວກັບ ປ່າໄມ້ ແລະ ທີ່ດິນ: ທ່ານ ເຫັນສິ່ງທ້າທາຍບໍ ຕະຫຼອດໄລຍະຫຼາຍປີຜ່ານມາ? ເຊັ່ນ ມີຊັບພະຍາກອນ, ເຄື່ອງປ່າຂອງດົງ ໜ້ອຍລົງ ແລະ ອື່ນໆ?**

ຊັບພະຍາກອນ ນັບມື້ມີໜ້ອຍ ແລະ ຕະຫຼອດປີຜ່ານໆມາ ກໍຫຼຸດໜ້ອຍຖອຍລົງ. ເນື່ອງຈາກ ເຂົາເຈົ້າໄດ້ເລີ່ມເຮັດພື້ນທີ່ປົກປັກຮັກສາປ່າໄມ້, ຈຶ່ງໄດ້ມີຕົ້ນໄມ້ປົກຫຸ້ມ ແລະ ເບິ່ງເໝືອນກັບວ່າ ມີຕົ້ນໄມ້ຫຼາຍຂຶ້ນຕື່ມອີກ. ເຄື່ອງປ່າຂອງດົງ ມີໜ້ອຍລົງ. ແມ່ຍິງ ບໍ່ຕ້ອງການຍ່າງໄກ ຈາກບ້ານ (ມີຂໍ້ຫຍຸ້ງຍາກກ່ຽວກັບເວລາ), ດັ່ງນັ້ນ, ເຂົາເຈົ້າ ມີເຄື່ອງປ່າຂອງດົງໜ້ອຍລົງ ສຳລັບບໍລິໂພກພາຍໃນ.
ຄຸນນະພາບ ຂອງດິນ ກໍເຊື່ອມລົງ, ພະຍາຍາມໃຊ້ມູນສັດ ເປັນຝຸ່ນ ແຕ່ປັດຈຸບັນນີ້ ມີຜົນໜ້ອຍ. ປັດຈຸບັນ ບໍ່ມີປຸຍເຄມີ.

7. **ທ່ານ ຄິດບໍວ່າ ທ່ານໄດ້ຮັບຜົນປະໂຫຍດ ຈາກຊັບພະຍາກອນປ່າໄມ້? ເປັນແນວໃດ?**

ບໍ່ມີຄວາມສົມດຸນກັນ ຢູ່ພາຍໃນບ້ານ ຊຶ່ງຂຶ້ນກັບວ່າ ທ່ານສາມດາ ເກັບກູ້ ແລະ ຂາຍໄດ້ຫຼາຍເທົ່າໃດ. ຢູ່ພາຍໃນຄອບຄົວ, ມີຜົນປະໂຫຍດເທົ່າທຽມກັນ.
ແມ່ຍິງ ຄຸ້ມເລື່ອງການເງິນ. ການຕັດສິນໃຈກ່ຽວກັບ ການເງິນ: ຕັດສິນໃຈຜູ້ດຽວກ່ຽວກັບສິ່ງເລັກໆນ້ອຍໆ, ສ່ວນການລົງທຶນຂະໜາດໃຫຍ່ ແມ່ນລົມກັນ ແລະ ຮ່ວມກັນຕັດສິນໃຈ.

8. **ທ່ານ ເຂົ້າເຖິງ ປ່າໄມ້ປະເພດໃດ? ເຊັ່ນ: ປ່າໄມ້ຊຸມຊົນ, ປ່າລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດສະຫງວນສັດປ່າ ແລະ ເຂດກັນຊົນ ຂອງປ່າຊຸມຊົນ.**

ປ່າຊົມໃຊ້ ຂອງບ້ານ, ປ່າປ້ອງກັນ, ປ່າສຳລັບ ເກັບກູ້ ເຄື່ອງປ່າຂອງດົງ

9. **ທ່ານຮູ້ສຶກບໍ່ວ່າ ທ່ານກຳລັງມີສ່ວນຮ່ວມ ຢູ່ໃນ ການຄຸ້ມຄອງ/ຕັດສິນໃຈ ກ່ຽວກັບປ່າໄມ້? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ ສຳລັບ ຕົວແບບການຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ (ເຊັ່ນ ປ່າໄມ້ຊຸມຊົນ, ປ່າ**

ລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ)?

ມີແຜນຄຸ້ມຄອງຈັດສັນປ່າໄມ້. ຄະນະກຳມະການ ມີສະມາຊິກທັງໝົດ 9 ຄົນ, ມີແມ່ຍິງ 3 ຄົນ. ແມ່ຍິງ ເຂົ້າຮ່ວມໃນການສົນທະນາ ຂ້ອນຂ້າງດີ ໂດຍສະເພາະແມ່ນ ສະມາຊິກ ຂອງສະຫະພັນແມ່ຍິງລາວ ຊຶ່ງເປັນ ຜູ້ທີ່ມີລະດັບການສຶກສາ ທີ່ສູງກວ່າ ແລະ ມາຈາກຕົວເມືອງ ແລະ ສາມາດ ນຳເອົາຄວາມຮູ້ ຫຼາຍຢ່າງ ມາ ໂອລົມສົນທະນາກັນ.

10. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ແຜນນຳໃຊ້ທີ່ດິນ ທີ່ມີຢູ່ໃນປັດຈຸບັນ ມີຜົນດີ ແກ່ ຊາວບ້ານ ໂດຍສະເພາະ ທີ່ກ່ຽວຂ້ອງກັບ ການຜື້ນຟູ ແລະ ການປົກປັກຮັກສາປ່າໄມ້. ບໍ່ມີຄວາມຂັດແຍ່ງຕໍ່ໄປອີກແລ້ວ ກ່ຽວກັບ ທີ່ດິນ ຍ້ອນມີແຜນນຳໃຊ້ທີ່ ດິນ ແຕ່ ຕາມການແນະນຳ ມັນອາດຈະສາມາດເຮັດສຳເລັດ ສຳລັບ ການຈັດສັນປ່າໄມ້/ທີ່ດິນ ໃນເຂດເນີນ ສູງ ເພາະວ່າ ຍັງມີຄວາມຂັດແຍ່ງ ລະຫວ່າງ ຊາວບ້ານດ້ວຍກັນ.
ຄວາມໝັ້ນຄົງຂອງທີ່ດິນ ບໍ່ມີການປ່ຽນແປງຫຍັງ ຍ້ອນມີ ແຜນນຳໃຊ້ທີ່ດິນ. ເຂົາເຈົ້າ ຮູ້ສຶກມີຄວາມ ເຂັ້ມແຂງ ແລະ ມີຄວາມປອດໄພ ທາງດ້ານທີ່ດິນ ຢ່າງພຽງພໍ ສຳລັບເຈລະຈາ ກັບ ນັກລົງທຶນຜູ້ທີ່ມີ ທ່າແຮງ.

11. **ແຜນງານ ຕ້ອງການ ສົ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສົ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ:**
ທ່ານມີຄວາມຫວັງແນວໃດ ທີ່ສິ່ງດັ່ງກ່າວນີ້ ຈະປ່ຽນການດຳລົງຊີວິດ ຂອງທ່ານ? ສິ່ງທີ່ທ່ານຢ້ານກວາ ມີ ຫຍັງແດ່?
ໝາຍເຫດ: ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ

ເຂົາເຈົ້າ ຫວັງວ່າຈະມີລາຍຮັບເພີ່ມຂຶ້ນ ແລະ ຈະສາມາດ ກໍ່ສ້າງ ຫ້ອງການສະພາບ້ານໄດ້ (ແລະ ສິ່ງອື່ນໆ ເພື່ອພັດທະນາບ້ານ). ສົນໃຈໃນ: ຜັກສົ່ງອອກຕະຫຼາດ, ການລ້ຽງສັດ, ການຕຳແຜ່ນທຳຜ້າ, ໝອງປ່າ. ຄວາມກັງວົນຢ້ານກົວ: ຖ້າມີການສະໜັບສະໜູນດ້ານການເງິນ ຢ່າງຄົບຊຸດ ຈາກໂຄງການ, ເຂົາເຈົ້າ ພ້ອມ ແລ້ວທີ່ຈະຢຸດຕິ ການເຮັດໄຮ່ເລື່ອນລອຍ. ເຂົາເຈົ້າພຽງແຕ່ຍັງຢາກເຮັດຢູ່ ເພາະຂາດທາງເລືອກ ແລະ ແຫຼ່ງການເງິນ ສຳລັບການຫັນປ່ຽນ.

12. **ແຜນງານ ຕ້ອງການເຮັດໃຫ້ຊາວບ້ານ ມີສ່ວນຮ່ວມ ຢ່າງຕັ້ງໜ້າ ໃນການຄຸ້ມຄອງຈັດສັນປ່າໄມ້ບ້ານ (ການວາງແຜນ ແລະ ສັນຍາ ກ່ຽວກັບ ການຄຸ້ມຄອງຈັດສັນປ່າໄມ້ບ້ານ, ກິດຈະກຳການປູກປ່າ, ການຜື້ນ ຟູປ່າໄມ້) ແລະ ການຕິດຕາມ (ທີ່ລວມມີ ການລາດຕະເວນ): ທ່ານຄິດແນວໃດ ຕໍ່ສິ່ງດັ່ງກ່າວ? ທ່ານຄິດ**

ວ່າ ແມ່ຍິງ ແລະ ຜູ້ຊາຍ ຄວນມີສ່ວນຮ່ວມ ໃນຈຸດໃດ?

ຖ້າວ່າ ແມ່ຍິງ ສາມາດເຮັດວຽກ ເປັນກຸ່ມໄດ້, ເຂົາເຈົ້າ ອາດຈະເຂົ້າຮ່ວມ ຢູ່ໃນການຕິດຕາມ ແລະ ລາດຕະເວນກວດກາປ່າໄມ້. ແຜນງານ ສາມາດຝຶກເຂົາເຈົ້າ ກ່ຽວກັບ ວິທີປະຕິບັດ ແລະ ເຂົາເຈົ້າ ຢາກຈະ ເຂົ້າຮ່ວມ ໃນການຄຸ້ມຄອງປ່າໄມ້ດັ່ງກ່າວ. ຢູ່ໃນຄະນະກຳມະການ, ເຂົາເຈົ້າຮູ້ສຶກວ່າ ເປັນຕົວແທນແລ້ວ.

13. ອຸປະສັກ ຂອງທ່ານມີຫຍັງແດ່ ຕໍ່ກັບການເຂົ້າເຖິງຕະຫຼາດ? ທ່ານຕ້ອງການໃຫ້ຊ່ວຍຈຸດໃດ ເພື່ອໃຫ້ເຂົ້າ ເຖິງມັນໄດ້?

ຄອບຄົວທຸກຍາກ ຍ້ອນບໍ່ມີການຂົນສົ່ງ ໄປຫາຕະຫຼາດ ແລະ ຍ້ອນເຂົາເຈົ້າ ມັກຈະຜະລິດຈຳນວນເລັກ ນ້ອຍ. ສະພາບຂອງຫົນທາງ ແມ່ນຂີ້ຮ້າຍ, ໂດຍສະເພາະ ໃນລະດູຝົນ (ແທບຈະເຂົ້າບໍ່ໄດ້), ດັ່ງນັ້ນ ຄວນ ຈະເປັນອັນທຳອິດ ທີ່ຈະຖືກປ່ຽນ. ສິ່ງທີ່ກ່າວມານັ້ນ ຍັງອາດຈະປ່ຽນການດຳລົງຊີວິດ ທີ່ຕິດພັນກັບ ການ ເຂົ້າເຖິງການຮັກສາສຸຂະພາບ.

14. ທ່ານຄິດແນວໃດ ກ່ຽວກັບ ການເງິນຈຸລະພາກ ສຳລັບເລີ່ມຕົ້ນທຸລະກິດ/ລົງທຶນ ໃສ່ໃນ ການເຮັດກະສິກຳ ແບບໃໝ່ ແລະ ອື່ນໆ?

ຕ້ອງການທະນາຄານບ້ານ, ອາດຈະເປັນສິ່ງທີ່ດີທີ່ສຸດ ທີ່ຈະເຂົ້າຫາເງິນທຶນ ໃນຂັ້ນບ້ານ ແລະ ນຳໃຊ້ເງິນ ດັ່ງກ່າວ ໄປລົງທຶນຂະໜາດນ້ອຍ. ອັນທີ່ຈິງ, ເຂົາເຈົ້າ ຢາກຈະເຮັດວຽກ ຮ່ວມກັບແຜນງານ ໂດຍມີການ ຮ່ວມສົນທະນາ ແລະ ສ້າງແຜນນຳກັນ.

15. ແຜນງານ ຕ້ອງການດຶງເອົາ ການລົງທຶນ ຈາກພາກເອກະຊົນ ເຂົ້າມາເຮັດການຜະລິດກະສິກຳ ແລະ ປ່າໄມ້ ແບບປະສົມປະສານ ທີ່ອາໃສຊຸມຊົນ ໃນປ່າຜະລິດແຫ່ງຊາດ. ທ່ານຄິດເຖິງຫຍັງແດ່?

ທຸກຄັ້ງ ເຂົາເຈົ້າສະໜັບສະໜູນ ການມີໂຄງການໃໝ່ໆ ເຂົ້າມາໃນບ້ານ ແຕ່ ມີຄວາມລະມັດລະວັງ ກັບ ການມີສ່ວນຮ່ວມ ຂອງພາກເອກະຊົນ. ມັນຈະຕ້ອງຮັບປະກັນ ຢ່າງຖີ່ຖ້ວນວ່າ ກິດຈະກຳ ຢູ່ໃນບ້ານ ຈະ ສ້າງຜົນປະໂຫຍດ ແກ່ ທຸກຄົນ ລວມທັງ ວຽກເຮັດງານທຳ ທີ່ເປັນທາງເລືອກ ແລະ ເພີ່ມລາຍຮັບ.

16. ຄຳຄິດເຫັນອື່ນໆເດ?

ບູລິມະສິດ ໃນການປັບປຸງຖະໜົນຫົນທາງ, ເພີ່ມເນື້ອທີ່ເຂົ້ານາ, ປັບປຸງອາຄານຮຽນ, ລະບົບຊົນລະປະທານ , ໂຄງລ່າງພື້ນຖານຂະໜາດນ້ອຍ ຂອງບ້ານ ເຊັ່ນ ຫ້ອງການສະພາບ້ານ. ທາງຂະໜາດນ້ອຍ ເຊື່ອມຕໍ່ຫາ ພື້ນທີ່ນາ ຈະປັບປຸງ ການລາດຕະເວນນຳອີກ. ການສະໜັບສະໜູນດ້ານການເງິນ ສຳລັບ ການຄຸ້ມຄອງ

ປ່າໄມ້ ໂດຍສະເພາະ ສຳລັບ ການປ້ອງກັນໄຟປ່າ (ການສ້າງແລວກັນໄຟ), ການລາດຕະເວນ, ການສຳ ຫຼວດ, ປ່ຽນປ້າຍຫຼັກໝາຍໃໝ່.

GCF/GIZ, ການສຳພາດບ້ານ: ແຂວງຫົວພັນ, ເມືອງຊຳເໜືອກ, ບ້ານຢາດ (ເຜົ່າຄະມຸ, ເຜົ່າມົ້ງ) – ກຸ່ມຜູ້ຊາຍ (13 ຄົນ)

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ການຈັດສັນພູມສັນຖານປ່າໄມ້ ແບບຍືນນານ

1. **ບອກເຮົາແດ່ ກ່ຽວກັບ ຊີວິດການເປັນຢູ່ ຂອງທ່ານເປັນແນວໃດ.**

   ຄວາມເປັນໜຶ່ງດຽວ ລະຫວ່າງ ຜູ້ຊາຍ ແລະ ແມ່ຍິງ. ສະພາບການເປັນຢູ່ ທີ່ມີຄວາມທຸກຍາກຫຼາຍ/ ຄວາມທຸກຍາກ. ລະດັບການສຶກສາຕ່ຳ, ອາຊີບບໍ່ມີຫຼາຍ.
   ສ່ວນໃຫຍ່ ເຮັດວຽກ ຢູ່ທົ່ງນາ, ເຮັດກະສິກຳປູກຝັງ ແບບເຮັດໄຮ່ເລື່ອນລອຍ.
   ການທຳລາຍປ່າໄມ້ ໄດ້ຫຼຸດລົງ. ມີການສະໜອງນ້ຳດີ. ການເຂົ້າເຖິງ ດ້ວຍຖະໜົນ ຢ່າງໜ້ອຍແມ່ນມີຢູ່ທີ່ນັ້ນ ດັ່ງນັ້ນ ຈຶ່ງດີກວ່າ ບ້ານອື່ນໆ, ແຕ່ຍັງອາດສາມາດປັບປຸງ. ຄົວເຮືອນ ພະຍາຍາມພັດທະນາ ເທື່ອລະບາດກ້າວ. ບາງຄອບຄົວ ມີເຂົ້າບໍ່ພໍກຸ້ມປີ. ບ້ານມີໂຮງຮຽນປະຖົມ. ເມື່ອສົມທຽບກັບບ້ານທີ່ຢູ່ຫ່າງໃກ ສອກຫຼີກກວ່າ, ພວກເຮົາ ຮູ້ສຶກວ່າ ພວກເຮົາ ມີສະພາບທີ່ດີກວ່າ ແຕ່ວ່າຍັງມີຫຼາຍຢ່າງທີ່ຈະຕ້ອງໄດ້ປັບປຸງ. ຕ້ອງການປັບປຸງເຄຫາສະຖານ, ຜະລິດຕະພັນຊື້ຂາຍ. ບາງຄົວເຮືອນ ລ້ຽງສັດ ເພື່ອເພີ່ມລາຍຮັບ ຂອງ ເຂົາເຈົ້າ ແຕ່ບໍ່ປະສົບຜົນສຳເລັດຫຼາຍປານໃດ. ສິ່ງທ້າທາຍ ໃນບ້ານ (ນາຍບ້ານ) ປະກອບມີ ຄື ບ້ານຖືກ ແບ່ງອອກເປັນສອງກຸ່ມຊົນເຜົ່າ ແລະ ເຮັດໃຫ້ບ້ານປະສານງານ ແລະ ຈັດກອງປະຊຸມ ຍາກຂຶ້ນ. ການ ປັບປຸງທາງເຂົ້າ ແມ່ນເປັນສິ່ງຈຳເປັນ ສຳລັບການເຂົ້າເຖິງ ການຮັກສາສຸຂະພາບ. ປັບປຸງອາຄານຮຽນ. ກຸ່ມ ເຜົ່າມົ້ງ ບໍ່ມີນາພຽງພໍ. ເຂົາເຈົ້າ ຂຸດທາງເຂົ້າເຖິງນາ ຂອງຕົນເອງ ດ້ວຍມື. ມີທີ່ດິນປ່າໄມ້ຫຼາຍຂຶ້ນ ແຕ່ຢູ່ ໃກບ້ານ ຂອງເຂົາເຈົ້າໂພດ (30 ກິໂລແມັດ). ສຳລັບໂຮງຮຽນມັດທະຍົມ, ເດັກນ້ອຍຍ່າງປະມານ 6 ກິໂລແມັດ ໄປຫາບ້ານຂ້າງຄຽງ.

2. **ບົດບາດອັນສະເພາະ ຂອງແມ່ຍິງ ແລະ ຜູ້ຊາຍ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ?**

   ປ່າໄມ້: ຜູ້ຊາຍ ແລະ ແມ່ຍິງ ເຮັດວຽກນຳກັນ
   ທີ່ດິນ: ເຮັດວຽກນຳກັນ (ເກັບກູ້, ອ້ອມຮົ້ວ, ທົ່ງນາ)

3. **…ແລະ ໃນການປົກປັກຮັກສາປ່າໄມ້ເດ?**

   ການປ້ອງກັນໄຟປ່າ, ການຟື້ນຟູ.
   ປັດຈຸບັນ ການລາດຕະເວນ ແມ່ນຜູ້ຊາຍເປັນຜູ້ເຮັດ ແຕ່ ເຂົາເຈົ້າຮູ້ສຶກວ່າ ແມ່ຍິງ ອາດຈະສາມາດເຮັດໜ້າ

ທີ່ນັ້ນໄດ້ ຖ້າເຂົາເຈົ້າຕ້ອງການເຮັດ.
ເຂົາເຈົ້າຍັງລາດຕະເວນ ເພື່ອປົກປ້ອງອ່າງໂຕ່ງ.

4. **ທ່ານ ຮູ້ສຶກບໍ່ວ່າ ວຽກທີ່ກ່ຽວຂ້ອງກັບ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຖືກແບ່ງກັນ ລະຫວ່າງຍິງ ແລະ ຊາຍຢ່າງເປັນທຳ?**

ຜູ້ຊາຍ ເຮັດວຽກ ຫຼາຍກວ່າແມ່ຍິງ ນອກຈາກລະດູການເກັບກ່ຽວ ເພາະວ່າ ຜູ້ຊາຍ ລົງກວດກາທົ່ງໄຮ່ທົ່ງນາ ຕະຫຼອດເວລາ ໃນຄະນະທີ່ ແມ່ຍິງແມ່ນເຮັດວຽກຢູ່ເຮືອນ ແລະ ຕຳຜ້າ. ນາຍບ້ານ ເວົ້າເພີ່ມອີກວ່າ: ຜູ້ຊາຍເຮັດວຽກໜັກກວ່າ ແຕ່ແມ່ຍິງ ເຮັດວຽກຫຼາຍກວ່າ. ຜູ້ຊາຍຮູ້ສຶກວ່າ ຜູ້ຊາຍ ມີຄວາມກົດດັນຕົ້ນຕໍ ໃນການຕອບສະໜອງ ຄອບຄົວ ຂອງຕົນ ແລະ ຈະຕ້ອງໄດ້ເຮັດວຽກ ແລະ ເຮັດອາຊີບ ທີ່ສ້າງລາຍຮັບ ເພີ່ມຂຶ້ນ. ເຂົາເຈົ້າຍັງຮູ້ສຶກ ຄ້າຍໆກັນວ່າ ເຂົາເຈົ້າ ຈະຕ້ອງຄິດໄປຂ້າງໜ້າ ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ເພື່ອ ຮັບປະກັນລາຍຮັບ ແລະ ການເປັນຢູ່ທີ່ດີ ຂອງເຂົາເຈົ້າ.

5. **ທ່ານ ຮູ້ຈັກກົນໄກ REDD+ ບໍ ແລະ ເປັນຫຍັງ ມັນຈຶ່ງເກີດຂຶ້ນມາ?**

ບໍ່ເຄີຍໄດ້ຍິນ ກ່ຽວກັບ REDD+, ຍົກເວັ້ນ ເລື່ອງການປ່ຽນແປງ ຂອງດິນຟ້າອາກາດ, ການປົກປັກຮັກສາ ສິ່ງແວດລ້ອມ ແລະ ອື່ນໆ (ກິດຈະກຳ ຂອງ ໂຄງການ Clipad). ນັບຕັ້ງແຕ່ມີແຜນງານ (ປີ 2016), ເຂົາເຈົ້າໄດ້ເລີ່ມ ປົກປັກຮັກສາ ປ່າໄມ້ຂອງຕົນ ແລະ ໄດ້ສ້າງຕັ້ງ ຄະນະຄຸ້ມຄອງປ່າໄມ້ ທີ່ ປົກກະຕິ ມັກຈະ ເຕືອນ ຊາວບ້ານ ໃຫ້ເອົາໃຈໃສ່ ເບິ່ງແຍງປ່າໄມ້.

6. **ຈາກ ຄວາມຮູ້ ຂອງທ່ານ ກ່ຽວກັບ ປ່າໄມ້ ແລະ ທີ່ດິນ: ທ່ານ ເຫັນສິ່ງທ້າທາຍບໍ ຕະຫຼອດໄລຍະຫຼາຍ ປີຜ່ານມາ? ເຊັ່ນ ມີຊັບພະຍາກອນ, ເຄື່ອງປ່າຂອງດົງ ໜ້ອຍລົງ ແລະ ອື່ນໆ?**

ໝາກໄມ້ ຈາກຕົ້ນໄມ້ ລວມທັງ ຕົ້ນໄມ້ໃຫຍ່ ໄດ້ເພີ່ມຂຶ້ນ ຍ້ອນມີມາດຕະການຜື້ນຟູປ່າໄມ້ ແລະ ມາດ ຕະການປົກປັກຮັກສາ. ສັດປ່າ ໄດ້ເພີ່ມຂຶ້ນ ຍ້ອນເຫດຜົນອັນດຽວກັນ. ມີຜົນໄດ້ຮັບດີ ຈາກປ່າໄມ້ທີ່ມີ ສະພາບດີ/ມີເຫັດຫຼາຍ.
ເຄື່ອງປ່າຂອງດົງ ໄດ້ຫຼຸດລົງ.
ນອກຈາກນັ້ນ ເຂົາເຈົ້າຍັງສັງເກດເຫັນວ່າ ສະພາບດິນຟ້າອາກາດ ກຳລັງມີການປ່ຽນແປງ: ລະດູຝົນ ມີຝົນ ຫຼາຍຂຶ້ນ, ເກີດມີໄພນ້ຳຖ້ວມຫຼາຍຂຶ້ນ, ແຕ່ ແຜນງານ (Clipad) ໄດ້ຊ່ວຍຄວບຄຸມໄພນ້ຳຖ້ວມ.

7. **ທ່ານ ຄິດບໍ່ວ່າ ທ່ານໄດ້ຮັບຜົນປະໂຫຍດ ຈາກຊັບພະຍາກອນປ່າໄມ້? ເປັນແນວໃດ?**

ຂຶ້ນກັບວ່າ ຄອບຄົວສຸມເຮືອແຮງໃສ່ຫຼາຍປານໃດ ແລະ ມີສະມາຊິກຄອບຄົວຈັກຄົນ ປະກອບສ່ວນ. ແຕ່ ໂດຍສະເລ່ຍແລ້ວ, ຊາວບ້ານທັງໝົດ ໄດ້ຮັບຜົນປະໂຫຍດ ຢ່າງເທົ່າທຽມກັນ ຈາກ ຊັບພະຍາກອນປ່າໄມ້.

ຢູ່ພາຍໃນຄົວເຮືອນ, ມີຜົນປະໂຫຍດເທົ່າກັນ ແມກະທັ່ງການບໍລິໂພກອຸປະໂພກ.

8. **ທ່ານ ເຂົ້າເຖິງ ປ່າໄມ້ປະເພດໃດ? ເຊັ່ນ: ປ່າໄມ້ຊຸມຊົນ, ປ່າລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດສະຫງວນສັດປ່າ ແລະ ເຂດກັນຊົນ ຂອງປ່າຊຸມຊົນ.**

ເນື້ອທີ່ກະສິກຳແລະປ່າໄມ້ ແບບປະສົມປະສານ, ເຄື່ອປ່າຂອງດົງ
ປ່າປ້ອງກັນ ຖືກກ່າວເຖິງ ສະເພາະ ຫຼັງຈາກ ທິມງານຂອງແຜນງານ ໄດ້ກ່າວເຖິງ.

9. **ທ່ານຮູ້ສຶກບໍ່ວ່າ ທ່ານກຳລັງມີສ່ວນຮ່ວມ ຢູ່ໃນ ການຄຸ້ມຄອງ/ຕັດສິນໃຈ ກ່ຽວກັບປ່າໄມ້? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ ສຳລັບ ຕົວແບບການຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ (ເຊັ່ນ ປ່າໄມ້ຊຸມຊົນ, ປ່າລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ)?**

ເຂົາເຈົ້າ ຮູ້ສຶກວ່າ ທັງ ຍິງ ແລະ ຊາຍ ແມ່ນມີສ່ວນຮ່ວມ ໃນການຄຸ້ມຄອງຈັດສັນປ່າໄມ້ ເພາະວ່າ ເຂົາເຈົ້າ ແລກປ່ຽນໜ້າວຽກກັນ ແລະ ມີທັງຍິງ ແລະ ຊາຍ ຢູ່ໃນຄະນະຄຸ້ມຄອງຈັດສັນປ່າໄມ້.

10. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ບໍ່ມີຄວາມຂັດແຍ່ງອີກແລ້ວ ກ່ຽວກັບທີ່ດິນ ກັບບ້ານອື່ນໆ ນັບຕັ້ງແຕ່ ມີແຜນນຳໃຊ້ທີ່ດິນ ຊຶ່ງເຂົາເຈົ້າ ດີໃຈຫຼາຍ ສຳລັບຈຸດນີ້. ມາດຕະການປົກປັກຮັກສາປ່າໄມ້ ກຳລັງສະແດງໃຫ້ເຫັນຜົນກະທົບທາງບວກ (ຍົກເວັນ ເຄື່ອງປ່າຂອງດົງທີ່ຫຼຸດລົງ).

ຄຳແນະນຳ: ເນື້ອທີ່ກະສິກຳ ຄວນຈະຖືກແບ່ງ ໂດຍຄົວເຮືອນ ນຳອີກ (ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ໄດ້ລົງມາ ແຕ່ຍັງຢູ່ໃນຂະບວນການເຈລະຈາ ກັບຊາວບ້ານ ຕໍ່ກັບ ບັນຫາຂໍ້ຂັດແຍ່ງ; ສຳລັບເຄຫະ ສະຖານ, ເນື້ອທີ່ ຖືກຈັດສັນ ຮຽບຮ້ອຍແລ້ວ).

ນາຍບ້ານ: ສຳລັບ ການຄຸ້ມຄອງຈັດສັນປ່າໄມ້ບ້ານ, ເຂົາເຈົ້າ ຍັງຄົງຕ້ອງການ ການສະໜອງເງິນ ສຳລັບ ການປ້ອງກັນໄຟປ່າ (ສ້າງແລວກັນໄຟ), ການລາດຕະເວນ, ການສຳຫຼວດ, ການປ່ຽນຖ່າຍປ້າຍປັກຫຼັກໝາຍໃຫ່

11. **ແຜນງານ ຕ້ອງການ ສິ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສິ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ:**
ທ່ານມີຄວາມຫວັງແນວໃດ ທີ່ສິ່ງດັ່ງກ່າວນີ້ ຈະປ່ຽນການດຳລົງຊີວິດ ຂອງທ່ານ? ສິ່ງທີ່ທ່ານຢ້ານກວາ ມີ ຫຍັງແດ່?

ໝາຍເຫດ: ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ

ຊາວບ້ານ ຂາດປະສົບການ ແລະ ຄວາມຮູ້ ກ່ຽວກັບ ວິທີການເຮັດກະສິກຳ ແລະ ໃນປັດຈຸບັນນີ້, ພວກເຮົາ ບໍ່ມີຫຍັງ ທີ່ຈະສົ່ງໄປຂາຍຢູ່ຕະຫຼາດ. ດັ່ງນັ້ນ, ພວກເຮົາ ຕ້ອງການ ການສະໜັບສະໜູນ ທາງດ້ານວິຊາ ການ ແລະ ດ້ານການເງິນ ເພື່ອຫັນປ່ຽນໄປສູ່ທາງເລືອກ. ນອກຈາກນັ້ນ, ການວິເຄາະດິນ ຈຳເປັນຕ້ອງໄດ້ ເຮັດໃຫ້ແລ້ວ ເພື່ອກຳນົດວ່າ ພືດເສດຖະກິດໃດ ທີ່ອາດຈະເໝາະສົມ. ພວກເຮົາ ຕ້ອງການ ການສະໜັບ ສະໜູນ ສຳລັບ ການເຮັດການວິເຄາະນີ້ ລວມທັງ ວິທີການເຂົ້າເຖິງຕະຫຼາດ. ພວກເຮົາ ຕ້ອງການເຂົ້າຮ່ວມ ໃນການປຶກສາຫາລື ແລະ ຮ່ວມຕັດສິນໃຈນຳກັນ ແລະ ພວກເຮົາ ຕ້ອງການຮູ້ສຶກໝັ້ນໃຈວ່າ ການ ປ່ຽນແປງນີ້ ອາດຈະປັບປຸງ ສະພາບການດຳລົງຊີວິດ ແລະ ລາຍຮັບ ຂອງພວກເຮົາ.

12. **ແຜນງານ ຕ້ອງການເຮັດໃຫ້ຊາວບ້ານ ມີສ່ວນຮ່ວມ ຢ່າງຕັ້ງໜ້າ ໃນການຄຸ້ມຄອງຈັດສັນປ່າໄມ້ບ້ານ (ການວາງແຜນ ແລະ ສັນຍາ ກ່ຽວກັບ ການຄຸ້ມຄອງຈັດສັນປ່າໄມ້ບ້ານ, ກິດຈະກຳການປູກປ່າ, ການຟື້ນ ຟູປ່າໄມ້) ແລະ ການຕິດຕາມ (ທີ່ລວມມີ ການລາດຕະເວນ): ທ່ານຄິດແນວໃດ ຕໍ່ສິ່ງດັ່ງກ່າວ? ທ່ານຄິດ ວ່າ ແມ່ຍິງ ແລະ ຜູ້ຊາຍ ຄວນມີສ່ວນຮ່ວມ ໃນຈຸດໃດ?**

ຊາວບ້ານ ມີສ່ວນຮ່ວມແລ້ວ ໃນການຄຸ້ມຄອງຈັດສັນ ແລະ ມີຄວາມຕັ້ງໃຈຫຼາຍ ທີ່ຈະສືບຕໍ່ເຮັດສິ່ງທີ່ກ່າວ ມານັ້ນ ແລະ ຮັບເອົາໜ້າວຽກໃໝ່ໆ ຖ້າເຂົາເຈົ້າ ຮູ້ສຶກວ່າ ມັນສົມເຫດສົມຜົນ ສຳລັບບ້ານ.

13. **ອຸປະສັກ ຂອງທ່ານມີຫຍັງແດ່ ຕໍ່ກັບການເຂົ້າເຖິງຕະຫຼາດ? ທ່ານຕ້ອງການໃຫ້ຊ່ວຍຈຸດໃດ ເພື່ອໃຫ້ເຂົ້າ ເຖິງມັນໄດ້**

ເຂົາເຈົ້າຮູ້ສຶກ ຄ້າຍໆວ່າ ມີຜັກຫຼາຍແລ້ວ ໃນຕະຫຼາດຊຳເໜືອ ດັ່ງນັ້ນ, ຄ່າຂົນສົ່ງ ບໍ່ຄຸ້ມຄ່າ ສຳລັບ ການ ເດີນທາງໄປຕະຫຼາດ.
ເຂົາເຈົ້າ ຢາກຈະສ້າງ ຕ່ອງໂສ້ມູນຄ່າໃໝ່, ຜະລິດຕະພັນໃໝ່ (ເຊັ່ນ. ອາຫານແຫ້ງ ທີ່ເກັບໄວ້ດົນກວ່າ ແລະ ເປັນສິນຄ້າທີ່ຕ່າງໝູ່, ດັ່ງນັ້ນ ຫຼາຍຄົນ ອາດຈະຊື້ມັນ).

14. **ທ່ານຄິດແນວໃດ ກ່ຽວກັບ ການເງິນຈຸລະພາກ ສຳລັບເລີ່ມຕົ້ນທຸລະກິດ/ລົງທຶນ ໃສ່ໃນ ການເຮັດກະສິກຳ ແບບໃໝ່ ແລະ ອື່ນໆ**

ໃນອະດີດ, ເມື່ອມີການສະໜອງເງິນທຶນ ແກ່ ຊາວບ້ານ, ເຂົາເຈົ້າ ບໍ່ຮູ້ວິທີໃຊ້ເງິນ. ດັ່ງນັ້ນ, ຖ້າວ່າ ການເຂົ້າ ເຖິງການເງິນ ຖືກສະໜອງ, ຕໍ່ໄປ ແມ່ນຮ່ວມສ້າງແຜນທຸລະກິດ.
ເຂົາເຈົ້າ ຮູ້ສຶກວ່າ ການເອົາເງິນກູ້ ມີຄວາມສ່ຽງ ສຳລັບ ຊາວບ້ານ ໃນກໍລະນີ ເຂົາເຈົ້າ ບໍ່ສາມາດ ຂາຍ ຜະລິດຕະພັນ ຂອງຕົນ. ຖ້າມີການວິເຄາະ ຢ່າງຄັກແນ່, ການເງິນຈຸລະພາກ/ທະນາຄານບ້ານ ອາດຈະເປັນ

ສິ່ງທີ່ດີສຸດ ສຳລັບບ້ານ. ບ້ານໄດ້ພັດທະນາສ້າງ ຫຼາຍຢ່າງ ໃນຫຼາຍປີຜ່ານມາ, ແຕ່ວ່າ ໂດຍມີການເຂົ້າເຖິງ ການເງິນຈຸລະພາກ, ເຂົາເຈົ້າ ອາດຈະສາມາດ ເລີ່ມລົງທຶນ ເຂົ້າໃນການປັບປຸງຊີວິດການເປັນຢູ່ ຕາມທີ່ກ່າວ ມາຂ້າງເທິງ.

15. **ແຜນງານ ຕ້ອງການດຶງເອົາ ການລົງທຶນ ຈາກພາກເອກະຊົນ ເຂົ້າມາເຮັດການຜະລິດກະສິກຳ ແລະ ປ່າໄມ້ ແບບປະສົມປະສານ ທີ່ອາໃສຊຸມຊົນ ໃນປ່າຜະລິດແຫ່ງຊາດ. ທ່ານຄິດເຖິງຫຍັງແດ່?**

ການລົງທຶນ ຂອງພາກເອກະຊົນ ອາດຈະໄດ້ຮັບການຕ້ອນຮັບທີ່ດີ ເພາະວ່າ ການລົງທຶນ ອາດຈະສ້າງວຽກ ເຮັດງານທຳ ຫຼາຍຂຶ້ນ ລວມທັງ ພື້ນຖານໂຄງລາງ ພາຍໃນບ້ານ. ເຂົາເຈົ້າ ເຫັນທ່າແຮງ ສຳລັບ ການທ່ອງ ທຽວທຳມະຊາດ ທີ່ມີນ້ຳຕົກຢູ່ໃກ້.
ການລົງທຶນ ອາດຈະຈຳເປັນຕ້ອງໄດ້ຮັບການຄວບຄຸມ ຢ່າງເຂັ້ມງວດ ຈາກ ລັດຖະບານ ເພື່ອຮັບປະກັນວ່າ ຊາວບ້ານ ໄດ້ຮັບຜົນປະໂຫຍດ ຈາກ ການຮ່ວມມື ເພາະວ່າ ພວກເຮົາ ຂາດປະສົບການ ແລະ ຄວາມອາດ ສາມາດ ໃນການຄວບຄຸມ ການຮ່ວມມື ດ້ວຍຕົນເອງ. ຖ້າວ່າ ການຮ່ວມມື ຈະປ່ຽນພື້ນຖານໂຄງລ່າງ ຢູ່ ໃນບ້ານ ຫຼາຍໂພດ, ເຂົາເຈົ້າ ອາດຈະບໍ່ຕ້ອງການແນວນັ້ນ.

16. **ຄຳຄິດເຫັນອື່ນໆເດ?**

ການຈັດສັນ ທີ່ດິນກະສິກຳ ຂອງຄົວເຮືອນ ຈຳເປັນຈະຕ້ອງໄດ້ສືບຕໍ່.
ກິດຈະກຳຂອງແຜນງານທັງໝົດ ຄວນຈະເລັ່ງໃສ່ ເພີ່ມລາຍຮັບແກ່ປະຊາຊົນ ຜ່ານທາງ ຜະລິດຕະພັນ ທີ່ ແຕກຕ່າງ (ຄ້າຍກັບ ໜຶ່ງເມືອງ ໜຶ່ງຜະລິດຕະພັນ),
ການປັບປຸງ ຖະໜົນຫົນທາງ ແລະ ໂຮງຮຽນ ຈະເຮັດໃຫ້ມີການເຂົ້າເຖິງ ການເບິ່ງແຍງສຸຂະພາບ, ຕະຫຼາດ ແລະ ການສຶກສາ ໄດ້ດີຂຶ້ນກວ່າເກົ່າ.
ຕ່າງໜ້າເຜົ່າມົ້ງ ເວົ້າຄືນວ່າ ເຂົາເຈົ້າ ຕ້ອງການ ຖະໜົນຫົນທາງ ເຂົ້າເຖິງທົ່ງໄຮ່ທົ່ງນາ ແລະ ເນື້ອທີ່ປ່າໄມ້ ຂອງເຂົາເຈົ້າ.

GCF/GIZ, ການສຳພາດບ້ານ: ເມືອງຫຼວງນ້ຳທາ, ບ້ານນ້ຳມາດ (ເຜົ່າອາຄາ); ຜູ້ເຂົ້າຮ່ວມ: ຊາຍ 8 ຄົນ, ຍິງ 27 ຄົນ)

ໝາຍເຫດ: ການສຳພາດ ໄດ້ຖືກດຳເນີນ ກັບກຸ່ມທີ່ປະກອບດ້ວຍທັງຍິງ ແລະ ຊາຍ ທີ່ມີໝົດທຸກອາຍຸ. ການແຍກ ເພດ ແມ່ນເປັນໄປບໍ່ໄດ້ທີ່ຈະເຮັດ ເນື່ອງຈາກວ່າ ຊາວບ້ານມີການສະຫຼອງ ຢ່າງຕໍ່ເນື່ອງ ແລະ ໄດ້ຕັດສິນໃຈວ່າ ເຂົາເຈົ້າ ຄວນຈະມີການເຂົ້າຮ່ວມການສົນທະນາ ຄັ້ງດຽວ. ການສົນທະນາ ກັບ ແມ່ຍິງ ຍັງຈຳເປັນຕ້ອງການ ໃຫ້ມີ ການແປເພີ່ມຕື່ມ ຢ່າງຫຼວງຫຼາຍ (ພາສາອາຄາ-ລາວ-ອັງກິດ).

ຂໍ້ສັງເກດຕໍ່ໄປ: ບ້ານຕັ້ງຢູ່ຫ່າງຈາກຕົວເມືອງຫຼວງນ້ຳທາ ພຽງແຕ່ ສອງສາມກິໂລແມັດເທົ່ານັ້ນ. ການເຂົ້າເຖິງຕົວ ເມືອງ ໄດ້ປັບປຸງ ການເຂົ້າເຖິງສາລາ ແລະ ຕະຫຼາດ ຂອງປະຊາຊົນ. ໃນທາງກົງກັນຂ້າມ, ບັນຫາຂີ້ເຫຍື້ອ ຂອງບ້ານ ແມ່ນມີຢູ່ທຸກແຫ່ງຫົນ ແລະ ທຸກມຸມ ຂອງບ້ານ. ການສຶກສາສິ່ງແວດລ້ອມ ບໍ່ທັນໄດ້ຖືກສະໜອງ, ແລະ ຄວາມ ເຂົ້າໃຈ ຂອງປະຊາຊົນ ຕໍ່ຄວາມຈຳເປັນ ໃນການປົກປັກຮັກສາສິ່ງແວດລ້ອມ ຢ່າງຕັ້ງໜ້າ ແມ່ນບໍ່ມີເລີຍ. ມີພຽງແຕ່ ແມ່ຍິງ ທີ່ສະແດງໃຫ້ເຫັນເຖິງ ຄວາມເຂົ້າໃຈພື້ນຖານ ກ່ຽວກັບ ສາຍພົວພັນ ລະຫວ່າງ ການກະທຳຂອງເຂົາເຈົ້າ ແລະ ຊັບພະຍາກອນ ທີ່ເຊື່ອງຊ້ອນ.

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ, ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ຈັດສັນ ພູມສັນຖານປ່າໄມ້ ແບບຍືນນານ

1. **ບອກຂ້ອຍແດ່ ກ່ຽວກັບ ຊີວິດການເປັນຢູ່ ຂອງທ່ານເປັນແນວໃດ**

   ແມ່ຍິງ: ເກັບກູ້ຢາງພາລາ ໃນຕອນເຊົ້າ, ຕອນແລງ ເກັບໄມ້ປ່ອງ, ຫວາຍ, ຫຍ້າສຳລັບເຮັດຝອຍ, ໄມ້ຝືນ ແລະ ຜັກ. ມີວຽກໜ້ອຍຫຼາຍ ເນື່ອງຈາກວ່າ ແມ່ຍິງ ມີການເຂົ້າເຖິງດ້ວຍຖະໜົນ ແລະ ມີລົດຈັກ ແລະ ມີ ການເຂົ້າເຖິງ ໂຮງສີເຂົ້າ. ລຸກແຕ່ເຊົ້າ ເພື່ອກະກຽມເຂົ້າ ແລະ ອາຫານເຊົ້າ, ເກືອສັດ, ຊັກເຄື່ອງລ້າງຖ້ວຍ. ແມ່ຍິງເຮັດວຽກຫຼາຍກວ່າຜູ້ຊາຍ.
   ແມ່ຍິງ ໄດ້ເງິນຫຼາຍກວ່າຜູ້ຊາຍ ເພາະວ່າ ຜູ້ຊາຍຂີ້ຄານ. ແມ່ຍິງເປັນຜູ້ເກັບເງິນ.

   ຜູ້ຊາຍ: ຂົນເຂົ້າ/ຜົນເກັບກ່ຽວ ລົງມາຈາກທົ່ງໄຮ່ທົ່ງນາ ເຂດເນີນສູງ, ປັດຈຸບັນນີ້ ດ້ວຍລົດຕ່ອກຕ່ອກ (ຈົ່ນມາຮອດຫວ່າງບໍ່ດົນມານີ້ ດ້ວຍຕີເປົ່າ ຫຼື ລົດຈັກ). ການເຮັດໄຮ່ເລື່ອນລອຍ, ບໍ່ມີເຂົ້ານາ.

   ຕົ້ນຢາງພາລາ: ແບ່ງວຽກ, ຊຶ່ງຂຶ້ນກັບຄອບຄົວ

2. **ບົດບາດອັນສະເພາະ ຂອງແມ່ຍິງ ແລະ ຜູ້ຊາຍ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ?**
   ໃຫ້ເບິ່ງຄຳຕອບຂ້າງເທິງ.

3. **… ແລະ ຢູ່ໃນການປົກປັກຮັກສາປ່າໄມ້ເດ?**

4. **ທ່ານ ຮູ້ສຶກບໍວ່າ ວຽກທີ່ກ່ຽວຂ້ອງກັບ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຖືກແບ່ງກັນ ລະຫວ່າງຍິງ ແລະ ຊາຍຢ່າງເປັນທຳ?**

   ຂຶ້ນກັບຄອບຄົວຫຼາຍ, ມີທຸກການປ່ຽນແປງ ເກີດຂຶ້ນໃນບ້ານນີ້. ໂດຍທົ່ວໄປ, ແມ່ຍິງ ເຮັດວຽກດົນກວ່າ ແລະ ຫຼາຍກວ່າ ໃນຄະນະທີ່ ຜູ້ຊາຍເຮັດວຽກ ທີ່ໃຊ້ແຮງງານຫຼາຍກວ່າ.

5. **ທ່ານ ຮູ້ຈັກກົນໄກ REDD+ ບໍ ແລະ ເປັນຫຍັງ ມັນຈຶ່ງເກີດຂຶ້ນມາ?**

   ນັບຕັ້ງແຕ່ປີ 2012 ເປັນຕົ້ນມາ, ບໍ່ມີລະບຽບຂຸດຄົ້ນໄມ້. ຄ່າປັບໄໝ 1 ລ້ານກີບ ຕໍ່ຕາຕະລາງແມັດ ທີ່ໄດ້ຂຸດຄົ້ນ.

6. **ຈາກ ຄວາມຮູ້ ຂອງທ່ານ ກ່ຽວກັບ ປ່າໄມ້ ແລະ ທີ່ດິນ: ທ່ານ ເຫັນສິ່ງທ້າທາຍບໍ ຕະຫຼອດໄລຍະຫຼາຍ ປີຜ່ານມາ? ເຊັ່ນ ມີຊັບພະຍາກອນ, ເຄື່ອງປ່າຂອງດົງ ໜ້ອຍລົງ ແລະ ອື່ນໆ?**

   ປະຊາຊົນ ພາຍໃນບ້ານຫຼາຍຂຶ້ນ. ດັ່ງນັ້ນ ຊັບພະຍາກອນປ່າໄມ້ ມີໜ້ອຍລົງ. ບາງຄົນ ສືບຕໍ່ ເກັບກູ້ ຕະຫຼອດ ໂດຍບໍ່ໃຫ້ປ່າໄມ້ ມີໂອກາດ ຟື້ນຟູ.

7. **ທ່ານ ຄິດບໍວ່າ ທ່ານໄດ້ຮັບຜົນປະໂຫຍດ ຈາກຊັບພະຍາກອນປ່າໄມ້? ເປັນແນວໃດ?**

   ແມ່ຍິງ ໄດ້ຮັບຜົນປະໂຫຍດ ຫຼາຍກວ່າຜູ້ຊາຍ ຈາກ ຊັບພະຍາກອນປ່າໄມ້ ເພາະວ່າ ເຂົາເຈົ້າ ເກັບກູ້ ທຸກ ຢ່າງ ຈາກປ່າໄມ້ ແລະ ເປັນຜູ້ເກັບເງິນ (ແລະ ມັກຈະມີລາຍ ຫຼາຍກວ່າ ຜົວຂອງເຂົາເຈົ້າ).

8. **ທ່ານ ເຂົ້າເຖິງ ປ່າໄມ້ປະເພດໃດ? ເຊັ່ນ: ປ່າໄມ້ຊຸມຊົນ, ປ່າລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດສະຫງວນສັດປ່າ ແລະ ເຂດກັນຊົນ ຂອງປ່າຊຸມຊົນ.**

   ຢູ່ໃກ້ໆ ແມ່ນ ເຂດປ່າສະຫງວນທຳມະຊາດ; ຈົ່ນມາຮອດປັດຈຸບັນນີ້, ການຈັດສັນທີ່ດິນ ແລະ ປ່າໄມ້

ປະຕິບັດແລ້ວ ສະເພາະ ລະຫວ່າງບ້ານທີ່ແຕກຕ່າງກັນເທົ່ານັ້ນ.

9. **ທ່ານຮູ້ສຶກບໍ່ວ່າ ທ່ານກຳລັງມີສ່ວນຮ່ວມ ຢູ່ໃນ ການຄຸ້ມຄອງ/ຕັດສິນໃຈ ກ່ຽວກັບປ່າໄມ້? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ ສຳລັບ ຕົວແບບການຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ (ເຊັ່ນ ປ່າໄມ້ຊຸມຊົນ, ປ່າລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ)?**

ຫຼັກໆແລ້ວ ແມ່ນອຳນາດການປົກຄອງບ້ານ ເປັນຜູ້ຕັດສິດໃຈ ກ່ຽວກັບ ທຸກຢ່າງພາຍໃນບ້ານ ຊຶ່ງລວມທັງ ການຄຸ້ມຄອງຈັດສັນປ່າໄມ້. ຢູ່ໃນຄະນະ ບໍ່ມີແມ່ຍິງຈັກຄົນ. ແມ່ຍິງບາງຄົນ ພໍໃຈກັບສິ່ງທີ່ກ່າວມານັ້ນ, ແຕ່ບາງຄົນບໍ່ປານໃດ (ແຕ່ເຂົາເຈົ້າ ຈະບໍ່ທ້າທາຍ ການຕັດສິນໃຈ).

ໝາຍເຫດ: ຫຼັງຈາກ ພະຍາຍາມຫຼາຍເທື່ອ ໃນການໃຫ້ແມ່ຍິງອອກສິດອອກສຽງ ກ່ຽວກັບ ການລົງທຶນທີ່ມີທ່າແຮງຂອງເຂົາເຈົ້າ ໃນການຄຸ້ມຄອງຈັດສັນປ່າໄມ້, ແມ່ຍິງຄົນໜຶ່ງ ເລີ່ມເວົ້າອອກມາວ່າ ຜູ້ກ່ຽວຢາກ ຈະມີສ່ວນຮ່ວມ ຢ່າງຕັ້ງໜ້າ ໃນການຄຸ້ມຄອງຈັດສັນປ່າໄມ້ບ້ານ. ຈາກນັ້ນ, ແມ່ຍິງເລີ່ມສົນທະນາກັນ ກ່ຽວກັບ ແນວຄວາມຄິດ ທີ່ເຂົາເຈົ້າຈະຕ້ອງສະໜັບສະໜູນ ການຟື້ນຟູປ່າ ແລະ ກ່ຽວກັບວ່າ ມັນຈະສ້າງ ຜົນປະໂຫຍດແນວໃດ ຖ້າເຂົ້າເຈົ້າສາມາດ ເປັນສ່ວນໜຶ່ງ ໃນການຕັດສິນໃຈ. ການສົນທະນານີ້ ສະແດງ ໃຫ້ເຫັນເຖິງຄວາມສຳຄັນ ຂອງການສືບຕໍ່ ສົນທະນາ ທີ່ນຳພາໂດຍຜູ້ຊາຍ. ສະມາຊິກສະຫະພັນແມ່ຍິງລາວ ທີ່ຕິດຕາມມານຳ ໃຫ້ຄວາມຊ່ວຍເຫຼືອເປັນຢ່າງດີ ໃນການອະທິບາຍ ແລະ ຊຸກຍູ້ໃຫ້ແມ່ຍິງເວົ້າ – ຊຶ່ງ ສະແດງໃຫ້ເຫັນເຖິງບົດບາດສຳຄັນ ທີ່ສະຫະພັນແມ່ຍິງລາວ ຍັງຄົງສາມາດນຳໃຊ້ ໃນການອຳນວຍຄວາມ ສະດວກ ແກ່ບ້ານ.

10. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ບໍ່ທັນມີແຜນນຳໃຊ້ທີ່ດິນ ຫຼື ໃບຕາດິນເທື່ອ, ມີພຽງແຕ່ກຳນົດເຂດເທົ່ານັ້ນ. ຂະບວນການ ຈຶ່ງຈຳເປັນຈະ ຕ້ອງໄດ້ສືບຕໍ່. ການປັກຫຼັກໝາຍເຂດແດນ ບໍ່ມີຄວາມໝາຍຫຼາຍປານໃດ ຕໍ່ເຂົາເຈົ້າ ແລະ ບ້ານໃກ້ຄຽງ – ບໍ່ມີໃຜ ຄວບຄຸມການນຳໃຊ້ ໄດ້ຢ່າງແທ້ຈິງ.

11. **ແຜນງານ ຕ້ອງການ ສິ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ ເລື່ອນລອຍ ພ້ອມທັງ ສິ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ:**
ທ່ານມີຄວາມຫວັງແນວໃດ ທີ່ສິ່ງດັ່ງກ່າວນີ້ ຈະປ່ຽນການດຳລົງຊີວິດ ຂອງທ່ານ? ສິ່ງທີ່ທ່ານຢ້ານກວົວ ມີ ຫຍັງແດ່?
ໝາຍເຫດ: ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ

ການເຮັດໄຮ່ເລື່ອນລອຍ ແມ່ນເປັນວຽກທີ່ໜັກ ແລະ ມີຫຼາຍຢ່າງຕ້ອງໄດ້ເຮັດ, ດັ່ງນັ້ນ ເຂົາເຈົ້າ ອາດຈະມີ ຄວາມຕ້ອງການຢ່າງຫຼວງຫຼາຍ ທີ່ຈະຫັນປ່ຽນ ໄປສູ່ການປູກພືດທີ່ເປັນທາງເລືອກ. ການປູກຢ່າງພາລາ ໝ

າຍເຖິງການເຮັດວຽກໜ້ອຍ ສຳລັບແຕ່ລະຄົນ, ຢ່າງໜ້ອຍ ກໍແມ່ນຫຼັງຈາກໄລຍະເລີ່ມຕົ້ນ (ຕົ້ນອ່ອນ ຕ້ອງການ ການບົວລະບັດຮັກສາຫຼາຍກວ່າຕົ້ນອື່ນ).

12. **ແຜນງານ ຕ້ອງການເຮັດໃຫ້ຊາວບ້ານ ມີສ່ວນຮ່ວມ ຢ່າງຕັ້ງໜ້າ ໃນການຄຸ້ມຄອງຈັດສັນປ່າໄມ້ບ້ານ (ການວາງແຜນ ແລະ ສັນຍາ ກ່ຽວກັບ ການຄຸ້ມຄອງຈັດສັນປ່າໄມ້ບ້ານ, ກິດຈະກຳການປູກປ່າ, ການຟື້ນຟູປ່າໄມ້) ແລະ ການຕິດຕາມ (ທີ່ລວມມີ ການລາດຕະເວນ): ທ່ານຄິດແນວໃດ ຕໍ່ສິ່ງດັ່ງກ່າວ? ທ່ານຄິດວ່າ ແມ່ຍິງ ແລະ ຜູ້ຊາຍ ຄວນມີສ່ວນຮ່ວມ ໃນຈຸດໃດ?**

ແມ່ຍິງ ຕ້ອງການເປັນສ່ວນໜຶ່ງ ໃນການຄຸ້ມຄອງຈັດສັນປ່າໄມ້, ກິດຈະກຳການຟື້ນຟູ, ການວາງແຜນ. ຊາວບ້ານ ຕ້ອງການເພີ່ມການລາດຕະເວນ ໃນອະນາຄົດ ເພາະວ່າ ໃນປັດຈຸບັນ, ທຸກຄົນ ກຳລັງນຳໃຊ້ປ່າໄມ້ ຕາມທີ່ເຂົາເຈົ້າຕ້ອງການ ແລະ ຕາມທີ່ພົບເຫັນ ຊັບພະຍາກອນຫຼຸດລົງ.

13. **ອຸປະສັກ ຂອງທ່ານມີຫຍັງແດ່ ຕໍ່ກັບການເຂົ້າເຖິງຕະຫຼາດ? ທ່ານຕ້ອງການໃຫ້ຊ່ວຍຈຸດໃດ ເພື່ອໃຫ້ເຂົ້າເຖິງມັນໄດ້**

ເຂົາເຈົ້າ ຮັກສາຈຳນວນໜຶ່ງ ສຳລັບການຊົມໃຊ້ຂອງເຂົາເຈົ້າເອງ, ແລະ ຂາຍສ່ວນທີ່ເຫຼືອ ໃນຕະຫຼາດ ຢູ່ເມືອງຫຼວງນ້ຳທາ ທີ່ຢູ່ໃກ້ໆ ແລະ ຕະຫຼາດ ຢູ່ບ້ານໃກ້ຄຽງ. ຢ່າງ ແມ່ນຂາຍໃຫ້ບໍລິສັດ ທີ່ບໍລິສັດມາຂົນເອົາ ຢາງເອງ ຫຼື ຊາວບ້ານສົ່ງໄປໃຫ້ບໍລິສັດ.

14. **ທ່ານຄິດແນວໃດ ກ່ຽວກັບ ການເງິນຈຸລະພາກ ສຳລັບເລີ່ມຕົ້ນທຸລະກິດ/ລົງທຶນ ໃສ່ໃນ ການເຮັດກະສິກຳແບບໃໝ່ ແລະ ອື່ນໆ**

ບ້ານ ບໍ່ມີປະສົບການເທື່ອ ກ່ຽວກັບທຸກຮູບແບບ ຂອງການເງິນຈະລະພາບ. ສຳລັບການເຂົ້າເຖິງ ການກູ້ຢືມຈຳນວນເລັກນ້ອຍ, ຜູ້ຊາຍ ອາດຈະເລີ່ມເຮັດຮ້ານນ້ອຍໆ, ແມ່ຍິງ ຢາກຈະເພີ່ມ ການຜະລິດເຄື່ອງຫັດຖະກຳ ແລະ ແຜນແພ ແລະ ສ້າງທຸລະກິດຂະໜາດນ້ອຍ.

15. **ແຜນງານ ຕ້ອງການດຶງເອົາ ການລົງທຶນ ຈາກພາກເອກະຊົນ ເຂົ້າມາເຮັດການຜະລິດກະສິກຳ ແລະ ປ່າໄມ້ແບບປະສົມປະສານ ທີ່ອາໃສຊຸມຊົນ ໃນປ່າຜະລິດແຫ່ງຊາດ. ທ່ານຄິດເຖິງຫຍັງແດ່?**

ບ້ານ ອາດຈະເປີດ ການປະສານສົມທົບ ກັບ ພາກເອກະຊົນ, ຖ້າວ່າ ທີ່ດິນເໝາະສົມ.

16. **ຄຳຄິດເຫັນອື່ນໆເດ?**

ເຂົາເຈົ້າ ຢາກຈະເຂົ້າເຖິງ ກອງທຶນພັດທະນາບ້ານ, ຊຶ່ງເປັນຂົວຕໍ່ (ໄດ້ສະເໜີ ນັບຕັ້ງແຕ່ 10 ປີ). ເຂົາເຈົ້າ

ໄດ້ສ້າງອາຄານຮຽນ ດ້ວຍຕົນເອງ ແຕ່ຕ້ອງການ ເຝີນິເຈີຫຼາຍຂຶ້ນ. ເຂົາເຈົ້າ ຮູ້ສຶກຄ້າຍໆກັບວ່າ ເຂົາເຈົ້າ ມັກສະເໜີຂໍສິ່ງຢ່າງ ແຕ່ ໜ້ອຍໜັກ ຊິມີຫຍັງເກີດຂຶ້ນ.

GCF/GIZ, ການສຳພາດບ້ານ: ເມືອງຫຼວງນ້ຳທາ, ບ້ານນ້ຳດີ (ກຸ່ມລານແຕນ, ແຫຼ່ງທ່ອງທ່ຽວທຳມະຊາດ; ແມ່ຍິງ 4 ຄົນ, ຜູ້ຊາຍ 10 ຄົນ)

ໝາຍເຫດ: ຊາວບ້ານ ຂໍເຮັດກອງປະຊຸມຮ່ວມກັນ ເພາະວ່າ ເຂົາເຈ້າ ຮູ້ສຶກວ່າຄາວຽກຫຼາຍໂພດ ທີ່ຈະຈັດກອງກ ປະຊຸມ ແບບແຍກຕ່າງຫາກກັນ.

ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນອາຍເຮືອນແກ້ວ ຂອງ ສ.ປ.ປ.ລາວ, ຜ່ານທາງການປັບປຸງ ການຄຸ້ມຄອງ ແລະ ຈັດສັນ ພູມສັນຖານປ່າໄມ້ ແບບຍືນນານ

1. **ບອກພວກເຮົາແດ່ ກ່ຽວກັບ ຊີວິດການເປັນຢູ່ ໃນແຕ່ລະວັນ ຂອງທ່ານເປັນແນວໃດ**

   ນາຍບ້ານ: ຮັກສາສວນຢາງພາລາ, ທົ່ງນາ, ບາງຄອບຄົວ ເຮັດໄຮ່ເລື່ອນລອຍ, ລ້ຽງສັດ (ໝູ, ໄກ່, ເປັດ, ແບ້), ມີຄອບຄົວຈຳນວນເລັກນ້ອຍ ທີ່ມີຮ້ານຄ້າຂະໜາດນ້ອຍ; ຜະລິດເຈ້ຍ ແລະ ຕຳຫູກ ແລະ ເຄື່ອງ ຫັດຖະກຳ ສ່ວນໃຫຍ່ ແມ່ນແມ່ຍິງທັງໝົດເປັນຜູ້ເຮັດ. ໄດ້ເລີ່ມເປັນສະຖານທີ່ທ່ອງທຽວ ໃນປີ 2003 (ເປີດເປັນທາງການ ໃນປີ 2007 ໃນຊ້ວງ ທີ່ເຂົາເຈົ້າ ຍັງໄດ້ຮັບການຊ່ວຍເຫຼືອດ້ານການສະໜອງເງິນ ສຳ ລັບ ສິ່ງນັ້ນ ຈາກ ADB, ປັດຈຸບັນນີ້ ກອງທຶນນິວຊີແລນ ສຳລັບ ການພັດທະນາການທ່ອງທ່ຽວ ຊຸມຊົນ ກຳລັງ ສະໜັບສະໜູນ ດ້ວຍການສະໜອງເງິນ ຈົນຮອດປີ 2020), ເມື່ອມີແນວຄວາມຄິດ ຈາກຊາວບ້ານ ຄົນໜຶ່ງ (ຜູ້ຊາຍ). ຊາວບ້ານ 7 ຄົນ ໄດ້ສ້າງ ສະຖານທີ່ທ່ອງທ່ຽວ. ເມື່ອການສະໜອງເງິນ ຊຶ້ນສຸດລົງ, ບ້ານວາງແຜນ ທີ່ຈະຮັກສາ ສິ່ງດັ່ງກ່າວ ດ້ວຍຕົນເອງ. 60% ຂອງລາຍຮັບ ມາຈາກ ແຫຼ່ງທ່ອງທ່ຽວ ແມ່ນ ເກັບໄວ້ຢູ່ນຳບ້ານ, ສ່ວນທີ່ເຫຼືອ ແມ່ນເຂົ້າ ຫ້ອງການທ່ອງທ່ຽວແຂວງ ແລະ ກ່ອງທຶນທ່ອງທ່ຽວ ແລະ ອື່ນໆ. ຊາວບ້ານໝູນວຽນກັນ ເບິ່ງແຍງຮັກສາ (ອະນາໄມ້, ບົວລະບັດຮັກສາ, ຂາຍປີ້ເຂົ້າຊົມ). ບໍ່ມີແມ່ຍິງ ຢູ່ໃນ ຄະນະຄຸ້ມຄອງບໍລິຫານແຫຼ່ງທ່ອງທ່ຽວ ເພາະວ່າ ຊາວບ້ານ ທີ່ເປັນເພດຍິງ ທີ່ມີຢູ່ໃນບ້ານ ແມ່ນມີ ການສຶກສາຕ່ຳ (ບໍ່ຮູ້ໜັງສື ແລະ ບໍ່ມີທັດສະການສຶກສາ).
   ນາຍບ້ານ ຮັບຮູ້ວ່າ ເຂົາເຈົ້າ ຕ້ອງການ ການສະໜັບສະໜູນ ຈາກພາຍນອກ ເພື່ອຊອກຫາວິທີທາງ ທີ່ ຈະລວມເອົາແມ່ຍິງເຂົາມາຫຼາຍຂຶ້ນ ຢູ່ໃນໂຄງສ້າງການຈັດຕັ້ງ ຂອງຄະນະບ້ານ. ໂດຍປົກກະຕິ ແມ່ຍິງ ບໍ່ ຕ້ອງການເຂົ້າຮ່ວມກອງປະຊຸມ.

   ແມ່ຍິງ: ເຂົາເຈົ້າ ເຂົ້າຮ່ວມກອງປະຊຸມ ຖ້າເຂົາເຈົ້າ ຮູ້ສຶກວ່າ ຕົນເອງສາມາດ ຮຽນຮູ້ບາງຢ່າງ. ເຂົາເຈົ້າ ຮູ້ສຶກອາຍ, ບໍ່ມີການສຶກສາພຽງພໍ ແລະ ເໝືອນກັບວ່າ ເຂົາເຈົ້າ ບໍ່ສາມາດປະກອບສ່ວນໄດ້ຫຼາຍ.

2. **ບົດບາດອັນສະເພາະ ຂອງແມ່ຍິງ ແລະ ຜູ້ຊາຍ ມີຫຍັງແດ່ ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນ?**

ຊາວບ້ານ ບໍ່ນຳໃຊ້ ປ່າໄມ້ຫຼາຍ ເນື່ອງຈາກວ່າ ພື້ນທີ່ປ່າໄມ້ ມີຂະໜາດນ້ອຍຫຼາຍ. ໃຫ້ເບິ່ງຄຳຕອບຂ້າງເທິງ ຕື່ມ.

3. **...ແລະ ຢູ່ໃນການປົກປັກຮັກສາປ່າໄມ້ເດ?**

ມີພຽງແຕ່ມາດຕະການດຽວ, ບໍ່ມີຫຍັງເປັນລະບົບ.

4. **ທ່ານ ຮູ້ສຶກບໍ່ວ່າ ວຽກທີ່ກ່ຽວຂ້ອງກັບ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຖືກແບ່ງກັນ ລະຫວ່າງຍິງ ແລະ ຊາຍຢ່າງເປັນທຳ?**

ວຽກ ຖືກແບ່ງ ຢ່າງເທົ່າທຽມກັນ ຢູ່ໃນບ້ານ ຂອງພວກເຮົາ: ແມ່ຍິງເຮັດວຽກຫັດຖະກຳ, ຜະລິດເຈ້ຍ, ຕຳ ຫູກ ແລະ ເຫຍັບເສື້ອຜ້າ; ຜູ້ຊາຍເຮັດກໍ່ສ້າງ, ຮັກສາເຂົ້າໃນນາ
ແຕ່ງກິນ, ລ້ຽງສັດ, ການບົວລະບັດສວນຢາງພາລາ ແມ່ນເຮັດຮ່ວມກັນ

5. **ທ່ານ ຮູ້ຈັກກົນໄກ REDD+ ບໍ ແລະ ເປັນຫຍັງ ມັນຈຶ່ງເກີດຂຶ້ນມາ?**

ບາງຄອບຄົວ ມີຈິດສຳນຶກ ໜ້ອຍ ກ່ຽວກັບ ການປົກປັກຮັກສາປ່າໄມ້ ແລະ ການປ້ອງກັນອ່າງໂຕ່ງ. ຈົ່ນ ມາຮອດປັດຈຸບັນນີ້, ເຂົາເຈົ້າ ບໍ່ໄດ້ຍິນ ກ່ຽວກັບ REDD+, ຍົກເວັ້ນ ກ່ຽວກັບ ການທຳລາຍປ່າໄມ້, ການ ປົກປັກຮັກສາສິ່ງແວດລ້ອມ ແລະ ເຂົາເຈົ້າ ພະຍາຍາມ ໃຫ້ການສຶກສາ ແກ່ ຊາວບ້ານ ຜູ້ປະກອບສ່ວນ ທາງລົບ ຕໍ່ສິ່ງທີ່ກ່າວມານັ້ນ.

6. **ຈາກ ຄວາມຮູ້ ຂອງທ່ານ ກ່ຽວກັບ ປ່າໄມ້ ແລະ ທີ່ດິນ: ທ່ານ ເຫັນສິ່ງທ້າທາຍບໍ ຕະຫຼອດໄລຍະຫຼາຍ ປີຜ່ານມາ? ເຊັ່ນ ມີຊັບພະຍາກອນ, ເຄື່ອງປ່າຂອງດົງ ໜ້ອຍລົງ ແລະ ອື່ນໆ?**

10-15 ປີ ຜ່ານມາ, ຊີວະນາໆພັນ ແມ່ນມີຫຼາຍກວ່ານີ້, ແຕ່ດຽວນີ້ ເຫັນວ່າ ຊຸດໂຊມລົງ.

7. **ທ່ານ ຄິດບໍ່ວ່າ ທ່ານໄດ້ຮັບຜົນປະ�โຫຍດ ຈາກຊັບພະຍາກອນປ່າໄມ້/ທຳມະຊາດ ຂອງທ່ານ ຢ່າງເທົ່າທຽມ ກັນ?**

ລາຍຮັບ ແລະ ຜົນປະโຫຍດ ຖືກແບ່ງປັນ ຢ່າງເທົ່າທຽມກັນ ຢູ່ພາຍໃນຄົວເຮືອນ.
ແມ່ຍິງ: ໂດຍປົກກະຕິ, ຄອບຄົວ ເກັບເງິນທີ່ຫາມາໄດ້ ຮ່ວມກັນ ແຕ່ ຜູ້ຊາຍບາງຄົນໃຊ້ຈ່າຍຫຼາຍໂພດ ໃນ ການຊື້ເຫຼົ້າ, ດັ່ງນັ້ນ ແມ່ຍິງ ຈຶ່ງພະຍາຍາມ ເກັບເງິນຮ່ວມກັນ.

8. **ທ່ານ ເຂົ້າເຖິງ ປ່າໄມ້ປະເພດໃດ? ເຊັ່ນ: ປ່າໄມ້ຊຸມຊົນ, ປ່າລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດສະຫງວນສັດປ່າ ແລະ ເຂດກັນຊົນ ຂອງປ່າຊຸມຊົນ.**

ແຜນນຳໃຊ້ທີ່ດິນ ສຳເລັດ. ປ່າປ້ອງກັນ ແລະ ປ່າຊົມໃຊ້.

9. **ທ່ານຮູ້ສຶກບໍ່ວ່າ ທ່ານກຳລັງມີສ່ວນຮ່ວມ ຢູ່ໃນ ການຄຸ້ມຄອງ/ຕັດສິນໃຈ ກ່ຽວກັບປ່າໄມ້? ສິ່ງດັ່ງກ່າວນັ້ນ ແຕກຕ່າງກັນບໍ ສຳລັບ ຕົວແບບການຄຸ້ມຄອງຈັດສັນປ່າໄມ້ ທີ່ແຕກຕ່າງກັນ (ເຊັ່ນ ປ່າໄມ້ຊຸມຊົນ, ປ່າລວມໝູ່, ປ່າປ້ອງກັນ, ອຸທະຍານແຫ່ງຊາດ, ເຂດອະນຸລັກສັດປ່າ ແລະ ເຂດກັນຊົນ ຂອງປ່າໄມ້ຊຸມຊົນ)?**

ແມ່ຍິງ: ພວກເຮົາ ບໍ່ມີການສຶກສາເທົ່າທີ່ຄວນ ທີ່ຈະເຂົ້າຮ່ວມໃນ ທຸກການຕັດສິນໃຈ, ແລະ ພວກເຮົາ ບໍ່ເຂັ້ມແຂງພຽງພໍ. ພວກເຮົາ ຢາກຈະເປັນສ່ວນໜຶ່ງ ໃນການຕັດສິນໃຈ ແຕ່ ບໍ່ໄດ້ຕາມເງື່ອນໄຂຄວາມຕ້ອງການ. ແມ່ຍິງຈຳນວນໜ້ອຍໜຶ່ງ ທີ່ມີການສຶກສາ ໜີອອກຈາກບ້ານ ເຂົ້າໄປຢູ່ໃນຕົວເມືອງ ຫຼື ບໍ່ຢາກເຂົ້າຮ່ວມໃນ ການຄຸ້ມຄອງບ້ານ.

10. **ການວາງແຜນນຳໃຊ້ທີ່ດິນ ແລະ ການປັບປຸງ ການຄ້ຳປະກັນ ການຄອບຄອງທີ່ດິນ: ສິ່ງທ້າທາຍໃນ ປັດຈຸບັນ ມີຫຍັງແດ່ ໂດຍສະເພາະ ສຳລັບແມ່ຍິງ, ອັນໃດທີ່ຈຳເປັນຈະຕ້ອງໄດ້ຮັບການປັບປຸງ?**

ຈຳເປັນຈະຕ້ອງໄດ້ປັບປຸງ ການບັງຄັບໃຊ້ແຜນນຳໃຊ້ທີ່ດິນ ທີ່ມີຢູ່ແລ້ວ. ເມື່ອຊາວບ້ານ ບໍ່ປະຕິບັດຕາມ ແຜນນຳໃຊທີ່ດິນ ແລະ ພາກັນຕັດໄມ້ ໃນເຂດປ່າສະຫງວນ, ເຂົາເຈົ້າ ຖືກຮຽກໂຕຂຶ້ນ ຫ້ອງການບ້ານບ້ານ ແລະ ຕ້ອງຈ່າຍຄ່າປັບໄໝ ແລະ ຫ້ອງການເມືອງ ເຂົ້າຮ່ວມ. ແຕ່ ຖ້າເມື່ອໃດທີ່ຊາວບ້ານ ເຮັດແບບເກົ່າອີກ , ບໍ່ມີຜົນຫຍັງເກີດຂຶ້ນເລີຍ, ດັ່ງນັ້ນ, ຊາວບ້ານ ຈຶ່ງບໍ່ເອົາຈິງເອົາຈັງ ກັບເຂດປ່າສະຫງວນ ເທົ່າທີ່ຄວນ. ດັ່ງນັ້ນ, ການບັງຄັບໃຊ້ ຈຶ່ງເປັນບັນຫາຕົ້ນຕໍ ສຳລັບບ້ານ ຂອງພວກເຮົາ.
ຖ້າວ່າ ປະຊາກອນເພີ່ມຂຶ້ນ ຕາມທີ່ຄາດໄວ້, ແຜນນຳໃຊ້ທີ່ດິນ ຈຳເປັນຈະຕ້ອງໄດ້ຮັບການປັບປຸງ ແລະ ເຂົາເຈົ້າ ຕ້ອງການທີ່ດິນກະສິກຳ ຫຼາຍຂຶ້ນ.

11. **ແຜນງານ ຕ້ອງການ ສິ່ງເສີມ ການຜະລິດກະສິກຳ ທີ່ປາສະຈາກ ການທຳລາຍປ່າໄມ້, ທີ່ຢຸດຕິ ການເຮັດໄຮ່ເລື່ອນລອຍ ພ້ອມທັງ ສິ່ງເສີມ ການຜະລິດ ພືດເສດຖະກິດ ທີ່ເປັນທາງເລືອກ:**
ທ່ານມີຄວາມຫວັງແນວໃດ ທີ່ສິ່ງດັ່ງກ່າວນີ້ ຈະປ່ຽນການດຳລົງຊີວິດ ຂອງທ່ານ? ສິ່ງທີ່ທ່ານຢ້ານກວາ ມີຫຍັງແດ່?
ໝາຍເຫດ: ແຜນງານ ຍັງຈະໄດ້ລວມເອົາ ການຮຽນຮູ້ ທີ່ອາໃສຊຸມຊົນ ແລະ ກິດຈະກຳ ການປຶກສາຫາລື ຮ່ວມກັບ ຊາວກະສິກອນ/ບ້ານຕ່າງໆ ທີ່ເຂົ້າຮ່ວມ

ຊາວບ້ານ ຕ້ອງການເຂົ້າຮ່ວມ ໃນການປຶກສາຫາລື. ທີມງານທີ່ປຶກສາ ຈຳເປັນຈະຕ້ອງ ມີຄວາມຈະແຈ້ງໃຫ້ຫຼາຍ ວ່າ ເຂົາເຈົ້າ ຕ້ອງການໃຫ້ແມ່ຍິງເຂົ້າຮ່ວມ ໃນກອງປະຊຸມ. ມີໜ້ອຍກວ່າ 10 ຄອບຄົວ ທີ່ເຮັດໄຮ່

ເລື່ອນລອຍ, ດັ່ງນັ້ນ ມັນຈຶ່ງເບິ່ງຄືບໍ່ແມ່ນບັນຫາໃຫຍ່. ພວກເຮົາເຫັນວ່າ ລາຄາຢາງພາລາ ກຳລັງຕ່ຳລົງ ໃນ ປັດຈຸບັນນີ້. ດັ່ງນັ້ນ ພວກເຮົາ ຈຳເປັນຈະຕ້ອງຄິດຫາ ພືດທີ່ເປັນຕົວເລືອກ.

12. **ແຜນງານ ຕ້ອງການເຮັດໃຫ້ຊາວບ້ານ ມີສ່ວນຮ່ວມ ຢ່າງຕັ້ງໜ້າ ໃນການຄຸ້ມຄອງຈັດສັນປ່າໄມ້ບ້ານ (ການວາງແຜນ ແລະ ສັນຍ່າ ກ່ຽວກັບ ການຄຸ້ມຄອງຈັດສັນປ່າໄມ້ບ້ານ, ກິດຈະກຳການປູກປ່າ, ການຟື້ນ ຟູປ່າໄມ້) ແລະ ການຕິດຕາມ (ທີ່ລວມມີ ການລາດຕະເວນ): ທ່ານຄິດແນວໃດ ຕໍ່ສິ່ງດັ່ງກ່າວ? ທ່ານຄິດ ວ່າ ແມ່ຍິງ ແລະ ຜູ້ຊາຍ ຄວນມີສ່ວນຮ່ວມ ໃນຈຸດໃດ**

ໃຫ້ເບິ່ງຄຳຕອບ ຕໍ່ຄຳຖາມຂໍ້ 9.

13. **ອຸປະສັກ ຂອງທ່ານມີຫຍັງແດ່ ຕໍ່ກັບການເຂົ້າເຖິງຕະຫຼາດ? ທ່ານຕ້ອງການໃຫ້ຊ່ວຍຈຸດໃດ ເພື່ອໃຫ້ເຂົ້າ ເຖິງມັນໄດ້?**

ປັດຈຸບັນ ຢາງພາລາ ແມ່ນແຫຼ່ງລາຍຮັບຕົ້ນຕໍ ຂອງບ້ານ ແລະ ມີພຽງບໍລິສັດຢາງພາລາ ບໍລິສັດດຽວ (ຢູ ນານ) ທີ່ຮັບຊື້ ຊຶ່ງບໍລິສັດດັ່ງກ່າວ ພະຍາຍາມ ກົດລາຄາຕ່ຳລົງ. ຊາວບ້ານ ຢ້ານວ່າ ຕົນເອງ ຈະສູນເສຍ ລາຍຮັບ ໃນໄວໆນີ້ ຍ້ອນການຜູກຂາດ ດັ່ງກ່າວນັ້ນ.
ເຄື່ອງຈັກສານ ແລະ ການຕຳຜ້າ ສ່ວນໃຫຍ່ ສົ່ງໄປຫາສູນ ທີ່ຫຼວງພະບາງ ແລະຈຳນວນໜຶ່ງ ຖືກສົ່ງໄປຮ້ານ ຂາຍເຄື່ອງທ່ອງທ່ຽວ ທີ່ຫຼວງນ້ຳທາ. ເຂົາເຈົ້າ ໄດ້ສະເໜີຂໍໃຫ້ ຫ້ອງການທ່ອງທ່ຽວແຂວງ ສ້າງຕັ້ງ ສາຍ ພົວພັນ ແລະ ໃຫ້ກອງທຶນນິວຊີແລນ ເຊື່ອມຕໍ່ຫາເຂົາເຈົ້າ ແລະ ສ້າງທຸລະກິດ ເປັນປົກກະຕິ. ເຖິງຢ່າງໃດກໍ ຕາມ, ນີ້ ແມ່ນເປັນພຽງລາຍຮັບເພີ່ມຕື່ມ ສຳລັບບ້ານ, ເຂົາເຈົ້າອາໃສຢາງພາລາ ຫຼາຍກວ່າສິ່ງອື່ນ.

14. **ທ່ານຄິດແນວໃດ ກ່ຽວກັບ ການເງິນຈຸລະພາກ ສຳລັບເລີ່ມຕົ້ນທຸລະກິດ/ລົງທຶນ ໃສ່ໃນ ການເຮັດກະສິກຳ ແບບໃໝ່ ແລະ ອື່ນໆ?**

ເຂົາເຈົ້າມີທະນາຄານບ້ານ ທີ່ເຮັດໃຫ້ມັນງ່າຍ ສຳລັບບ້ານ ໃນການກູ້ຢືມເງິນ ຂະໜາດນ້ອຍ. ເຂົາເຈົ້າ ຕ້ອງການການຝຶກອົບຮົມຕື່ມອີກ ສຳລັບ ຄະນະຊີ້ນຳທະນາຄານບ້ານ ເພາະວ່າ ຄວາມຮູ້ ແລະ ຄວາມ ເຂົ້າໃຈດ້ານການເງິນ ຍັງມີຕ່ຳ.
ແມ່ຍິງ: ແມ່ຍິງສ່ວນໃຫຍ່ ບໍ່ກູ້ຢືມເງິນ ເພາະວ່າ ເຂົາເຈົ້າ ບໍ່ຮູ້ວ່າ ຕົນເອງຈະສາມາດລົງທຶນໃສ່ ທຸລະກິດ/ ຜະລິດຕະພັນໃໝ່ໆ ປະເພດໃດ. ດັ່ງນັ້ນ, ການຝຶກອົບຮົມ ແລະ ການສະໜັບສະໜູນ ການວິເຄາະຄວາມ ຕ້ອງການ ຂອງຕະຫຼາດ ອາດຈະເປັນສິ່ງຕ້ອງການ ສຳລັບ ແມ່ຍິງ ແລະ ຜູ້ຊາຍ.

ບ້ານ ໄດ້ເລີ່ມ ກອງທຶນພັດທະນາບ້ານ ຂອງຕົນເອງ ໜຶ່ງປີຜ່ານມາ ແລະ ເງິນຈະຖືກນຳໃຊ້ ສຳລັບ ໂຄງການພື້ນຖານໂຄງລ່າງ ຂະໜາດນ້ອຍ ຢູ່ໃນບ້ານ;

15. **ແຜນງານ ຕ້ອງການດຶງເອົາ ການລົງທຶນ ຈາກພາກເອກະຊົນ ເຂົ້າມາເຮັດການຜະລິດກະສິກຳ ແລະ ປ່າໄມ້ ແບບປະສົມປະສານ ທີ່ອາໃສຊຸມຊົນ ໃນປ່າຜະລິດແຫ່ງຊາດ. ທ່ານຄິດເຖິງຫຍັງແດ່?**

ໃນອະດີດ, ພວກເຮົາ ມີບໍລິສັດໜຶ່ງເຂົ້າມາຫາ ເພື່ອໃຫ້ປູກພືດ ສຳລັບຜະລິດນ້ຳມັນເຊື້ອໄຟຊີວະພາບ ແຕ່ໃນຕອນທ້າຍ, ບໍ່ມີໃຜຊື້. ດັ່ງນັ້ນ, ການວິເຄາະຄວາມຕ້ອງການຂອງຕະຫຼາດ ຢ່າງທົ່ວເຖິງ ແມ່ນມີຄວາມຈຳເປັນ ແລະ ໃຫ້ມີການສ້າງຄວາມຫຼາກຫຼາຍ ແກ່ພືດ ແລະ ຜະລິດພັນ ເພື່ອຄ້ຳປະກັນລາຍຮັບ ເນື່ອງຈາກມີ ການຂຶ້ນລົງ ຂອງຕະຫຼາດ. ການເອື່ອຍອີງໃສຢາງພາລາ ຂອງເຂົາເຈົ້າ ແມ່ນສູງໂພດ ໂດຍສະເພາະ ກັບການຜູກຂາດໃນປັດຈຸບັນ ຂອງ ບໍລິສັດຢູນານ ທີ່ມີການສຳປະທານຂະໜາດຢູ່ແລ້ວ.

16. **ຄຳຄິດເຫັນອື່ນໆເດ?**

ການສະໜັບສະໜູນສະໜອງເງິນ ແກ່ສະຖານທີ່ທ່ອງທ່ຽວ ກຳລັງຈະຊຶ້ນສຸດລົງ ໃນໄວໆນີ້, ດັ່ງນັ້ນ ຊາວບ້ານຄິດກັງວົນກ່ຽວກັບ ສິ່ງທີ່ຈະເກີດຂຶ້ນ ຫຼັງຈາກເວລານັ້ນ. ສະຖານທີ່ທ່ອງທ່ຽວ ຕ້ອງການ ການບຳລຸງຮັກສາຫຼາຍກວ່າ ທີ່ເຂົາເຈົ້າສາມາດ ສະໜອງໃຫ້ໄດ້. ນອກຈາກນັ້ນ, ເຂົາເຈົ້າ ຍັງຕ້ອງການ ການສະໜອງເງິນ ແລະ ການຊ່ວຍເຫຼືອດ້ານວິຊາການ ໃນການພັດທະນາ ສະຖານທີ່ ເພາະວ່າ ນັກທ່ອງທ່ຽວຫຼາຍຄົນ ມີແຕ່ມາຖ່າຍຮູບບ້ານ ແລະ ເຄື່ອງຈັກສານເທົ່ານັ້ນ ແຕ່ ບໍ່ເຂົ້າໄປໃນສະຖານທີ່. ເຂົາເຈົ້າມີແນວຄວາມຄິດ ທີ່ຈະພັດທະນາ ສະຖານທີ່ ໃຫ້ມີບ່ອນພັກເຊົາ ແກ່ນັກທ່ອງທ່ຽວ ແລະ ສິ່ງອື່ນໆ ທີ່ໜ້າສົນໃຈ ເໝືອນກັບ ຢູ່ສະຖານທີ່ອື່ນໆ (ມີເຄື່ອງຫຼິ້ນຊິງຊ້າ ແລະ ອື່ນໆ).

ນອກຈາກນັ້ນ, ເຂົາເຈົ້າອາດຈະຢາກໃຫ້ມີພໍ່ຄ້າແມ່ຄ້າ ເຂົ້າມາບ້ານໃຫ້ຫຼາຍຂຶ້ນ ເພື່ອມາຊື້ ເຄື່ອງຫັດຖະກຳ – ຖ້າສິ່ງທີ່ກ່າວມານັ້ນ ເກີດຂຶ້ນເປັນປົກກະຕິ, ແມ່ຍິງຫຼາຍຄົນ ອາດຈະສົນໃຈ ຢາກເອົາເງິນກູ້ຂະໜາດນ້ອຍ ມາພັດທະນາທຸລະກິດຫັດຖະກຳ ຂອງເຂົາເຈົ້າ.

ການເຮັດກະສິກຳ ຈຳເປັນຈະຕ້ອງໄດ້ຮັບການປັບປຸງ ລວມທັງ ການເຂົ້າເຖິງຕະຫຼາດ ນອກເໜືອຈາກ ຢາງພາລາ.

ອ່າງໂຕງ ຖືກນຳໃຊ້ ຮ່ວມກັນກັບ ບ້ານອື່ນໆ ດັ່ງນັ້ນ ມັນຈົງເປີເປື້ນ ຍ້ອນສານກຳຈັດສັດຕູພືດຢາງພາລາ. ດັ່ງນັ້ນ ເຖິງແມ່ນວ່າ ຊາວບ້ານຈະດຳລົງຊີວິດ ຢູ່ຕາມແຄມແມ່ນ້ຳກໍຕາມ, ແຕ່ເຂົາເຈົ້າ ກໍຍັງປະສົບກັບ ການເຂົ້າເຖິງນ້ຳ ໂດຍມີຂໍ້ຈຳກັດ ທີ່ໜັກໜ່ວງ.